

THE WORD OF THE BUDDHA

# ອະບາຍມຸຂ

## ທາງແຫ່ງຄວາມເສື່ອມ

“ຜູ້ໃດດື່ມສຸຣາ ໄຣ້ຊັພຍ໌ ບໍ່ກະທຳກາຣງານຫາລ້ຽງຊີພ
ເປັນຄົນເມົາ ປາສະຈາກສິ່ງອັນເປັນປະໂຍຊນ໌
ເຂົາຈັກຈົມລົງສູ່ໜີ້ເໝືອນກ້ອນຫີນຈົມນ້ຳ ສັນນັ້ນ
ຈັກກະທຳຄວາມມົວໝອງໃຫ້ແກ່ຕົນທັນທີ.”

ທີຄະນິກາຍ ປາຕິກະວັຄ ໑໑/໑໔໑/໑໗໕



# The Way of Squandering Wealth

“ຊົນເຫລົ່າໃດຫລິ້ນການພະນັນ ດື່ມສຸຣາ
ລ່ວງລະເມີດຍິງອັນເປັນທີ່ຮັກສະເໝີດ້ວຍຊີວິຕຂອງຜູ້ອື່ນ,
ຄົບແຕ່ຄົນຊົ່ວ ບໍ່ຄົບຫາຜູ້ຈະເຣີນ ຍ່ອມເຂົ້າເຖິງຄວາມເສື່ອມ
ເໝືອນດວງຈັນທ໌ຂ້າງແຣມ.”

*ທີຄະນິກາຍ ປາຕິກະວັຄ ໑໑/໑໔໑/໑໙໕*





"ຄະຫະບໍດີບຸດ ອະຣິຍະສາວົກລະກັມກິເລສ ທັງ ໔ ໄດ້ແລ້ວ ບໍ່ກະທໍາກັມອັນເປັນບາບໂດຍ ຖານະ ໔ ແລະບໍ່ເສພທາງເສື່ອມແຫ່ງໂພຄະ ໖, ອະຣິຍະສາວົກນັ້ນເປັນຜູ້ປາສະຈາກກັມອັນ ເປັນບາບ ໑໔ ຢ່າງນີ້ແລ້ວ ຍ່ອມເປັນຜູ້ປົກ ປິດທິສທັງ ໖ ຍ່ອມປະຕິບັຕເພື່ອຊະນະໂລກ ທັງສອງ ອະຣິຍະສາວົກນັ້ນຊື່ວ່າ ປຣາຣົພ ແລ້ວທັງໂລກນີ້ແລະໂລກໜ້າ ເມື່ອແຕກກາຍ ຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ."

*ທີຄະນິກາຍ ປະຕິກະວັຄ ໑໑/໑໓໗/໑໙໔*



“ບຸຄຄົລຜູ້ມີປັນຍາຊາມ ກະທຳກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ແລະກະທຳອະກຸສົລກັມຢ່າງອື່ນອັນ ປະກອບດ້ວຍໂທສ ບໍ່ກະທຳກຸສົລກັມ ກະທຳອະກຸສົລກັມ ມາກມາຍ*(ກັຕວານາກຸສະລັງ ພະຫຸງ)* ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງນະຣົກ.”

ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ
໘໕/໘໐໗/໘໔໘

## ບົດນຳ

ພິກຂຸທັງຫລາຍ ຄວາມເມົາ ໓ ປະການນີ້, ໓ ປະການເປັນຢ່າງໃດ? ຄື:

**ຄວາມເມົາໃນຄວາມເປັນໜຸ່ມສາວ** *[ພະນະມະໂທ]*,
**ຄວາມເມົາໃນຄວາມບໍ່ມີໂຣຄ** *[ອາໂຣຄະຍະມະໂທ]*,
**ຄວາມເມົາໃນຊີວິດ** *[ຊີວິຕະມະໂທ]*,

ພິກຂຸທັງຫລາຍ ປຸຖຸຊົນຜູ້ບໍ່ໄດ້ສະດັບ ຜູ້ເມົາແລ້ວດ້ວຍຄວາມເມົາໃນຄວາມເປັນໜຸ່ມສາວ ຍ່ອມປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ, ຄັນປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

ພິກຂຸທັງຫລາຍ ປຸຖຸຊົນຜູ້ບໍ່ໄດ້ສະດັບ ຜູ້ເມົາແລ້ວດ້ວຍຄວາມເມົາໃນຄວາມບໍ່ມີໂຣຄ ຍ່ອມປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ, ຄັນປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

ພິກຂຸທັງຫລາຍ ປຸຖຸຊົນຜູ້ບໍ່ໄດ້ສະດັບ ຜູ້ເມົາແລ້ວດ້ວຍຄວາມເມົາໃນຊີວິຕ ຍ່ອມປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ, ຄັນປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕແລ້ວ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

**ພິກຂຸທັງຫລາຍ ພິກຂຸຜູ້ເມົາແລ້ວດ້ວຍຄວາມເມົາໃນຄວາມເປັນໜຸ່ມສາວ ຍ່ອມລາສິກຂາໄປ, ພິກຂຸຜູ້ເມົາແລ້ວດ້ວຍຄວາມເມົາໃນຄວາມບໍ່ມີໂຣຄ ຍ່ອມລາສິກຂາໄປ, ພິກຂຸຜູ້ເມົາແລ້ວດ້ວຍຄວາມເມົາໃນຊີວິຕ ຍ່ອມລາສິກຂາໄປ.**

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໑໘໗/໕໓໗

# Contents

6. ບົທນໍາ
8. Contents
16. ບົທທັມທີ່ຄວນຊາບກ່ອນ
41. ການຄ້າຂາຍ ໕ ປະການ ອຸປາສົກບໍ່ຄວນກະທໍາ
42. ໂພຄະຊັພຍ໌ທີ່ເກີດຂຶ້ນໂດຍຊອບ
ຍ່ອມມີທາງເສື່ອມ ໔ ປະການ
53. ອະບາຍມຸຂ ໖
56. ໂທສພັຍຂອງສຸຣາເມຣັຍ

59. ໂທສຂອງການທ່ຽວໄປໃນເວລາວິກາລ
62. ໂທສຂອງການທ່ຽວຫລິ້ນງານບັນເທີງ
65. ວິບາກກັມຂອງນັກເຕັ້ນລຳ
74. ໂທສຂອງການຫລິ້ນການພະນັນ
77. ໂທສຂອງການຄົບຄົນຊົ່ວເປັນມິຕ
80. ໂທສຂອງຄວາມກຽດຄ້ານ
85. ສັຕຜູ້ງົດເວັ້ນຈາກສຸຣາເມຣັຍ
ແລະສິ່ງມຶນເມົາມີໜ້ອຍ
90. ສັຕທັງຫລາຍມີກັມເປັນຂອງຕົນ
98. ອຸປາສົກປະກອບດ້ວຍທັມ ໕ ປະການ
ຍ່ອມເປັນຜູ້ຍັ່ງລົງສູ່ຄວາມເກງຂາມ
102. ອຸປາສົກປະກອບດ້ວຍທັມ ໕ ປະການ
ຍ່ອມເປັນຜູ້ບໍ່ແກ້ວກ້າຄອງເຮືອນ
105. ອຸປາສົກປະກອບດ້ວຍທັມ ໕ ປະການ
ເໝືອນຖືກນຳມາວາງໄວ້ໃນນະຣົກ
108. ການບໍ່ລະພັຍເວຣ ໕ ປະການ ຮຽກວ່າ
ຜູ້ທຸສີລ ຍ່ອມເຂົ້າເຖິງນະຣົກດ້ວຍ
114. ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ
ແລະອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລ
ຜູ້ເຖິງພ້ອມດ້ວຍສີລ
121. ເຣື່ອງຊາວປະມົງຜູກປາ ຂ້າປາຂາຍ

128. ຄວາມເສື່ອມສີລແລະທິຕຖິເປັນເຫຕໃຫ້ເຂົ້າເຖິງ
ອະບາຍ ທຸຄະຕິ ວິນິບາຕ ນະຣົກ

132. ວິບັຕ ໓ ຢ່າງ

138. ວິບັຕ ໓ ຢ່າງ (2)

143. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ

146. ໂທສໃນມາຕຸຄາມ ໕ ປະການ

149. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (2)

152. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (3)

155. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (4)

158. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (5)

161. ມາຕຸຄາມປະກອບດ້ວຍທັມ ໕ ປະການ

ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (6)

164. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (7)

167. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (8)

170. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ
ທຸຄະຕິ ວິນິບາຕ ນະຣົກ (9)

173. ທັມ ໕ ປະການທີ່ເປັນເຫຕໃຫ້ມາຕຸຄາມເຂົ້າເຖິງ
ອະບາຍ ທຸຄະຕິ ວິນິບາຕ ນະຣົກ

176. ທັມ ໕ ປະການທີ່ເປັນເຫຕໃຫ້ມາຕຸຄາມ
ເຂົ້າເຖິງສຸຄະຕິໂລກສວັນ

179. ມາຕຸຄາມປະກອບດ້ວຍທັມ ໕ ປະການ
ຍ່ອມເປັນຜູ້ສາມາດຢູ່ຄອງເຮືອນ

182. ການຢູ່ຮ່ວມກັນ ໔ ປະການ

189. ຄວາມອິ່ມໃນການເສພຂອງ ໓ ຢ່າງບໍ່ມີ

192. ໂທສໃນປ່າຊ້າ ໕ ປະການ

198. ມິຕຫຼຸມ ໔ ຈຳພວກ

207. ຄົນພາລ 2 ຈຳພວກ

211. ວິທີສັງເກດຄວາມເປັນພາລແລະບັນດິຕ

214. ລັກສະນະຂອງຄົນພາລແລະບັນດິຕ

218. ຄົນພາລບໍ່ເຫັນໂທສໂດຍຄວາມເປັນໂທສ
ບັນດິຕຍ່ອມເຫັນໂທສໂດຍຄວາມເປັນໂທສ

221. ຄົນພາລຕັ້ງບັນຫາໂດຍບໍ່ແຍບຄາຍ
ບັນດິຕຕັ້ງບັນຫາໂດຍແຍບຄາຍ

224. ຄວາມປະພຶຕຂອງຄົນພາລແລະບັນດິຕ

227. ຄວາມປະພຶຕຂອງຄົນພາລແລະບັນດິຕ (2)

230. ຄວາມປະພຶຕຂອງຄົນພາລແລະບັນດິຕ (3)

233. ຄວາມເປັນພາລນຳມາເຊິ່ງອຸປະສັກແລະບັນຫາ

236. ຄົນພາລສເວີຍທຸກຂ໌
ບັນດິຕສເວີຍສຸຂ

275. ທັມທີ່ເປັນໄປເພື່ອບຽດບຽນຕົນ
ເປັນໄປເພື່ອບຽດບຽນຜູ້ອື່ນ,
ທັງເປັນໄປເພື່ອບຽດບຽນຕົນແລະຄົນອື່ນ
ທັງສອງຝ່າຍ

278. ອະສັປບຸຣຸສ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ
ສັປບຸຣຸສ ສັປບຸຣຸສຍິ່ງກວ່າສັປບຸຣຸສ

283. ອະສັປບຸຣຸສ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ
ສັປບຸຣຸສ ສັປບຸຣຸສຍິ່ງກວ່າສັປບຸຣຸສ (2)

287. ອະສັປບຸຣຸສ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ
ສັປບຸຣຸສ ສັປບຸຣຸສຍິ່ງກວ່າສັປບຸຣຸສ (3)
292. ອະສັປບຸຣຸສ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ
ສັປບຸຣຸສ ສັປບຸຣຸສຍິ່ງກວ່າສັປບຸຣຸສ (4)
297. ອະສັປບຸຣຸສ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ
ສັປບຸຣຸສ ສັປບຸຣຸສຍິ່ງກວ່າສັປບຸຣຸສ (5)
302. ອະສັປບຸຣຸສ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ
ສັປບຸຣຸສ ສັປບຸຣຸສຍິ່ງກວ່າສັປບຸຣຸສ (6)
307. ຄວາມປະພຶຕທີ່ບໍ່ຊອບທັມ
ທຳລາຍໂລກແລະສັງຄົມມະນຸສ
312. ເຫຕໃຫ້ໄປສູ່ອະບາຍ ທຸຄະຕິ ວິນິບາຕ ນະຣົກ
316. ເຫຕໃຫ້ໄປສູ່ອະບາຍ ທຸຄະຕິ ວິນິບາຕ ນະຣົກ (2)
321. ໂທສຂອງທຸຈະຣິຕ
325. ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການ
ບໍ່ຄວນເສພ
333. ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການ
ຍ່ອມເປັນຜູ້ຖືກປະຖິ້ມໄວ້ໃນນະຣົກ
343. ທັມສະມາທານ ໔ ຢ່າງ
366. ວິບາກກັມຂອງບຸຄຄົລຜູ້ກະທຳອະກຸສົລ
371. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ

374. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ (2)

381. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ (3)

387. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ (4)

394. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ (5)

398. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ (6)

402. ສັຕທັງຫລາຍຍ່ອມຄົບຄ້າກັນ
ຍ່ອມສະມາຄົມກັນໂດຍທາຕ (7)

406. ອັນຕຣາຍຂອງຝົນທີ່ພວກໝໍດູຮູ້ບໍ່ໄດ້
ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ

410. ອະກຸສົລເປັນສິ່ງທີ່ສາມາດລະໄດ້

414. ພັຍຄືທຸຄະຕິ



ພິກຂຸທັງຫລາຍ ເໝືອນນັກເລງການພະນັນ ເພາະເຄາະຮ້າຍຄັ້ງທຳອິດເທົ່ານັ້ນ ຈຶ່ງຕ້ອງເສຍລູກແດ່ ເສຍເມຍແດ່ ເສຍສົມບັດທຸກຢ່າງແດ່ ຍິ່ງຂຶ້ນໄປອີກ ຕ້ອງຖືກຈອງຈຳ ເຄາະຮ້າຍຂອງນັກເລງການພະນັນທີ່ຕ້ອງເສຍໄປນັ້ນ ເປັນພຽງເລັກນ້ອຍ ຄວາມເຄາະຮ້າຍອັນໃຫຍ່ຫລວງກວ່ານັ້ນ ຄືຄົນພາລນັ້ນປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກນັ້ນເອງ.

ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໔໔໗/໔໗໑

# ບົດທັມທີ່ຄວນຊາບກ່ອນ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ ສມັຍນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍວ່າ:

**ພິກຂຸທັງຫລາຍ!**

ພິກຂຸເຫລົ່ານັ້ນທູລຮັບພຣະດຳຣັສແລ້ວ ພຣະຜູ້ມີພຣະພາຄຕຣັສວ່າ:

ພິກຂຸທັງຫລາຍ! ປຽບເໝືອນເຮືອນ ໔ ຫລັງ ມີປະຕູກົງກັນ ບຸຣຸສຜູ້ມີຕາດີຢືນຢູ່ລະຫວ່າງກາງເຮືອນ ໔ ຫລັງນັ້ນ ຍ່ອມ ເຫັນມະນຸສກຳລັງເຂົ້າເຮືອນແດ່ ກຳລັງອອກຈາກເຮືອນແດ່ ກຳລັງເດີນມາແດ່ ກຳລັງເດີນໄປແດ່ ສັນໃດ;

ພິກຂຸທັງຫລາຍ! ສັນນັ້ນເໝືອນກັນແລ ເຮົາຍ່ອມມອງເຫັນໝູ່ ສັຕກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວ ພັນຊາມ ໄດ້ດີ ຕົກຍາກ ດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງ ຈັກຂຸຂອງມະນຸສ ຍ່ອມຊາບຊັດເຊິ່ງໝູ່ສັຕຜູ້ເປັນໄປຕາມກັມ ໄດ້ວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຢຶດຖືການກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກກາຍຕາຍ ໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນກໍມີ.

ສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸ ຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຢຶດຖືການ ກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກກາຍຕາຍໄປ ຍ່ອມ ບັງເກີດໃນໝູ່ມະນຸສກໍມີ.

ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນ ທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຢຶດຖືການ

ກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງເປຕວິສັຍກໍມີ.

ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຢຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງກຳເນີດດິຣັຈສານກໍມີ.

ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຢຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກກໍມີ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລ*(ນິຣະຍະປາລາ)* ຈະຈັບສັຕນັ້ນທີ່ສ່ວນຕ່າງໆຂອງແຂນໄປສະແດງແກ່ພຣະຍາຍົມ *(ຍະມັສສະ)* ວ່າ:

ຂ້າແຕ່ພຣະອົງຄ໌! ບຸຣຸສນີ້ບໍ່ປະຕິບັຕຊອບໃນມາຣດາ ບໍ່ປະຕິບັຕຊອບໃນບິດາ ບໍ່ປະຕິບັຕຊອບໃນສະມະນະ ບໍ່ປະຕິບັຕຊອບໃນພຣາມ ບໍ່ອ່ອນນ້ອມຕໍ່ຜູ້ໃຫຍ່ໃນສະກຸລ ຂໍພຣະອົງຄ໌ຈົ່ງລົງອາຊຍາແກ່ບຸຣຸສນີ້ເຖີດ.

ພິກຂຸທັງຫລາຍ! ພຣະຍາຍົມຈະປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໑ ກັບສັຕນັ້ນວ່າ:

ດູກ່ອນທ່ານ! ທ່ານບໍ່ໄດ້ເຫັນເທວະທູຕທີ ໑ ປາກົຕຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ເຫັນເລີຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ເຫັນເດັກແດງໆຍັງອ່ອນນອນຫງາຍເປື້ອນມູຕຄູຖຂອງຕົນຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ເຫັນ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມດຳຣິຢ່າງນີ້ແດ່ບໍວ່າ:

ແມ່ນແຕ່ເຮົາກໍມີຄວາມເກີດເປັນທັມມະດາ ບໍ່ລ່ວງພົ້ນຄວາມເກີດໄປໄດ້ ຄວນທີ່ເຮົາຈະທຳຄວາມດີທາງກາຍ ທາງວາຈາ ທາງໃຈ?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ສາມາດ*(ຄິດໄດ້)* ຂ້ານ້ອຍ ມົວປະມາທເສຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງກ່າວຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ກະທຳຄວາມດີທາງກາຍ ທາງວາຈາ ທາງໃຈໄວ້ ເພາະມົວປະມາທເສຍ ດັ່ງນີ້, ເຫລົ່ານາຍນິຣະຍະບາລຈັກລົງໂທສໂດຍອາການທີ່ທ່ານປະມາທແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມາຣດາກະທຳໃຫ້ທ່ານ ບໍ່ແມ່ນບິດາກະທຳໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍກະທຳໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງຍິງກະທຳໃຫ້ທ່ານ ບໍ່ແມ່ນມິຕອະມາຕກະທຳໃຫ້ທ່ານ ບໍ່ແມ່ນຍາຕສາຍໂລຫິຕກະທຳໃຫ້ທ່ານ ບໍ່ແມ່ນສະມະນະຫລືພຣາມກະທຳໃຫ້ທ່ານ ບໍ່ແມ່ນເທວະດາກະທຳໃຫ້ທ່ານ ຕົວທ່ານເອງກະທຳເຂົ້າໄວ້ທ່ານເທົ່ານັ້ນຈັກສເວີຍວິບາກຂອງບາບກັມນີ້.

ພິກຂຸທັງຫລາຍ! ພຣະຍາຍົມຄັນປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໑ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໔ ວ່າ:

ດູກ່ອນທ່ານ! ທ່ານບໍ່ໄດ້ເຫັນເທວະທູຕທີ ໔ ປາກົຕຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ເຫັນເລີຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ເຫັນຍິງ ຫລືຊາຍທີ່ມີອາຍຸ ໘໐ ປີ, ໙໐ ປີ ຫລື ໑໐໐ ປີ ນັບແຕ່ກຳເນີດ ເປັນຄົນແກ່ ຊົກໂຄງຄົດ ຫລັງງໍ ຖືໄມ້ເທົ້າ ງົກເງິ່ນ ເດີນໄປ ກະສັບກະສ່າຍ ລ່ວງໄວໜຸ່ມສາວ ແຂ້ວຫລ່ອນ ຜົມຫງອກ ໜັງຫູ່ ຫົວລ້ານ ໜັງຫ່ຽວ ໂຕຕົກກະຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ເຫັນ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານຮູ້ຄວາມ ມີ ສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມດຳຣິຢ່າງນີ້ແດ່ບໍວ່າ:

ແມ່ນແຕ່ເຮົາກໍມີຄວາມແກ່ເປັນທັມມະດາ ບໍ່ລ່ວງພົ້ນຄວາມແກ່ ໄປໄດ້ ຄວນທີ່ເຮົາຈະທຳຄວາມດີທາງກາຍ ທາງວາຈາ ທາງ ໃຈ?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ສາມາດ ຂ້ານ້ອຍ ມົວປະ ມາທເສຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງກ່າວຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ກະທຳຄວາມດີທາງກາຍ ທາງວາຈາ ທາງໃຈໄວ້ ເພາະມົວປະມາທເສຍ ດັ່ງນີ້, ເຫລົ່ານາຍນິຣະຍະບາລຈັກລົງໂທສໂດຍອາການທີ່ທ່ານປະມາທແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມາຣດາກະທຳໃຫ້ທ່ານ ບໍ່ແມ່ນບິດາກະທຳໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍກະທຳໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງຍິງກະທຳໃຫ້ທ່ານ ບໍ່ແມ່ນມິຕອະມາຕກະທຳໃຫ້ທ່ານ ບໍ່ແມ່ນຍາຕສາຍໂລຫິຕກະທຳໃຫ້ທ່ານ ບໍ່ແມ່ນສະມະນະຫລືພຣາມກະທຳໃຫ້ທ່ານ ບໍ່ແມ່ນເທວະດາກະທຳໃຫ້ທ່ານ ຕົວທ່ານເອງກະທຳເຂົ້າໄວ້ ທ່ານເທົ່ານັ້ນຈັກສເວີຍວິບາກຂອງບາບກັມນີ້.

ພິກຂຸທັງຫລາຍ! ພຣະຍາຍົມຄັນປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໔ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໕ ວ່າ:

ດູກ່ອນທ່ານ! ທ່ານບໍ່ໄດ້ເຫັນເທວະທູຕທີ ໕ ປາກົຕຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ເຫັນເລີຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ເຫັນຍິງ ຫລືຊາຍຜູ້ປ່ວຍໄຂ້ ໄດ້ຮັບທຸກຂະເວທະນາ ເປັນໄຂ້ໜັກ ນອນ ເປື້ອນມູຕຄູຖຂອງຕົນ ມີຜູ້ອື່ນຄອຍພະຍຸງລຸກ ພະຍຸງເດີນ ຢູ່ ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ເຫັນ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານຮູ້ຄວາມ ມີ ສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມດຳຣິຢ່າງນີ້ແດ່ບໍວ່າ:

ແມ່ນແຕ່ເຮົາກໍມີຄວາມເຈັບໄຂ້ເປັນທັມມະດາ ບໍ່ລ່ວງພົ້ນ ຄວາມເຈັບໄຂ້ໄປໄດ້ ຄວນທີ່ເຮົາຈະທຳຄວາມດີທາງກາຍ ທາງວາຈາ ທາງໃຈ?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ສາມາດ ຂ້ານ້ອຍ ມົວປະ ມາທເສຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງກ່າວຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ກະທຳ ຄວາມດີທາງກາຍ ທາງວາຈາ ທາງໃຈໄວ້ ເພາະມົວປະມາທ ເສຍ ດັ່ງນີ້, ເຫລົ່ານາຍນິຣະຍະບາລຈັກລົງໂທສໂດຍອາການ ທີ່ທ່ານປະມາທແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມາຣດາ

ກະທຳໃຫ້ທ່ານ ບໍ່ແມ່ນບິດາກະທຳໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍກະທຳໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງຍິງກະທຳໃຫ້ທ່ານ ບໍ່ແມ່ນມິຕອະມາຕກະທຳໃຫ້ທ່ານ ບໍ່ແມ່ນຍາຕສາຍໂລຫິຕກະທຳໃຫ້ທ່ານ ບໍ່ແມ່ນສະມະນະຫລືພຣາມກະທຳໃຫ້ທ່ານ ບໍ່ແມ່ນເທວະດາກະທຳໃຫ້ທ່ານ ຕົວທ່ານເອງກະທຳເຂົ້າໄວ້ ທ່ານເທົ່ານັ້ນຈັກສເວີຍວິບາກຂອງບາບກັມນີ້.

ພິກຂຸທັງຫລາຍ! ພຣະຍາຍົມຄັນປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໓ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໔ ວ່າ:

ດູກ່ອນທ່ານ! ທ່ານບໍ່ໄດ້ເຫັນເທວະທູຕທີ ໔ ປາກົຕຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ເຫັນເລີຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ເຫັນຣາຊາທັງຫລາຍໃນໝູ່ມະນຸສຈັບໂຈຣຜູ້ປະພຶຕຜິດມາແລ້ວ ສັ່ງລົງໂທສຕ່າງໆຊະນິດແດ່ຫລື ຄື:
ຕີດ້ວຍແສ້ແດ່,
ຕີດ້ວຍຫວາຍແດ່,

ຕີດ້ວຍກະບອງສັ້ນແດ່,

ມັດມືແດ່,

ມັດຕີນແດ່,

ມັດທັງມືທັງຕີນແດ່,

ຕັດຫູແດ່,

ຕັດດັງແດ່,

ຕັດທັງຫູທັງດັງແດ່,

ລົງໂທສດ້ວຍວິທີ ໝໍ້ຄຽງນໍ້າມັນແດ່,

ລົງໂທສດ້ວຍວິທີ ຂອດສັງຂ໌ແດ່,

ລົງໂທສດ້ວຍວິທີ ປາກຣາຫູແດ່,

ລົງໂທສດ້ວຍວິທີ ມາລັຍໄຟແດ່,

ລົງໂທສດ້ວຍວິທີ ຄົບມືແດ່,

ລົງໂທສດ້ວຍວິທີ ລີ້ວສ່າຍແດ່,

ລົງໂທສດ້ວຍວິທີ ນຸ່ງເປືອກໄມ້ແດ່,

ລົງໂທສດ້ວຍວິທີ ຢືນກວາງແດ່,

ລົງໂທສດ້ວຍວິທີ ກ່ຽວເຫຍື່ອເບັດແດ່,

ລົງໂທສດ້ວຍວິທີ ຫລຽນກະຫາປະນະແດ່,

ລົງໂທສດ້ວຍວິທີ ແປງແສບແດ່,

ລົງໂທສດ້ວຍວິທີ ກາງວຽນແດ່,

ລົງໂທສດ້ວຍວິທີ ຕັ່ງຟາງແດ່,

ລາດດ້ວຍນໍ້າມັນຮ້ອນໆແດ່,

ໃຫ້ໝາກັດ-ຊິດແດ່,
ໃຫ້ນອນຫງາຍເທິງຫລາວທັງເປັນໆແດ່,
ຕັດຫົວດ້ວຍດາບແດ່,

ສັດນັ້ນທູລຢ່າງນີ້ວ່າ: ເຫັນ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມດໍາຣິຢ່າງນີ້ແດ່ບໍວ່າ:

ໂຣ! ເປັນອັນວ່າ ສັດທີ່ກະທໍາກັມຊົ່ວໄວ້ນັ້ນ ຍ່ອມຖືກລົງໂທສຕ່າງຊະນິດເຫັນປານນີ້ໃນປັຈຈຸບັນ ຈະກ່າວຫຍັງເຖິງຊາຕໜ້າໜໍ ຄວນທີ່ເຮົາຈະທໍາຄວາມດີທາງກາຍ ທາງວາຈາ ທາງໃຈ?

ສັດນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ສາມາດ ຂ້ານ້ອຍ ມົວປະມາທເສຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງກ່າວຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ກະທໍາຄວາມດີທາງກາຍ ທາງວາຈາ ທາງໃຈໄວ້ ເພາະມົວປະມາທເສຍ ດັ່ງນີ້, ເຫລົ່ານາຍນິຣະຍະບາລຈັກລົງໂທສໂດຍອາການທີ່ທ່ານປະມາທແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມາຣດາກະທໍາໃຫ້ທ່ານ ບໍ່ແມ່ນບິດາກະທໍາໃຫ້ທ່ານ ບໍ່ແມ່ນອ້າຍນ້ອງ

ຊາຍກະທຳໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງຍິງກະທຳໃຫ້ທ່ານ ບໍ່ແມ່ນມິຕອະມາຕກະທຳໃຫ້ທ່ານ ບໍ່ແມ່ນຍາຕສາຍໂລຫິຕກະທຳໃຫ້ທ່ານ ບໍ່ແມ່ນສະມະນະຫລືພຣາມກະທຳໃຫ້ທ່ານ ບໍ່ແມ່ນເທວະດາກະທຳໃຫ້ທ່ານ ຕົວທ່ານເອງກະທຳເຂົ້າໄວ້ ທ່ານເທົ່ານັ້ນຈັກສເວີຍວິບາກຂອງບາບກັມນີ້.

ພິກຂຸທັງຫລາຍ! ພຣະຍາຍົມຄັນປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໔ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈໄຕ່ຖາມເຖິງເທວະທູຕທີ ໕ ວ່າ:

ດູກ່ອນທ່ານ! ທ່ານບໍ່ໄດ້ເຫັນເທວະທູຕທີ ໕ ປາກົຕຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ເຫັນເລີຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ເຫັນຍິງຫລືຊາຍທີ່ຕາຍແລ້ວວັນໜຶ່ງແດ່ ສອງວັນແດ່ ສາມວັນແດ່ ຂຶ້ນພອງ ຂຽວຊ້ຳ ມີນ້ຳເຫລືອງໄຫລຢູ່ໃນໝູ່ມະນຸສຫລື?

ສັຕນັ້ນທູລຢ່າງນີ້ວ່າ: ເຫັນ ຂ້ານ້ອຍ!

ພຣະຍາຍົມຈຶ່ງຖາມຢ່າງນີ້ວ່າ: ດູກ່ອນທ່ານ ທ່ານຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມດຳຣິຢ່າງນີ້ແດ່ບໍວ່າ:

ແມ່ນແຕ່ເຮົາກໍມີຄວາມຕາຍເປັນທັມມະດາ ບໍ່ລ່ວງພົ້ນຄວາມຕາຍໄປໄດ້ ຄວນທີ່ເຮົາຈະທຳຄວາມດີທາງກາຍ ທາງວາຈາ ທາງໃຈ?

ສັຕນັ້ນທູລຢ່າງນີ້ວ່າ: ຂ້ານ້ອຍບໍ່ສາມາດ ຂ້ານ້ອຍ ມົວປະມາທເສຍ ຂ້ານ້ອຍ!

ພຣະຍາຍົມຈຶ່ງກ່າວຢ່າງນີ້ວ່າ: ດູກ່ອນທ່ານ ທ່ານບໍ່ໄດ້ກະທຳຄວາມດີທາງກາຍ ທາງວາຈາ ທາງໃຈໄວ້ ເພາະມົວປະມາທເສຍ ດັ່ງນີ້, ເຫລົ່ານາຍນິຣະຍະບາລຈັກລົງໂທສໂດຍອາການທີ່ທ່ານປະມາທແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມາຣດາກະທຳໃຫ້ທ່ານ ບໍ່ແມ່ນບິດາກະທຳໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍກະທຳໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງຍິງກະທຳໃຫ້ທ່ານ ບໍ່ແມ່ນມິຕອະມາຕກະທຳໃຫ້ທ່ານ ບໍ່ແມ່ນຍາຕສາຍໂລຫິຕກະທຳໃຫ້ທ່ານ ບໍ່ແມ່ນສະມະນະຫລືພຣາມກະທຳໃຫ້ທ່ານ ບໍ່ແມ່ນເທວະດາກະທຳໃຫ້ທ່ານ ຕົວທ່ານເອງກະທຳເຂົ້າໄວ້ ທ່ານເທົ່ານັ້ນຈັກສເວີຍວິບາກຂອງບາບກັມນີ້.

ພິກຂຸທັງຫລາຍ! ພຣະຍາຍົມຄັນປອບໂຍນ ເອົາອົກເອົາໃຈ ໄຕ່ຖາມເຖິງເທວະທູຕທີ ໕ ກັບສັຕນັ້ນແລ້ວ ກໍຊົງນິ້ງຢູ່.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລກະທຳເຫຕຊື່ການຈອງຈຳ ໕ ປະການຄື:

ຕອກຕະປູເຫລັກແດງທີ່ມື ໔ ຂ້າງ, ທີ່ເທົ້າ ໔ ຂ້າງ ແລະທີ່ກາງເອິກ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບສັຕນັ້ນຂຶງພືດ *(ຈັບໃຫ້ນອນຢຽດຍາວກາງແຂນຂາອອກ)* ແລ້ວເອົາຂວານຖາກ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບສັຕນັ້ນເອົາເທົ້າຂຶ້ນຂ້າງເທິງ ເອົາຫົວລົງຂ້າງລຸ່ມ ແລ້ວຖາກດ້ວຍພ້າ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບສັຕນັ້ນທຽມຣົຖແລ້ວ ໃຫ້ແລ່ນກັບໄປກັບມາບົນແຜ່ນດິນທີ່ມີໄຟຕິດທົ່ວລຸກເປັນແປວ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າເຈັບແສບຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບສັຕນັ້ນປີນຂຶ້ນປີນລົງເຊິ່ງພູເຂົາຖ່ານໄຟໜ່ວຍໃຫຍ່ ທີ່ມີໄຟຕິດທົ່ວ ລຸກເປັນແປວ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນພູເຂົາຖ່ານໄຟນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບສັຕນັ້ນເອົາເທົ້າຂຶ້ນຂ້າງເທິງ ເອົາຫົວລົງຂ້າງລຸ່ມ ແລ້ວພຸ່ງລົງໃນໝໍ້ທອງແດງທີ່ຮ້ອນມີໄຟຕິດທົ່ວ ລຸກເປັນແປວ ສັຕນັ້ນຈະເດືອດເປັນຟອງຢູ່ໃນໝໍ້ທອງແດງນັ້ນ ເມື່ອເຂົາເດືອດເປັນຟອງຢູ່ບາງຄັ້ງຟູຂຶ້ນ ບາງຄັ້ງຈົມລົງ ບາງຄັ້ງລອຍໄປທາງຂວາງ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນໝໍ້ທອງແດງນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະໂຍນສັຕນັ້ນລົງໃນມະຫານະຣົກ ກໍມະຫານະຣົກນັ້ນ ມີ ໔ ມູມ ໔ ປະຕູ ແບ່ງໄວ້ເປັນສ່ວນເທົ່າກັນ ມີກໍາແພງເຫລັກອ້ອມຮອບ ຄອບໄວ້ດ້ວຍແຜ່ນເຫລັກ ມະຫານະຣົກນັ້ນມີພື້ນເປັນເຫລັກລຸກເປັນແປວ ແຜ່ໄປໄກດ້ານລະ ໑໐໐ ໂຍຊນ໌ ປະດິສຖານຢູ່ທຸກເມື່ອ.

ພິກຂຸທັງຫລາຍ! ມະຫານະຣົກນັ້ນມີແປວໄຟພຸ່ງອອກຈາກຝາດ້ານໜ້າເຖິງຝາດ້ານຫລັງ ພຸ່ງຈາກຝາດ້ານຫລັງເຖິງຝາດ້ານໜ້າ ພຸ່ງຈາກຝາດ້ານເໜືອເຖິງຝາດ້ານໃຕ້ ພຸ່ງຈາກຝາດ້ານໃຕ້ເຖິງຝາດ້ານເໜືອ ພຸ່ງຈາກຂ້າງລຸ່ມເຖິງຂ້າງເທິງ ພຸ່ງຈາກຂ້າງເທິງເຖິງຂ້າງລຸ່ມ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າເຈັບແສບຢູ່ໃນມະຫານະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ຍ່ອມມີສມັຍທີ່ໃນບາງຄັ້ງບາງຄາວ ໂດຍລ່ວງໄລຍະເວລາອັນຍາວນານ ປະຕູດ້ານໜ້າຂອງມະຫານະຣົກເປີດ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ຊີ້ນ ໄໝ້ເອັນ ແມ່ນແຕ່ກະດູກທັງຫລາຍກໍເປັນຄວັນພຸ່ງອອກ ແຕ່ອະວັຍວະທີ່ຖືກແຍກອອກແລ້ວຈະກັບຄືງຮູປເດີມທັນທີ ແລະໃນຂະນະທີ່ສັຕນັ້ນໃກ້ຈະເຖິງປະຕູ ປະຕູນັ້ນຈະປິດ ສັຕນັ້ນຍ່ອມສເວີຍເວທະນາອັນ

ເປັນທຸກຂ໌ກ້າ ເຈັບແສບຢູ່ໃນມະຫານະຣົກນັ້ນ ແຕ່ຍັງບໍ່ຕາຍ ຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ຍ່ອມມີສມັຍທີ່ໃນບາງຄັ້ງບາງຄາວ ໂດຍລ່ວງໄລຍະເວລາອັນຍາວນານ ປະຕູດ້ານຫລັງຂອງມະຫານະຣົກເປີດ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ຊີ້ນ ໄໝ້ເອັນ ແມ່ນແຕ່ກະດູກທັງຫລາຍກໍເປັນຄວັນພຸ່ງອອກ ແຕ່ອະວັຍວະທີ່ຖືກແຍກອອກແລ້ວຈະກັບຄືງຮູບເດີມທັນທີ ແລະໃນຂະນະທີ່ສັຕນັ້ນໃກ້ຈະເຖິງປະຕູ ປະຕູນັ້ນຈະປິດ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນມະຫານະຣົກນັ້ນ ແຕ່ຍັງບໍ່ຕາຍ ຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ຍ່ອມມີສມັຍທີ່ໃນບາງຄັ້ງບາງຄາວ ໂດຍລ່ວງໄລຍະເວລາອັນຍາວນານ ປະຕູດ້ານເໜືອຂອງມະຫານະຣົກເປີດ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ຊີ້ນ ໄໝ້ເອັນ ແມ່ນແຕ່ກະດູກທັງຫລາຍກໍເປັນຄວັນພຸ່ງອອກ ແຕ່ອະວັຍວະທີ່ຖືກແຍກອອກແລ້ວຈະກັບຄືງຮູບເດີມທັນທີ ແລະໃນຂະນະທີ່ສັຕນັ້ນໃກ້ຈະເຖິງປະຕູ ປະຕູນັ້ນຈະປິດ ສັຕນັ້ນຍ່ອມສເວີຍເວທະນາອັນ

ເປັນທຸກຂ໌ກ້າ ເຈັບແສບຢູ່ໃນມະຫານະຣົກນັ້ນ ແຕ່ຍັງບໍ່ຕາຍ ຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ຍ່ອມມີສມັຍທີ່ໃນບາງຄັ້ງບາງຄາວ ໂດຍລ່ວງໄລຍະເວລາອັນຍາວນານ ປະຕູດ້ານໃຕ້ຂອງມະຫານະຣົກເປີດ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ຊີ້ນ ໄໝ້ເອັນ ແມ່ນແຕ່ກະດູກທັງຫລາຍກໍເປັນຄວັນພຸ່ງອອກ ແຕ່ອະວັຍວະທີ່ຖືກແຍກອອກແລ້ວຈະກັບຄືງຮູປເດີມທັນທີ ແລະໃນຂະນະທີ່ສັຕນັ້ນໃກ້ຈະເຖິງປະຕູ ປະຕູນັ້ນຈະປິດ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນມະຫານະຣົກນັ້ນ ແຕ່ຍັງບໍ່ຕາຍ ຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ຍ່ອມມີສມັຍທີ່ໃນບາງຄັ້ງບາງຄາວ ໂດຍລ່ວງໄລຍະເວລາອັນຍາວນານ ປະຕູດ້ານໜ້າຂອງມະຫານະຣົກເປີດ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ຊີ້ນ ໄໝ້ເອັນ ແມ່ນແຕ່ກະດູກທັງຫລາຍກໍເປັນຄວັນພຸ່ງອອກ ແຕ່ອະວັຍວະທີ່ຖືກແຍກອອກແລ້ວຈະກັບຄືງຮູປເດີມທັນທີ ສັຕນັ້ນຈະອອກທາງປະຕູນັ້ນໄດ້ ແຕ່ວ່າມະຫານະຣົກນັ້ນແລ ມີນະຣົກເຕັມດ້ວຍຄູຖໃຫຍ່ປະກອບຢູ່ຮອບດ້ານ ສັຕນັ້ນຈະຕົກລົງໃນນະຣົກຄູຖນັ້ນ ແລະ

ໃນນະຣົກຄູຖນັ້ນແລ ມີໝູ່ສັຕປາກດັ່ງເຂັມຄອຍເຊືອດເສືອນ ຜິວ ແລ້ວເຊືອດເສືອນໜັງ ແລ້ວເຊືອດເສືອນຊີ້ນ ແລ້ວເຊືອດເສືອນເອັນ ແລ້ວເຊືອດເສືອນກະດູກ ແລ້ວກິນເຍື້ອໃນກະດູກ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນນະຣົກຄູຖນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ແລະນະຣົກຄູຖນັ້ນ ມີນະຣົກທີ່ເຕັມດ້ວຍເຖົ່າຮ້ອນ ໃຫຍ່ ປະກອບຢູ່ຮອບດ້ານ ສັຕນັ້ນຈະຕົກລົງໄປໃນນະຣົກເຖົ່າຮ້ອນນັ້ນ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນນະຣົກເຖົ່າຮ້ອນນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ແລະໃນນະຣົກເຖົ່າຮ້ອນນັ້ນ ມີປ່າງີ້ວໃຫຍ່ ປະກອບຢູ່ຮອບດ້ານ ຕົ້ນສູງຮຽວຂຶ້ນໄປ ໑ ໂຍຊນ໌ ມີໜາມຍາວ ໑໖ ອົງຄຸລີ ມີໄຟຕິດທົ່ວລຸກເປັນແປວ ເຫລົ່ານາຍນິຣະຍະບາລຈະບັງຄັບໃຫ້ສັຕນັ້ນຂຶ້ນໆ ລົງໆ ທີ່ຕົ້ນງີ້ວນັ້ນ ສັຕນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນຕົ້ນງີ້ວນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ແລະປ່າງີ້ວນັ້ນ ມີປ່າຕົ້ນໄມ້ໃບເປັນດາບໃຫຍ່ ປະກອບຢູ່ຮອບດ້ານ ສັຕນັ້ນຈະເຂົ້າໄປໃນປ່ານັ້ນ ຈະຖືກໃບ

ໄມ້ທີ່ລົມພັດຕັດມືແດ່ ຕັດຕີນແດ່ ຕັດທັງມືທັງຕີນແດ່ ຕັດຫູແດ່ ຕັດດັງແດ່ ຕັດທັງຫູທັງດັງແດ່ ສັດນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນປ່າຕົ້ນໄມ້ໃບເປັນດາບນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ແລະປ່າຕົ້ນໄມ້ໃບເປັນດາບນັ້ນ ມີແມ່ນ້ຳໃຫຍ່ ນ້ຳເປັນກົດປະກອບຢູ່ຮອບດ້ານ ສັດນັ້ນຈະຕົກລົງໄປໃນແມ່ນ້ຳນັ້ນ ຈະລອຍຢູ່ໃນແມ່ນ້ຳນັ້ນ ຕາມກະແສແດ່ ທວນກະແສແດ່ ທັງຕາມກະແສແລະທວນກະແສແດ່ ສັດນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນແມ່ນ້ຳນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລພາກັນເອົາເບັດເກາະສັດນັ້ນຂຶ້ນວາງເທິງບົກ ແລ້ວກ່າວຢ່າງນີ້ວ່າ:

ດູກ່ອນທ່ານ! ເຈົ້າຕ້ອງການອັນໃດ?

ສັດນັ້ນບອກຢ່າງນີ້ວ່າ ຂ້ານ້ອຍຫິວ ຂ້ານອ້ຍ!

ເຫລົ່ານາຍນິຣະຍະບາລຈຶ່ງເອົາຂໍເຫລັກຮ້ອນມີໄຟຕິດທົ່ວ ລຸກເປັນແປວ ເປີດປາກອອກ ແລ້ວໃສ່ກ້ອນໂລຫະຮ້ອນມີໄຟຕິດ

ທົ່ວ ລຸກເປັນແປວ ເຂົ້າໃນປາກ ກ້ອນໂລຫະນັ້ນຈະໄໝ້ສົບແດ່ ໄໝ້ປາກແດ່ ໄໝ້ຄໍແດ່ ໄໝ້ທ້ອງແດ່ ຂອງສັດນັ້ນ ພາເອົາໄສ້ໃຫຍ່ແດ່ ໄສ້ນ້ອຍແດ່ ອອກມາທາງສ່ວນເບື້ອງລຸ່ມ ສັດນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນທີ່ນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລກ່າວກັບສັດນັ້ນຢ່າງນີ້ວ່າ:

ດູກ່ອນທ່ານ! ເຈົ້າຕ້ອງການອັນໃດ?

ສັດນັ້ນບອກຢ່າງນີ້ວ່າ ຂ້ານ້ອຍກະຫາຍ ຂ້ານອັຍ!

ເຫລົ່ານາຍນິຣະຍະບາລຈຶ່ງເອົາຂໍເຫລັກຮ້ອນມີໄຟຕິດທົ່ວ ລຸກເປັນແປວ ເປີດປາກອອກ ແລ້ວເອົານ້ຳທອງແດງຮ້ອນມີໄຟຕິດທົ່ວ ລຸກເປັນແປວ ຖອກເຂົ້າໄປໃນປາກ ນ້ຳທອງແດງນັ້ນຈະໄໝ້ສົບແດ່ ໄໝ້ປາກແດ່ ໄໝ້ຄໍແດ່ ໄໝ້ທ້ອງແດ່ ຂອງສັດນັ້ນ ພາເອົາໄສ້ໃຫຍ່ແດ່ ໄສ້ນ້ອຍແດ່ ອອກມາທາງສ່ວນເບື້ອງລຸ່ມ ສັດນັ້ນຍ່ອມສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບຢູ່ໃນທີ່ນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພຣະຍາຍົມໄດ້ມີຄວາມດຳຣິຢ່າງນີ້ວ່າ:

ໂອທ່ານເອີ໋ຍ! ເປັນອັນວ່າ ເຫລົ່າສັຕທີ່ກະທຳກັມຊົ່ວໄວ້ໃນໂລກ ຍ່ອມຖືກນາຍນິຣະຍະບາລລົງໂທສຕ່າງຊະນິດເຫັນປານນີ້.

**ໂອໜໍ ຂໍເຮົາຈົ່ງໄດ້ຄວາມເປັນມະນຸສ,**
**ຂໍພຣະຕະຖາຄົຕອະຣະຫັນຕະສັມມາສັມພຸທທະ**
**ຈົ່ງອຸບັຕຂຶ້ນໃນໂລກ,**
**ຂໍເຮົາຈົ່ງໄດ້ນັ່ງໃກ້ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ,**
**ຂໍພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນຈົ່ງຊົງສະແດງທັມແກ່ເຮົາ,**
**ແລະຂໍເຮົາໄດ້ຮູ້ທົ່ວເຖິງທັມຂອງພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນເຖີດ.**

ພິກຂຸທັງຫລາຍ! ກໍເຣື່ອງນັ້ນ ເຮົາບໍ່ໄດ້ຟັງຕໍ່ສະມະນະຫລືພຣາມອື່ນໆແລ້ວຈຶ່ງບອກ ກໍເຮົາບອກເຣື່ອງທີ່ຮູ້ເອງ ເຫັນເອງ ຊາບເອງທັງນັ້ນ.

ພຣະຜູ້ມີພຣະພາຄຜູ້ສຸຄົຕສາສດາຄັນໄດ້ຕຣັສໄວຍາກອຣພາສິຕນີ້ແລ້ວ ຈຶ່ງໄດ້ຕຣັສຄາຖາປະພັນຕໍ່ໄປອີກວ່າ:

**ນໍຣະຊົນເຫລົ່າໃດຍັງເປັນມານົພ ອັນເທວະທູຕຕັກເຕືອນແລ້ວ ປະມາທຢູ່ ນໍຣະຊົນເຫລົ່ານັ້ນຈະເຂົ້າເຖິງໝູ່ສັຕຊົ່ວ ເສົ້າໂສກ ສິ້ນກາລະນານ.**

ສ່ວນນໍຣະຊົນເຫລົ່າໃດ ເປັນສັປບຸຣຸສຜູ້ສງົບໃນໂລກນີ້ ອັນເທວະທູຕຕັກເຕືອນແລ້ວ ຍ່ອມບໍ່ປະມາທໃນທັມຂອງພຣະອະຣິຍະໃນກາລໃດໆ ເຫັນພັຍໃນຄວາມຖືໝັ້ນອັນເປັນເຫຕແຫ່ງຊາຕແລະມະຣະນະແລ້ວ ບໍ່ຖືໝັ້ນ ຫລຸດພົ້ນໃນທັມອັນເປັນທີ່ສິ້ນຊາຕແລະມະຣະນະໄດ້ ນໍຣະຊົນເຫລົ່ານັ້ນເປັນຜູ້ເຖິງຄວາມກະເສມ ມີສຸຂ ດັບສນິດໃນປັຈຈຸບັນ ລ່ວງເວຣແລະພັຍທັງປວງ ຍ່ອມຂ້າມພົ້ນທຸກຂ໌ທັງປວງໄດ້.

---

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໓໕໕-໓໗໔/໕໐໔-໕໓໔*



ພິກຂຸທັງຫລາຍ ກໍບຸຄຄົລຜູ້ໄປຕາມກະແສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຍ່ອມເສພກາມທັງຫລາຍ
ແລະຍ່ອມກະທຳກັມອັນເປັນບາບ.
ພິກຂຸທັງຫລາຍ ນີ້ຮຽກວ່າ ບຸຄຄົລຜູ້ໄປຕາມກະແສ.

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໑/໕/໕*



**“Bhikkhus, a lay follower should not engage in these five trades. What five? Trade in weapons, trade in living creatures, trade in meat, trade in intoxicants, and trade in poisons. Bhikkhus, a lay follower should not engage in these five trades.”**

*Vaṇijjāsutta AN 5.177*
*https://suttacentral.net/an5.177 Translated by Bhikkhu Sujato*

# ການຄ້າຂາຍ ໕ ປະການ ອຸປາສົກບໍ່ຄວນກະທຳ

ພິກຂຸທັງຫລາຍ! ການຄ້າຂາຍ ໕ ປະການນີ້ ອຸປາສົກບໍ່ຄວນກະທຳ, ໕ ປະການເປັນຢ່າງໃດ? ຄື:

**ການຄ້າຂາຍອາວຸດ** *(ສັຕຖະວະນິຊຊາ)*,
**ການຄ້າຂາຍສັຕ** *(ສັຕຕະວະນິຊຊາ)*,
**ການຄ້າຂາຍຊີ້ນສັຕ** *(ມັງສະວະນິຊຊາ)*,
**ການຄ້າຂາຍສິ່ງມຶນເມົາ** *(ມັຊຊະວະນິຊຊາ)*,
**ການຄ້າຂາຍຢາພິດ** *(ວິສະວະນິຊຊາ)*,
ພິກຂຸທັງຫລາຍ! ການຄ້າຂາຍ ໕ ປະການນີ້ແລ ອຸປາສົກບໍ່ຄວນກະທຳ.

# ໂພຄະຊັພຍ໌ທີ່ເກີດຂຶ້ນໂດຍຊອບ ຍ່ອມມີທາງເສື່ອມ ໔ ປະການ[1]

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ນິຄົມຂອງຊາວໂກລິຍະຊື່ ກັກກະຣະປັຕຕະ ໃກ້ເມືອງໂກລິຍະ ຄັ້ງນັ້ນແລ ໂກລິຍະບຸຕຊື່ ທີຄະຊານຸ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

[1] *ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ ໒໓/໒໒໒-໒໒໕/໑໔໔*

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍເປັນຄະຣືຫັສຖ໌ຍັງບໍຣິໂພຄກາມ ຢູ່ຄອງເຮືອນ ນອນບຽດບຸຕ ໃຊ້ຈັນທນ໌ໃນແຄວ້ນກາສີ ຍັງຊົງດອກໄມ້ຂອງຫອມແລະເຄື່ອງລູບທາ ຍັງຍິນດີເງິນແລະຄໍາຢູ່.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄໂປດຊົງສະແດງທັມທີ່ເໝາະແກ່ຂ້ານ້ອຍດ້ວຍ ອັນເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂໃນປັຈຈຸບັນ ເພື່ອປະໂຍຊນ໌ ເພື່ອຄວາມສຸຂໃນພາຍໜ້າເຖີດ.

ພະຍັຄຄະປັຊຊະ! ທັມ ໔ ປະກາຣນີ້ ຍ່ອມເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂໃນປັຈຈຸບັນແກ່ກຸລະບຸຕ, ໔ ປະກາຣເປັນຢ່າງໃດ? ຄື:

**ອຸຕຖານະສັມປະທາ,**

**ອາຣັກຂະສັມປະທາ,**

**ກັລຍານະມິຕຕະຕາ,**

**ສະມະຊີວິຕາ.**

ພະຍັຄຄະປັຊຊະ! ກໍອຸຕຖານະສັມປະທາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ລ້ຽງຊີພດ້ວຍການໝັ່ນປະກອບການງານ:

**ຖ້າເຮັດກະສິກັມ** *(ກະສິຍາ ຍະທິ),*

**ຖ້າກະທຳການຄ້າຂາຍ** *(ວະນິຊຊາຍະ ຍະທິ),*
**ຖ້າລ້ຽງສັດ** *(ໂຄຣັກເຂນະ ຍະທິ),*
**ຖ້າເປັນນາຍທະນູ** *(ອິສສັຕເຖນະ ຍະທິ),*
**ຖ້າເປັນຣາຊະບຸຣຸສ** *(ຣາຊະໂປຣິເສນະ ຍະທິ),*
**ຫລືສີລະປະຢ່າງໃດຢ່າງໜຶ່ງ** *(ສິປປັນຍະຕະເຣນະ),*
ກໍເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນການງານນັ້ນ ປະກອບດ້ວຍປັນຍາເຄື່ອງສອດສ່ອງ ອັນເປັນອຸບາຍໃນການງານນັ້ນ ສາມາດກະທຳໄດ້ ສາມາດຈັດການໄດ້ *(ຕັຕຖະ ທັກໂຂ ໂຫຕິ ອະນະລະໂສ ຕັຕຣຸປາຍາຍະ ວິມັງສາຍະ ສະມັນນາຄະໂຕ ອະລັງ ກາຕຸງ ອະລັງ ສັງວິທາຕຸງ)* ພະຍັຄຄະປັຊຊະ ນີ້ຮຽກວ່າ: ອຸຕຖານະສັມປະທາ.

ພະຍັຄຄະປັຊຊະ! ກໍອາຣັກຂະສັມປະທາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ມີໂພຄະຊັພຍ໌ທີ່ຫາມາໄດ້ດ້ວຍຄວາມຂະຫຍັນໝັ່ນພຽນ ສັ່ງສົມຂຶ້ນດ້ວຍກຳລັງແຂນ ມີເຫື່ອໄຫລໂຕ ຊອບທັມ ໄດ້ມາໂດຍທັມ ເຂົາຮັກສາຄຸ້ມຄອງໂພຄະຊັພຍ໌ເຫລົ່ານັ້ນໄວ້ໄດ້ພ້ອມມູລ ດ້ວຍກະທຳໄວ້ໃນໃຈວ່າສັນໃດໜໍ ພຣະຣາຊາຈຶ່ງຈະບໍ່ບໍຣິໂພຄຊັພຍ໌ເຫລົ່ານີ້ຂອງເຮົາ ໂຈຣຈຶ່ງຈະບໍ່ລັກເອົາໄປ ໄຟຈຶ່ງຈະບໍ່ໄໝ້ ນ້ຳຈຶ່ງຈະບໍ່ພັດໄປ ທາຍາທຜູ້ບໍ່ເປັນທີ່ຮັກຈຶ່ງຈະບໍ່ລັກເອົາໄປ. ພະຍັຄຄະປັຊຊະນີ້ຮຽກວ່າ: ອາຣັກຂະສັມປະທາ.

ພະຍັຄຄະປັຊຊະ! ກໍກັລຍານະມິຕຕະຕາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ຢູ່ອາສັຍໃນບ້ານຫລື ນິຄົມໃດ ຍ່ອມດຳຣົງຕົນ ເຈຣະຈາ ສົນທະນາກັບບຸຄຄົລໃນ ບ້ານຫລືນິຄົມນັ້ນ ເຊິ່ງເປັນຄະຫະບໍດີຫລືບຸຕຂອງຄະຫະບໍດີ ເປັນຄົນໜຸ່ມຫລືຄົນແກ່ ຜູ້ມີສະມາຈາຣບໍຣິສຸທ ຜູ້ເຖິງພ້ອມ ດ້ວຍສັທທາ ເຖິງພ້ອມດ້ວຍສີລ ເຖິງພ້ອມດ້ວຍຈາຄະ ເຖິງ ພ້ອມດ້ວຍປັນຍາ ສຶກສາສັທທາສັມປະທາຕາມຜູ້ເຖິງພ້ອມ ດ້ວຍສັທທາ, ສຶກສາສີລະສັມປະທາຕາມຜູ້ເຖິງພ້ອມດ້ວຍສີລ, ສຶກສາຈາຄະສັມປະທາຕາມຜູ້ເຖິງພ້ອມດ້ວຍຈາຄະ, ສຶກສາ ປັນຍາສັມປະທາຕາມຜູ້ເຖິງພ້ອມດ້ວຍປັນຍາ. ພະຍັຄຄະປັຊ ຊະ ນີ້ຮຽກວ່າ: ກັລຍານະມິຕຕະຕາ.

ພະຍັຄຄະປັຊຊະ! ກໍສະມະຊີວິຕາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ຮູ້ທາງຈະເຣີນ ແຫ່ງຊັພຍ໌ ຮູ້ທາງເສື່ອມແຫ່ງຊັພຍ໌ ແລ້ວລ້ຽງຊີວິຕພໍເໝາະ ບໍ່ຟຸມເຟືອຍ ບໍ່ຝືດເຄືອງ ດ້ວຍຄິດວ່າ ຣາຍໄດ້ຂອງເຮົາຈັກ ຕ້ອງເໜືອຣາຍຈ່າຍ ແລະຣາຍຈ່າຍຂອງເຮົາຈັກຕ້ອງບໍ່ເໜືອ ຣາຍໄດ້. ພະຍັຄຄະປັຊຊະ ປຽບເໝືອນຄົນຊັ່ງຕາຊິງຫລືລູກ ນ້ອງຂອງຄົນຊັ່ງຕາຊິງ ເມື່ອຊັ່ງເບິ່ງແລ້ວ (ຍ່ອມຮູ້ວ່າ) ຄວນ ລົດອອກເທົ່ານີ້ ຫລືຕ້ອງເພີ່ມເຂົ້າເທົ່ານີ້ ສັນໃດ; ກຸລະບຸຕກໍ ສັນນັ້ນເໝືອນກັນ ຮູ້ທາງຈະເຣີນແຫ່ງຊັພຍ໌ ຮູ້ທາງເສື່ອມ

ແຫ່ງຊັພຍ໌ ແລ້ວລ້ຽງຊີວິຕພໍເໝາະ ບໍ່ຟຸມເຟືອຍ ບໍ່ຝືດເຄືອງ ດ້ວຍຄິດວ່າ ຣາຍໄດ້ຂອງເຮົາຈັກຕ້ອງເໜືອຣາຍຈ່າຍ ແລະ ຣາຍຈ່າຍຂອງເຮົາຈັກຕ້ອງບໍ່ເໜືອຣາຍໄດ້.

ພະຍັຄຄະປັຊຊະ! ຖ້າກຸລະບຸຕຜູ້ມີຣາຍໄດ້ໜ້ອຍ ແຕ່ລ້ຽງຊີວິຕ ຢ່າງໂອ່ໂຖງ ກໍຈະມີຜູ້ກ່າວໃຫ້ເຂົາວ່າ ກຸລະບຸຕຜູ້ນີ້ໃຊ້ໂພຄະ ຊັພຍ໌ເໝືອນຄົນຄ້ຽວກິນໝາກເດື່ອ ສັນນັ້ນ, ຖ້າກຸລະບຸຕຜູ້ທີ່ ມີຣາຍໄດ້ຫລາຍ ແຕ່ລ້ຽງຊີວິຕຢ່າງຝືດເຄືອງ ກໍຈະມີຜູ້ກ່າວໃຫ້ ເຂົາວ່າ ກຸລະບຸຕຜູ້ນີ້ຈັກຕາຍຢ່າງຄົນອະນາຖາ ແຕ່ເພາະກຸລະ ບຸຕນັ້ນຮູ້ທາງຈະເຣີນແຫ່ງຊັພຍ໌ ຮູ້ທາງເສື່ອມແຫ່ງຊັພຍ໌ ແລ້ວ ລ້ຽງຊີວິຕພໍເໝາະ ບໍ່ຟຸມເຟືອຍ ບໍ່ຝືດເຄືອງ ດ້ວຍຄິດວ່າ ຣາຍ ໄດ້ຂອງເຮົາຈັກຕ້ອງເໜືອຣາຍຈ່າຍ ແລະຣາຍຈ່າຍຂອງເຮົາ ຈັກຕ້ອງບໍ່ເໜືອຣາຍໄດ້. ພະຍັຄຄະປັຊຊະ ນີ້ຮຽກວ່າ: ສະມະ ຊີວິຕາ.

ພະຍັຄຄະປັຊຊະ! ໂພຄະຊັພຍ໌ທີ່ເກີດໂດຍຊອບຢ່າງນີ້ແລ້ວ ຍ່ອມມີທາງເສື່ອມ ໔ ປະການຄື:

**ເປັນນັກເລງຍິງ** *(ອິຕຖີທຸຕໂຕ)*;

**ເປັນນັກເລງສຸຣາ** *(ສຸຣາທຸຕໂຕ)*;

**ເປັນນັກເລງການພະນັນ** *(ອັກຂະທຸຕໂຕ)*;

**ມີມິຕຊົ່ວ ມີສະຫາຍຊົ່ວ ມີເພື່ອນຊົ່ວ**

*(ປາປະມິຕໂຕ ປາປະສະຫາໂຍ ປາປະສັມປະວັງໂກ)*;

ພະຍັຄຄະປັຊຊະ! ປຽບເໝືອນສະນ້ຳໃຫຍ່ມີທາງໄຫລເຂົ້າ ໔ ທາງ ທາງໄຫລອອກ ໔ ທາງ ບຸຣຸສຍ່ອມປິດທາງໄຫລເຂົ້າ ເປີດທາງໄຫລອອກຂອງສະນ້ຳນັ້ນ ຝົນກໍບໍ່ຕົກຕ້ອງຕາມລະດູການ ດ້ວຍປະການຢ່າງນີ້ ສະນ້ຳໃຫຍ່ນັ້ນຍ່ອມຫວັງໄດ້ແຕ່ຄວາມເສື່ອມຢ່າງດຽວ ບໍ່ມີຄວາມຈະເຣີນເລີຍ ສັນໃດ; ພະຍັຄຄະປັຊຊະ ໂພຄະຊັພຍ໌ທີ່ເກີດຂຶ້ນໂດຍຊອບຢ່າງນີ້ ກໍສັນນັ້ນເໝືອນກັນ ຍ່ອມມີທາງເສື່ອມ ໔ ປະການຄື:

ເປັນນັກເລງຍິງ;

ເປັນນັກເລງສຸຣາ;

ເປັນນັກເລງການພະນັນ;

ມີມິຕຊົ່ວ ມີສະຫາຍຊົ່ວ ມີເພື່ອນຊົ່ວ.

ພະຍັຄຄະປັຊຊະ! ໂພຄະຊັພຍ໌ທີ່ເກີດໂດຍຊອບຢ່າງນີ້ແລ້ວ ຍ່ອມມີທາງຈະເຣີນ ໔ ປະການຄື:

**ບໍ່ເປັນນັກເລງຍິງ** *(ນະອິຕຖີທຸຕໂຕ)*;

**ບໍ່ເປັນນັກເລງສຸຣາ** *(ນະສຸຣາທຸຕໂຕ)*;

**ບໍ່ເປັນນັກເລງການພະນັນ** *(ນະອັກຂະທຸຕໂຕ)*;

**ມີມິຕດີ ມີສະຫາຍດີ ມີເພື່ອນດີ**

*(ກັລຍານະມິຕໂຕ ກັລຍານະສະຫາໂຍ ກັລຍານະສັມປະວັງໂກ)*;

ພະຍັຄຄະປັຊຊະ! ປຽບເໝືອນສະນ້ຳໃຫຍ່ມີທາງໄຫລເຂົ້າ ໔ ທາງ ທາງໄຫລອອກ ໔ ທາງ ບຸຣຸສຍ່ອມເປີດທາງໄຫລເຂົ້າ ປິດທາງໄຫລອອກຂອງສະນ້ຳນັ້ນ ທັງຝົນກໍຕົກຕ້ອງຕາມລະດູການ ດ້ວຍປະການຢ່າງນີ້ ສະນ້ຳໃຫຍ່ນັ້ນຍ່ອມຫວັງໄດ້ແຕ່ຄວາມຈະເຣີນຢ່າງດຽວ ບໍ່ມີຄວາມເສື່ອມເລີຍ ສັນໃດ; ພະຍັຄຄະປັຊຊະ ໂພຄະຊັພຍ໌ທີ່ເກີດຂຶ້ນໂດຍຊອບຢ່າງນີ້ ກໍສັນນັ້ນເໝືອນກັນ ຍ່ອມມີທາງຈະເຣີນ ໔ ປະການຄື:

ບໍ່ເປັນນັກເລງຍິງ;

ບໍ່ເປັນນັກເລງສຸຣາ;

ບໍ່ເປັນນັກເລງການພະນັນ;

ມີມິຕດີ ມີສະຫາຍດີ ມີເພື່ອນດີ.

ພະຍັຄຄະປັຊຊະ ທັມ ໔ ປະການນີ້ແລ ຍ່ອມເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂໃນປັຈຈຸບັນແກ່ກຸລະບຸຕ.

ພະຍັຄຄະປັຊຊະ! ທັມ ໔ ປະການນີ້ ຍ່ອມເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂໃນພາຍໜ້າແກ່ກຸລະບຸຕ, ທັມ ໔ ປະການເປັນຢ່າງໃດ? ຄື:

**ສັທທາສັມປະທາ,**

**ສີລະສັມປະທາ,**

**ຈາຄະສັມປະທາ,**

**ປັນຍາສັມປະທາ.**

ພະຍັຄຄະປັຊຊະ! ກໍສັທທາສັມປະທາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ເປັນຜູ້ມີສັທທາ ເຊື່ອພຣະປັນຍາກາຣຕຣັສຮູ້ຂອງຕະຖາຄົຕວ່າ ເພາະເຫຕ ຢ່າງນີ້ໆ ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ເປັນພຣະອະຣະ ຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະ ນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສ ທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທວະດາແລະ ມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ. ພະຍັຄຄະປັຊຊະ ນີ້ຮຽກວ່າ: ສັທທາສັມປະທາ.

ພະຍັຄຄະປັຊຊະ! ກໍສີລະສັມປະທາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ເປັນຜູ້ງົດເວັ້ນຈາກກາຣ ຂ້າສັຕ, ເປັນຜູ້ງົດເວັ້ນຈາກກາຣລັກຊັພຍ໌, ເປັນຜູ້ງົດເວັ້ນຈາກ ກາຣປະພຶຕຜິດໃນກາມທັງຫລາຍ, ເປັນຜູ້ງົດເວັ້ນຈາກກາຣ ເວົ້າຕົວະ, ເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນ ເປັນທີ່ຕັ້ງແຫ່ງຄວາມປະມາທ. ພະຍັຄຄະປັຊຊະ ນີ້ຮຽກວ່າ: ສີລະສັມປະທາ.

ພະຍັຄຄະປັຊຊະ! ກໍຈາຄະສັມປະທາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ມີໃຈປາສະຈາກມັສ ສະຣິຍະອັນເປັນມົລທິນ ມີຈາຄະອັນສະລະແລ້ວ ມີຝາມືອັນ

ຊຸ່ມ ຍິນດີໃນການສະລະ ເປັນຜູ້ຄວນແກ່ການຂໍ ຍິນດີໃນການຈຳແນກທານ*(ທານະສັງວິພາຄະຣະໂຕ)* ຢູ່ຄອງເຮືອນ. ພະຍັຄຄະປັຊຊະ ນີ້ຮຽກວ່າ: ຈາຄະສັມປະທາ.

ພະຍັຄຄະປັຊຊະ! ກໍປັນຍາສັມປະທາເປັນຢ່າງໃດ?
ພະຍັຄຄະປັຊຊະ! ກຸລະບຸຕໃນໂລກນີ້ ເປັນຜູ້ມີປັນຍາປະກອບດ້ວຍປັນຍາເຄື່ອງກຳນົດຮູ້ຄວາມເກີດແລະຄວາມດັບອັນເປັນອະຣິຍະ ເປັນເຄື່ອງຊຳແຮກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍຊອບ. ພະຍັຄຄະປັຊຊະ ນີ້ຮຽກວ່າ: ປັນຍາສັມປະທາ.

ພະຍັຄຄະປັຊຊະ! ທັມ ໔ ປະການນີ້ແລ ຍ່ອມເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂໃນພາຍໜ້າແກ່ກຸລະບຸຕ.

ຄົນໝັ່ນໃນການກະທຳການງານ*(ອຸຕຖາຕາ ກັມມະເທີຍເຍສຸ)* ບໍ່ປະມາທ ຈັດການງານເໝາະສົມ ລ້ຽງຊີວິຕພໍເໝາະ ຮັກສາຊັພຍ໌ທີ່ຫາມາໄດ້ ມີສັທທາ ເຖິງພ້ອມດ້ວຍສີລ ຮູ້ຄວາມປະສົງຂອງຜູ້ຂໍ ປາສະຈາກມັສສະຣິຍະ ຊຳຣະທາງທີ່ເປັນໄປເພື່ອປະໂຍຊນ໌ໃນສັມປະຣາຍະພົພເປັນນິຈ, ທັມ ໗ ປະການນີ້ຂອງຜູ້ຄອງເຮືອນ ຜູ້ມີສັທທາ ອັນພຣະພຸທທະເຈົ້າຜູ້ມີພຣະນາມອັນແທ້ຈິງຕຣັສວ່າ ນຳຄວາມສຸຂມາໃຫ້ໃນໂລກທັງສອງຄື ປະ

ໂຍຊນ໌ໃນປັຈຈຸບັນ ແລະຄວາມສຸຂໃນພາຍໜ້າ ບຸນຍ໌ຄືຈາຄະນີ້ ຍ່ອມຈະເຣີນແກ່ຄະຣືຫັສຖ໌ທັງຫລາຍດ້ວຍປະກາຣຢ່າງນີ້.



ພິກຂຸທັງຫລາຍ ກໍອະສັປບຸຣຸສ ເປັນຢ່າງໃດ?

ພິກຂຸທັງຫລາຍ ບຸຄຄົລບາງຄົນ ໃນໂລກນີ້ ເປັນຜູ້ຂ້າສັຕ ລັກຊັພຍ໌ ປະພຶຕຜິດໃນກາມທັງຫລາຍ ເວົ້າຕົວະ ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ
໔໑/໔໐໖/໔໐໑

# ອະບາຍມຸຂ ໒

ອະຣິຍະສາວົກຍ່ອມບໍ່ເສພທາງເສື່ອມແຫ່ງໂພຄະ ໖ ປະການ ເປັນຢ່າງໃດ?

ຄະຫະບໍດີບຸດ! ການປະກອບເນື່ອງໆເຊິ່ງສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ເປັນທາງເສື່ອມແຫ່ງໂພຄະ.

ການປະກອບເນື່ອງໆເຊິ່ງການທ່ຽວໄປຕາມຕອກຊອກຊອຍໃນເວລາວິການ ເປັນທາງເສື່ອມແຫ່ງໂພຄະ.

ການປະກອບເນື່ອງໆເຊິ່ງການທ່ຽວຫລິ້ນງານບັນເທີງ ເປັນທາງເສື່ອມແຫ່ງໂພຄະ.

ການປະກອບເນື່ອງໆເຊິ່ງການພະນັນ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ເປັນທາງເສື່ອມແຫ່ງໂພຄະ.

ການປະກອບເນື່ອງໆເຊິ່ງການຄົບຄົນຊົ່ວເປັນມິດ ເປັນທາງເສື່ອມແຫ່ງໂພຄະ.

ການປະກອບເນື່ອງໆເຊິ່ງຄວາມກຽດຄ້ານ ເປັນທາງເສື່ອມແຫ່ງໂພຄະ.

---

*ສຸຕຕັນຕະປິດົກ ທີຄະນິກາຍ ໑໑/໑໔໐/໑໗໘*


ຄົນພາລຍ່ອມສຳຄັນວ່າ ເປັນຖານະ ຕາບເທົ່າທີ່ບາບຍັງບໍ່ໃຫ້ຜົລ
ແຕ່ເມື່ອໃດບາບໃຫ້ຜົລ ຄົນພາລຍ່ອມເຂົ້າເຖິງຄວາມທຸກຂ໌ເມື່ອນັ້ນ.
ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໑໐໗/໓໗໕

# ໂທສພັຍຂອງສຸຣາເມຣັຍ

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງສຸຣາເມຣັຍ ແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ໖ ປະການ ນີ້ ຄື:

**ຊັພຍ໌ຍ່ອມເສື່ອມໄປ** *(ທະນະຊານີ)*

**ກໍ່ການຜິດຖຽງວິວາທ** *(ກະລະຫັປປະວັທທະນີ)*

**ເປັນບໍ່ເກີດແຫ່ງໂຣຄ** *(ໂຣຄານັງ ອາຍະຕະນັງ)*

**ເປັນເຫຕໃຫ້ເສຍຊື່ສຽງ** *(ອະກິຕຕິສັນຊະນະນີ)*

**ເປັນເຫຕບໍ່ຮູ້ຈັກອາຍ** *(ຫິຣິໂກປີນະນິທທັງສະນີ)*

**ເປັນເຫຕບັນທອນກຳລັງປັນຍາ** *(ປັນຍາຍະ ທຸພພະລີກະຣະນີຕະເວ ວະ ສັຕຖັງ ປະທັງ ພະວະຕິ)*

ຄະຫະບໍດີບຸຕ! ໂທສໃນການປະກອບເນື່ອງໆເຊິ່ງສຸຣາເມຣັຍ ແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ໖ ປະການ ເຫລົ່ານີ້ແລ.

---

*ສຸຕຕັນຕະປີດົກ ທີຄະນິກາຍ ໑໑/໑໘໐/໑໗໙*



**“Lethargic and gregarious—
whoever is of effort low,
lazy and anger marked—
that’s the way to disaster’s woe.”**

Parābhavasutta Snp 1.6 https://suttacentral.net/snp1.6
Translated by Laurence Khantipalo Mills

## ໂທສຂອງການທ່ຽວໄປໃນເວລາວິກາລ

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການທ່ຽວໄປ ຕາມຕອກຊອກຊອຍໃນເວລາວິການ ໖ ປະການນີ້ ຄື:

ຜູ້ນັ້ນຊື່ວ່າບໍ່ຄຸ້ມຄອງ ບໍ່ຮັກສາຕົນ,
ຊື່ວ່າບໍ່ຄຸ້ມຄອງ ບໍ່ຮັກສາບຸດພະຣິຍາ,
ຊື່ວ່າບໍ່ຄຸ້ມຄອງ ບໍ່ຮັກສາຊັພຍ໌ສົມບັດ,
ເປັນທີ່ຣະແວງຂອງຄົນອື່ນ,
ຄຳເວົ້າອັນບໍ່ເປັນຈິງໃນທີ່ນັ້ນໆຍ່ອມເກີດຂຶ້ນແກ່ເຂົາ,

ເຫດແຫ່ງຄວາມທຸກຂ໌ທັງຫລາຍຍ່ອມແວດລ້ອມເຂົາ.

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການທ່ຽວໄປຕາມຕອກຊອກຊອຍໃນເວລາວິການ ໖ ປະການເຫລົ່ານີ້ແລ.

---

*ສຸຕຕັນຕະປິດົກ ທີຄະນິກາຍ ໑໑/໑໔໐/໑໘໐*

ພິກຂຸທັງຫລາຍ ການຂັບຮ້ອງ ຄືການຮ້ອງໄຫ້ ໃນອະຣິຍະວິນັຍ, ການຟ້ອນລຳ ຄືຄວາມ ເປັນບ້າໃນອະຣິຍະວິນັຍ, ການຫົວຈົນເຫັນ ຟັນພ່ຳເພີ້ ຄືຄວາມເປັນເດັກໃນອະຣິຍະວິນັຍ.

ພິກຂຸທັງຫລາຍ ເພາະສະນັ້ນແລ ຈົ່ງລະເສຍ ໂດຍເດັດຂາດໃນການຂັບຮ້ອງຟ້ອນລຳ ເມື່ອ ພວກເຈົ້າທັງຫລາຍເບີກບານໃນທັມ ກໍຄວນ ແຕ່ຍິ້ມແຍ້ມ.

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໒໕໗/ ໕໕໗.*



# ໂທສຂອງການທ່ຽວຫລິ້ນງານບັນເທີງ

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການທ່ຽວເບິ່ງມະຫໍຣະສົພ *(ງານບັນເທີງ)* ໖ ປະການນີ້ຄື:

ຟ້ອນລຳຢູ່ໃສໄປບ່ອນນັ້ນ *(ກວະ ນັຈຈັງ)*,

ຂັບຮ້ອງຢູ່ໃສໄປບ່ອນນັ້ນ *(ກວະ ຄີຕັງ)*,

ເສບງັນຢູ່ໃສໄປບ່ອນນັ້ນ *(ກວະ ວາທິຕັງ)*,

ສະແດງຢູ່ໃສໄປບ່ອນນັ້ນ *(ກວະ ອັກຂານັງ)*,

ເພງຢູ່ໃສໄປບ່ອນນັ້ນ *(ກວະ ປານິສສະຣັງ)*,

ບັນເທີງຢູ່ໃສໄປບ່ອນນັ້ນ *(ກວະ ກຸມພະຖູນັນຕິ)*,

ຄະຫະບໍດີບຸດ! ໂທສໃນການປະກອບເນືອງໆເຊິ່ງການທ່ຽວ ເບິ່ງມະຫໍຣະສົພ *(ງານບັນເທີງ)* ໖ ປະການເຫລົ່ານີ້ແລ.

---

*ສຸຕຕັນຕະປິດົກ ທີຄະນິກາຍ ໑໑/໑໔໐/໑໘໑*



ຄາມະນິ ເມື່ອກ່ອນສັດທັງຫລາຍຍັງບໍ່ປາສະຈາກໂມຫະ ອັນກິເລສເຄື່ອງຜູກຄືໂມຫະຜູກໄວ້ ນັກເຕັ້ນລໍາລວບລວມເຂົ້າໄວ້ເຊິ່ງທັມອັນເປັນທີ່ຕັ້ງແຫ່ງໂມຫະ ໃນທ່າມກາງສະຖານເຕັ້ນລໍາ ໃນທ່າມກາງມະຫໍຣະສົພແກ່ສັດເຫລົ່ານັ້ນຫລາຍຍິ່ງຂຶ້ນ ນັກເຕັ້ນລໍານັ້ນ ຕົນເອງກໍມົວເມົາປະມາທ ຕັ້ງຢູ່ໃນຄວາມປະມາທ ເມື່ອແຕກກາຍຕາຍໄປ ຍ່ອມບັງເກີດໃນນະຣົກຊື່ ປະຫາສະ.

ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໗/໓໑໔/໕໗໙

## ວິບາກກັມຂອງນັກເຕັ້ນລຳ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເວລຸວັນ ກລັນທະກະນິວາປະສະຖານ ໃກ້ພຣະນະຄອຣຣາຊະຄຶ ຄັ້ງນັ້ນແລ ນາຍບ້ານນັກເຕັ້ນລຳນາມວ່າ ຕາລະບຸຕ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍເຄີຍໄດ້ຍິນຄຳຂອງນັກເຕັ້ນລຳຜູ້ເປັນອາຈາຣຍ໌ແລະປາຈາຣຍ໌ກ່ອນໆກ່າວວ່າ ນັກເຕັ້ນ

ລຳຄົນໃດເຮັດໃຫ້ຄົນຫົວ ຮື່ນເຣີງ ດ້ວຍຄຳຈິງແດ່ ດ້ວຍຄຳບໍ່ຈິງແດ່ ໃນທ່າມກາງສະຖານເຕັ້ນລຳ ໃນທ່າມກາງມະຫໍຣະສົພ ຜູ້ນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊື່ປະຫາສະ ໃນຂໍ້ນີ້ພຣະຜູ້ມີພຣະພາຄຊົງຕຣັສຢ່າງໃດ?

ພຣະຜູ້ມີພຣະພາຄຕຣັສວ່າ:

ຢ່າເລີຍຄາມະນີ ຂໍພັກຂໍ້ນີ້ໄວ້ເສຍເຖີດ ທ່ານຢ່າຖາມຂໍ້ນີ້ກັບເຮົາເລີຍ.

ແມ່ນແຕ່ຄັ້ງທີ ໘ ນາຍບ້ານນັກເຕັ້ນລຳນາມວ່າ ຕາລະບຸຕ ກໍໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍເຄີຍໄດ້ຍິນຄຳຂອງນັກເຕັ້ນລຳຜູ້ເປັນອາຈາຣຍ໌ແລະປາຈາຣຍ໌ກ່ອນໆກ່າວວ່າ ນັກເຕັ້ນລຳຄົນໃດເຮັດໃຫ້ຄົນຫົວ ຮື່ນເຣີງ ດ້ວຍຄຳຈິງແດ່ ດ້ວຍຄຳບໍ່ຈິງແດ່ ໃນທ່າມກາງສະຖານເຕັ້ນລຳ ໃນທ່າມກາງມະຫໍຣະສົພ ຜູ້ນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊື່ປະຫາສະ ໃນຂໍ້ນີ້ພຣະຜູ້ມີພຣະພາຄຊົງຕຣັສຢ່າງໃດ?

ພຣະຜູ້ມີພຣະພາຄຕຣັສວ່າ:
ຢ່າເລີຍຄາມະນິ ຂໍພັກຂໍ້ນີ້ໄວ້ເສຍເຖີດ ທ່ານຢ່າຖາມຂໍ້ນີ້ກັບເຮົາເລີຍ.

ແມ່ນແຕ່ຄັ້ງທີ ໓ ນາຍບ້ານນັກເຕັ້ນລຳນາມວ່າ ຕາລະບຸຕ ກໍໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍເຄີຍໄດ້ຍິນຄຳຂອງນັກເຕັ້ນລຳຜູ້ເປັນອາຈາຣຍ໌ແລະປາຈາຣຍ໌ກ່ອນໆກ່າວວ່າ ນັກເຕັ້ນລຳຄົນໃດເຮັດໃຫ້ຄົນຫົວ ຮື່ນເຣິງ ດ້ວຍຄຳຈິງແດ່ ດ້ວຍຄຳບໍ່ຈິງແດ່ ໃນທ່າມກາງສະຖານເຕັ້ນລຳ ໃນທ່າມກາງມະຫໍຣະສົພຜູ້ນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊື່ປະຫາສະ ໃນຂໍ້ນີ້ພຣະຜູ້ມີພຣະພາຄຊົງຕຣັສຢ່າງໃດ?

ພຣະຜູ້ມີພຣະພາຄຕຣັສວ່າ:

ຄາມະນິ! ເຮົາຫ້າມທ່ານບໍ່ໄດ້ແລ້ວວ່າ ຢ່າເລີຍ ຄາມະນິ ຂໍພັກຂໍ້ນີ້ໄວ້ເສຍເຖີດ ທ່ານຢ່າຖາມຂໍ້ນີ້ກັບເຮົາເລີຍ, ເຮົາຈັກພະຍາກອຣໃຫ້ທ່ານ.

ຄາມະນິ! ເມື່ອກ່ອນສັດທັງຫລາຍຍັງບໍ່ປາສະຈາກຣາຄະ ອັນກິເລສເຄື່ອງຜູກຄືຣາຄະຜູກໄວ້ ນັກເຕັ້ນລໍາລວບລວມເຂົ້າໄວ້ເຊິ່ງທັມອັນເປັນທີ່ຕັ້ງແຫ່ງຄວາມກໍາບັດ ໃນທ່າມກາງສະຖານເຕັ້ນລໍາ ໃນທ່າມກາງມະຫໍຣະສົພແກ່ສັດເຫລົ່ານັ້ນຫລາຍຍິ່ງຂຶ້ນ.

ຄາມະນິ! ເມື່ອກ່ອນສັດທັງຫລາຍຍັງບໍ່ປາສະຈາກໂທສະ ອັນກິເລສເຄື່ອງຜູກຄືໂທສະຜູກໄວ້ ນັກເຕັ້ນລໍາລວບລວມເຂົ້າໄວ້ເຊິ່ງທັມອັນເປັນທີ່ຕັ້ງແຫ່ງໂທສະ ໃນທ່າມກາງສະຖານເຕັ້ນລໍາໃນທ່າມກາງມະຫໍຣະສົພແກ່ສັດເຫລົ່ານັ້ນຫລາຍຍິ່ງຂຶ້ນ.

ຄາມະນິ! ເມື່ອກ່ອນສັດທັງຫລາຍຍັງບໍ່ປາສະຈາກໂມຫະ ອັນກິເລສເຄື່ອງຜູກຄືໂມຫະຜູກໄວ້ ນັກເຕັ້ນລໍາລວບລວມເຂົ້າໄວ້ເຊິ່ງທັມອັນເປັນທີ່ຕັ້ງແຫ່ງໂມຫະ ໃນທ່າມກາງສະຖານເຕັ້ນລໍາໃນທ່າມກາງມະຫໍຣະສົພແກ່ສັດເຫລົ່ານັ້ນຫລາຍຍິ່ງຂຶ້ນ ນັກເຕັ້ນລໍານັ້ນ ຕົນເອງກໍມົວເມົາປະມາທ ຕັ້ງຢູ່ໃນຄວາມປະມາທເມື່ອແຕກກາຍຕາຍໄປ ຍ່ອມບັງເກີດໃນນະຣົກຊື່ ປະຫາສະ.

ອີກຢ່າງໜຶ່ງ ຖ້າເຂົາມີຄວາມເຫັນຢ່າງນີ້ວ່າ ນັກເຕັ້ນລໍາຄົນໃດເຮັດໃຫ້ຄົນຫົວ ຮື່ນເຣີງ ດ້ວຍຄໍາຈິງແດ່ ດ້ວຍຄໍາບໍ່ຈິງແດ່ ໃນທ່າມກາງສະຖານເຕັ້ນລໍາ ໃນທ່າມກາງມະຫໍຣະສົພ ຜູ້ນັ້ນເມື່ອ

ແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊື່ ປະຫາສະ ຄວາມເຫັນຂອງເຂົານັ້ນເປັນຄວາມເຫັນຜິດ.

**ຄາມະນິ! ເຮົາຍ່ອມກ່າວຄະຕິ ໘ ຢ່າງຄື ນະຣົກ ຫລືກຳເນີດດິຣັຈສານ ຢ່າງໃດຢ່າງໜຶ່ງຂອງບຸຄຄົລຜູ້ມີຄວາມເຫັນຜິດ.**

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ນາຍບ້ານນັກເຕັ້ນລຳນາມວ່າ ຕາລະບຸຕ ຮ້ອງໄຫ້ ສະອື້ນ ນ້ຳຕາໄຫລ.

ພຣະຜູ້ມີພຣະພາຄຕຣັສວ່າ:

ຄາມະນິ! ເຮົາໄດ້ຫ້າມທ່ານແລ້ວບໍ່ແມ່ນຫລືວ່າ ຢ່າເລີຍ ຄາມະນິ ຂໍພັກຂໍ້ນີ້ເສຍເຖີດ ຢ່າຖາມຂໍ້ນີ້ກັບເຮົາເລີຍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍບໍ່ໄດ້ຮ້ອງໄຫ້ເຖິງຂໍ້ທີ່ພຣະຜູ້ມີພຣະພາຄຕຣັສຢ່າງນີ້ກັບຂ້ານ້ອຍດອກ, ແຕ່ຂ້ານ້ອຍຖືກນັກເຕັ້ນລຳຜູ້ເປັນອາຈາຣຍ໌ແລະປາຈາຣຍ໌ກ່ອນໆຫລອກລວງໃຫ້ຫລົງສິ້ນກາລນານວ່າ ນັກເຕັ້ນລຳຄົນໃດເຮັດໃຫ້ຄົນຫົວຮື່ນເຣີງ ດ້ວຍຄຳຈິງແດ່ ດ້ວຍຄຳບໍ່ຈິງແດ່ ໃນທ່າມກາງ

ສະຖານເຕັ້ນລໍາ ໃນທ່າມກາງມະຫໍຣະສົພ ຜູ້ນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາ ຊື່ ປະຫາສະ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະທັມມະເທສນາຂອງພຣະອົງຄ໌ແຈ່ມແຈ້ງຫລາຍ. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ພຣະທັມມະເທສນາຂອງພຣະອົງຄ໌ແຈ່ມແຈ້ງຫລາຍ. ພຣະຜູ້ມີພຣະພາຄຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືຕາມປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຣູປສັນນັ້ນ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຂໍເຖິງພຣະຜູ້ມີພຣະພາຄກັບທັງພຣະທັມແລະພຣະພິກຂຸສົງຄ໌ວ່າ ເປັນສະຣະນະ ຂ້ານ້ອຍຂໍບັນພະຊາອຸປະສົມບົທໃນສໍານັກຂອງພຣະຜູ້ມີພຣະພາຄ.

ທ່ານນະຕະຄາມະນີນາມວ່າ ຕາລະບຸຕໄດ້ບັນພະຊາ ໄດ້ອຸປະສົມບົທໃນສໍານັກຂອງພຣະຜູ້ມີພຣະພາຄແລ້ວ ທ່ານຕາລະບຸຕອຸປະສົມບົທແລ້ວບໍ່ນານ ຫລີກອອກຈາກໝູ່ ຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວຢູ່ ບໍ່ນານເທົ່າໃດກໍກະທໍາ

ໃຫ້ແຈ້ງເຊິ່ງທີ່ສຸດແຫ່ງພຣົມມະຈັນຍ໌ ອັນບໍ່ມີຫັມອື່ນຍິ່ງກວ່າ ທີ່ກຸລະບຸຕທັງຫລາຍຜູ້ອອກຈາກເຮືອນບວຊເປັນບັນພະຊິຕ ໂດຍຊອບມີຄວາມຕ້ອງການດ້ວຍປັນຍາອັນຍິ່ງເອງ ໃນປັຈຈຸບັນເຂົ້າເຖິງຢູ່ ຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ ກໍແລທ່ານພຣະຕາລະບຸຕໄດ້ເປັນພຣະອະຣະຫັນຕ໌ອົງຄ໌ໜຶ່ງໃນຈຳນວນພຣະອະຣະຫັນຕ໌ທັງຫລາຍ.

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໓໑໔/໕໗໙*


Punctuality
A gentleman does his best to never keep people waiting. He makes sure to plan adequate time for travel and realizes he's not the only one with a schedule. It is in his nature to commit to being early for meetings.
Vulgarisms
A gentleman knows that cussing generally signals a limited vocabulary. Try to find words that express your thoughts with more civility.
Loyalty



## ໂທສຂອງການຫລິ້ນການພະນັນ

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການພະນັນ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ໖ ປະການນີ້ຄື:
ຜູ້ຊະນະຍ່ອມກໍ່ເວຣ,
ຜູ້ພ່າຍແພ້ຍ່ອມເສຍດາຍຊັພຍ໌ທີ່ເສຍໄປ,
ຄວາມເສື່ອມຊັພຍ໌ໃນປັຈຈຸບັນ,
ຖ້ອຍຄຳຂອງຄົນຫລິ້ນການພະນັນເຊິ່ງໄປເວົ້າໃນທີ່ປະຊຸມ ຍ່ອມຟັງບໍ່ຂຶ້ນ,
ຖືກມິຕອະມາຕໝິ່ນປະມາທ,

ບໍ່ມີໃຜປະສົງຈະແຕ່ງງານດ້ວຍ ເພາະເຫັນວ່າຊາຍນັກເລງຫລິ້ນການພະນັນບໍ່ສາມາດລ້ຽງດູພະຣິຍາໄດ້.

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການພະນັນອັນເປັນທີ່ຕັ້ງແຫ່ງຄວາມປະມາທ ໖ ປະການເຫລົ່ານີ້ແລ.

---

*ສຸຕຕັນຕະປິດົກ ທີຄະນິກາຍ ໑໑/໑໔໐/໑໘໔*



## ໂທສຂອງການຄົບຄົນຊົ່ວເປັນມິດ

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການຄົບຄົນ
ຊົ່ວເປັນມິດ ໖ ປະການນີ້ຄື:

ຊັກນໍາໃຫ້ເປັນນັກເລງການພະນັນ,
ຊັກນໍາໃຫ້ເປັນນັກເລງຍິງ,
ຊັກນໍາໃຫ້ເປັນນັກເລງສຸຣາ,
ຊັກນໍາໃຫ້ເປັນຄົນລວງຜູ້ອື່ນດ້ວຍຂອງປອມ,
ຊັກນໍາໃຫ້ເປັນຄົນໂກງເຂົາມາເຊິ່ງໆໜ້າ,
ຊັກນໍາໃຫ້ເປັນຄົນຫົວຮຸນແຮງ.

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງການຄົບຄົນຊົ່ວເປັນມິດ ໖ ປະການເຫລົ່ານີ້ແລ.

---

*ສຸດຕັນຕະປິດົກ ທີຄະນິກາຍ ໑໑/໑໔໐/໑໘໘*


"'Too cold! Too hot!
Too late!': they say.
Having wasted work time this way,
The young miss out on opportunities."
Siṅgālasutta DN 31
https://suttacentral.net/dn31

# ໂທສຂອງຄວາມກຽດຄ້ານ

ຄະຫະບໍດີບຸຕ! ໂທສໃນການປະກອບເນື່ອງໆເຊິ່ງຄວາມກຽດຄ້ານ ໖ ປະການນີ້ຄື:

ມັກອ້າງວ່າໜາວຫລາຍ ແລ້ວບໍ່ກະທຳການງານ,
ມັກອ້າງວ່າຮ້ອນຫລາຍ ແລ້ວບໍ່ກະທຳການງານ,
ມັກອ້າງວ່າຄ່ຳແລ້ວ ແລ້ວບໍ່ກະທຳການງານ,
ມັກອ້າງວ່າຍັງເຊົ້າຢູ່ ແລ້ວບໍ່ກະທຳການງານ,
ມັກອ້າງວ່າຫິວຫລາຍ ແລ້ວບໍ່ກະທຳການງານ,
ມັກອ້າງວ່າກະຫາຍຫລາຍ ແລ້ວບໍ່ກະທຳການງານ,

ເມື່ອເຂົາມີຂໍ້ອ້າງຫລາຍ ຜັດພັ່ງນການງານຢູ່ຢ່າງນີ້ ໂພຄະຊັພຍ໌ທີ່ຍັງບໍ່ເກີດກໍບໍ່ເກີດຂຶ້ນ, ທີ່ເກີດຂຶ້ນແລ້ວກໍເຖິງຄວາມສິ້ນໄປ.

ຄະຫະບໍດີບຸດ! ໂທສໃນການປະກອບເນື່ອງໆເຊິ່ງຄວາມກຽດຄ້ານ ໖ ປະການເຫລົ່ານີ້ແລ.

*ພຣະຜູ້ມີພຣະພາຄຜູ້ສຸຄົຕສາສດາ ຄັນໄດ້ຕຣັສໄວຍາກອຣພາສິຕນີ້ແລ້ວ ຈຶ່ງໄດ້ຕຣັສຄາຖາປະພັນຕໍ່ໄປວ່າ:*

"ເພື່ອນໃນໂຮງສຸຣາກໍມີ ເພື່ອນກ່າວແຕ່ປາກວ່າ ເພື່ອນໆກໍມີ
**ສ່ວນຜູ້ໃດເປັນສະຫາຍໃນຄາວມີເຣື່ອງເກີດຂຶ້ນ**
**ຜູ້ນັ້ນຈັດວ່າເປັນເພື່ອນແທ້.**

ເຫຕ ໖ ປະການຄື:
ການນອນຕື່ນສວາຍ,
ການເສພພະຣິຍາຂອງຜູ້ອື່ນ,
ຄວາມປະສົງກໍ່ເວຣ,
ຄວາມເປັນຜູ້ກະທຳແຕ່ສິ່ງອັນຫາປະໂຍຊນ໌ບໍ່ໄດ້,
ການມີມິຕຊົ່ວ,
ຄວາມຕຣະໜີ່ໜຽວແໜ້ນ *(ສຸກະທະຣິຍະຕາ)*,

ເຫລົ່ານີ້ຍ່ອມກໍາຈັດບຸຣຸສເສຍຈາກປະໂຍຊນ໌ສຸຂທີ່ຄວນຫວັງ
ໄດ້.

ຄົນມີມິດຊົ່ວ ມີເພື່ອນຊົ່ວ ມີມະຣະຍາທແລະຄວາມປະພຶດຊົ່ວ
ຍ່ອມເສື່ອມຈາກໂລກທັງສອງຄື ຈາກໂລກນີ້ແລະໂລກໜ້າ.

**ເຫດ ໖ ປະການຄື:**
**ການພະນັນແລະນັກເລງຍິງ,**
**ນັກເລງສຸຣາ,**
**ການຟ້ອນລໍາຂັບຮ້ອງ,**
**ການນອນຫລັບໃນກາງເວັນ ທ່ຽວຫລິ້ນໃນກາງຄືນ,**
**ການມີມິດຊົ່ວ,**
**ຄວາມຕຣະໜີ່ໜຽວແໜ້ນ,**
**ເຫລົ່ານີ້ຍ່ອມກໍາຈັດບຸຣຸສເສຍຈາກປະໂຍຊນ໌ສຸຂທີ່ຄວນຫວັງ**
**ໄດ້.**

**ຊົນເຫລົ່າໃດຫລິ້ນການພະນັນ ດື່ມສຸຣາ ລ່ວງລະເມີດຍິງອັນເປັນທີ່ຮັກສະເໝີດ້ວຍຊີວິດຂອງຜູ້ອື່ນ, ຄົບແຕ່ຄົນຊົ່ວ ບໍ່ຄົບຫາຜູ້ຈະເຣີນ ຍ່ອມເຂົ້າເຖິງຄວາມເສື່ອມ ເໝືອນດວງຈັນທ໌ຂ້າງແຮມ.**

**ຜູ້ໃດດື່ມສຸຣາ ໄຮ້ຊັພຍ໌ ບໍ່ກະທໍາການງານຫາລ້ຽງຊີພ**

**ເປັນຄົນເມົາ ປາສະຈາກສິ່ງອັນເປັນປະໂຍຊນ໌ ເຂົາຈັກຈົມລົງສູ່ໜີ້ເໝືອນກ້ອນຫີນຈົມນ້ຳ ສັນນັ້ນ ຈັກກະທຳຄວາມມົວໝອງໃຫ້ແກ່ຕົນທັນທີ.**

ຄົນຊອບນອນຫລັບໃນກາງເວັນ ບໍ່ລຸກຂຶ້ນໃນກາງຄືນ
*(ນອນທັງເວັນທັງຄືນ)*
ເປັນຄົນເມົາປະຈຳ ບໍ່ສາມາດຄອບຄອງເຫຍົ້າເຮືອນໃຫ້ດີໄດ້. ປະໂຍຊນ໌ທັງຫລາຍຍ່ອມລ່ວງເລີຍຊາຍໜຸ່ມທີ່ປະຖິ້ມການງານ ດ້ວຍອ້າງວ່າ ໜາວຫລາຍ ຮ້ອນຫລາຍ ເວລານີ້ຄ່ຳແລ້ວ ເປັນຕົ້ນ.

ສ່ວນຜູ້ໃດບໍ່ສຳຄັນຄວາມໜາວຄວາມຮ້ອນຍິ່ງໄປກວ່າຫຍ້າ ກະທຳກິຈຂອງບຸຣຸສຢູ່ ຜູ້ນັ້ນຍ່ອມບໍ່ເສື່ອມຈາກຄວາມສຸຂ.

---

*ທີຄະນິກາຍ ປາຕິກະວັຄ ໑໑/໑໔໐/໑໗໙*

,



**“Debauched in drink, with women too,
by dice debauched; such a fellow,
little by little his assets waste—
that’s the way to disaster’s woe.”**

Parābhavasutta Snp 1.6 https://suttacentral.net/snp1.6
Translated by Laurence Khantipalo Mills

# ສັດຜູ້ງົດເວັ້ນຈາກສຸຣາເມຣັຍ
# ແລະສິ່ງມຶນເມົາມີໜ້ອຍ

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄຊົງຊ້ອນຝຸ່ນເລັກນ້ອຍດ້ວຍປາຍພຣະນະຂາ ແລ້ວຕຣັສຮຽກພິກຂຸທັງຫລາຍມາແລ້ວຕຣັສຖາມວ່າ:

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ຝຸ່ນເລັກນ້ອຍທີ່ເຮົາຊ້ອນດ້ວຍປາຍເລັບກັບແຜ່ນດິນໃຫຍ່ນີ້ ອັນໃດຈະຫລາຍກວ່າກັນ?

ພິກຂຸທັງຫລາຍກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ແຜ່ນດິນໃຫຍ່ນີ້ແລຫລາຍກວ່າ ຝຸ່ນເລັກນ້ອຍທີ່ພຣະຜູ້ມີພຣະພາຄຊົງຊ້ອນດ້ວຍປາຍພຣະ ນະຂານັ້ນມີປະມານໜ້ອຍ ເມື່ອທຽບກັບແຜ່ນດິນໃຫຍ່ແລ້ວ ຝຸ່ນເລັກນ້ອຍທີ່ພຣະຜູ້ມີພຣະພາຄຊົງຊ້ອນດ້ວຍປາຍພຣະ ນະຂານັ້ນ ຍ່ອມບໍ່ເຖິງເຊິ່ງການນັບ ບໍ່ເຖິງເຊິ່ງການປຽບທຽບ ໄດ້ ຫລືບໍ່ເຖິງແມ່ນພຽງສ່ວນສ້ຽວ.

ພິກຂຸທັງຫລາຍ! ສັນນັ້ນເໝືອນກັນ ສັຕຜູ້ງົດເວັ້ນຈາກສຸຣາ ເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທມີ ໜ້ອຍ ໂດຍທີ່ແທ້ ສັຕຜູ້ບໍ່ງົດເວັ້ນຈາກສຸຣາເມຣັຍແລະສິ່ງ ມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທມີຫລາຍກວ່າ ຂໍ້ນັ້ນ ເພາະເຫຕໃດ?

## ເພາະບໍ່ເຫັນອະຣິຍະສັຈ ໔

ອະຣິຍະສັຈ ໔ ເປັນຢ່າງໃດ? ຄື:

ທຸກຂະອະຣິຍະສັຈ,

ທຸກຂະສະມຸທະຍະອະຣິຍະສັຈ,

ທຸກຂະນິໂຣທະອະຣິຍະສັຈ,

ທຸກຂະນິໂຣທະຄາມີນີປະຕິປະທາອະຣິຍະສັຈ.

ພິກຂຸທັງຫລາຍ! ເພາະສະນັ້ນແລ ພວກເຈົ້າທັງຫລາຍຄວນ ກະທຳຄວາມພຽນເພື່ອໃຫ້ຮູ້ຕາມເປັນຈິງວ່າ:
ນີ້ທຸກຂ໌,
ນີ້ທຸກຂະສະມຸທັຍ,
ນີ້ທຸກຂະນິໂຣທ,
ນີ້ທຸກຂະນິໂຣທະຄາມິນີປະຕິປະທາ.

---

*ສັງຍຸຕຕະນິກາຍ ມະຫາວາຣະວັຄ ໑໙/໔໕໘/໑໗໖໐*



ພິກຂຸທັງຫລາຍ ການດື່ມສຸຣາເມຣັຍ *(ສຸຣາເມຣະຍະປານັງ)* ທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດີຣັຈສານ ເປັນໄປເພື່ອເປຕວິສັຍ.

*ອັງຄຸຕຕະຣະນິກາຍ ສັຕຕະກະ ໒໓/໑໘໓/໑໓໐*



ມານົພ ສັຕທັງຫລາຍມີກັມເປັນຂອງຕົນ ເປັນທາຍາທແຫ່ງກັມ ມີກັມເປັນກຳເນີດ ມີກັມເປັນເຜົ່າພັນ ມີກັມເປັນທີ່ເພິ່ງອາສັຍ ກັມຍ່ອມຈຳແນກສັຕທັງຫລາຍໃຫ້ຕ່ຳຊາມແລະປະນີຕ.

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໓໗໗/໕໘໑*

## ສັຕທັງຫລາຍມີກັມເປັນຂອງຕົນ

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າ ຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາຫລືໜໍວ່າ ບຸຄຄົລຜູ້ລະການຂ້າສັຕ ງົດເວັ້ນຈາກການຂ້າສັຕ ພຣະຣາຊາ ຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈ ຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການຂ້າສັຕ?

ພິກຂຸທັງຫລາຍກຣາບທູລວ່າ: ບໍ່ໄດ້ເຫັນຫລືບໍ່ໄດ້ຟັງມາເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາວ່າ ບຸຄຄົລຜູ້ລະການຂ້າສັຕ ງົດເວັ້ນຈາກການຂ້າສັຕ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການຂ້າສັຕ, ແຕ່ບາບກັມຂອງເຂົານັ້ນແລຍ່ອມບອກໃຫ້ຊາບວ່າ ບຸຄຄົລນີ້ຂ້າຍິງຫລືຊາຍຕາຍ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການຂ້າສັຕ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງບາບກັມເຫັນປານນີ້ແດ່ຫລືໜໍ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍໄດ້ເຫັນມາແລ້ວ ໄດ້ຟັງມາແລ້ວ ແລະຈັກໄດ້ຟັງຕໍ່ໄປ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາຫລືໜໍວ່າ ບຸຄຄົລຜູ້ລະການລັກຊັພຍ໌ ງົດເວັ້ນຈາກການລັກຊັພຍ໌ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການລັກຊັພຍ໌?

ພິກຂຸທັງຫລາຍກຣາບທູລວ່າ: ບໍ່ໄດ້ເຫັນຫລືບໍ່ໄດ້ຟັງມາເລີຍພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາວ່າ ບຸຄຄົລຜູ້ລະການລັກຊັພຍ໌ ງົດເວັ້ນຈາກການລັກຊັພຍ໌ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການລັກຊັພຍ໌, ແຕ່ບາບກັມຂອງເຂົານັ້ນແລຍ່ອມບອກໃຫ້ຊາບວ່າບຸຄຄົລນີ້ລັກຊັພຍ໌ເຂົາມາຈາກບ້ານຫລືຈາກປ່າ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການລັກຊັພຍ໌ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງບາບກັມເຫັນປານນີ້ແດ່ຫລືໜໍ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍໄດ້ເຫັນມາແລ້ວ ໄດ້ຟັງມາແລ້ວ ແລະຈັກໄດ້ຟັງຕໍ່ໄປ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາຫລືໜໍວ່າບຸຄຄົລຜູ້ລະການປະພຶຕຜິດໃນກາມທັງຫລາຍ ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ?

ພິກຂຸທັງຫລາຍກຣາບທູລວ່າ: ບໍ່ໄດ້ເຫັນຫລືບໍ່ໄດ້ຟັງມາເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາ ວ່າ ບຸຄຄົລຜູ້ລະກາຣປະພຶຕຜິດໃນກາມທັງຫລາຍ ງົດເວັ້ນ ຈາກກາຣປະພຶຕຜິດໃນກາມທັງຫລາຍ ພຣະຣາຊາຈັບເຂົາມາ ປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະ ເຫຕແຫ່ງກາຣງົດເວັ້ນຈາກກາຣປະພຶຕຜິດໃນກາມທັງຫລາຍ, ແຕ່ບາບກັມຂອງເຂົານັ້ນແລຍ່ອມບອກໃຫ້ຊາບວ່າ ບຸຄຄົລນີ້ ລະເມີດປະເພນີໃນຍິງຫລືບຸຕຕີຂອງຜູ້ອື່ນ ພຣະຣາຊາຈັບເຂົາ ມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະ ເຫຕແຫ່ງກາຣປະພຶຕຜິດໃນກາມທັງຫລາຍ ພວກເຈົ້າ ທັງຫລາຍໄດ້ເຫັນຫລືໄດ້ຟັງບາບກັມເຫັນປານນີ້ແດ່ຫລືໜໍ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍໄດ້ເຫັນ ມາແລ້ວ ໄດ້ຟັງມາແລ້ວ ແລະຈັກໄດ້ຟັງຕໍ່ໄປ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າ ຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາຫລືໜໍວ່າ ບຸຄຄົລຜູ້ລະກາຣເວົ້າຕົວະ ງົດເວັ້ນຈາກກາຣເວົ້າຕົວະ ພຣະ

ຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳ ຕາມປັຈຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການເວົ້າຕົວະ?

ພິກຂຸທັງຫລາຍກຣາບທູລວ່າ: ບໍ່ໄດ້ເຫັນຫລືບໍ່ໄດ້ຟັງມາເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາ ວ່າ ບຸຄຄົລຜູ້ລະການເວົ້າຕົວະ ງົດເວັ້ນຈາກການເວົ້າຕົວະ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລື ກະທຳຕາມປັຈຈັຍ ເພາະເຫຕແຫ່ງການງົດເວັ້ນຈາກການເວົ້າ ຕົວະ, ແຕ່ບາບກັມຂອງເຂົານັ້ນແລຍ່ອມບອກໃຫ້ຊາບວ່າ ບຸຄຄົລນີ້ທຳລາຍປະໂຍຊນ໌ຂອງຄະຫະບໍດີຫລືບຸຕຂອງຄະຫະ ບໍດີດ້ວຍການເວົ້າຕົວະ ພຣະຣາຊາຈັບເຂົາມາປະຫານ ຈອງ ຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການ ເວົ້າຕົວະ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງບາບກັມເຫັນ ປານນີ້ແດ່ຫລືໜໍ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍໄດ້ເຫັນ ມາແລ້ວ ໄດ້ຟັງມາແລ້ວ ແລະຈັກໄດ້ຟັງຕໍ່ໄປ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະເຂົ້າໃຈຄວາມຂໍ້ນັ້ນວ່າ ຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາຫລືໜໍວ່າ ບຸຄຄົລຜູ້ລະສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງ ຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນ ເປັນທີ່ຕັ້ງແຫ່ງຄວາມປະມາທ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງ ການງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງ ຄວາມປະມາທ?

ພິກຂຸທັງຫລາຍກຣາບທູລວ່າ: ບໍ່ໄດ້ເຫັນຫລືບໍ່ໄດ້ຟັງມາເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາ ວ່າ ບຸຄຄົລຜູ້ລະສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງ ຄວາມປະມາທ ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນ ເປັນທີ່ຕັ້ງແຫ່ງຄວາມປະມາທ ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງ ການງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງ ຄວາມປະມາທ, **ແຕ່ບາບກັມຂອງເຂົານັ້ນແລຍ່ອມບອກໃຫ້ ຊາບວ່າ ບຸຄຄົລນີ້ເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງ ແຫ່ງຄວາມປະມາທ ແລ້ວຂ້າຍິງຫລືຊາຍຕາຍ, ລັກຊັພຍ໌ເຂົາ**

**ມາຈາກບ້ານຫລືຈາກປ່າ, ລະເມີດປະເພນີໃນຍິງຫລືບຸຕຕີຂອງຜູ້ອື່ນ, ທຳລາຍປະໂຍຊນ໌ຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີດ້ວຍການເວົ້າຕົວະ** ພຣະຣາຊາຈັບເຂົາມາປະຫານ ຈອງຈຳ ເນຣະເທສ ຫລືກະທຳຕາມປັຈຈັຍ ເພາະເຫຕແຫ່ງການເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງບາບກັມເຫັນປານນີ້ແດ່ຫລືໜໍ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍໄດ້ເຫັນມາແລ້ວ ໄດ້ຟັງມາແລ້ວ ແລະຈັກໄດ້ຟັງຕໍ່ໄປ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໑໘໗/໑໓໘*



# ອຸປາສົກປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ຢັ່ງລົງສູ່ຄວາມເກງຂາມ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ໃກ້ພຣະນະຄອຣ ສາວັຕຖີ ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍວ່າ: ພິກຂຸທັງຫລາຍ!

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄແລ້ວ ພຣະຜູ້ມີພຣະ ພາຄໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ຢັ່ງລົງສູ່ຄວາມເກງຂາມ; ໕ ປະການເປັນຢ່າງໃດ? ຄື:
**ເປັນຜູ້ຂ້າສັດ,**
**ເປັນຜູ້ລັກຊັພຍ໌,**
**ເປັນຜູ້ປະພຶດຜິດໃນກາມທັງຫລາຍ,**
**ເປັນຜູ້ເວົ້າຕົວະ,**
**ເປັນຜູ້ເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.**

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມເປັນຜູ້ຢັ່ງລົງສູ່ຄວາມເກງຂາມ.

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການນີ້ ຍ່ອມເປັນຜູ້ມີຄວາມກ້າຫານ; ໕ ປະການເປັນຢ່າງໃດ? ຄື:
ເປັນຜູ້ງົດເວັ້ນຈາກການຂ້າສັດ,
ເປັນຜູ້ງົດເວັ້ນຈາກການລັກຊັພຍ໌,
ເປັນຜູ້ງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍ,
ເປັນຜູ້ງົດເວັ້ນຈາກການເວົ້າຕົວະ,
ເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມເປັນຜູ້ມີຄວາມກ້າຫານ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໑໘໔/໑໗໑*

ຄະຫະບໍດີບຸຕ ກາຣ
ປະກອບເນື່ອງໆເຊິ່ງສຸຣາ
ເມຣັຍແລະສິ່ງມຶນເມົາ
ອັນເປັນທີ່ຕັ້ງແຫ່ງຄວາມ
ປະມາທ ເປັນທາງເສື່ອມ
ແຫ່ງໂພຄະ.

*ສຸຕຕັນຕະປິດົກ ທີຄະນິກາຍ*
*໑໑/໑໔໐/໑໗໕*



## ອຸປາສົກຜູ້ປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ບໍ່ແກ້ວກ້າຄອງເຮືອນ

ພິກຂຸທັງຫລາຍ! ອຸປາສົກປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ບໍ່ແກ້ວກ້າຄອງເຮືອນ; ໕ ປະການເປັນຢ່າງໃດ? ຄື:

**ເປັນຜູ້ຂ້າສັດ,**
**ເປັນຜູ້ລັກຊັພຍ໌,**
**ເປັນຜູ້ປະພຶດຜິດໃນກາມທັງຫລາຍ,**
**ເປັນຜູ້ເວົ້າຕົວະ,**
**ເປັນຜູ້ເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.**

ພິກຂຸທັງຫລາຍ! ອຸປາສິກາປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມເປັນຜູ້ບໍ່ແກ້ວກ້າຄອງເຮືອນ.

ພິກຂຸທັງຫລາຍ! ອຸປາສິກາປະກອບດ້ວຍທັມ ໕ ປະການນີ້ ຍ່ອມເປັນຜູ້ມີຄວາມແກ້ວກ້າຄອງເຮືອນ; ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ງົດເວັ້ນຈາກການຂ້າສັດ,
ເປັນຜູ້ງົດເວັ້ນຈາກການລັກຊັພຍ໌,
ເປັນຜູ້ງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍ,
ເປັນຜູ້ງົດເວັ້ນຈາກການເວົ້າຕົວະ,
ເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.

ພິກຂຸທັງຫລາຍ! ອຸປາສິກາປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມເປັນຜູ້ມີຄວາມແກ້ວກ້າຄອງເຮືອນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໗໒/໑໓໒*



## ອຸປາສົກຜູ້ປະກອບດ້ວຍທັມ ໕ ປະການ ເໝືອນຖືກນຳມາວາງໄວ້ໃນນະຣົກ

ພິກຂຸທັງຫລາຍ! ອຸປາສົກປະກອບດ້ວຍທັມ ໕ ປະການ ເໝືອນຖືກນຳມາວາງໄວ້ໃນນະຣົກ; ໕ ປະການເປັນຢ່າງໃດ? ຄື:

**ເປັນຜູ້ຂ້າສັດ,**

**ເປັນຜູ້ລັກຊັພຍ໌,**

**ເປັນຜູ້ປະພຶດຜິດໃນກາມທັງຫລາຍ,**

**ເປັນຜູ້ເວົ້າຕົວະ,**

**ເປັນຜູ້ເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.**

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການນີ້ແລ ເໝືອນຖືກນຳມາວາງໄວ້ໃນນະຣົກ.

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການນີ້ ເໝືອນຖືກເຊີນມາໃນສວັນ; ໕ ປະການເປັນຢ່າງໃດ? ຄື:
ເປັນຜູ້ງົດເວັ້ນຈາກການຂ້າສັຕ,
ເປັນຜູ້ງົດເວັ້ນຈາກການລັກຊັພຍ໌,
ເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ,
ເປັນຜູ້ງົດເວັ້ນຈາກການເວົ້າຕົວະ,
ເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.

ພິກຂຸທັງຫລາຍ! ອຸປາສິກປະກອບດ້ວຍທັມ ໕ ປະການນີ້ແລ ເໝືອນຖືກເຊີນມາໃນສວັນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໑໘໙/໑໘໙*


“Whoever is a drunkard, broke, and destitute,
Dragged by thirst from bar to bar,
Sinking into debt like a stone in water into
bewilderment quickly plunges.”
Siṅgālasutta DN 31
https://suttacentral.net/dn31

# ການບໍ່ລະພັຍເວຣ ໕ ປະການ ຮຽກວ່າ ຜູ້ທຸສິລ ຍ່ອມເຂົ້າເຖິງນະຣົກດ້ວຍ

*ຄັ້ງນັ້ນແລ ທ່ານອະນາຖະບິນດິກະຄະຫະບໍດີເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ, ຄັ້ງນັ້ນ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:*

ຄະຫະບໍດີ! ການບໍ່ລະພັຍເວຣ ໕ ປະການ ຮຽກວ່າ ຜູ້ທຸສິລດ້ວຍ ຍ່ອມເຂົ້າເຖິງນະຣົກດ້ວຍ, ໕ ປະການເປັນຢ່າງໃດ? *(ປັນຈະ ຄະຫະປະຕິ ພະຍານິ ເວຣານິ ອັປປະຫາຍະ ທຸສສີໂລ ອິຕິ ວຸຈ-ຈະຕິ ນິຣະຍັນຈະ ອຸປປັຊຊະຕິ ກະຕະມານິ ປັນຈະ)*

**ການຂ້າສັດ** *(ປານາຕິປາຕັງ),*
**ການລັກຊັບ** *(ອະທິນນາທານັງ),*
**ການປະພຶດຜິດໃນກາມທັງຫລາຍ** *(ກາເມສຸມິຈສາຈາຣັງ),*
**ການເວົ້າຕົວະ** *(ມຸສາວາທັງ),*
**ການເສພສຸຣາເມຣັຍແລະສິ່ງມຶນເມົາ**
**ອັນເປັນທີ່ຕັ້ງແຫ່ງຄວາມປະມາທ**
*(ສຸຣາເມຣະຍະມັຊຊະປະມາທັຕຖານັງ).*

ຄະຫະບໍດີ! ການບໍ່ລະພັຍເວຣ ໕ ປະການນີ້ແລ ຮຽກວ່າ ຜູ້ທຸສີລດ້ວຍ ຍ່ອມເຂົ້າເຖິງນະຣົກດ້ວຍ.

ຄະຫະບໍດີ! ການລະພັຍເວຣ ໕ ປະການ ຮຽກວ່າ ຜູ້ມີສີລດ້ວຍ ຍ່ອມເຂົ້າເຖິງສຸຄະຕິດ້ວຍ, ໕ ປະການເປັນຢ່າງໃດ?
*(ປັນຈະ ຄະຫະປະຕິ ພະຍານິ ເວຣານິ ປະຫາຍະ ສີລະວາ ອິຕິ ວຸຈຈະຕິ ສຸຄະຕິນຈະ ອຸປປັຊຊະຕິ ກະຕະມານະ ປັນຈະ)*
ການຂ້າສັດ,
ການລັກຊັບ,
ການປະພຶດຜິດໃນກາມທັງຫລາຍ,
ການເວົ້າຕົວະ,
ການເສພສຸຣາເມຣັຍແລະສິ່ງມຶນເມົາ
ອັນເປັນທີ່ຕັ້ງແຫ່ງຄວາມປະມາທ.

ຄະຫະບໍດີ! ການລະພັຍເວຣ ໕ ປະການນີ້ແລ ຮຽກວ່າ ຜູ້ມີສີລດ້ວຍ ຍ່ອມເຂົ້າເຖິງສຸຄະຕິດ້ວຍ.

ຄະຫະບໍດີ! ບຸຄຄົລຜູ້ຂ້າສັຕຍ່ອມປະສົບພັຍເວຣໃດ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມສເວີຍທຸກຂ໌ໂທມະນັສໃດ ເພາະເຫຕແຫ່ງການຂ້າສັຕ ບຸຄຄົລຜູ້ງົດເວັ້ນຈາກປານາຕິບາຕ ຍ່ອມບໍ່ປະສົບພັຍເວຣນັ້ນ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມບໍ່ສເວີຍທຸກຂ໌ໂທມະນັສ ພັຍເວຣຂອງຜູ້ງົດເວັ້ນຈາກປານາຕິບາຕ ຍ່ອມສງົບຣະງັບດ້ວຍປະການຢ່າງນີ້.
*(ຍັງ ຄະຫະປະຕິ ປານາຕິປາຕີ ປານາຕິປາຕະປັຈຈະຍາ ທິຕຖະທັມມິກັມປິ ພະຍັງ ເວຣັງ ປະສະວະຕິ ສັມປຣາຍິກັມປິ ພະຍັງ ເວຣັງ ປະສະວະຕິ ເຈຕະສິກັມປິ ທຸກຂັງ ໂທມະນັສສັງ ປະຕິສັງເວເທຕິ ປານາຕິປາຕາ ປະຕິວິຣະໂຕ ເນວະ ທິຕຖະທັມມິກັງ ພະຍັງ ເວຣັງ ປະສະວະຕິ ນະ ສັມປຣາຍິກັງ ພະຍັງ ເວຣັງ ປະສະວະຕິ ນະ ເຈຕະສິກັງ ທຸກຂັງ ໂທມະນັສສັງ ປະຕິສັງເວເທຕິ ປານາຕິປາຕາ ປະຕິວິຣະຕັສສະ ເອວັນຕັງ ພະຍັງ ເວຣັງ ວູປະສັນຕັງ ໂຫຕິ)*

ຄະຫະບໍດີ! ບຸຄຄົລຜູ້ລັກຊັພຍ໌ຍ່ອມປະສົບພັຍເວຣໃດ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມສເວີຍທຸກຂ໌ໂທມະນັສໃດ ເພາະເຫຕແຫ່ງການລັກຊັພຍ໌ ບຸຄຄົລຜູ້ງົດເວັ້ນຈາກອະທິນນາທານ ຍ່ອມບໍ່ປະສົບພັຍເວຣນັ້ນ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມບໍ່ສເວີຍທຸກຂ໌ໂທມະນັສ ພັຍເວຣ

ຂອງຜູ້ງົດເວັ້ນຈາກອະທິນນາທານ ຍ່ອມສງົບຣະງັບດ້ວຍປະການຢ່າງນີ້.

ຄະຫະບໍດີ! ບຸຄຄົລຜູ້ປະພຶຕຜິດໃນການທັງຫລາຍຍ່ອມປະສົບພັຍເວຣໃດ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມສເວີຍທຸກຂ໌ໂທມະນັສໃດ ເພາະເຫຕແຫ່ງການປະພຶຕຜິດໃນການທັງຫລາຍ ບຸຄຄົລຜູ້ງົດເວັ້ນຈາກກາເມສຸມິຈສາຈາຣ ຍ່ອມບໍ່ປະສົບພັຍເວຣນັ້ນ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມບໍ່ສເວີຍທຸກຂ໌ໂທມະນັສ ພັຍເວຣຂອງຜູ້ງົດເວັ້ນຈາກກາເມສຸມິຈສາຈາຣ ຍ່ອມສງົບຣະງັບດ້ວຍປະການຢ່າງນີ້.

ຄະຫະບໍດີ! ບຸຄຄົລຜູ້ເວົ້າຕົວະຍ່ອມປະສົບພັຍເວຣໃດ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມສເວີຍທຸກຂ໌ໂທມະນັສໃດ ເພາະເຫຕແຫ່ງການເວົ້າຕົວະ ບຸຄຄົລຜູ້ງົດເວັ້ນຈາກມຸສາວາທ ຍ່ອມບໍ່ປະສົບພັຍເວຣນັ້ນ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມບໍ່ສເວີຍທຸກຂ໌ໂທມະນັສ ພັຍເວຣຂອງຜູ້ງົດເວັ້ນຈາກມຸສາວາທ ຍ່ອມສງົບຣະງັບດ້ວຍປະການຢ່າງນີ້.

ຄະຫະບໍດີ! ບຸຄຄົລຜູ້ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ຍ່ອມປະສົບພັຍເວຣໃດ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມໄດ້ສເວີຍທຸກຂ໌ໂທມະນັສ

ໃດ ເພາະເຫຕແຫ່ງສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ບຸຄຄົລຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ຍ່ອມບໍ່ປະສົບພັຍເວຣນັ້ນ ທັງໃນປັຈຈຸບັນ ທັງໃນສັມປະຣາຍະພົພ ຍ່ອມບໍ່ໄດ້ສເວີຍທຸກຂ໌ໂທມະນັສ ພັຍເວຣຂອງຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ຍ່ອມສງົບຣະງັບດ້ວຍປະການຢ່າງນີ້.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໗໖/໑໓໔*

ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ເມື່ອແຕກກາຍ
ຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ
ວິນິບາຕ ນະຣົກ ນີ້ເປັນໂທສແຫ່ງສີລວິບັຕ
ຂອງບຸຄຄົລຜູ້ທຸສີລປະການທີ ໕.

ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-
ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໑໔໙-໑໕໐/
໑໗໙-໑໘໑



# ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ ແລະອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລ ຜູ້ເຖິງພ້ອມດ້ວຍສີລ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈຈາຣິກໄປໃນແຄວ້ນມະຄົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ໄດ້ສະເດັຈເຖິງປາຕະລິຄາມ ອຸປາສົກຊາວບ້ານປາຕະລິຄາມໄດ້ສະດັບຂ່າວວ່າ ພຣະຜູ້ມີພຣະພາຄສະເດັຈຈາຣິກມາໃນແຄວ້ນມະຄົທ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ໄດ້ສະເດັຈເຖິງປາຕະລິຄາມແລ້ວ ລຳດັບນັ້ນ ອຸປາສົກຊາວປາຕະລິຄາມພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລະໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຊົງຮັບເຮືອນສຳລັບພັກຂອງພວກຂ້ານ້ອຍທັງຫລາຍເຖີດ ພຣະຜູ້ມີພຣະພາຄຊົງຮັບໂດຍດຸສະນີພາບ. ລຳດັບນັ້ນ ອຸປາສົກຊາວປາຕະລິຄາມ ຊາບວ່າພຣະຜູ້ມີພຣະພາຄຊົງຮັບແລ້ວ ກໍລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ເດີນວຽນຂວາ ແລ້ວເຂົ້າໄປຍັງເຮືອນສຳລັບພັກ ຄັນແລ້ວກໍປູສາດ ປູອາສະນະຕັ້ງໝໍ້ນ້ຳແລະປະທີບນ້ຳມັນແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ສະແດງຄວາມນອບນ້ອມແລ້ວໄດ້ຢືນຢູ່ໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ເຮືອນສຳລັບພັກ ພວກຂ້ານ້ອຍທັງຫລາຍປູສາດ ປູອາສະນະ ຕັ້ງໝໍ້ນ້ຳ ແລະປະທີບນ້ຳມັນແລ້ວ ບັດນີ້ ຂໍພຣະຜູ້ມີພຣະພາຄຊົງສຳຄັນກາລອັນຄວນເຖີດ.

ຄັ້ງນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງນຸ່ງຫົ່ມ ຖືບາຕແລະຈີວອຣສະເດັຈໄປຍັງເຮືອນສຳລັບພັກ ພ້ອມດ້ວຍພິກຂຸສົງຄ໌ ຄັນແລ້ວຊົງລ້າງພຣະບາທ ສະເດັຈເຂົ້າໄປຍັງເຮືອນສຳລັບພັກ ປະທັບນັ່ງອີງເສົາກາງ ຜິນພຣະພັກໄປທາງທິສບູຣະພາ ແມ່ນແຕ່ພິກຂຸສົງຄ໌ເມື່ອລ້າງປາທາແລ້ວ ກໍເຂົ້າໄປຍັງເຮືອນສຳລັບພັກ ນັ່ງອີງຝາດ້ານຫລັງ ຜິນໜ້າໄປທາງທິສບູຣະພາ*(ທິສຕາເວັນອອກ)* ນັ່ງແວດລ້ອມພຣະຜູ້ມີພຣະພາຄຢູ່ ສ່ວນອຸປາສົກຊາວປາຕະລິຄາມກໍລ້າງເທົ້າແລ້ວເຂົ້າໄປ

ຍັງເຮືອນສຳລັບພັກ ນັ່ງອີງຝາດ້ານໜ້າ ຜິນໜ້າໄປທາງທິສຕາເວັນຕົກ ແວດລ້ອມພຣະຜູ້ມີພຣະພາຄຢູ່. ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສກັບອຸປາສົກຊາວປາຕະລິຄາມວ່າ:

ຄະຫະບໍດີທັງຫລາຍ! ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ ໕ ປະກາຣນີ້; ໕ ປະກາຣເປັນຢ່າງໃດ?

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕໃນໂລກນີ້ ຍ່ອມເຂົ້າເຖິງຄວາມເສື່ອມແຫ່ງໂພຄະຊັພຍ໌ອັນໃຫຍ່ຫລວງ ເພາະເຫຕແຫ່ງຄວາມປະມາທ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໑.

ຄະຫະບໍດີທັງຫລາຍ! ອີກປະກາຣໜຶ່ງ, ກິຕຕິສັບອັນຕ່ຳຊາມຂອງບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕຍ່ອມຟຸ້ງຂະຈອນໄປ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໒.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ເຂົ້າໄປຫາບໍຣິສັທໃດຄື ຂັຕຕິຍະບໍຣິສັທ ພຣາມມະນະບໍຣິສັທ ຄະຫະບໍດີບໍຣິສັທ ສະມະນະບໍຣິສັທ ຍ່ອມເປັນຜູ້ບໍ່ອາດຫານ ເກີ້ເຂີນ

ເມື່ອເຂົ້າໄປຫາບໍຣິສັທນັ້ນໆ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໓.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ຍ່ອມເປັນຜູ້ຫລົງທຳກາລະ*(ຫລົງສະຕິໃນເວລາຕາຍ)*. ຄະຫະບໍດີທັງຫລາຍນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໔.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ທຸສີລ ຜູ້ມີສີລວິບັຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ. ຄະຫະບໍດີທັງຫລາຍ ນີ້ເປັນໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລປະກາຣທີ ໕.

ຄະຫະບໍດີທັງຫລາຍ! ໂທສແຫ່ງສີລວິບັຕຂອງບຸຄຄົລຜູ້ທຸສີລ ໕ ປະກາຣນີ້ແລ.

ຄະຫະບໍດີທັງຫລາຍ! ອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລ ໕ ປະກາຣນີ້; ໕ ປະກາຣເປັນຢ່າງໃດ?

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລໃນໂລກນີ້ ຍ່ອມໄດ້ມາເຊິ່ງໂພຄະຊັພຍ໌ອັນໃຫຍ່ຫລວງເພາະເຫຕ

ແຫ່ງຄວາມບໍ່ປະມາທ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະການທີ ໑.

ຄະຫະບໍດີທັງຫລາຍ! ອີກປະການໜຶ່ງ, ກິຕຕິສັບອັນງາມຂອງບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລ ຍ່ອມແຜ່ຂະຈອນໄປ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະການທີ ໒.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລເຂົ້າໄປຫາບໍຣິສັທໃດເຊັ່ນ ຂັຕຕິຍະບໍຣິສັທ ພຣາມມະນະບໍຣິສັທ ຄະຫະບໍດີບໍຣິສັທ ສະມະນະບໍຣິສັທ ຍ່ອມເປັນຜູ້ອາດຫານ ບໍ່ເກີ້ເຂີນເມື່ອເຂົ້າໄປຫາບໍຣິສັທນັ້ນໆ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະການທີ ໓.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລຍ່ອມເປັນຜູ້ບໍ່ຫລົງທຳກາລະ. ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະການທີ ໔.

ຄະຫະບໍດີທັງຫລາຍ! ບຸຄຄົລຜູ້ມີສີລ ຜູ້ເຖິງພ້ອມດ້ວຍສີລເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ຄະຫະບໍດີທັງຫລາຍ ນີ້ເປັນອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລປະການທີ ໕.

ຄະຫະບໍດີທັງຫລາຍ! ອານິສົງສ໌ແຫ່ງສີລສົມບັຕຂອງບຸຄຄົລຜູ້ມີສີລ ໕ ປະການນີ້ແລ.

ລຳດັບນັ້ນແລ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ອຸປາສົກຊາວປາຕະລິຄາມເຫັນແຈ້ງ ສະມາທານ ອາດຫານ ຣ່າເຣີງດ້ວຍທັມມີກະຖາສິ້ນຣາຕຣີເປັນອັນມາກ ແລ້ວຊົງສົ່ງໄປດ້ວຍພຣະດຳຣັສວ່າ **ຄະຫະບໍດີທັງຫລາຍ ຣາຕຣີລ່ວງໄປແລ້ວ ທ່ານທັງຫລາຍຈົ່ງສຳຄັນເວລາອັນຄວນໃນບັດນີ້ເຖີດ.**

ລຳດັບນັ້ນ ອຸປາສົກຊາວປາຕະລິຄາມທັງຫລາຍຊື່ນຊົມຍິນດີພາສິຕຂອງພຣະຜູ້ມີພຣະພາຄ ລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວຫລີກໄປ. ລຳດັບນັ້ນ ເມື່ອອຸປາສົກຊາວປາຕະລິຄາມຫລີກໄປແລ້ວບໍ່ນານພຣະຜູ້ມີພຣະພາຄໄດ້ສະເດັຈເຂົ້າໄປຍັງສຸນຍາຄາຣ.

---

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໔໕/໑໔໙-໑໕໐/໑໖໙-໑໗໑*



# ເຣື່ອງຊາວປະມົງຜູກປາ ຂ້າປາຂາຍ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈຈາຣິກໄປໃນແຄວ້ນໂກສົລພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ພຣະຜູ້ມີພຣະພາຄຊົງດຳເນີນໄປຕາມໜົນທາງໄກ ໄດ້ທອດພຣະເນຕເຫັນຊາວປະມົງຜູກປາ ຂ້າປາຂາຍຢູ່ໃນທ້ອງຖິ່ນແຫ່ງໜຶ່ງ ໄດ້ສະເດັຈແວະລົງຈາກທາງ ແລະປະທັບນັ່ງລົງເທິງອາສະນະທີ່ໄດ້ປູລາດໄວ້ໃນເຫງົ້າໄມ້ແຫ່ງໜຶ່ງ ແລ້ວຕຣັສຖາມພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍເຫັນຊາວປະມົງຜູກປາຂ້າປາຂາຍຢູ່ໃນທີ່ແຫ່ງໂນ້ນຫລື?

ພິກຂຸເຫລົ່ານັ້ນກຣາບທູລວ່າ: ເຫັນ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າ ຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາແດ່ບໍວ່າ ຊາວປະມົງຜູກປາ ຂ້າປາຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕ ທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ?

ຫາບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ຂໍ້ນັ້ນແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງ ມາວ່າ ຊາວປະມົງຜູກປາ ຂ້າປາຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະ ສົມບັຕທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ ຂໍ້ນັ້ນເພາະ ເຫຕໃດ? ເພາະວ່າເຂົາຍ່ອມເພັ່ງດູປາເຫລົ່ານັ້ນທີ່ຂ້າ ທີ່ນຳມາ ເພື່ອຂ້າດ້ວຍໃຈອັນເປັນບາບ ສະນັ້ນ ເຂົາຈຶ່ງບໍ່ໄດ້ຂີ່ຊ້າງ ຂີ່ ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະ ສົມບັຕທັງຫລາຍຢູ່.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າ ຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາແດ່ບໍວ່າ ຄົນ

ຂ້າງົວ ຂ້າງົວຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂີ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ?

ຫາບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ຂໍ້ນັ້ນແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາວ່າ ຄົນຂ້າງົວ ຂ້າງົວຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂີ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ ຂໍ້ນັ້ນເພາະເຫຕໃດ? ເພາະວ່າເຂົາຍ່ອມເພັ່ງດູງົວເຫລົ່ານັ້ນທີ່ຂ້າ ທີ່ນຳມາເພື່ອຂ້າດ້ວຍໃຈອັນເປັນບາບ ສະນັ້ນ ເຂົາຈຶ່ງບໍ່ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂີ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາແດ່ບໍວ່າ ຄົນຂ້າແບ້ ຂ້າແບ້ຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂີ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ?

ຫາບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ຂໍ້ນັ້ນແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາວ່າ ຄົນຂ້າແບ້ ຂ້າແບ້ຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ ຂໍ້ນັ້ນເພາະເຫຕໃດ? ເພາະວ່າເຂົາຍ່ອມເພັ່ງດູແບ້ເຫລົ່ານັ້ນທີ່ຂ້າ ທີ່ນຳມາເພື່ອຂ້າດ້ວຍໃຈອັນເປັນບາບ ສະນັ້ນ ເຂົາຈຶ່ງບໍ່ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາແດ່ບໍວ່າ ຄົນຂ້າໝູ ຂ້າໝູຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັຕທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ?

ຫາບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ຂໍ້ນັ້ນແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາວ່າ ຄົນຂ້າໝູ ຂ້າໝູຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນ

ຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັດທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ ຂໍ້ນັ້ນເພາະເຫດໃດ? ເພາະວ່າເຂົາຍ່ອມເພັ່ງດູໝູເຫລົ່ານັ້ນທີ່ຂ້າ ທີ່ນຳມາເພື່ອຂ້າດ້ວຍໃຈອັນເປັນບາບ ສະນັ້ນ ເຂົາຈຶ່ງບໍ່ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັດທັງຫລາຍຢູ່.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ພວກເຈົ້າທັງຫລາຍໄດ້ເຫັນຫລືໄດ້ຟັງມາແດ່ບໍວ່າພານເນື້ອ ຂ້າເນື້ອຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັດທັງຫລາຍຢູ່ເພາະກັມນັ້ນ ເພາະອາຊີພນັ້ນ?

ຫາບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ສາທຸ ຂໍ້ນັ້ນແມ່ນແຕ່ເຮົາກໍບໍ່ໄດ້ເຫັນ ບໍ່ໄດ້ຟັງມາວ່າ ພານເນື້ອ ຂ້າເນື້ອຂາຍຢູ່ ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂຶ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັດທັງຫລາຍຢູ່ ເພາະກັມນັ້ນ ເພາະອາຊີພນັ້ນ ຂໍ້ນັ້ນເພາະເຫດໃດ? ເພາະວ່າເຂົາຍ່ອມເພັ່ງດູເນື້ອເຫລົ່ານັ້ນທີ່ຂ້າ ທີ່ນຳມາເພື່ອຂ້າດ້ວຍໃຈອັນເປັນບາບ ສະນັ້ນ ເຂົາຈຶ່ງບໍ່ໄດ້ຂີ່ຊ້າງ ຂີ່

ມ້າ ຂີ່ຣົຖ ຂີ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັດທັງຫລາຍຢູ່.

**ພິກຂຸທັງຫລາຍ! ເພາະເພັ່ງດູສັຕດິຣັຈສານເຫລົ່ານັ້ນທີ່ເຂົາຂ້າ ທີ່ນຳມາເພື່ອຂ້າດ້ວຍໃຈອັນເປັນບາບ ສະນັ້ນ ເຂົາຈຶ່ງບໍ່ໄດ້ຂີ່ຊ້າງ ຂີ່ມ້າ ຂີ່ຣົຖ ຂີ້ນຍານ ເປັນເຈົ້າຂອງໂພຄະ ຫລືຄອບຄອງໂພຄະສົມບັດທັງຫລາຍຢູ່ ຈະກ່າວຫຍັງເຖິງບຸຄຄົລຜູ້ເພັ່ງດູມະນຸສທີ່ຂ້າ ທີ່ນຳມາເພື່ອຂ້າດ້ວຍໃຈອັນເປັນບາບໜໍ ເພາະຜົລຂອງກັມນັ້ນຍ່ອມເປັນໄປເພື່ອສິ່ງບໍ່ເປັນປະໂຍຊນ໌ເກື້ອກູນເພື່ອຄວາມທຸກຂ໌ຕລອດກາລະນານແກ່ເຂົາ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.**

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໒໗໗/໒໙໙*



ຄວາມຊົ່ວບໍ່ຄວນກະທຳເລີຍປະເສີດກວ່າ
ຄວາມຊົ່ວຍ່ອມເຜົາຜານໃນພາຍຫລັງ
ກໍກັມໃດກະທຳແລ້ວ ບໍ່ເດືອດຮ້ອນໃນພາຍຫລັງ
ກັມນັ້ນເປັນຄວາມດີ ກະທຳແລ້ວປະເສີດກວ່າ.

ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໒໐/໔໓໗

## ຄວາມເສື່ອມສີລແລະທິຕຖິເປັນເຫຕໃຫ້ເຂົ້າເຖິງ ອະບາຍ ທຸຄະຕິ ວິນິບາຕ ນະຣົກ

ພິກຂຸທັງຫລາຍ! ຄວາມເສື່ອມ ໕ ປະການນີ້; ໕ ປະການເປັນຢ່າງໃດ? ຄື:

**ຄວາມເສື່ອມຍາຕ** *(ຍາຕິພຍະສະນັງ),*

**ຄວາມເສື່ອມໂພຄະຊັພຍ໌** *(ໂພຄັພຍະສະນັງ),*

**ຄວາມເສື່ອມເພາະໂຣຄ** *(ໂຣຄັພຍະສະນັງ),*

**ຄວາມເສື່ອມສີລ** *(ສີລັພຍະສະນັງ),*

**ຄວາມເສື່ອມທິຕຖິ** *(ທິຕຖິພຍະສະນັງ),*

ພິກຂຸທັງຫລາຍ! ສັດທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ເພາະເຫດແຫ່ງຄວາມເສື່ອມຍາຕ ເພາະເຫດແຫ່ງຄວາມເສື່ອມໂພຄະຊັພຍ໌ ຫລືເພາະເຫດແຫ່ງຄວາມເສື່ອມເພາະໂຣຄ **ແຕ່ສັດທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ເພາະເຫດແຫ່ງຄວາມເສື່ອມສີລ ຫລືເພາະເຫດແຫ່ງຄວາມເສື່ອມທິຕຖິ.**

ພິກຂຸທັງຫລາຍ! ຄວາມເສື່ອມ ໕ ປະກາຣນີ້ແລ.

ພິກຂຸທັງຫລາຍ! ຄວາມເຖິງພ້ອມ ໕ ປະກາຣນີ້; ໕ ປະກາຣເປັນຢ່າງໃດ? ຄື:

**ຄວາມເຖິງພ້ອມດ້ວຍຍາຕ** *(ຍາຕິສັມປະທາ),*
**ຄວາມເຖິງພ້ອມດ້ວຍໂພຄະຊັພຍ໌** *(ໂພຄະສັມປະທາ),*
**ຄວາມເຖິງພ້ອມດ້ວຍຄວາມບໍ່ມີໂຣຄ** *(ອາໂຣຄຍະສັມປະທາ),*
**ຄວາມເຖິງພ້ອມດ້ວຍສີລ** *(ສີລະສັມປະທາ),*
**ຄວາມເຖິງພ້ອມດ້ວຍທິຕຖິ** *(ທິຕຖິສັມປະທາ),*

ພິກຂຸທັງຫລາຍ! ສັດທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມບໍ່ເຂົ້າເຖິງສຸຄະຕິໂລກສວັນ ເພາະເຫດແຫ່ງຄວາມເຖິງພ້ອມ

ດ້ວຍຍາຕ ເພາະເຫຕແຫ່ງຄວາມເຖິງພ້ອມດ້ວຍໂພຄະຊັພຍ໌ ຫລືເພາະເຫຕແຫ່ງຄວາມເຖິງພ້ອມດ້ວຍຄວາມບໍ່ມີໂຣຄ, **ແຕ່ ສັຕທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິ ໂລກສວັນ ເພາະເຫຕແຫ່ງຄວາມເຖິງພ້ອມດ້ວຍສີລ ຫລືເພາະ ເຫຕແຫ່ງຄວາມເຖິງພ້ອມດ້ວຍທິຕຖິ.**

ພິກຂຸທັງຫລາຍ! ຄວາມເຖິງພ້ອມ ໕ ປະການີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໑໓໓/໑໓໐*



# ວິບັດ ໓ ຢ່າງ

ພິກຂຸທັງຫລາຍ! ວິບັດ ໓ ຢ່າງນີ້, ໓ ຢ່າງເປັນຢ່າງໃດ? ຄື:
**ສີລວິບັດ,**
**ຈິຕຕະວິບັດ,**
**ທິຕຖິວິບັດ,**

ພິກຂຸທັງຫລາຍ! ກໍສີລວິບັຕເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າຕົວະ, ເວົ້າສຽດສີ, ເວົ້າຄຳຫຍາບ, ເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌. ພິກຂຸທັງຫລາຍ ນີ້ຮຽກວ່າ: ສີລວິບັຕ.

ພິກຂຸທັງຫລາຍ! ກໍຈິຕຕະວິບັຕເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຄົນມັກໂລພ, ມີຈິຕພະຍາບາທ. ພິກຂຸທັງຫລາຍ ນີ້ຮຽກວ່າ: ຈິຕຕະວິບັຕ.

ພິກຂຸທັງຫລາຍ! ກໍທິຕຖິວິບັຕເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຜິດ ມີຄວາມເຫັນວິປະຣິຕວ່າ: ທານທີ່ໃຫ້ແລ້ວບໍ່ມີ*(ບັຕຖິ ທິນບັງ)*, ການບູຊາແລ້ວບໍ່ມີ*(ບັຕຖິ ຍິຕຖັງ)*, ການບວງສວງແລ້ວບໍ່ມີ*(ບັຕຖິ ຫຸຕັງ)*, ຜົລວິບາກຂອງກັມທີ່ກະທຳດີກະທຳຊົ່ວແລ້ວບໍ່ມີ*(ບັຕຖິ ສຸກະຕະທຸກກະຕານັງ ກັມມານັງ ຜະລັງ ວິປາໂກ)*, ໂລກນີ້ບໍ່ມີ*(ບັຕຖິ ອະຍັງ ໂລໂກ)*, ໂລກໜ້າບໍ່ມີ*(ບັຕຖິ ປະຣະ ໂລໂກ)*, ມາຣດາບໍ່ມີ*(ບັຕຖິ ມາຕາ)*, ບິດາບໍ່ມີ*(ບັຕຖິ ປິຕາ)*, ໂອປປາຕິກະສັຕບໍ່ມີ*(ບັຕຖິ ສັຕຕາ ໂອປປາຕິກາ)*, ສະມະນະພຣາມທັງຫລາຍຜູ້ດຳເນີນຊອບ ປະຕິບັຕຊອບ ກະທຳໃຫ້ແຈ້ງເຊິ່ງໂລກນີ້ແລະໂລກໜ້າດ້ວຍປັນຍາອັນຍິ່ງເອງແລ້ວ ສອນຜູ້ອື່ນໃຫ້ຮູ້ແຈ້ງຕາມດັ່ງນີ້, ບໍ່ມີ*(ບັຕຖິ ໂລໂກ ສະມະນະພຣາມມະນາ ສັມມັຄຄະຕາ ສັມມາປະຕິປັນນາ ເຢ ອິມັນຈະ ໂລກັງ ປະຣັນຈະ ໂລກັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທນະຕີຕິ)*. ພິກຂຸທັງຫລາຍ ນີ້ຮຽກວ່າ: ທິຕຖິວິບັຕ.

ພິກຂຸທັງຫລາຍ! ເພາະສີລວິບັຕເປັນເຫຕ ສັຕທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ

ນະຣົກ ຫລືວ່າເພາະຈິຕຕະວິບັຕເປັນເຫຕ ສັຕທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫລືວ່າເພາະທິຕຖິວິບັຕເປັນເຫຕ ສັຕທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

ພິກຂຸທັງຫລາຍ! ວິບັຕ ໓ ຢ່າງນີ້ແລ.

ພິກຂຸທັງຫລາຍ! ສັມປະທາ ໓ ຢ່າງນີ້, ໓ ຢ່າງເປັນຢ່າງໃດ? ຄື:

**ສີລສັມປະທາ,**

**ຈິຕຕະສັມປະທາ,**

**ທິຕຖິສັມປະທາ,**

ພິກຂຸທັງຫລາຍ! ກໍສີລສັມປະທາເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເວັ້ນຂາດຈາກການຂ້າສັຕ, ເວັ້ນຂາດຈາກການລັກຊັພຍ໌, ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ, ເວັ້ນຂາດຈາກການເວົ້າຕົວະ, ເວັ້ນຂາດຈາກການເວົ້າສຽດສີ, ເວັ້ນຂາດຈາກການເວົ້າຄຳຫຍາບ, ເວັ້ນຂາດຈາກການເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌. ພິກຂຸທັງຫລາຍ ນີ້ຮຽກວ່າ: ສີລສັມປະທາ.

ພິກຂຸທັງຫລາຍ! ກໍຈິຕຕະສັມປະທາເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ບໍ່ມັກໂລພ, ບໍ່ມີຈິຕພະຍາບາທ. ພິກຂຸທັງຫລາຍ ນີ້ຮຽກວ່າ: ຈິຕຕະສັມປະທາ.

ພິກຂຸທັງຫລາຍ! ກໍທິຕຖິສັມປະທາເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຊອບ ມີຄວາມເຫັນບໍ່ວິປະຣິຕວ່າ: ທານທີ່ໃຫ້ແລ້ວມີ*(ອັຕຖິ ທິນບັງ)*, ການບູຊາແລ້ວມີ*(ອັຕຖິ ຍິຕຖັງ)*, ການບວງສວງແລ້ວມີ*(ອັຕຖິ ຫຸຕັງ)*, ຜົລວິບາກຂອງກັມທີ່ກະທຳດີກະທຳຊົ່ວແລ້ວມີ*(ອັຕຖິ ສຸກະຕະທຸກກະຕານັງ ກັມມານັງ ຜະລັງ ວິປາໂກ)*, ໂລກນີ້ມີ*(ອັຕຖິ ອະຍັງ ໂລໂກ)*, ໂລກໜ້າມີ*(ອັຕຖິ ປະຣະ ໂລໂກ)*, ມາຣດາມີ*(ອັຕຖິ ມາຕາ)*, ບິດາມີ*(ອັຕຖິ ປິຕາ)*, ໂອປປາຕິກະສັຕມີ*(ອັຕຖິ ສັຕຕາ ໂອປປາຕິກາ)*, ສະມະນະພຣາມທັງຫລາຍຜູ້ດຳເນີນຊອບ ປະຕິບັຕຊອບ ກະທຳໃຫ້ແຈ້ງເຊິ່ງໂລກນີ້ແລະໂລກໜ້າດ້ວຍປັນຍາອັນຍິ່ງເອງແລ້ວ ສອນຜູ້ອື່ນໃຫ້ຮູ້ແຈ້ງຕາມດັ່ງນີ້, ມີ*(ອັຕຖິ ໂລໂກ ສະມະນະພຣາມມະນາ ສັມມັຄຄະຕາ ສັມມາປະຕິປັນນາ ເຍ ອິມັນຈະ ໂລກັງ ປະຣັນຈະ ໂລກັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທນະຕິ)*. ພິກຂຸທັງຫລາຍ ນີ້ຮຽກວ່າ: ທິຕຖິສັມປະທາ.

ພິກຂຸທັງຫລາຍ! ເພາະສີລສັມປະທາເປັນເຫຕ ສັຕທັງຫລາຍ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ ຫລືວ່າ ເພາະຈິຕຕະສັມປະທາເປັນເຫຕ ສັຕທັງຫລາຍເມື່ອແຕກກາຍ ຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ ຫລືວ່າເພາະທິຕຖິ ສັມປະທາເປັນເຫຕ ສັຕທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ພິກຂຸທັງຫລາຍ! ສັມປະທາ ໓ ຢ່າງນີ້ແລ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໔໕໕/໕໗*



ພິກຂຸທັງຫລາຍ ມຸສາວາທທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ. ວິບາກແຫ່ງມຸສາວາທຢ່າງເບົາທີ່ສຸດ ຍ່ອມຖືກກ່າວຕູ່ດ້ວຍຄຳທີ່ບໍ່ເປັນຈິງແກ່ຜູ້ມາເກີດເປັນມະນຸສ.

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະ*
*ນິບາຕ ໒໓/໑໙໓/໑໓໐*

## ວິບັຕ ໓ ຢ່າງ (໒)

ພິກຂຸທັງຫລາຍ! ວິບັຕ ໓ ຢ່າງນີ້, ໓ ຢ່າງເປັນຢ່າງໃດ? ຄື:
ກັມມັນຕະວິບັຕ,
ອາຊີວະວິບັຕ,
ທິຕຖິວິບັຕ,

ພິກຂຸທັງຫລາຍ! ກໍກັມມັນຕະວິບັຕເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າຕົວະ, ເວົ້າສຽດສີ, ເວົ້າຄຳຫຍາບ, ເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌. ພິກຂຸທັງຫລາຍ ນີ້ຮຽກວ່າ: ກັມມັນຕະວິບັຕ.

ພິກຂຸທັງຫລາຍ! ກໍອາຊີວະວິບັຕເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຄົນມີອາຊີພຜິດ ສຳເຣັຈການລ້ຽງຊີພດ້ວຍມິຈສາອາຊີວະ. ພິກຂຸທັງຫລາຍ ນີ້ຮຽກວ່າ: ອາຊີວະວິບັຕ.

ພິກຂຸທັງຫລາຍ! ກໍທິຕຖິວິບັຕເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຜິດ ມີຄວາມເຫັນວິປະຣິຕວ່າ: ທານທີ່ໃຫ້ແລ້ວບໍ່ມີ*(ນັຕຖິ ທິນນັງ)*, ການບູຊາແລ້ວບໍ່ມີ*(ນັຕຖິ ຍິຕຖັງ)*, ການບວງສວງແລ້ວບໍ່ມີ*(ນັຕຖິ ຫຸຕັງ)*, ຜົລວິບາກຂອງກັມທີ່ກະທຳດີກະທຳຊົ່ວແລ້ວບໍ່ມີ*(ນັຕຖິ ສຸກະຕະທຸກກະຕານັງ ກັມມານັງ ຜະລັງ ວິປາໂກ)*, ໂລກນີ້ບໍ່ມີ*(ນັຕຖິ ອະຍັງ ໂລໂກ)*, ໂລກໜ້າບໍ່ມີ*(ນັຕຖິ ປະຣະ ໂລໂກ)*, ມາຣດາບໍ່ມີ*(ນັຕຖິ ມາຕາ)*, ບິດາບໍ່ມີ*(ນັຕຖິ ປິຕາ)*, ໂອປປາຕິກະສັຕບໍ່ມີ*(ນັຕຖິ ສັຕຕາ ໂອປປາຕິກາ)*, ສະມະນະພຣາມທັງຫລາຍຜູ້ດຳເນີນຊອບ ປະຕິບັຕຊອບ ກະທຳໃຫ້ແຈ້ງເຊິ່ງໂລກນີ້ແລະໂລກໜ້າດ້ວຍປັນຍາອັນຍິ່ງເອງແລ້ວ ສອນຜູ້ອື່ນໃຫ້ຮູ້ແຈ້ງຕາມດັ່ງນີ້, ບໍ່ມີ*(ນັຕຖິ ໂລໂກ ສະມະນະພຣາມມະນາ ສັມມັຄຄະຕາ ສັມມາປະຕິປັນນາ ເຍ ອິມັນຈະ ໂລກັງ ປະຣັນຈະ ໂລກັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທນະຕີຕິ)*. ພິກຂຸທັງຫລາຍ ນີ້ຮຽກວ່າ: ທິຕຖິວິບັຕ.

ພິກຂຸທັງຫລາຍ! ວິບັຕ ໔ ຢ່າງນີ້ແລ.

ພິກຂຸທັງຫລາຍ! ສັມປະທາ ໓ ຢ່າງນີ້, ໓ ຢ່າງເປັນຢ່າງໃດ?
ຄື:
ກັມມັນຕະສັມປະທາ,
ອາຊີວະສັມປະທາ,
ທິຕຖິສັມປະທາ,

ພິກຂຸທັງຫລາຍ! ກໍກັມມັນຕະສັມປະທາເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເວັ້ນຂາດຈາກການຂ້າສັຕ, ເວັ້ນຂາດຈາກການລັກຊັພຍ໌, ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ, ເວັ້ນຂາດຈາກການເວົ້າຕົວະ, ເວັ້ນຂາດຈາກການເວົ້າສຽດສີ, ເວັ້ນຂາດຈາກການເວົ້າຄຳຫຍາບ, ເວັ້ນຂາດຈາກການເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌. ພິກຂຸທັງຫລາຍ ນີ້ຮຽກວ່າ: ກັມມັນຕະສັມປະທາ.

ພິກຂຸທັງຫລາຍ! ກໍອາຊີວະສັມປະທາເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຄົນມີອາຊີພຊອບ ສຳເຣັຈການລ້ຽງຊີພດ້ວຍສັມມາອາຊີວະ. ພິກຂຸທັງຫລາຍ ນີ້ຮຽກວ່າ: ອາຊີວະສັມປະທາ.

ພິກຂຸທັງຫລາຍ! ກໍທິຕຖິສັມປະທາເປັນຢ່າງໃດ?

ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຊອບ ມີຄວາມເຫັນບໍ່ວິປະຣິຕວ່າ: ທານທີ່ໃຫ້ແລ້ວມີ*(ອັຕຖິ ທິນນັງ)*, ການບູຊາແລ້ວມີ*(ອັຕຖິ ຍິຕຖັງ)*, ການບວງສວງແລ້ວມີ*(ອັຕຖິ ຫຸຕັງ)*, ຜົລວິບາກຂອງກັມທີ່ກະທຳດີກະທຳຊົ່ວແລ້ວມີ*(ອັຕຖິ ສຸກະຕະທຸກກະຕານັງ ກັມມານັງ ຜະລັງ ວິປາໂກ)*, ໂລກນີ້ມີ*(ອັຕຖິ ອະຍັງ ໂລໂກ)*, ໂລກໜ້າມີ*(ອັຕຖິ ປະຣະ ໂລໂກ)*, ມາຣດາມີ*(ອັຕຖິ ມາຕາ)*, ບິດາມີ*(ອັຕຖິ ປິຕາ)*, ໂອປປາຕິກະສັຕມີ*(ອັຕຖິ ສັຕຕາ ໂອປປາຕິກາ)*, ສະມະນະພຣາມທັງຫລາຍຜູ້ດຳເນີນຊອບ ປະຕິບັຕຊອບ ກະທຳໃຫ້ແຈ້ງເຊິ່ງໂລກນີ້ແລະໂລກໜ້າດ້ວຍປັນຍາອັນຍິ່ງເອງແລ້ວ ສອນຜູ້ອື່ນໃຫ້ຮູ້ແຈ້ງຕາມດັ່ງນີ້, ມີ*(ອັຕຖິ ໂລໂກ ສະມະນະພຣາມມະນາ ສັມມັຄຄະຕາ ສັມມາປະຕິປັນນາ ເຍ ອິມັນຈະ ໂລກັງ ປະຣັນຈະ ໂລກັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທນະຕິ)*. ພິກຂຸທັງຫລາຍ ນີ້ຮຽກວ່າ: ທິຕຖິສັມປະທາ.

ພິກຂຸທັງຫລາຍ! ສັມປະທາ ໕ ຢ່າງນີ້ແລ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໔໕໗/໕໕໒*



# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ

ຄັ້ງນັ້ນແລ ທ່ານພຣະອະນຸຣຸທທະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໆລໆ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂອກາສ ຂ້ານ້ອຍໄດ້ເຫັນມາຕຸຄາມເມື່ອແຕກກາຍຕາຍໄປ ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ມາຕຸຄາມປະກອບດ້ວຍທັມເທົ່າໃດໜໍ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ?

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

**ເປັນຜູ້ບໍ່ມີສັທທາ** *(ອັສສັທໂທ ຈະ ໂຫຕິ)*,
**ເປັນຜູ້ບໍ່ມີຫິຣິ** *(ອະຫິຣິໂກ ຈະ ໂຫຕິ)*,
**ເປັນຜູ້ບໍ່ມີໂອຕຕັປປະ** *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ມັກໂກທ** *(ໂກທະໂນ ຈະ ໂຫຕິ)*,
**ເປັນຜູ້ມີປັນຍາຊາມ** *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໗/໔໕໓/໔໙໗*


CHILLOUT

## ໂທສໃນມາຕຸຄາມ ໕ ປະການ

ພິກຂຸທັງຫລາຍ! ໂທສໃນງູເຫົ່າ ໕ ປະການນີ້; ໕ ປະການ ເປັນຢ່າງໃດ? ຄື:

ເປັນສັຕມັກໂກທ,

ມັກຜູກໂກທ,

ມີພິດຮ້າຍ,

ມີສອງລີ້ນ,

ມັກປະທຸສສະຮ້າຍມິຕ

ພິກຂຸທັງຫລາຍ! ໂທສໃນງູເຫົ່າ ໕ ປະການນີ້ແລ.

ພິກຂຸທັງຫລາຍ ໂທສໃນມາຕຸຄາມ ໕ ປະການນີ້; ໕ ປະການ ເປັນຢ່າງໃດ? ຄື:

**ເປັນຜູ້ມັກໂກທ,**

**ມັກຜູກໂກທ,**

**ມີພິດຮ້າຍ,**

**ມີສອງລີ້ນ,**

**ມັກປະທຸສສະຮ້າຍມິຕ**

ພິກຂຸທັງຫລາຍ! ຄວາມທີ່ມາຕຸຄາມເປັນຜູ້ມີພິດຮ້າຍຄື ໂດຍສ່ວນຫລາຍ ມາຕຸຄາມມີຣາຄະກ້າ *(ມາຕຸຄາໂມ ຕິພພະຣາໂຄ)*.

ພິກຂຸທັງຫລາຍ! ຄວາມທີ່ມາຕຸຄາມເປັນຜູ້ມີສອງລີ້ນຄື ໂດຍສ່ວນຫລາຍ ມາຕຸຄາມມີວາຈາສໍ່ຽດສີ *(ມາຕຸຄາໂມ ປິສຸນະວາໂຈ)*.

ພິກຂຸທັງຫລາຍ! ຄວາມທີ່ມາຕຸຄາມມັກປະທຸສສະຮ້າຍມິຕຄື ໂດຍສ່ວນຫລາຍ ມາຕຸຄາມມັກປະພຶຕນອກໃຈ *(ມາຕຸຄາໂມ ອະຕິຈາຣີນີ)*.

ພິກຂຸທັງຫລາຍ! ໂທສໃນມາຕຸຄາມ ໕ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໒໓໗/໒໓໐*



## ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (2)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ຜູກໂກທ** *(ໂອປະນາຫີ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໓/໔໗໐*



# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (3)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ມີຄວາມອິສສາ** *(ອິສສຸກີ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໔/໔໗໑*



# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (4)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ມີມັສສະຣິຍະ** *(ມັສສະຣີ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໗/໔໕໔/໔໗໔*



**“Unsatisfied with his own wife,
with others’ wives he’s seen in tow,
corrupted too with prostitutes—
that’s the way to disaster’s woe.”**

Parābhavasutta Snp 1.6 https://suttacentral.net/snp1.6
Translated by Laurence Khantipalo Mills

# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (5)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ປະພຶຕນອກໃຈ** *(ອະຕິຈາຣີ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໕/໔໗໘*



# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (໒)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ທຸສີລ** *(ທຸສສີໂລ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໗/໔໕໕/໔໗໔*


R

# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (7)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ມີສຸຕະໜ້ອຍ** *(ອັປປັສສຸໂຕ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໕/໔໗໕*



# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (8)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ກຽດຄ້ານ** *(ກຸສີໂຕ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໒/໔໗໒*



# Unmindful…

# ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ (໑)

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ບໍ່ມີສັທທາ *(ອັສສັທໂທ ຈະ ໂຫຕິ)*,
ເປັນຜູ້ບໍ່ມີຫິຣິ *(ອະຫິຣິໂກ ຈະ ໂຫຕິ)*,
ເປັນຜູ້ບໍ່ມີໂອຕຕັປປະ *(ອະໂນຕຕັປປີ ຈະ ໂຫຕິ)*,
**ເປັນຜູ້ມີສະຕິຫລົງລືມ** *(ມຸຕຖັສສະຕິ ຈະ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໗/໔໕໗/໔໗໗*



## ທັມ ໕ ປະການທີ່ເປັນເຫດໃຫ້ມາຕຸຄາມເຂົ້າເຖິງ ອະບາຍ ທຸຄະຕິ ວິນິບາຕ ນະຣົກ

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ຂ້າສັຕ *(ປານາຕິປາຕີ ຈະ ໂຫຕິ)*,
ເປັນຜູ້ລັກຊັພຍ໌ *(ອະທິນນາທາຍີ ຈະ ໂຫຕິ)*,
ເປັນຜູ້ປະພຶຕຜິດໃນກາມທັງຫລາຍ
*(ກາເມສຸ ມິຈສາຈາຣີ ຈະ ໂຫຕິ)*,

ເປັນຜູ້ເວົ້າຕົວະ *(ມຸສາວາທີ ຈະ ໂຫຕິ)*,
ເປັນຜູ້ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ *(ສຸຣາເມຣະຍະມັຊຊະປະມາທັຕຖາຍີ ຈະ ໂຫຕິ)*.

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໗/໕໓໘*



## ທັມ ໕ ປະການທີ່ເປັນເຫດໃຫ້ມາຕຸຄາມ ເຂົ້າເຖິງສຸຄະຕິໂລກສວັນ

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ງົດເວັ້ນຈາກການຂ້າສັດ

*(ປານາຕິປາຕາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກການລັກຊັພຍ໌

*(ອະທິນນາທານາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ

*(ກາເມສຸ ມິຈສາຈາຣາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກການເວົ້າຕົວະ

*(ມຸສາວາທາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ

*(ສຸຣາເມຣະຍະມັຊຊະປະມາທັຕຖານາ ປະຕິວິຣະໂຕ ຈະ ໂຫຕິ).*

ອະນຸຣຸທທະ! ມາຕຸຄາມປະກອບດ້ວຍທັມ ໕ ປະການນີ້ແລ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໗/໔໕໙/໔໗໖*



## ມາຕຸຄາມປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ສາມາດຢູ່ຄອງເຮືອນ

ພິກຂຸທັງຫລາຍ! ມາຕຸຄາມປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ສາມາດຢູ່ຄອງເຮືອນ; ທັມ ໕ ປະການເປັນຢ່າງໃດ? ຄື:

ເປັນຜູ້ງົດເວັ້ນຈາກການຂ້າສັດ
*(ປານາຕິປາຕາ ປະຕິວິຣະໂຕ ຈະ ໂຫຕິ),*
ເປັນຜູ້ງົດເວັ້ນຈາກການລັກຊັພຍ໌
*(ອະທິນນາທານາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍ

*(ກາເມສຸ ມິຈສາຈາຣາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກການເວົ້າຕົວະ

*(ມຸສາວາທາ ປະຕິວິຣະໂຕ ຈະ ໂຫຕິ),*

ເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ

*(ສຸຣາເມຣະຍະມັຊຊະປະມາທັຕຖານາ ປະຕິວິຣະໂຕ ຈະ ໂຫຕິ).*

ພິກຂຸທັງຫລາຍ! ມາຕຸຄາມປະກອບດ້ວຍທັມ ໕ ປະການີ້ແລ ຍ່ອມເປັນຜູ້ສາມາດຢູ່ຄອງເຮືອນ.

---

*ສັງຍຸຕຕະນິກາຍ ສະລາຍະຕະນະວັຄ ໑໘/໔໕໔/໔໙໕*



# ການຢູ່ຮ່ວມ ໔ ປະການ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈດຳເນີນຫົນທາງໄກໃນລະຫວ່າງເມືອງມະທຸຣາແລະເມືອງເວຣັນຊາຕໍ່ກັນ ຄະຫະບໍດີແລະຄະຫະປະຕານີຈຳນວນຫລາຍກໍເປັນຜູ້ດຳເນີນຫົນທາງໄກໃນລະຫວ່າງເມືອງມະທຸຣາແລະເມືອງເວຣັນຊາຕໍ່ກັນ.

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄສະເດັຈແວະອອກຈາກທາງ ປະທັບນັ່ງທີ່ເຫງົ້າໄມ້ແຫ່ງໜຶ່ງ. ຄະຫະບໍດີແລະຄະຫະປະຕານີເຫລົ່ານັ້ນໄດ້ເຫັນພຣະຜູ້ມີພຣະພາຄປະທັບນັ່ງທີ່ເຫງົ້າໄມ້ແຫ່ງໜຶ່ງ ຈຶ່ງໄດ້ພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວ ພຣະຜູ້

ມີພຣະພາຄໄດ້ຕຣັສພາສິຕນີ້ກັບຄະຫະບໍດີແລະຄະຫະປະຕານີ ເຫລົ່ານັ້ນວ່າ:

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ກາຣຢູ່ຮ່ວມ ໔ ປະ ກາຣນີ້; ໔ ປະກາຣເປັນຢ່າງໃດ? ຄື:
**ຊາຍຜີຢູ່ຮ່ວມກັບຍິງຜີ,**
**ຊາຍຜີຢູ່ຮ່ວມກັບຍິງເທວະດາ,**
**ຊາຍເທວະດາຢູ່ຮ່ວມກັບຍິງຜີ,**
**ຊາຍເທວະດາຢູ່ຮ່ວມກັບຍິງເທວະດາ.**

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ກໍຊາຍຜີຢູ່ຮ່ວມກັບ ຍິງຜີເປັນຢ່າງໃດ?

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ສາມີໃນໂລກນີ້ ເປັນຜູ້ຂ້າສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າ ຕົວະ, ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງ ຄວາມປະມາທ, ເປັນຄົນທຸສີລ, ມີທັມອັນເປັນບາບ ມີໃຈ ອັນມົລທິນຄືມັສສະຣິຍະຄອບງຳ ດ່າແລະບໍຣິພາສສະມະນະ ພຣາມ ຢູ່ຄອງເຮືອນ. ແມ່ນແຕ່ພະຣິຍາຂອງເຂົາກໍເປັນຜູ້ຂ້າ ສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າຕົວະ, ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະ

ມາທ, ເປັນຄົນທຸສິລ, ມີທັມອັນເປັນບາບ ມີໃຈອັນມົລທິນຄືມັສສະຣິຍະຄອບງຳ ດ່າແລະບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ. ຄະຫະບໍດີແລະຄະຫະປະຕານີທັງຫລາຍ ຊາຍຜີຢູ່ຮ່ວມກັບຍິງຜີເປັນຢ່າງນີ້ແລ.

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ກໍຊາຍຜີຢູ່ຮ່ວມກັບຍິງເທວະດາເປັນຢ່າງໃດ?

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ສາມີໃນໂລກນີ້ເປັນຜູ້ຂ້າສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າຕົວະ, ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນທຸສິລ, ມີທັມອັນເປັນບາບ ມີໃຈອັນມົລທິນຄືມັສສະຣິຍະຄອບງຳ ດ່າແລະບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ. ສ່ວນພະຣິຍາຂອງເຂົາເປັນຜູ້ງົດເວັ້ນຈາກການຂ້າສັຕ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີກັລຍານະທັມ ມີໃຈປາສະຈາກມັສສະຣິຍະອັນເປັນມົລທິນ ບໍ່ດ່າ ບໍ່ບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ. ຄະຫະບໍດີແລະຄະຫະປະຕານີທັງຫລາຍ ຊາຍຜີຢູ່ຮ່ວມກັບຍິງເທວະດາເປັນຢ່າງນີ້ແລ.

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ກໍຊາຍເທວະດາຢູ່ຮ່ວມກັບຍິງຜີເປັນຢ່າງໃດ?

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ສາມີໃນໂລກນີ້ເປັນຜູ້ງົດເວັ້ນຈາກການຂ້າສັດ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີກັລຍານະທັມ ມີໃຈປາສະຈາກມັສສະຣິຍະອັນເປັນມົລທິນ ບໍ່ດ່າ ບໍ່ບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ. ສ່ວນພະຣິຍາຂອງເຂົາເປັນຜູ້ຂ້າສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າຕົວະ, ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນທຸສິລ, ມີທັມອັນເປັນບາບ ມີໃຈອັນມົລທິນຄືມັສສະຣິຍະຄອບງໍາ ດ່າແລະບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ. ຄະຫະບໍດີແລະຄະຫະປະຕານີທັງຫລາຍ ຊາຍເທວະດາຢູ່ຮ່ວມກັບຍິງຜີເປັນຢ່າງນີ້ແລ.

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ກໍຊາຍເທວະດາຢູ່ຮ່ວມກັບຍິງເທວະດາເປັນຢ່າງໃດ?

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ສາມີໃນໂລກນີ້ເປັນຜູ້ງົດເວັ້ນຈາກການຂ້າສັດ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີກັລຍານະທັມ ມີໃຈປາສະຈາກມັສສະຣິຍະອັນເປັນມົລທິນ ບໍ່ດ່າ ບໍ່ບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ ແລະພະຣິຍາຂອງເຂົາກໍເປັນຜູ້ງົດເວັ້ນຈາກການຂ້າສັດ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ, ເປັນຄົນມີສິລ, ມີກັລຍານະທັມ ມີໃຈປາສະຈາກມັສສະຣິຍະອັນເປັນມົລທິນ ບໍ່ດ່າ ບໍ່ບໍຣິພາສສະມະນະພຣາມ ຢູ່ຄອງເຮືອນ. ຄະຫະບໍດີແລະຄະຫະປະຕານີທັງຫລາຍ ຊາຍເທວະດາຢູ່ຮ່ວມກັບຍິງເທວະດາເປັນຢ່າງນີ້ແລ.

ຄະຫະບໍດີແລະຄະຫະປະຕານີທັງຫລາຍ! ການຢູ່ຮ່ວມ ໔ ປະການນີ້ແລ.

ພະຣິຍາແລະສາມີທັງສອງເປັນຜູ້ທຸສິລ ເປັນຄົນຂີ້ຖີ່ ມັກດ່າວ່າສະມະນະພຣາມ ຊື່ວ່າຜີມາຢູ່ຮ່ວມກັນ.

ສາມີເປັນຜູ້ທຸສີລ ມີມັສສະຣິຍະ ມັກດ່າວ່າສະມະນະພຣາມ ສ່ວນພະຣິຍາຂອງເຂົາເປັນຜູ້ມີສີລ ຮູ້ຄວາມປະສົງຂອງຜູ້ຂໍ ປາສະຈາກມັສສະຣິຍະ ຊື່ວ່າ ພະຣິຍາເທວະດາຢູ່ຮ່ວມກັບສາມີຜີ.

ສາມີເປັນຜູ້ມີສີລ ຮູ້ຄວາມປະສົງຂອງຜູ້ຂໍ ປາສະຈາກມັສສະຣິຍະ ສ່ວນພະຣິຍາຂອງເຂົາເປັນຜູ້ທຸສີລ ມີມັສສະຣິຍະ ມັກດ່າວ່າສະມະນະພຣາມ ຊື່ວ່າ ຍິງຜີຢູ່ຮ່ວມກັບສາມີເທວະດາ.

ທັງສອງເປັນຜູ້ມີສັທທາ ຮູ້ຄວາມປະສົງຂອງຜູ້ຂໍ ມີຄວາມສັງຣວມ ເປັນຢູ່ໂດຍທັມ ພະຣິຍາແລະສາມີທັງສອງນັ້ນເຈຣະຈາຖ້ອຍຄຳທີ່ໜ້າຮັກແກ່ກັນແລະກັນ ຍ່ອມມີຄວາມຈະເຣີນຮຸ່ງເຮືອງຫລາຍ ມີຄວາມຜາສຸກ ທັງສອງຝ່າຍມີສີລສະເໝີກັນ ຮັກໃຄ່ກັນຫລາຍ ບໍ່ມີໃຈຮ້າຍຕໍ່ກັນ ຄັນປະພຶຕທັມໃນໂລກນີ້ແລ້ວ ເປັນຜູ້ມີສີລແລະວັຕສະເໝີກັນ ຍ່ອມເປັນຜູ້ສເວີຍກາມາຣົມນ໌ ເພີດເພີນບັນເທີງໃຈຢູ່ໃນເທວະໂລກ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໕໗/໕໘*



## ຄວາມອິ່ມໃນການເສພຂອງ ໓ ຢ່າງບໍ່ມີ

ພິກຂຸທັງຫລາຍ! ຄວາມອິ່ມໃນການເສພຂອງ ໓ ຢ່າງນີ້ບໍ່ມີ, ໓ ຢ່າງເປັນຢ່າງໃດ?

ພິກຂຸທັງຫລາຍ! ຄວາມອິ່ມໃນການເສພຄວາມຫລັບບໍ່ມີ *(ສຸປປັສສະ ພິກຂະເວ ປະຕິເສວະນາຍະ ນັຕຖິ ຕິຕຕິ)*.

ພິກຂຸທັງຫລາຍ! ຄວາມອິ່ມໃນການດື່ມສຸຣາເມຣັຍບໍ່ມີ *(ສຸຣາ ເມຣະຍະປານັສສະ ພິກຂະເວ ປະຕິເສວະນາຍະ ນັຕຖິ ຕິຕຕິ)*.

ພິກຂຸທັງຫລາຍ! ຄວາມອີ່ມໃນການເສພເມຖຸນທັມບໍ່ມີ *(ເມຖຸນທັມມະສະມາປັຕຕິຍາ ພິກຂະເວ ປະຕິເສວະນາຍະ ນັຕຖິ ຕິຕຕິ)*.

ພິກຂຸທັງຫລາຍ! ຄວາມອີ່ມໃນການເສພຂອງ ໓ ຢ່າງນີ້ແລບໍ່ມີ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໔໕໗/໕໕໗*

ພິກຂຸທັງຫລາຍ ບຸຄຄົລບາງຄົນໃນກໍຣະນີນີ້ ຍ່ອມປະກອບດ້ວຍກາຍກັມທີ່ບໍ່ສະອາດ, ປະກອບດ້ວຍວະຈີກັມທີ່ບໍ່ສະອາດ, ປະກອບດ້ວຍມະໂນກັມທີ່ບໍ່ສະອາດ ເຮົາກ່າວຂໍ້ນີ້ເພາະເຂົາເປັນຜູ້ບໍ່ສະອາດ ປ່າຊ້ານັ້ນເປັນບ່ອນທີ່ບໍ່ສະອາດ ສັນໃດ; ເຮົາກ່າວບຸຄຄົລນີ້ປຽບສັນນັ້ນ.

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໒໔໗/໒໔໙*

## ໂທສໃນປ່າຊ້າ ໕ ປະການ

ພິກຂຸທັງຫລາຍ! ໂທສໃນປ່າຊ້າ ໕ ປະການນີ້; ໕ ປະການ ເປັນຢ່າງໃດ? ຄື:

**ເປັນບ່ອນທີ່ບໍ່ສະອາດ ໑**

**ມີກິ່ນເໝັນ ໑**

**ມີພັຍສະເພາະໜ້າ ໑**

**ເປັນທີ່ຢູ່ຂອງພວກອະມະນຸສຮ້າຍ ໑**

**ເປັນທີ່ຣໍາພັນທຸກຂ໌ຂອງຊົນທັງຫລາຍ ໑**

ພິກຂຸທັງຫລາຍ ໂທສໃນປ່າຊ້າ ໕ ປະການນີ້ແລ.

ພິກຂຸທັງຫລາຍ! ໂທສໃນບຸຄຄົລຜູ້ປຽບດ້ວຍປ່າຊ້າ ໕ ປະກາຣນີ້ ສັນນັ້ນເໝືອນກັນ; ໕ ປະກາຣເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນກໍຣະນີນີ້ ຍ່ອມປະກອບດ້ວຍກາຍກັມທີ່ບໍ່ສະອາດ, ປະກອບດ້ວຍວະຈີກັມທີ່ບໍ່ສະອາດ, ປະກອບດ້ວຍມະໂນກັມທີ່ບໍ່ສະອາດ ເຮົາກ່າວຂໍ້ນີ້ເພາະເຂົາເປັນຜູ້ບໍ່ສະອາດ ປ່າຊ້ານັ້ນເປັນບ່ອນທີ່ບໍ່ສະອາດ ສັນໃດ; ເຮົາກ່າວບຸຄຄົລນີ້ປຽບສັນນັ້ນ.

ກິຕຕິສັບອັນຕ່ຳຊາມຂອງເຂົາຜູ້ປະກອບດ້ວຍກາຍກັມທີ່ບໍ່ສະອາດ, ປະກອບດ້ວຍວະຈີກັມທີ່ບໍ່ສະອາດ, ປະກອບດ້ວຍມະໂນກັມທີ່ບໍ່ສະອາດຍ່ອມຟຸ້ງໄປ ເຮົາກ່າວຂໍ້ນີ້ເພາະເຂົາເປັນຜູ້ມີກິ່ນເໝັນ ປ່າຊ້າມີກິ່ນເໝັນ ສັນໃດ; ເຮົາກ່າວບຸຄຄົລນີ້ປຽບສັນນັ້ນ.

ເພື່ອນພຣົມມະຈັນຍ໌ຜູ້ມີສີລເປັນທີ່ຮັກຍ່ອມເວັ້ນໄກຈາກບຸຄຄົລນັ້ນຜູ້ປະກອບດ້ວຍກາຍກັມທີ່ບໍ່ສະອາດ, ປະກອບດ້ວຍວະຈີກັມທີ່ບໍ່ສະອາດ, ປະກອບດ້ວຍມະໂນກັມທີ່ບໍ່ສະອາດ ເຮົາກ່າວຂໍ້ນີ້ເພາະເຂົາມີພັຍສະເພາະໜ້າ ປ່າຊ້າມີພັຍສະເພາະໜ້າ ສັນໃດ; ເຮົາກ່າວບຸຄຄົລນີ້ປຽບສັນນັ້ນ.

ເຂົາປະກອບດ້ວຍກາຍກັມທີ່ບໍ່ສະອາດ, ປະກອບດ້ວຍວະຈີກັມທີ່ບໍ່ສະອາດ, ປະກອບດ້ວຍມະໂນກັມທີ່ບໍ່ສະອາດ ຍ່ອມຢູ່ຮ່ວມກັບບຸຄຄົລຜູ້ສະເໝີກັນ ເຮົາກ່າວຂໍ້ນີ້ເພາະເຂົາເປັນທີ່ຢູ່ຂອງສິ່ງຮ້າຍ ປ່າຊ້າເປັນທີ່ຢູ່ຂອງອະມະນຸສຮ້າຍ ສັນໃດ; ເຮົາກ່າວບຸຄຄົລນີ້ປຽບສັນນັ້ນ.

ເພື່ອນພຣົມມະຈັນຍ໌ຜູ້ມີສີລເປັນທີ່ຮັກ ເຫັນເຂົາຜູ້ປະກອບດ້ວຍກາຍກັມທີ່ບໍ່ສະອາດ, ປະກອບດ້ວຍວະຈີກັມທີ່ບໍ່ສະອາດ, ປະກອບດ້ວຍມະໂນກັມທີ່ບໍ່ສະອາດແລ້ວ ຍ່ອມຣຳພັນທຸກຂ໌ວ່າໂອ! ເປັນທຸກຂ໌ຂອງພວກເຮົາທີ່ຢູ່ຮ່ວມກັບບຸຄຄົລເຫັນປານນີ້ ເຮົາກ່າວຂໍ້ນີ້ເພາະເຂົາເປັນທີ່ຣຳພັນທຸກຂ໌ ປ່າຊ້າເປັນບ່ອນຣຳພັນທຸກຂ໌ຂອງຊົນທັງຫລາຍ ສັນໃດ; ເຮົາກ່າວບຸຄຄົລນີ້ປຽບສັນນັ້ນ.

ພິກຂຸທັງຫລາຍ! ໂທສໃນບຸຄຄົລຜູ້ປຽບດ້ວຍປ່າຊ້າ ໕ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໔໑໗/໔໔໙*

ຄະຫະບໍດີບຸດ ຄົນທີ່ຈັກຈອນໃນທາງ ຈິບຫາຍ ທ່ານຈຶ່ງຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ ຄົນທຽມມິດ ໂດຍມີ ໔ ສະຖານະຄື:

- ຈັກຈອນໃຫ້ເສພສຸຣາເມຣັຍແລະສິ່ງ ມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ.
- ຈັກຈອນໃຫ້ທ່ຽວຕາມສະຖານທີ່ຕ່າງໆໃນ ເວລາວິກາລ.
- ຈັກຈອນໃຫ້ທ່ຽວເບິ່ງການຫລິ້ນມະຫໍຣະສົພ ຕ່າງໆ.
- ຈັກຈອນໃຫ້ຫລິ້ນການພະນັນ ອັນເປັນທີ່ຕັ້ງ ແຫ່ງຄວາມປະມາທ.

*ທີຄະນິກາຍ ປາຕິກະວັគ ໑໑/໑໘໔/໑໙໐*







ຖ້າບໍ່ໄດ້ສະຫາຍຜູ້ມີປັນຍາຮັກສາໂຕ ເປັນ
ທີຣະຊົນ ມີປົກກະຕິໃຫ້ສຳເຣັຈປະໂຍຊນ໌
ຮ່ວມທາງເດີນ ກໍຈິ່ງທ່ຽວສັນຈອນໄປຄົນ
ດຽວ ເໝືອນພຣະຣາຊາທີ່ຊົງສະລະຣາຊະ
ສົມບັຕ, ເໝືອນຊ້າງມາຕັງຄະໃນປ່າ
ສັນນັ້ນ;
ກາຣທ່ຽວໄປຄົນດຽວປະເສີດກວ່າ ເພາະ
ຄວາມເປັນສະຫາຍຍ່ອມບໍ່ມີໃນຄົນພາລ
ຈິ່ງເປັນຜູ້ທ່ຽວໄປຄົນດຽວ ແລະບໍ່ກະທຳ
ບາບ ເໝືອນຊ້າງມາຕັງຄະທີ່ມີຄວາມ
ຂົນຂວາຍນ້ອຍໃນປ່າ ສັນນັ້ນ.

ມັຊຊິມະນິກາຍ ອຸປະຣິປັນນາສ ໑໔/໔໓໑/໔໔໓

## ມິດທຽມ ໔ ຈຳພວກ

ຄະຫະບໍດີບຸດ! ຄົນ ໔ ຈຳພວກເຫລົ່ານີ້ຄື:

**ຄົນນຳແຕ່ສິ່ງຂອງໆເພື່ອນໄປທ່າດຽວ,**

**ຄົນດີແຕ່ເວົ້າ,**

**ຄົນປະຈົບສໍພໍ,**

**ຄົນຊັກຊວນໃນທາງຈິບຫາຍ,**

ທ່ານຈົ່ງຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ.

ຄະຫະບໍດີບຸດ! ຄົນນຳແຕ່ສິ່ງຂອງໆເພື່ອນໄປທ່າດຽວ ທ່ານຈຶ່ງ ຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ ໂດຍມີ ໔ ສະຖານະຄື:

**ເປັນຄົນຄິດເອົາແຕ່ໄດ້ຝ່າຍດຽວ,**
**ຍອມເສຍໜ້ອຍ ແຕ່ຫວັງຢາກໄດ້ຫລາຍ,**
**ບໍ່ຮັບກະທຳກິຈຂອງເພື່ອນໃນຄາວມີພັຍ,**
**ຄົບເພື່ອນເພາະເຫັນແກ່ປະໂຍຊນ໌ຂອງຕົນ,**

ຄະຫະບໍດີບຸດ! ຄົນນຳແຕ່ສິ່ງຂອງໆເພື່ອນໄປທ່າດຽວ ທ່ານຈຶ່ງ ຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ ໂດຍມີ ໔ ສະຖານະ ເຫລົ່ານີ້ແລ.

ຄະຫະບໍດີບຸດ! ຄົນດີແຕ່ເວົ້າ ທ່ານຈຶ່ງຮູ້ວ່າ ບໍ່ແມ່ນມິດ ເປັນ ແຕ່ຄົນທຽມມິດ ໂດຍມີ ໔ ສະຖານະຄື:
**ເກັບເອົາຂອງທີ່ລ່ວງໄປແລ້ວມາປຣາສັຍ,**
**ອ້າງເອົາຂອງທີ່ຍັງມາບໍ່ເຖິງມາປຣາສັຍ,**
**ສົງເຄາະດ້ວຍສິ່ງທີ່ຫາປະໂຍຊນ໌ບໍ່ໄດ້,**
**ເມື່ອມີກິຈທຸຣະກໍສະແດງຄວາມຂັດຂ້ອງ,**

ຄະຫະບໍດີບຸດ! ຄົນດີແຕ່ເວົ້າ ທ່ານຈຶ່ງຮູ້ວ່າ ບໍ່ແມ່ນມິດ ເປັນ ແຕ່ຄົນທຽມມິດ ໂດຍມີ ໔ ສະຖານະເຫລົ່ານີ້ແລ.

ຄະຫະບໍດີບຸດ! ຄົນປະຈົບສໍພໍ ທ່ານຈົ່ງຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ ໂດຍມີ ໔ ສະຖານະຄື:

**ຕາມໃຈເພື່ອນທີ່ກະທໍາຄວາມຊົ່ວ,**

**ຕາມໃຈເພື່ອນທີ່ກະທໍາຄວາມດີ,**

**ຕໍ່ໜ້າສັນລະເສີນ,**

**ລັບຫລັງນິນທາ.**

ຄະຫະບໍດີບຸດ! ຄົນປະຈົບສໍພໍ ທ່ານຈົ່ງຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ ໂດຍມີ ໔ ສະຖານະເຫລົ່ານີ້ແລ.

ຄະຫະບໍດີບຸດ! ຄົນທີ່ຊັກຊວນໃນທາງຈິບຫາຍ ທ່ານຈົ່ງຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ ໂດຍມີ ໔ ສະຖານະຄື:

**ຊັກຊວນໃຫ້ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ,**

**ຊັກຊວນໃຫ້ທ່ຽວຕາມສະຖານທີ່ຕ່າງໆໃນເວລາວິກາລ,**

**ຊັກຊວນໃຫ້ທ່ຽວເບິ່ງກາຣຫລິ້ນມະຫໍຣະສົພຕ່າງໆ,**

**ຊັກຊວນໃຫ້ຫລິ້ນກາຣພະນັນ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ.**

ຄະຫະບໍດີບຸດ! ຄົນທີ່ຊັກຊວນໃນທາງຈິບຫາຍ ທ່ານຈິ່ງຮູ້ວ່າ ບໍ່ແມ່ນມິດ ເປັນແຕ່ຄົນທຽມມິດ ໂດຍມີ ໔ ສະຖານະເຫລົ່ານີ້ ແລ.

ບັນດິດຮູ້ແຈ້ງມິດ ໔ ຈຳພວກເຫລົ່ານີ້ຄື ມິດປອກລອກ, ມິດດີແຕ່ເວົ້າ, ມິດປະຈົບສໍພໍ, ມິດແນະນຳໃນທາງຈິບຫາຍ ວ່າບໍ່ແມ່ນມິດດັ່ງນີ້ແລ້ວ ກໍເວັ້ນເສຍໃຫ້ຫ່າງໄກ ເໝືອນຄົນເດີນທາງເວັ້ນທາງທີ່ມີພັຍ ສັນນັ້ນ.

## ມິດແທ້ ໔ ຈຳພວກ

ຄະຫະບໍດີບຸດ! ມິດ ໔ ຈຳພວກເຫລົ່ານີ້ຄື:

**ມິດທີ່ມີອຸປະກາຣະ,**
**ມິດຮ່ວມສຸຂຮ່ວມທຸກຂ໌,**
**ມິດແນະນຳປະໂຍຊນ໌,**
**ມິດມີຄວາມຮັກໃຄ່,**
ທ່ານຈິ່ງຮູ້ວ່າ ເປັນມິດແທ້.

ຄະຫະບໍດີບຸດ! ມິດທີ່ມີອຸປະກາຣະ ທ່ານຈິ່ງຮູ້ວ່າເປັນມິດແທ້ ໂດຍມີ ໔ ສະຖານະຄື:

**ຮັກສາເພື່ອນຜູ້ປະມາທແລ້ວ,**
**ຮັກສາຊັພຍ໌ສົມບັຕຂອງເພື່ອນຜູ້ປະມາທແລ້ວ,**
**ເມື່ອມີພັຍກໍເພິ່ງພາອາສັຍໄດ້,**
**ເມື່ອມີກິຈທຸຣະທີ່ຈະຕ້ອງກະທຳກໍເພີ່ມຊັພຍ໌ໃຫ້ສອງເທົ່າ,**

ຄະຫະບໍດີບຸຕ! ມິຕທີ່ມີອຸປະກາຣະ ທ່ານຈົ່ງຮູ້ວ່າເປັນມິຕແທ້ ໂດຍມີ ໔ ສະຖານະເຫລົ່ານີ້ແລ.

ຄະຫະບໍດີບຸຕ! ມິຕຮ່ວມສຸຂຮ່ວມທຸກຂ໌ ທ່ານຈົ່ງຮູ້ວ່າເປັນມິຕ ແທ້ ໂດຍມີ ໔ ສະຖານະຄື:

**ບອກຄວາມລັບແກ່ເພື່ອນ,**
**ປົດຄວາມລັບຂອງເພື່ອນ,**
**ບໍ່ປະຖິ້ມໃນຄາວມີພັຍ,**
**ແມ່ນແຕ່ຊີວິຕກໍສາມາດສະລະເພື່ອປະໂຍຊນ໌ຂອງເພື່ອນໄດ້,**

ຄະຫະບໍດີບຸຕ! ມິຕຮ່ວມສຸຂຮ່ວມທຸກຂ໌ ທ່ານຈົ່ງຮູ້ວ່າເປັນມິຕ ແທ້ ໂດຍມີ ໔ ສະຖານະເຫລົ່ານີ້ແລ.

ຄະຫະບໍດີບຸຕ! ມິຕແນະນຳປະໂຍຊນ໌ ທ່ານຈົ່ງຮູ້ວ່າເປັນມິຕ ແທ້ ໂດຍມີ ໔ ສະຖານະຄື:

**ຫ້າມປາມຈາກຄວາມຊົ່ວ,**
**ແນະນຳໃຫ້ຕັ້ງຢູ່ໃນຄວາມດີ,**
**ໃຫ້ໄດ້ຟັງໃນສິ່ງທີ່ບໍ່ເຄີຍໄດ້ຟັງ,**
**ບອກທາງສວັນໃຫ້,**

ຄະຫະບໍດີບຸຕ! ມິຕແນະນຳປະໂຍຊນ໌ ທ່ານຈິ່ງຮູ້ວ່າເປັນມິຕ ແທ້ ໂດຍມີ ໔ ສະຖານະເຫລົ່ານີ້ແລ.

ຄະຫະບໍດີບຸຕ! ມິຕທີ່ມີຄວາມຮັກໃຄ່ ທ່ານຈິ່ງຮູ້ວ່າເປັນມິຕແທ້ ໂດຍມີ ໔ ສະຖານະຄື:

**ບໍ່ຍິນດີກັບຄວາມເສື່ອມຂອງເພື່ອນ,**
**ຍິນດີກັບຄວາມຈະເຣີນຂອງເພື່ອນ,**
**ຫ້າມຄົນທີ່ກ່າວຕິຕຽນເພື່ອນ,**
**ສັນລະເສີນຄົນທີ່ສັນລະເສີນເພື່ອນ,**

ຄະຫະບໍດີບຸຕ! ມິຕທີ່ມີຄວາມຮັກໃຄ່ ທ່ານຈິ່ງຮູ້ວ່າເປັນມິຕແທ້ ໂດຍມີ ໔ ສະຖານະເຫລົ່ານີ້ແລ.

ບັນດິຕຮູ້ແຈ້ງມິຕ ໔ ຈຳພວກເຫລົ່ານີ້ຄື ມິຕທີ່ມີອຸປະກາຣະ, ມິຕຮ່ວມສຸຂຮ່ວມທຸກຂ໌, ມິຕແນະນຳປະໂຍຊນ໌, ມິຕທີ່ມີຄວາມ

ຮັກໃຄ່ ວ່າເປັນມິຕແທ້ຢ່າງນີ້ແລ້ວ ກໍເຂົ້າໄປນັ່ງໃກ້ໂດຍເຄົາ
ຣົພເໝືອນມາຣດາກັບບຸຕ ສັນນັ້ນ.

ບັນດິຕຜູ້ສົມບູນດ້ວຍສີລ ຍ່ອມຮຸ່ງເຮືອງສ່ອງສະວ່າງເໝືອນ
ດັ່ງໄຟ ເມື່ອບຸຄຄົລຮັກສາໂພຄະສົມບັຕຢູ່ເໝືອນແມງເຜິ້ງ
ຜະນວກຮັງ ໂພຄະສົມບັຕຍ່ອມເຖິງເຊິ່ງການສັ່ງສົມ ເໝືອນ
ຈອມປວກທີ່ໂຕປວກກໍ່ຂຶ້ນ ສັນນັ້ນ.

ຄະຣືຫັສຖ໌ໃນຕະກຸນຜູ້ສາມາດ ຄັນສັ່ງສົມໂພຄະສົມບັຕໄດ້
ຢ່າງນີ້ແລ້ວ ຍ່ອມແບ່ງໂພຄະສົມບັຕອອກເປັນ ໔ ສ່ວນ ເຂົາ
ຍ່ອມສະໝານມິຕໄວ້ໄດ້ ຍ່ອມໃຊ້ສອຍໂພຄະສົມບັຕດ້ວຍ
ສ່ວນໜຶ່ງ, ຍ່ອມປະກອບການງານສອງສ່ວນ ແລະກໍເກັບ
ຮັກສາສ່ວນທີສີ່ໄວ້ ໂດຍໝາຍວ່າ ຈັກເກັບໄວ້ໃນຄາວມີພັຍ
ອັນຕຣາຍ ດັ່ງນີ້.

---

*ທີຄະນິກາຍ ປາຕິກະວັຄ ໑໑/໑໔໔-໑໔໔/໑໙໖-໑໙໗*


ຄວາມດີ ຄົນດີເຮັດໄດ້ງ່າຍ
ຄວາມດີ ຄົນຊົ່ວເຮັດໄດ້ຍາກ
ຄວາມຊົ່ວ ຄົນຊົ່ວເຮັດໄດ້ງ່າຍ
ຄວາມຊົ່ວ ພຣະອະຣິຍະເຈົ້າທັງຫລາຍເຮັດໄດ້
ຍາກ
ຂຸທທະກະນິກາຍ ໒໕/໑໑໖/໑໒໔



ບໍ່ສະມາຄົມກັບຄົນພາລ

ສະມາຄົມກັບບັນດິຕ

# 2

## ຄົນພາລ......ຈຳພວກ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ.

ກໍໃນສມັຍນັ້ນ ພິກຂຸສອງອົງຄ໌ໂຕ້ຖຽງກັນ ໃນກາຣໂຕ້ຖຽງກັນນັ້ນ ພິກຂຸອົງຄ໌ໜຶ່ງໄດ້ເວົ້າລ່ວງເກີນ.

ຄັ້ງນັ້ນ ພິກຂຸຜູ້ເວົ້າລ່ວງເກີນນັ້ນໄດ້ສະແດງໂທສໂດຍຄວາມເປັນໂທສໃນສຳນັກຂອງພິກຂຸນັ້ນ ພິກຂຸນັ້ນບໍ່ຮັບ.

ຄັ້ງນັ້ນ ພິກຂຸຈຳນວນຫລາຍພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ເມື່ອນັ່ງໃນທີ່ຄວນສ່ວນຂ້າງໜຶ່ງແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສ ພິກຂຸສອງອົງຄ໌ໂຕ້ຖຽງກັນ ໃນກາຣໂຕ້ຖຽງກັນນັ້ນ ພິກຂຸອົງຄ໌ໜຶ່ງໄດ້ເວົ້າລ່ວງເກີນ.

ລຳດັບນັ້ນ ພິກຂຸຜູ້ເວົ້າລ່ວງເກີນນັ້ນໄດ້ສະແດງໂທສໂດຍຄວາມເປັນໂທສໃນສຳນັກຂອງພິກຂຸນັ້ນ ແຕ່ພິກຂຸນັ້ນບໍ່ຮັບພຣະອົງຄ໌ຜູ້ຈະເຣີນ!

*ພຣະຜູ້ມີພຣະພາຄຕຣັສວ່າ:*

ພິກຂຸທັງຫລາຍ! ຄົນພາລ ໔ ຈຳພວກນີ້ ຄື:
**ເປັນຜູ້ບໍ່ເຫັນໂທສໂດຍຄວາມເປັນໂທສ,**
**ເປັນຜູ້ບໍ່ຮັບຕາມສົມຄວນແກ່ທັມເມື່ອຜູ້ອື່ນສະແດງໂທສ.**

ພິກຂຸທັງຫລາຍ! ຄົນພາລ ໔ ຈຳພວກນີ້ແລ.

ພິກຂຸທັງຫລາຍ! ບັນດິຕ ໔ ຈຳພວກນີ້ ຄື:
**ເປັນຜູ້ເຫັນໂທສໂດຍຄວາມເປັນໂທສ,**
**ເປັນຜູ້ຮັບຕາມສົມຄວນແກ່ທັມເມື່ອຜູ້ອື່ນສະແດງໂທສ.**

ພິກຂຸທັງຫລາຍ! ບັນດິຕ ໔ ຈຳພວກນີ້ແລ.

---

*ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໔໘໗/໙໕໔*



# ວິທີສັງເກດຄວາມເປັນພາລແລະບັນດິດ

ພິກຂຸທັງຫລາຍ! **ຄົນພາລມີກັມເປັນເຄື່ອງໝາຍ ບັນດິຕມີກັມເປັນເຄື່ອງໝາຍ** ປັນຍາງົດງາມໃນຄວາມປະພຶຕເນື່ອງໆ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນຄົນພາລ; ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍທຸຈະຣິຕ,**

**ວະຈີທຸຈະຣິຕ,**

**ມະໂນທຸຈະຣິຕ,**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນຄົນພາລ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນບັນດິຕ; ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍສຸຈະຣິຕ,**
**ວະຈີສຸຈະຣິຕ,**
**ມະໂນສຸຈະຣິຕ,**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນບັນດິຕ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ບຸຄຄົລປະກອບດ້ວຍທັມ ໓ ປະການເຫລົ່າໃດ ທີ່ເຂົາຮູ້ກັນວ່າ ເປັນຄົນພາລ ເຮົາຈັກປະພຶຕເວັ້ນທັມ ໓ ປະການເຫລົ່ານັ້ນ. ບຸຄຄົລປະກອບດ້ວຍທັມ ໓ ປະການເຫລົ່າໃດ ທີ່ເຂົາຮູ້ກັນວ່າ ເປັນບັນດິຕ ເຮົາຈັກປະພຶຕສະມາທານທັມ ໓ ປະການເຫລົ່ານັ້ນ. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໙໖/໔໔໑*


ບຸຄຄົລຄວນສະມາຄົມກັບຄົນດີ
ຄວນທຳຄວາມສນິດກັບຄົນດີ
ບຸຄຄົລຮູ້ສັທທັມແລ້ວ
ຍ່ອມພົ້ນຈາກທຸກຂ໌ທັງປວງໄດ້.
ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໔໑/໗໕

## ລັກສະນະຂອງຄົນພາລແລະບັນດິຕ

ພິກຂຸທັງຫລາຍ! ລັກສະນະຂອງຄົນພາລ ນິມິຕຂອງຄົນພາລ ຄວາມປະພຶຕບໍ່ຂາດສາຍຂອງຄົນພາລ ໓ ປະການນີ້; ໓ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ຄົນພາລໃນໂລກນີ້
**ເປັນຜູ້ຄິດຄວາມຄິດທີ່ຊົ່ວ** *(ທຸຈຈິນຕິຕະຈິນຕີ ຈະ ໂຫຕິ)*,
**ເວົ້າຄຳເວົ້າທີ່ຊົ່ວ** *(ທຸພພາສິຕະພາສີ)*,
**ກະທຳການກະທຳທີ່ຊົ່ວ** *(ທຸກກະຕະກັມມະກາຣີ)*.

**ພິກຂຸທັງຫລາຍ! ຖ້າຄົນພາລບໍ່ຄິດຄວາມຄິດທີ່ຊົ່ວ, ເວົ້າຄໍາເວົ້າທີ່ຊົ່ວ, ກະທໍາການກະທໍາທີ່ຊົ່ວ ບັນດິຕຈະຮູ້ເຂົາໄດ້ຢ່າງໃດວ່າ ຜູ້ນີ້ເປັນຄົນພາລ ເປັນອະສັປບຸຣຸສ.**

**ພິກຂຸທັງຫລາຍ! ກໍເພາະຄົນພາລຍ່ອມຄິດຄວາມຄິດທີ່ຊົ່ວ, ເວົ້າຄໍາເວົ້າທີ່ຊົ່ວ, ກະທໍາການກະທໍາທີ່ຊົ່ວ ບັນດິຕຈຶ່ງຮູ້ຈັກເຂົາວ່າ ຜູ້ນີ້ເປັນຄົນພາລ ເປັນອະສັປບຸຣຸສ.**

ພິກຂຸທັງຫລາຍ! ລັກສະນະຂອງຄົນພາລ ນິມິຕຂອງຄົນພາລຄວາມປະພຶຕບໍ່ຂາດສາຍຂອງຄົນພາລ ໓ ປະການນີ້ແລ.

ພິກຂຸທັງຫລາຍ! ລັກສະນະຂອງບັນດິຕ ນິມິຕຂອງບັນດິຕຄວາມປະພຶຕບໍ່ຂາດສາຍຂອງບັນດິຕ ໓ ປະການນີ້; ໓ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ບັນດິຕໃນໂລກນີ້
**ເປັນຜູ້ຄິດຄວາມຄິດທີ່ດີ** *(ສຸຈິນຕິຕະຈິນຕີ ຈະ ໂຫຕິ)*,
**ເວົ້າຄໍາເວົ້າທີ່ດີ** *(ສຸພາສິຕະພາສີ)*,
**ກະທໍາການກະທໍາທີ່ດີ** *(ສຸກະຕະກັມມະກາຣີ)*.

**ພິກຂຸທັງຫລາຍ! ຖ້າບັນດິຕບໍ່ຄິດຄວາມຄິດທີ່ດີ, ເວົ້າຄໍາເວົ້າທີ່ດີ, ກະທໍາການກະທໍາທີ່ດີ ບັນດິຕຈະຮູ້ເຂົາໄດ້ຢ່າງໃດວ່າ ຜູ້ນີ້ເປັນບັນດິຕ ເປັນສັປບຸຣຸສ.**

**ພິກຂຸທັງຫລາຍ! ກໍເພາະບັນດິຕຍ່ອມຄິດຄວາມຄິດທີ່ດີ, ເວົ້າຄໍາເວົ້າທີ່ດີ, ກະທໍາການກະທໍາທີ່ດີ ບັນດິຕຈຶ່ງຮູ້ຈັກເຂົາວ່າ ຜູ້ນີ້ເປັນບັນດິຕ ເປັນສັປບຸຣຸສ.**

ພິກຂຸທັງຫລາຍ! ລັກສະນະຂອງບັນດິຕ ນິມິຕຂອງບັນດິຕ ຄວາມປະພຶຕບໍ່ຂາດສາຍຂອງບັນດິຕ ໓ ປະການນີ້ແລ.

ພິກຂຸທັງຫລາຍ! ເພາະສະນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ບຸຄຄົລປະກອບດ້ວຍທັມ ໓ ປະການເຫລົ່າໃດ ທີ່ເຂົາຮູ້ກັນວ່າເປັນຄົນພາລ ເຮົາຈັກປະພຶຕເວັ້ນທັມ ໓ ປະການເຫລົ່ານັ້ນ. ບຸຄຄົລປະກອບດ້ວຍທັມ ໓ ປະການເຫລົ່າໃດ ທີ່ເຂົາຮູ້ກັນວ່າ ເປັນບັນດິຕ ເຮົາຈັກປະພຶຕສະມາທານທັມ ໓ ປະການເຫລົ່ານັ້ນ. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໑໗໓/໔໔໔*



## ຄົນພາລບໍ່ເຫັນໂທສໂດຍຄວາມເປັນໂທສ ບັນດິຕຍ່ອມເຫັນໂທສໂດຍຄວາມເປັນໂທສ

ພິກຂຸທັງຫລາຍ! ບຸຄຄົລປະກອບດ້ວຍທັມ ๓ ປະກາຣ ຈຶ່ງຊາບວ່າ ເປັນຄົນພາລ; ທັມ ๓ ປະກາຣເປັນຢ່າງໃດ? ຄື:

**ບໍ່ເຫັນໂທສໂດຍຄວາມເປັນໂທສ,**
**ເຫັນໂທສໂດຍຄວາມເປັນໂທສແລ້ວ ແຕ່ບໍ່ກະທຳຄືນຕາມທັມ,**
**ເມື່ອຜູ້ອື່ນຊີ້ໂທສຢູ່ ກໍບໍ່ຮັບຮູ້ຕາມທັມ,**

ພິກຂຸທັງຫລາຍ! ບຸຄຄົລປະກອບດ້ວຍທັມ ๓ ປະກາຣນີ້ແລ ຈຶ່ງຊາບວ່າ ເປັນຄົນພາລ.

ພິກຂຸທັງຫລາຍ! ບຸຄຄົລປະກອບດ້ວຍທັມ ໓ ປະການ ຈິ່ງ ຊາບວ່າ ເປັນບັນດິຕ; ທັມ ໓ ປະການເປັນຢ່າງໃດ? ຄື:

**ເຫັນໂທສໂດຍຄວາມເປັນໂທສ,**

**ເຫັນໂທສໂດຍຄວາມເປັນໂທສແລ້ວ ຍ່ອມກະທຳຄືນຕາມທັມ,**

**ເມື່ອຜູ້ອື່ນຊີ້ໂທສຢູ່ ຍ່ອມຮັບຮູ້ຕາມທັມ,**

ພິກຂຸທັງຫລາຍ! ບຸຄຄົລປະກອບດ້ວຍທັມ ໓ ປະການນີ້ແລ ຈິ່ງຊາບວ່າ ເປັນບັນດິຕ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໘໗/໔໔໓*



**“And what is a bad person? It’s someone who is faithless, shameless, imprudent, with little learning, lazy, unmindful, and witless. This is called a bad person.”**

***Assaddhasutta AN 4.202 https://suttacentral.net/an4.202***
***Translated by Bhikkhu Sujato***

## ຄົນພາລຕັ້ງບັນຫາໂດຍບໍ່ແຍບຄາຍ
## ບັນດິຕຕັ້ງບັນຫາໂດຍແຍບຄາຍ

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນຄົນພາລ, ທັມ ໓ ປະການເປັນຢ່າງໃດ? ຄື:

**ຕັ້ງບັນຫາໂດຍບໍ່ແຍບຄາຍ,**
**ສະເຫລີຍບັນຫາໂດຍບໍ່ແຍບຄາຍ,**
**ບໍ່ອະນຸໂມທະນາບັນຫາທີ່ຜູ້ອື່ນສະເຫລີຍໂດຍແຍບຄາຍ ດ້ວຍບົທພະຍັນຊະນະທີ່ເໝາະສົມ ງົດງາມ ເຂົ້າຮູບ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນຄົນພາລ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນບັນດິຕ, ທັມ ໓ ປະການເປັນຢ່າງໃດ? ຄື:

**ຕັ້ງບັນຫາໂດຍແຍບຄາຍ,**
**ສະເຫລີຍບັນຫາໂດຍແຍບຄາຍ,**
**ອະນຸໂມທະນາບັນຫາທີ່ຜູ້ອື່ນສະເຫລີຍໂດຍແຍບຄາຍດ້ວຍບົທພະຍັນຊະນະທີ່ເໝາະສົມ ງົດງາມ ເຂົ້າຮູບ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນບັນດິຕ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໗໗/໔໔໔*



**“Unwholesome bodily action,
unwholesome verbal action,
and unwholesome mental action.
One who possesses these three qualities
should be known as a fool.”**

*Akusalasutta AN 3.6 https://suttacentral.net/an3.6
Translated by Bhikkhu Bodhi*

## ຄວາມປະພຶດຂອງຄົນພານແລະບັນດິດ

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນຄົນພານ, ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍກັມທີ່ເປັນອະກຸສົລ,**
**ວະຈີກັມທີ່ເປັນອະກຸສົລ,**
**ມະໂນກັມທີ່ເປັນອະກຸສົລ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນຄົນພານ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງ ຊາບວ່າ ເປັນບັນດິຕ, ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍກັມທີ່ເປັນກຸສົລ,**

**ວະຈີກັມທີ່ເປັນກຸສົລ,**

**ມະໂນກັມທີ່ເປັນກຸສົລ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນບັນດິຕ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໙໗/໔໔໕*



# ຄວາມປະພຶດຂອງຄົນພາລແລະບັນດິດ (2)

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ๓ ປະການ ຈຶ່ງ ຊາບວ່າ ເປັນຄົນພາລ, ທັມ ๓ ປະການເປັນຢ່າງໃດ? ຄື:

**ກາຍກັມທີ່ມີໂທສ,**
**ວະຈີກັມທີ່ມີໂທສ,**
**ມະໂນກັມທີ່ມີໂທສ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ๓ ປະການນີ້ແລ ຈຶ່ງຊາບວ່າ ເປັນຄົນພາລ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນບັນດິຕ, ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍກັມທີ່ບໍ່ມີໂທສ,**

**ວະຈີກັມທີ່ບໍ່ມີໂທສ,**

**ມະໂນກັມທີ່ບໍ່ມີໂທສ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນບັນດິຕ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໖໗/໔໔໙*



## ຄວາມປະພຶດຂອງຄົນພາລແລະບັນດິດ (3)

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງ ຊາບວ່າ ເປັນຄົນພາລ, ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍກັມທີ່ເປັນໄປເພື່ອການບຽດບຽນ,**
**ວະຈີກັມທີ່ເປັນໄປເພື່ອການບຽດບຽນ,**
**ມະໂນກັມທີ່ເປັນໄປເພື່ອການບຽດບຽນ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນຄົນພາລ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການ ຈຶ່ງຊາບວ່າ ເປັນບັນດິຕ, ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍກັມທີ່ບໍ່ເປັນໄປເພື່ອການບຽດບຽນ,**
**ວະຈີກັມທີ່ບໍ່ເປັນໄປເພື່ອການບຽດບຽນ,**
**ມະໂນກັມທີ່ບໍ່ເປັນໄປເພື່ອການບຽດບຽນ.**

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໓ ປະການນີ້ແລ ຈຶ່ງຊາບວ່າ ເປັນບັນດິຕ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໙໙/໔໕໗*



**“Whatever dangers there are, all come from the foolish, not from the astute.”**

*Bahudhātukasutta MN 115 https://suttacentral.net/mn115*
*Translated by Bhikkhu Sujato*

## ຄວາມເປັນພາລນຳມາເຊິ່ງອຸປະສັກແລະບັນຫາ

ພິກຂຸທັງຫລາຍ! **ພັຍ ບໍ່ວ່າຊະນິດໃດໆທີ່ເກີດຂຶ້ນທັງໝົດນັ້ນ ເກີດຈາກຄົນພາລ ບໍ່ໄດ້ເກີດຈາກບັນດິຕ,**
**ອຸປັທທະວະ ບໍ່ວ່າຊະນິດໃດໆທີ່ເກີດຂຶ້ນທັງໝົດນັ້ນ ເກີດຈາກຄົນພາລ ບໍ່ໄດ້ເກີດຈາກບັນດິຕ,**
**ອຸປະສັກ ບໍ່ວ່າຊະນິດໃດໆທີ່ເກີດຂຶ້ນທັງໝົດນັ້ນ ເກີດຈາກຄົນພາລ ບໍ່ໄດ້ເກີດຈາກບັນດິຕ;**

ພິກຂຸທັງຫລາຍ! ປຽບເໝືອນໄຟທີ່ລຸກລາມຈາກເຮືອນຫຍ້າ ຍ່ອມໄໝ້ໄດ້ກະທັ້ງເຮືອນຍອດທີ່ໂບກດ້ວຍປູນ ທີ່ມີບານປະຕູອັດແຈບສນິດ ສັນໃດ,

ພິກຂຸທັງຫລາຍ! ສັນນັ້ນເໝືອນກັນແລ, ພັຍ ບໍ່ວ່າຊະນິດໃດໆ ທີ່ເກີດຂຶ້ນທັງໝົດນັ້ນ ເກີດຈາກຄົນພາລ ບໍ່ໄດ້ເກີດຈາກ ບັນດິຕ.

ອຸປັທທະວະ ບໍ່ວ່າຊະນິດໃດໆທີ່ເກີດຂຶ້ນທັງໝົດນັ້ນ ເກີດຈາກ ຄົນພາລ ບໍ່ໄດ້ເກີດຈາກບັນດິຕ.

ອຸປະສັກ ບໍ່ວ່າຊະນິດໃດໆທີ່ເກີດຂຶ້ນທັງໝົດນັ້ນ ເກີດຈາກຄົນ ພາລ ບໍ່ໄດ້ເກີດຈາກບັນດິຕ.

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ, ຄົນພາລຈຶ່ງມີພັຍ ສະເພາະໜ້າ ບັນດິຕບໍ່ມີພັຍສະເພາະໜ້າ; ຄົນພາລຈຶ່ງມີອຸປັທ ທະວະ ບັນດິຕບໍ່ມີອຸປັທທະວະ; ຄົນພາລຈຶ່ງມີອຸປະສັກ ບັນດິຕບໍ່ມີອຸປະສັກ. ພັຍ, ອຸປັທທະວະ, ອຸປະສັກ ບໍ່ໄດ້ມາ ຈາກບັນດິຕ.

**ພິກຂຸທັງຫລາຍ! ເພາະເຫຕນັ້ນແລ, ພວກເຈົ້າທັງຫລາຍຄວນ ສຶກສາຢ່າງນີ້ວ່າ ເຮົາຈັກເປັນບັນດິຕ.**

---

*ມັຊຊິມະນິກາຍ ອຸປາຣິປັນນາສ ໑໔/໑໓໓/໔໓໕*

# Not Associate with a Fool, Associate with the Wise



# ຄົນພານສເວີຍທຸກຂ໌
# ບັນດິຕສເວີຍສຸຂ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ ສມັຍນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍວ່າ:

ພິກຂຸທັງຫລາຍ!

ພິກຂຸເຫລົ່ານັ້ນທູລຮັບພຣະດຳຣັສແລ້ວ

ພິກຂຸທັງຫລາຍ! ລັກສະນະເຄື່ອງໝາຍ ເຄື່ອງອ້າງວ່າ ເປັນພາລຂອງຄົນພາລນີ້ມີ ໓ ຢ່າງ; ໓ ຢ່າງເປັນຢ່າງໃດ?

ພິກຂຸທັງຫລາຍ! ຄົນພາລໃນໂລກນີ້ ມັກຄິດຄວາມຄິດທີ່ຊົ່ວ ມັກເວົ້າຄຳເວົ້າທີ່ຊົ່ວ ມັກກະທຳການກະທຳທີ່ຊົ່ວ ຖ້າຄົນພາລບໍ່ເປັນຜູ້ມັກຄິດຄວາມຄິດທີ່ຊົ່ວ ມັກເວົ້າຄຳເວົ້າທີ່ຊົ່ວ ມັກກະທຳການກະທຳທີ່ຊົ່ວ ບັນດິຕພວກໃດຈະຮູ້ຈັກເຂົາໄດ້ວ່າ ຜູ້ນີ້ເປັນຄົນພາລ ເປັນອະສັປບຸຣຸສ ແຕ່ເພາະຄົນພາລມັກຄິດຄວາມຄິດທີ່ຊົ່ວ ມັກເວົ້າຄຳເວົ້າທີ່ຊົ່ວ ມັກກະທຳການກະທຳທີ່ຊົ່ວ ສະນັ້ນ ບັນດິຕທັງຫລາຍຈຶ່ງຮູ້ໄດ້ວ່າ ຜູ້ນີ້ເປັນຄົນພາລເປັນອະສັປບຸຣຸສ.

ພິກຂຸທັງຫລາຍ! ຄົນພາລນັ້ນແລ ຍ່ອມສເວີຍທຸກຂ໌ໂທມະນັສ ໓ ຢ່າງໃນປັຈຈຸບັນ.

ພິກຂຸທັງຫລາຍ! ຖ້າຄົນພາລນັ່ງໃນສະພາກໍດີ ແຄມທາງຣົຖກໍດີ ແຄມທາງສາມແຍກກໍດີ ຊົນໃນທີ່ນັ້ນໆຈະເວົ້າຖ້ອຍຄຳທີ່ພໍເໝາະພໍສົມແກ່ເຂົາ, ຖ້າຄົນພາລມັກຂ້າສັຕ ມັກຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ມັກປະພຶຕຜິດໃນກາມທັງຫລາຍ ມັກເວົ້າຕົວະ ມີປົກກະຕິຕັ້ງຢູ່ໃນຄວາມປະມາທເພາະເສພສຸຣາເມຣັຍແລະສິ່ງມຶນເມົາ ໃນເຣື່ອງທີ່ຊົນເວົ້າຖ້ອຍຄຳທີ່ພໍເໝາະພໍສົມ

ແກ່ເຂົານັ້ນແລ ຄົນພາລຈະມີຄວາມຮູ້ສຶກຢ່າງນີ້ວ່າ ສິ່ງເຫລົ່ານັ້ນມີຢູ່ໃນເຮົາ ແລະເຮົາກໍປາກົຕຢູ່ໃນສິ່ງເຫລົ່ານັ້ນດ້ວຍ *(ເປັນຢ່າງທີ່ເຂົາກ່າວ)* ພິກຂຸທັງຫລາຍ ຄົນພາລຍ່ອມສເວີຍທຸກຂ໌ໂທມະນັສຂໍ້ທີ ໑ ດັ່ງນີ້ ໃນປັຈຈຸບັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ຄົນພາລເຫັນຣາຊາທັງຫລາຍຈັບໂຈຣຜູ້ປະພຶຕຜິດມາແລ້ວ ສັ່ງລົງໂທສຕ່າງຊະນິດຄື:

ຕີດ້ວຍແສ້ແດ່,

ຕີດ້ວຍຫວາຍແດ່,

ຕີດ້ວຍກະບອງສັ້ນແດ່,

ມັດມືແດ່,

ມັດຕີນແດ່,

ມັດທັງມືທັງຕີນແດ່,

ຕັດຫູແດ່,

ຕັດດັງແດ່,

ຕັດທັງຫູທັງດັງແດ່,

ລົງໂທສດ້ວຍວິທີ ໝໍ້ຄ້ຽງນ້ຳມັນແດ່,

ລົງໂທສດ້ວຍວິທີ ຂອດສັງຂ໌ແດ່,

ລົງໂທສດ້ວຍວິທີ ປາກຣາຫູແດ່,

ລົງໂທສດ້ວຍວິທີ ມາລັຍໄຟແດ່,

ລົງໂທສດ້ວຍວິທີ ຄົບມືແດ່,
ລົງໂທສດ້ວຍວິທີ ລິ້ວສ່າຍແດ່,
ລົງໂທສດ້ວຍວິທີ ນຸ່ງເປືອກໄມ້ແດ່,
ລົງໂທສດ້ວຍວິທີ ຢືນກວາງແດ່,
ລົງໂທສດ້ວຍວິທີ ກ່ຽວເຫຍື່ອເບັດແດ່,
ລົງໂທສດ້ວຍວິທີ ຫລຽນກະຫາປະນະແດ່,
ລົງໂທສດ້ວຍວິທີ ແປງແສບແດ່,
ລົງໂທສດ້ວຍວິທີ ກາງວຽນແດ່,
ລົງໂທສດ້ວຍວິທີ ຕັ່ງຟາງແດ່,
ລາດດ້ວຍນ້ຳມັນຮ້ອນໆແດ່,
ໃຫ້ໝາກັດ-ຊິດແດ່,
ໃຫ້ນອນຫງາຍເທິງຫລາວທັງເປັນໆແດ່,
ຕັດຫົວດ້ວຍດາບແດ່,

ໃນຂະນະທີ່ເຫັນນັ້ນ ຄົນພາລຈະມີຄວາມຮູ້ສຶກຢ່າງນີ້ວ່າ ເພາະເຫຕແຫ່ງກັມຊົ່ວປານໃດແລ ຣາຊາທັງຫລາຍຈຶ່ງຈັບໂຈຣຜູ້ປະພຶຕຜິດມາແລ້ວ ສັ່ງລົງໂທສຕ່າງຊະນິດຄື:
ຕີດ້ວຍແສ້ແດ່,
ຕີດ້ວຍຫວາຍແດ່,
ຕີດ້ວຍກະບອງສັ້ນແດ່,
ມັດມືແດ່,

ມັດຕີນແດ່,

ມັດທັງມືທັງຕີນແດ່,

ຕັດຫູແດ່,

ຕັດດັງແດ່,

ຕັດທັງຫູທັງດັງແດ່,

ລົງໂທສດ້ວຍວິທີ ໝໍ້ຄ້ຽວນ້ຳມັນແດ່,

ລົງໂທສດ້ວຍວິທີ ຂອດສັງຂ໌ແດ່,

ລົງໂທສດ້ວຍວິທີ ປາກຣາຫູແດ່,

ລົງໂທສດ້ວຍວິທີ ມາລັຍໄຟແດ່,

ລົງໂທສດ້ວຍວິທີ ຄົບມືແດ່,

ລົງໂທສດ້ວຍວິທີ ລິ້ວສ່າຍແດ່,

ລົງໂທສດ້ວຍວິທີ ນຸ່ງເປືອກໄມ້ແດ່,

ລົງໂທສດ້ວຍວິທີ ຢືນກວາງແດ່,

ລົງໂທສດ້ວຍວິທີ ກ່ຽວເຫຍື່ອເບັດແດ່,

ລົງໂທສດ້ວຍວິທີ ຫລຽນກະຫາປະນະແດ່,

ລົງໂທສດ້ວຍວິທີ ແປງແສບແດ່,

ລົງໂທສດ້ວຍວິທີ ກາງວຽນແດ່,

ລົງໂທສດ້ວຍວິທີ ຕັ່ງຟາງແດ່,

ລາດດ້ວຍນ້ຳມັນຮ້ອນໆແດ່,

ໃຫ້ໝາກັດ-ຊິດແດ່,

ໃຫ້ນອນຫງາຍເທິງຫລາວທັງເປັນໆແດ່,

ຕັດຫົວດ້ວຍດາບແດ່.

ພິກຂຸທັງຫລາຍ! ຄົນພາລຍ່ອມສເວີຍທຸກຂ໌ ໂທມະນັສຂໍ້ທີ ໔ ດັ່ງນີ້ ໃນປັຈຈຸບັນ.

ພິກຂຸທັງຫລາຍ! ກັມຊົ່ວທີ່ຄົນພາລກະທຳໄວ້ໃນກາລກ່ອນຄື ກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຍ່ອມປົກຄຸມຄອບງຳຄົນພາລຜູ້ຢູ່ເທິງຕັ່ງ ຫລືເທິງຕຽງ ຫລືນອນເທິງພື້ນດິນໃນສມັຍນັ້ນ ປຽບເໝືອນເງົາຍອດພູເຂົາໃຫຍ່ ຍ່ອມປົກຄຸມຄອບງຳແຜ່ນດິນໃນຕອນແລງ ສັນໃດ, ພິກຂຸທັງຫລາຍ ສັນນັ້ນເໝືອນກັນແລ ກັມຊົ່ວທີ່ຄົນພາລກະທຳໄວ້ໃນກາລກ່ອນ ຄື ກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຍ່ອມປົກຄຸມຄອບງຳຄົນພາລຜູ້ຢູ່ເທິງຕັ່ງ ຫລືເທິງຕຽງ ຫລືນອນເທິງພື້ນດິນໃນສມັຍນັ້ນ. ພິກຂຸທັງຫລາຍ ສມັຍນັ້ນ ຄົນພາລຈະມີຄວາມຮູ້ສຶກຢ່າງນີ້ວ່າ:

ເຮົາບໍ່ໄດ້ກະທຳຄວາມດີ ບໍ່ໄດ້ກະທຳກຸສົລ ບໍ່ໄດ້ກະທຳເຄື່ອງປ້ອງກັນຄວາມກົວໄວ້ ກະທຳແຕ່ຄວາມຊົ່ວ ກະທຳແຕ່ກັມອັນຫຍາບຊ້າ ກະທຳແຕ່ກັມອັນເສົ້າໝອງ ລະໂລກນີ້ໄປແລ້ວ ຈະໄປສູ່ຄະຕິຂອງຄົນທີ່ບໍ່ໄດ້ກະທຳຄວາມດີ ບໍ່ໄດ້ກະທຳກຸສົລ ບໍ່ໄດ້ກະທຳເຄື່ອງປ້ອງກັນຄວາມກົວໄວ້ ກະທຳແຕ່ຄວາມຊົ່ວ

ກະທຳແຕ່ກັມອັນຫຍາບຊ້າ ກະທຳແຕ່ກັມອັນເສົ້າໝອງ ຄົນພາລນັ້ນຍ່ອມເສົ້າໂສກ ລຳບາກໃຈ ຮ້ອງໄຫ້ ທຸບເອິກຄ່ຳຄວນເຖິງຄວາມຫລົງໄຫລ. ພິກຂຸທັງຫລາຍ ຄົນພາລຍ່ອມສເວີຍທຸກຂ໌ ໂທມະນັສຂໍ້ທີ ໓ ດັ່ງນີ້ ໃນປັຈຈຸບັນ.

ພິກຂຸທັງຫລາຍ! ຄົນພາລນັ້ນແລ ປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

ພິກຂຸທັງຫລາຍ! ບຸຄຄົລເມື່ອຈະກ່າວໂດຍຊອບ ຄວນກ່າວເຖິງນະຣົກນັ້ນແຫລະວ່າ ເປັນສະຖານທີ່ທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈໂດຍສ່ວນດຽວ ພິກຂຸທັງຫລາຍ ທຸກຂ໌ນີ້ກັບທຸກຂ໌ໃນນະຣົກປຽບທຽບກັນບໍ່ໄດ້.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພິກຂຸອົງຄ໌ໜຶ່ງໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະອົງຄ໌ຊົງສາມາດປຽບອຸປະມາໄດ້ຫລືໜໍ?

ພຣະຜູ້ມີພຣະພາຄຕຣັສວ່າ:

ສາມາດອຸປະມາໄດ້ ພິກຂຸ!

ແລ້ວຊົງຕຣັສຕໍ່ໄປວ່າ:

ພິກຂຸທັງຫລາຍ! ປຽບເໝືອນພວກຣາຊະບຸຣຸສຈັບໂຈຣຜູ້ປະພຶຕຜິດມາສະແດງແກ່ພຣະຣາຊາວ່າ ຂໍເດຊະ ຜູ້ນີ້ເປັນໂຈຣປະພຶຕຜິດຕໍ່ພຣະອົງຄ໌ ຂໍພຣະອົງຄ໌ໂປດລົງອາຊຍາຕາມທີ່ຊົງພຣະຣາຊະປະສົງແກ່ມັນເຖີດ ພຣະຣາຊາຊົງສັ່ງກາຣນັ້ນຢ່າງນີ້ວ່າ:

ທ່ານທັງຫລາຍ! ໄປເຖີດ ພວກທ່ານຈົ່ງເອົາຫອກຮ້ອຍເຫລັ້ມແທງບຸຣຸສນີ້ໃນເວລາເຊົ້າ ພວກຣາຊະບຸຣຸສຈຶ່ງເອົາຫອກຮ້ອຍເຫລັ້ມແທງບຸຣຸສນັ້ນໃນເວລາເຊົ້າ.

ເມື່ອເຖິງເວລາທ່ຽງວັນ ພຣະຣາຊາຕຣັສຖາມຢ່າງນີ້ວ່າ ທ່ານທັງຫລາຍ ບຸຣຸສນັ້ນເປັນແນວໃດ?

ຣາຊະບຸຣຸສກຣາບທູລວ່າ ຍັງມີຊີວິຕຢູ່ ຂ້ານ້ອຍ!

ພຣະຣາຊາຈຶ່ງຊົງສັ່ງກາຣນັ້ນຢ່າງນີ້ວ່າ:

ທ່ານທັງຫລາຍ! ໄປເຖີດ ພວກທ່ານຈົ່ງເອົາຫອກຮ້ອຍເຫລັ້ມແທງບຸຣຸສນັ້ນໃນເວລາທ່ຽງ ພວກຣາຊະບຸຣຸສຈຶ່ງເອົາຫອກຮ້ອຍເຫລັ້ມແທງບຸຣຸສນັ້ນໃນເວລາທ່ຽງ.

ເມື່ອເຖິງເວລາແລງ ພຣະຣາຊາຕຣັສຖາມຢ່າງນີ້ວ່າ ທ່ານທັງຫລາຍ ບຸຣຸສນັ້ນເປັນແນວໃດ?

ຣາຊະບຸຣຸສກຣາບທູລວ່າ ຍັງມີຊີວິຕຢູ່ ຂ້ານ້ອຍ!

ພຣະຣາຊາຈຶ່ງຊົງສັ່ງການນັ້ນຢ່າງນີ້ວ່າ:

ທ່ານທັງຫລາຍ! ໄປເຖີດ ພວກທ່ານຈົ່ງເອົາຫອກຮ້ອຍເຫລັ້ມແທງບຸຣຸສນັ້ນໃນເວລາແລງ ພວກຣາຊະບຸຣຸສຈຶ່ງເອົາຫອກຮ້ອຍເຫລັ້ມແທງບຸຣຸສນັ້ນໃນເວລາແລງ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສນັ້ນຖືກແທງດ້ວຍຫອກ ໓໐໐ ເຫລັ້ມ ຍ່ອມສເວີຍທຸກຂ໌ໂທມະນັສເພາະການຖືກແທງນັ້ນຫລືໜໍ?

ພິກຂຸເຫລົ່ານັ້ນກຣາບທູລວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນບຸຣຸສນັ້ນຖືກແທງດ້ວຍຫອກພຽງເຫລັ້ມດຽວ ກໍຍ່ອມສເວີຍ

ທຸກຂ໌ໂທມະນັສເພາະການແທງນັ້ນເປັນເຫຕ ຈະກ່າວເຖິງ ຫຍັງເຊິ່ງການຖືກແທງດ້ວຍຫອກ ໑໐໐ ເຫລັ້ມໜໍ.

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄຊົງຢິບແຜ່ນຫີນຂະນາດເທົ່າຝາ ມື ແລ້ວຕຣັສຖາມພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສໍາຄັນຄວາມຂໍ້ນັ້ນວ່າ ຢ່າງໃດ ແຜ່ນຫີນຂະນາດເທົ່າຝາມືທີ່ເຮົາຖືນີ້ກັບພູເຂົາຫລວງ ຫິມະພານອັນໃດໜໍໃຫຍ່ກວ່າກັນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ແຜ່ນຫີນຂະນາດເທົ່າຝາພຣະ ຫັຕຖ໌ທີ່ພຣະອົງຄ໌ຊົງຖືຢູ່ນັ້ນ ມີປະມານນ້ອຍຫລາຍ ເມື່ອ ປຽບທຽບກັບພູເຂົາຫລວງຫິມະພານແລ້ວ ຍ່ອມບໍ່ເຖິງແມ່ນແຕ່ ການນັບ ຍ່ອມບໍ່ເຖິງແມ່ນພຽງສ່ວນສ້ຽວ ຍ່ອມບໍ່ເຖິງເຊິ່ງການ ທຽບກັນໄດ້.

ພິກຂຸທັງຫລາຍ! ສັນນັ້ນເໝືອນກັນ ທຸກຂ໌ໂທມະນັສທີ່ບຸຣຸສຖືກ ແທງດ້ວຍຫອກ ໑໐໐ ເຫລັ້ມເປັນເຫຕ ກໍາລັງສເວີຍຢູ່ນັ້ນ ເມື່ອປຽບທຽບກັບຄວາມທຸກຂ໌ຂອງນະຣົກແລ້ວ ຍ່ອມບໍ່ເຖິງ ແມ່ນແຕ່ການນັບ ຍ່ອມບໍ່ເຖິງແມ່ນພຽງສ່ວນສ້ຽວ ຍ່ອມບໍ່ເຖິງ ເຊິ່ງການທຽບກັນໄດ້.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະທຳການລົງໂທສ ຊື່ການຈອງຈຳ ໕ ປະການ ຄື ຕອກຕະປູເຫລັກແດງທີ່ມື ໔ ຂ້າງ, ທີ່ເທົ້າ ໔ ຂ້າງ ແລະທີ່ກາງເອິກ ຄົນພາລນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບ ຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບຄົນພາລນັ້ນຂຶງພືດ*(ຈັບໃຫ້ນອນຢຽດຢາວກາງແຂນຂາອອກ)* ແລ້ວເອົາຂວານຖາກ ຄົນພາລນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບ ຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບຄົນພາລນັ້ນເອົາເທົ້າຂຶ້ນຂ້າງເທິງ ເອົາຫົວລົງຂ້າງລຸ່ມ ແລ້ວຖາກດ້ວຍພ້າ ຄົນພາລນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບ ຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບຄົນພາລນັ້ນທຽມຣົຖແລ້ວ ໃຫ້ແລ່ນກັບໄປກັບມາບົນແຜ່ນດິນທີ່ມີໄຟຕິດທົ່ວລຸກເປັນແປວ ຄົນພາລນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າ

ເຈັບແສບ ຢູ່ໃນນະຣົກນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບຄົນພາລນັ້ນປີນຂຶ້ນປີນລົງເຊິ່ງພູເຂົາຖ່ານໄຟໜ່ວຍໃຫຍ່ ທີ່ມີໄຟຕິດທົ່ວລຸກເປັນແປວ ຄົນພາລນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າເຈັບແສບ ຢູ່ໃນພູເຂົາຖ່ານໄຟນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະຈັບຄົນພາລນັ້ນເອົາເທົ້າຂຶ້ນຂ້າງເທິງ ເອົາຫົວລົງຂ້າງລຸ່ມ ແລ້ວພຸ່ງລົງໃນໝໍ້ທອງແດງທີ່ຮ້ອນມີໄຟຕິດທົ່ວ ລຸກເປັນແປວ ຄົນພາລນັ້ນຈະເດືອດເປັນຟອງຢູ່ໃນໝໍ້ທອງແດງນັ້ນ ເມື່ອເຂົາເດືອດເປັນຟອງຢູ່ ບາງຄັ້ງຟູຂຶ້ນ ບາງຄັ້ງຈົມລົງ ບາງຄັ້ງລອຍໄປທາງຂວາງຄົນພາລນັ້ນຈະສເວີຍເວທະນາອັນເປັນທຸກຂ໌ກ້າ ເຈັບແສບ ຢູ່ໃນໝໍ້ທອງແດງນັ້ນ ແຕ່ຍັງບໍ່ຕາຍຕາບເທົ່າທີ່ບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫລາຍ! ເຫລົ່ານາຍນິຣະຍະບາລຈະໂຍນຄົນພາລນັ້ນລົງໃນມະຫານະຣົກ ກໍມະຫານະຣົກນັ້ນ ມີ ໔ ມູມ ໔ ປະຕູແບ່ງໄວ້ເປັນສ່ວນເທົ່າກັນ ມີກຳແພງເຫລັກອ້ອມຮອບ ຄອບ

ໄວ້ດ້ວຍແຜ່ນເຫລັກ ມະຫານະຣົກນັ້ນມີພື້ນເປັນເຫລັກລຸກເປັນແປວ ແຜ່ໄປໄກດ້ານລະ ໑໐໐ ໂຍຊນ໌ ປະດິສຖານຢູ່ທຸກເມື່ອ.

ພິກຂຸທັງຫລາຍ! ເຮົາກ່າວເຣື່ອງນະຣົກໂດຍອະເນກປະຣິຍາຍພຽງເທົ່ານີ້ ການກ່າວເຖິງຄວາມທຸກຂ໌ໃນນະຣົກບໍ່ໄດ້ກະທຳໄດ້ງ່າຍ.

ພິກຂຸທັງຫລາຍ! ມີເຫລົ່າສັຕດິຣັຈສານຈຳພວກມີຫຍ້າເປັນພັກສາ ສັຕດິຣັຈສານເຫລົ່ານັ້ນຍ່ອມໃຊ້ແຂ້ວແລະເລັມກິນຫຍ້າສົດ ກໍເຫລົ່າສັຕດິຣັຈສານຈຳພວກມີຫຍ້າເປັນພັກສາຄືອັນໃດ? ຄື ມ້າ ງົວ ລາ ແບ້ ເນື້ອ ຫລືສັຕຈຳພວກອື່ນໆບໍ່ວ່າຊະນິດໃດໆ ທີ່ມີຫຍ້າເປັນພັກສາ.

ພິກຂຸທັງຫລາຍ! ໃນເບື້ອງຕົ້ນ ຄົນພາລໃນໂລກນີ້ນັ້ນ ກິນອາຫານດ້ວຍຄວາມຕິດໃຈໃນຣົສ ກະທຳກັມອັນເປັນບາບໄວ້ໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັຕຈຳພວກທີ່ມີຫຍ້າເປັນພັກສາເຫລົ່ານັ້ນ.

ພິກຂຸທັງຫລາຍ! ມີເຫລົ່າສັຕດິຣັຈສານຈຳພວກມີຄູຖເປັນພັກສາ ສັຕດິຣັຈສານເຫລົ່ານັ້ນໄດ້ກິ່ນຄູຖແຕ່ໄກໆ ແລ້ວຍ່ອມແລ່ນໄປດ້ວຍຄວາມຫວັງວ່າ ຈັກກິນທີ່ນີ້ ຈັກກິນທີ່ນີ້ ປຽບ

ເໝືອນພວກພຣາມເດີນໄປຕາມກິ່ນບູຊາດ້ວຍຕັ້ງໃຈວ່າ ຈັກກິນທີ່ນີ້ ຈັກກິນທີ່ນີ້ ສັນໃດ; ພິກຂຸທັງຫລາຍ ສັນນັ້ນເໝືອນກັນແລ ມີເຫລົ່າສັຕດິຣັຈສານຈຳພວກມີຄູຖເປັນພັກສາ ສັຕດິຣັຈສານເຫລົ່ານັ້ນໄດ້ກິ່ນຄູຖແຕ່ໄກໆ ແລ້ວຍ່ອມແລ່ນໄປດ້ວຍຄວາມຫວັງວ່າ ຈັກກິນທີ່ນີ້ ຈັກກິນທີ່ນີ້ ສັຕດິຣັຈສານຈຳພວກມີຄູຖເປັນພັກສາຄືອັນໃດ? ຄື ໄກ່ ໝູ ໝາບ້ານ ໝາປ່າ ຫລືແມ່ນແຕ່ຈຳພວກສັຕອື່ນໆບໍ່ວ່າຊະນິດໃດໆ ທີ່ມີຄູຖເປັນພັກສາ.

ພິກຂຸທັງຫລາຍ! ໃນເບື້ອງຕົ້ນ ຄົນພາລໃນໂລກນີ້ນັ້ນ ກິນອາຫາຣດ້ວຍຄວາມຕິດໃຈໃນຣົສ ກະທຳກັມອັນເປັນບາບໄວ້ໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັຕຈຳພວກທີ່ມີຄູຖເປັນພັກສາເຫລົ່ານັ້ນ.

ພິກຂຸທັງຫລາຍ! ມີເຫລົ່າສັຕດິຣັຈສານຈຳພວກ ເກີດ ແກ່ຕາຍໃນທີ່ມືດ ກໍເຫລົ່າສັຕດິຣັຈສານຈຳພວກ ເກີດ ແກ່ ຕາຍໃນທີ່ມືດຄືອັນໃດ? ຄື ແມງມອດ ໄສ້ເດືອນ ຫລືສັຕດິຣັຈສານຈຳພວກອື່ນໆບໍ່ວ່າຊະນິດໃດໆທີ່ເກີດແກ່ຕາຍໃນທີ່ມືດ.

ພິກຂຸທັງຫລາຍ! ໃນເບື້ອງຕົ້ນ ຄົນພາລໃນໂລກນີ້ນັ້ນ ກິນອາຫາຣດ້ວຍຄວາມຕິດໃຈໃນຣົສ ກະທຳກັມອັນເປັນບາບໄວ້ໃນ

ໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັດຈຳພວກທີ່ເກີດແກ່ຕາຍໃນທີ່ມືດ.

ພິກຂຸທັງຫລາຍ! ມີເຫລົ່າສັດດິຣັຈສານຈຳພວກ ເກີດ ແກ່ຕາຍໃນນ້ຳ ກໍເຫລົ່າສັດດິຣັຈສານຈຳພວກ ເກີດ ແກ່ ຕາຍໃນນ້ຳຄືອັນໃດ? ຄື ປາ ເຕົ່າ ແຂ້ ຫລືສັດດິຣັຈສານຈຳພວກອື່ນໆບໍ່ວ່າຊະນິດໃດໆທີ່ເກີດແກ່ຕາຍໃນນ້ຳ.

ພິກຂຸທັງຫລາຍ! ໃນເບື້ອງຕົ້ນ ຄົນພາລໃນໂລກນີ້ນັ້ນ ກິນອາຫາຣດ້ວຍຄວາມຕິດໃຈໃນຣົສ ກະທຳກັມອັນເປັນບາບໄວ້ໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັດຈຳພວກທີ່ເກີດແກ່ຕາຍໃນນ້ຳ.

ພິກຂຸທັງຫລາຍ! ມີເຫລົ່າສັດດິຣັຈສານຈຳພວກເກີດແກ່ຕາຍໃນຂອງສົກກະປົກ ກໍເຫລົ່າສັດດິຣັຈສານຈຳພວກເກີດແກ່ຕາຍໃນຂອງສົກກະປົກຄືອັນໃດ? ເຫລົ່າສັດຈຳພວກທີ່ເກີດແກ່ຕາຍໃນປາເນົ່າກໍມີ ໃນຊາກສົບເນົ່າກໍມີ ໃນເຂົ້າໜົມກຸມມາສບູດກໍມີໃນນ້ຳສົກກະປົກກໍມີ ໃນຂຸມສົກກະປົກກໍມີ ຫລືສັດດິຣັຈສານຈຳພວກອື່ນໆບໍ່ວ່າຊະນິດໃດໆທີ່ເກີດແກ່ຕາຍໃນຂອງສົກກະປົກ.

ພິກຂຸທັງຫລາຍ! ໃນເບື້ອງຕົ້ນ ຄົນພາລໃນໂລກນີ້ນັ້ນ ກິນອາຫາຣດ້ວຍຄວາມຕິດໃຈໃນຣົສ ກະທຳກັມອັນເປັນບາບໄວ້ໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັຕຈຳພວກທີ່ເກີດແກ່ຕາຍໃນຂອງສົກກະປົກ.

ພິກຂຸທັງຫລາຍ! ເຮົາກ່າວເຣື່ອງກຳເນີດດິຣັຈສານໂດຍອະເນກປະຣິຍາຍພຽງເທົ່ານີ້ ຈະກ່າວເຖິງຄວາມທຸກຂ໌ໃນກຳເນີດດິຣັຈສານ ບໍ່ໄດ້ກະທຳໄດ້ງ່າຍ.

ພິກຂຸທັງຫລາຍ! ປຽບເໝືອນບຸຣຸສໂຍນແອກທີ່ມີຮູເຈາະພຽງຮູດຽວລົງໄປໃນມະຫາສະມຸທ ແອກນັ້ນຖືກລົມທາງທິສຕາເວັນອອກພັດໄປທາງທິສຕາເວັນຕົກ ຖືກລົມທາງທິສຕາເວັນຕົກພັດໄປທາງທິສຕາເວັນອອກ ຖືກລົມທາງທິສເໜືອພັດໄປທາງທິສໃຕ້ ຖືກລົມທາງທິສໃຕ້ພັດໄປທາງທິສເໜືອ ຢູ່ໃນມະຫາສະມຸທນັ້ນ ມີເຕົ່າຕາບອດ ລ່ວງໄປຮ້ອຍປີຈຶ່ງຈະຜຸດຂຶ້ນຄັ້ງໜຶ່ງ. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ເຕົ່າຕາບອດນັ້ນຈະສອດຄໍເຂົ້າໄປໃນແອກທີ່ມີຮູເຈາະພຽງຮູດຽວໄດ້ບໍ່?

ພິກຂຸເຫລົ່ານັ້ນທູລວ່າ: ຂໍ້ນັ້ນເປັນໄປບໍ່ໄດ້ເລີຍ ພຣະອົງຄ໌ຜູ້ຈະເຣີນ

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າຈະເປັນໄປໄດ້ໃນບາງຄັ້ງບາງຄາວ ກໍໂດຍລ່ວງກາລເວລາອັນຍາວນານ.

ພິກຂຸທັງຫລາຍ! ເຕົ່າຕາບອດນັ້ນຈະສອດຄໍເຂົ້າໄປໃນແອກທີ່ມີຮູເຈາະພຽງຮູດຽວໄດ້ນັ້ນ ຍັງໄວກວ່າ ເຮົາກ່າວຄວາມເປັນມະນຸສທີ່ຄົນພາລຜູ້ໄປສູ່ວິນິບາຕຄາວໜຶ່ງແລ້ວຈະໄດ້ອີກ ຍາກກວ່ານັ້ນ ຂໍ້ນັ້ນເພາະເຫຕໃດ?

ພິກຂຸທັງຫລາຍ! ເພາະຄົນພາລນັ້ນບໍ່ມີການປະພຶຕທັມ ບໍ່ມີການປະພຶຕຊອບ ບໍ່ມີການກະທຳກຸສົລ ບໍ່ມີການກະທຳບຸນຍ໌ ມີແຕ່ການກິນກັນເອງ ການບຽດບຽນຄົນອ່ອນແອ.

ພິກຂຸທັງຫລາຍ! ຄົນພາລນັ້ນແລ ຖ້າຈະມາສູ່ຄວາມເປັນມະນຸສໃນບາງຄັ້ງບາງຄາວ ບໍ່ວ່າກາລໃດໆ ໂດຍລ່ວງໄລຍະເວລາອັນຍາວນານ ກໍຍ່ອມເກີດໃນສະກຸລຕ່ຳຄື ສະກຸລຄົນຈັນທາລ ຫລືສະກຸລຄົນຈັກສານ ຫລືສະກຸລຊ່າງຣົຖ ຫລືສະກຸລຄົນຖິ້ມຂີ້ເຫຍື່ອເຫັນປານນັ້ນ ເຊິ່ງເປັນສະກຸລຍາກຈົນ ມີເຂົ້ານ້ຳແລະໂພຊະນາຫານໜ້ອຍ ມີຊີວິຕເປັນໄປຍາກລຳບາກ ເຊິ່ງເປັນສະກຸລທີ່ຈະໄດ້ຂອງກິນແລະເຄື່ອງນຸ່ງຫົ່ມໂດຍຝືດເຄືອງ ແລະເຂົາຈະມີຜິວພັນຊາມ ບໍ່ໜ້າເບິ່ງ ຕ່ຳເຕ້ຍມີໂຣຄຫລາຍ ເປັນຄົນຕາບອດແດ່ ເປັນຄົນງ້ອຍແດ່ ເປັນຄົນ

ກະຈອກແດ່ ເປັນຄົນເປ້ຍແດ່ ບໍ່ໄດ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟ ເຂົາຈະປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິວິນິບາຕ ນະຣົກ.

ພິກຂຸທັງຫລາຍ! ເໝືອນນັກເລງການພະນັນ ເພາະເຄາະຮ້າຍຄັ້ງທຳອິດເທົ່ານັ້ນ ຈຶ່ງຕ້ອງເສຍລູກແດ່ ເສຍເມຍແດ່ ເສຍສົມບັຕທຸກຢ່າງແດ່ ຍິ່ງຂຶ້ນໄປອີກ ຕ້ອງຖືກຈອງຈຳ ເຄາະຮ້າຍຂອງນັກເລງການພະນັນທີ່ຕ້ອງເສຍໄປນັ້ນ ເປັນພຽງເລັກນ້ອຍ ຄວາມເຄາະຮ້າຍອັນໃຫຍ່ຫລວງກວ່ານັ້ນ ຄືຄົນພາລນັ້ນປະພຶຕກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກນັ້ນເອງ.

ພິກຂຸທັງຫລາຍ! ນີ້ເປັນພູມຂອງຄົນພາລຄົບຖ້ວນບໍຣິບູນ *(ອະຍັງ ພິກຂະເວ ເກວະລາ ປະຣິປູຣາ ພາລະພູມີຕິ).*

ພິກຂຸທັງຫລາຍ! ລັກສະນະເຄື່ອງໝາຍ ເຄື່ອງອ້າງວ່າ ເປັນບັນດິຕຂອງບັນດິຕນີ້ມີ ໓ ຢ່າງ; ໓ ຢ່າງເປັນຢ່າງໃດ?

ພິກຂຸທັງຫລາຍ! ບັນດິຕໃນໂລກນີ້ ມັກຄິດຄວາມຄິດທີ່ດີ ມັກເວົ້າຄໍາເວົ້າທີ່ດີ ມັກກະທໍາການກະທໍາທີ່ດີ ຖ້າບັນດິຕບໍ່ເປັນຜູ້ມັກຄິດຄວາມຄິດທີ່ດີ ມັກເວົ້າຄໍາເວົ້າທີ່ດີ ມັກກະທໍາການກະທໍາທີ່ດີ ບັນດິຕພວກໃດຈະຮູ້ຈັກເຂົາໄດ້ວ່າ ຜູ້ນີ້ເປັນບັນດິຕເປັນສັປບຸຣຸສ ແຕ່ເພາະບັນດິຕມັກຄິດຄວາມຄິດທີ່ດີ ມັກເວົ້າຄໍາເວົ້າທີ່ດີ ມັກກະທໍາການກະທໍາທີ່ດີ ສະນັ້ນ ບັນດິຕທັງຫລາຍຈຶ່ງຮູ້ໄດ້ວ່າ ຜູ້ນີ້ເປັນບັນດິຕ ເປັນສັປບຸຣຸສ.

ພິກຂຸທັງຫລາຍ! ບັນດິຕນັ້ນແລ ຍ່ອມສເວີຍສຸຂໂສມະນັສ ໓ ຢ່າງໃນປັຈຈຸບັນ.

ພິກຂຸທັງຫລາຍ! ຖ້າບັນດິຕນັ່ງໃນສະພາກໍດີ ແຄມທາງຣົຖກໍດີ ແຄມທາງສາມແຍກກໍດີ ຊົນໃນທີ່ນັ້ນໆຈະເວົ້າຖ້ອຍຄໍາທີ່ພໍເໝາະພໍສົມແກ່ເຂົາ, ຖ້າບັນດິຕເປັນຜູ້ເວັ້ນຂາດຈາກການຂ້າສັຕ ເວັ້ນຂາດຈາກການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ ເວັ້ນຂາດຈາກການເວົ້າຕົວະ ເວັ້ນຂາດຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ໃນເຣື່ອງທີ່ຊົນເວົ້າຖ້ອຍຄໍາທີ່ພໍເໝາະພໍສົມແກ່ເຂົານັ້ນແລ ບັນດິຕຈະມີຄວາມຮູ້ສຶກຢ່າງນີ້ວ່າ ສິ່ງເຫລົ່ານັ້ນມີຢູ່ໃນເຮົາ ແລະເຮົາກໍປາກົຕຢູ່ໃນສິ່ງເຫລົ່ານັ້ນ

ດ້ວຍ *(ເປັນຢ່າງທີ່ເຂົາກ່າວ)* ພິກຂຸທັງຫລາຍ ບັນດິຕຍ່ອມສເວີຍສຸຂໂສມະນັສຂໍ້ທີ ໑ ດັ່ງນີ້ ໃນປັຈຈຸບັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບັນດິຕເຫັນຣາຊາທັງຫລາຍ ຈັບໂຈຣຜູ້ປະພຶຕຜິດມາແລ້ວ ສັ່ງລົງໂທສຕ່າງຊະນິດຄື:
ຕີດ້ວຍແສ້ແດ່,
ຕີດ້ວຍຫວາຍແດ່,
ຕີດ້ວຍກະບອງສັ້ນແດ່,
ມັດມືແດ່,
ມັດຕີນແດ່,
ມັດທັງມືທັງຕີນແດ່,
ຕັດຫູແດ່,
ຕັດດັງແດ່,
ຕັດທັງຫູທັງດັງແດ່,
ລົງໂທສດ້ວຍວິທີ ໝໍ້ຄ້ຽງນ້ຳມັນແດ່,
ລົງໂທສດ້ວຍວິທີ ຂອດສັງຂ໌ແດ່,
ລົງໂທສດ້ວຍວິທີ ປາກຣາຫູແດ່,
ລົງໂທສດ້ວຍວິທີ ມາລັຍໄຟແດ່,
ລົງໂທສດ້ວຍວິທີ ຄົບມືແດ່,
ລົງໂທສດ້ວຍວິທີ ລິ້ວສ່າຍແດ່,
ລົງໂທສດ້ວຍວິທີ ນຸ່ງເປືອກໄມ້ແດ່,

ລົງໂທສດ້ວຍວິທີ ຢືນກວາງແດ່,
ລົງໂທສດ້ວຍວິທີ ກ່ຽວເຫຍື່ອເບັດແດ່,
ລົງໂທສດ້ວຍວິທີ ຫລຽນກະຫາປະນະແດ່,
ລົງໂທສດ້ວຍວິທີ ແປງແສບແດ່,
ລົງໂທສດ້ວຍວິທີ ກາງວຽນແດ່,
ລົງໂທສດ້ວຍວິທີ ຕັ່ງຟາງແດ່,
ລາດດ້ວຍນ້ຳມັນຮ້ອນໆແດ່,
ໃຫ້ໝາກັດ-ຊິດແດ່,
ໃຫ້ນອນຫງາຍເທິງຫລາວທັງເປັນໆແດ່,
ຕັດຫົວດ້ວຍດາບແດ່,

ໃນຂະນະທີ່ເຫັນນັ້ນ ບັນດິຕຈະມີຄວາມຮູ້ສຶກຢ່າງນີ້ວ່າ ເພາະເຫຕແຫ່ງກັມຊົ່ວປານໃດແລ ຣາຊາທັງຫລາຍຈຶ່ງຈັບໂຈຣຜູ້ປະພຶຕຜິດມາແລ້ວ ສັ່ງລົງໂທສຕ່າງຊະນິດຄື:
ຕີດ້ວຍແສ້ແດ່,
ຕີດ້ວຍຫວາຍແດ່,
ຕີດ້ວຍກະບອງສັ້ນແດ່,
ມັດມືແດ່,
ມັດຕີນແດ່,
ມັດທັງມືທັງຕີນແດ່,
ຕັດຫູແດ່,

ຕັດດັງແດ່,
ຕັດທັງຫູທັງດັງແດ່,
ລົງໂທສດ້ວຍວິທີ ໝໍ້ຄົ້ງອນໍ້າມັນແດ່,
ລົງໂທສດ້ວຍວິທີ ຂອດສັງຂ໌ແດ່,
ລົງໂທສດ້ວຍວິທີ ປາກຣາຫູແດ່,
ລົງໂທສດ້ວຍວິທີ ມາລັຍໄຟແດ່,
ລົງໂທສດ້ວຍວິທີ ຄົບມືແດ່,
ລົງໂທສດ້ວຍວິທີ ລິ້ວສ່າຍແດ່,
ລົງໂທສດ້ວຍວິທີ ນຸ່ງເປືອກໄມ້ແດ່,
ລົງໂທສດ້ວຍວິທີ ຢືນກວາງແດ່,
ລົງໂທສດ້ວຍວິທີ ກ່ຽວເຫຍື່ອເບັດແດ່,
ລົງໂທສດ້ວຍວິທີ ຫລຽນກະຫາປະນະແດ່,
ລົງໂທສດ້ວຍວິທີ ແປງແສບແດ່,
ລົງໂທສດ້ວຍວິທີ ກາງວຽນແດ່,
ລົງໂທສດ້ວຍວິທີ ຕັ່ງຟາງແດ່,
ລາດດ້ວຍນໍ້າມັນຮ້ອນໆແດ່,
ໃຫ້ໝາກັດ-ຊິດແດ່,
ໃຫ້ນອນຫງາຍເທິງຫລາວທັງເປັນໆແດ່,
ຕັດຫົວດ້ວຍດາບແດ່.
ສິ່ງເຫລົ່ານັ້ນບໍ່ມີຢູ່ໃນເຮົາ ແລະເຮົາກໍບໍ່ປາກົຕຢູ່ໃນສິ່ງເຫລົ່ານັ້ນດ້ວຍ.

ພິກຂຸທັງຫລາຍ! ບັນດິຕຍ່ອມສເວີຍສຸຂໂສມະນັສຂໍ້ທີ ໔ ດັ່ງນີ້ໃນປັຈຈຸບັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ກັມດີທີ່ບັນດິຕກະທຳໄວ້ໃນການກ່ອນຄື ກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ຍ່ອມປົກຄຸມ ຄອບຄອງບັນດິຕຜູ້ຢູ່ເທິງຕັ່ງ ຫລືເທິງຕຽງ ຫລືນອນເທິງພື້ນດິນໃນສມັຍນັ້ນ ປຽບເໝືອນເງົາຍອດພູເຂົາໃຫຍ່ຍ່ອມປົກຄຸມ ຄອບງຳແຜ່ນດິນໃນຕອນແລງ ສັນໃດ, ພິກຂຸທັງຫລາຍ ສັນນັ້ນເໝືອນກັນແລ ກັມດີທີ່ບັນດິຕກະທຳໄວ້ໃນການກ່ອນຄື ກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ຍ່ອມປົກຄຸມ ຄອບຄອງບັນດິຕຜູ້ຢູ່ເທິງຕັ່ງ ຫລືເທິງຕຽງ ຫລືນອນເທິງພື້ນດິນໃນສມັຍນັ້ນ. ພິກຂຸທັງຫລາຍ ສມັຍນັ້ນບັນດິຕຈະມີຄວາມຮູ້ສຶກຢ່າງນີ້ວ່າ:

ເຮົາບໍ່ໄດ້ກະທຳຄວາມຊົ່ວ ບໍ່ໄດ້ກະທຳອະກຸສົລ ກະທຳແຕ່ຄວາມດີ ກະທຳແຕ່ກຸສົລ ໄດ້ກະທຳເຄື່ອງປ້ອງກັນຄວາມກົວໄວ້ ລະໂລກນີ້ໄປແລ້ວ ຈະໄປສູ່ຄະຕິຂອງຄົນທີ່ບໍ່ໄດ້ກະທຳຄວາມຊົ່ວ ບໍ່ໄດ້ກະທຳອະກຸສົລ ກະທຳແຕ່ຄວາມດີ ກະທຳແຕ່ກຸສົລ ໄດ້ກະທຳເຄື່ອງປ້ອງກັນຄວາມກົວໄວ້ ບັນດິຕນັ້ນຍ່ອມບໍ່ເສົ້າໂສກ ບໍ່ລຳບາກໃຈ ບໍ່ຮ້ອງໄຫ້ ບໍ່ທຸບເອິກຄ່ຳຄວນ ບໍ່

ເຖິງຄວາມຫລົງໄຫລ. ພິກຂຸທັງຫລາຍ ບັນດິຕຍ່ອມສເວີຍສຸຂ ໂສມະນັສຂໍ້ທີ ໓ ດັ່ງນີ້ ໃນປັຈຈຸບັນ.

ພິກຂຸທັງຫລາຍ! ບັນດິຕນັ້ນແລ ປະພຶຕກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ພິກຂຸທັງຫລາຍ! ບຸຄຄົລເມື່ອຈະກ່າວໂດຍຊອບ ຄວນກ່າວເຖິງສວັນນັ້ນແຫລະວ່າ ເປັນສະຖານທີ່ທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈໂດຍສ່ວນດຽວ ພິກຂຸທັງຫລາຍ ສຸຂນີ້ກັບສຸຂໃນສວັນປຽບທຽບກັນບໍ່ໄດ້.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພິກຂຸອົງຄ໌ໜຶ່ງໄດ້ກາຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະອົງຄ໌ຊົງສາມາດປຽບອຸປະມາໄດ້ຫລືໜໍ?

ພຣະຜູ້ມີພຣະພາຄຕຣັສວ່າ:

ສາມາດອຸປະມາໄດ້ ພິກຂຸ!

ແລ້ວຊົງຕຣັສຕໍ່ໄປວ່າ:

ພິກຂຸທັງຫລາຍ! ປຽບເໝືອນພຣະເຈົ້າຈັກກະພັຕຊົງປະກອບດ້ວຍແກ້ວ ໗ ປະການ ແລະຄວາມສຳເຣັຈຜົລ ໔ ຢ່າງ ຈຶ່ງໄດ້ສເວີຍສຸຂໂສມະນັສອັນມີສິ່ງປະກອບນັ້ນເປັນເຫຕ. ພຣະເຈົ້າຈັກກະພັຕຊົງປະກອບດ້ວຍແກ້ວ ໗ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພຣະຣາຊາມະຫາກະສັຕໃນໂລກນີ້ ຜູ້ຊົງໄດ້ມູຣະທາພິເສກແລ້ວ ຊົງສົງສະໜານພຣະສຽນ ຊົງຮັກສາອຸໂປສົຖໃນດິຖີທີ ໑໕ ເຊິ່ງວັນນັ້ນເປັນວັນອຸໂປສົຖ ເມື່ອປະທັບຢູ່ໃນມະຫາປາສາທຊັ້ນເທິງ ຍ່ອມປາກົຕຈັກແກ້ວທິພມີກຳພັນໜຶ່ງ ພ້ອມດ້ວຍກົງແລະດຸມ ບໍຣິບູນດ້ວຍອາການທຸກຢ່າງ ຄັນທອດພຣະເນຕແລ້ວໄດ້ມີພຣະຣາຊະດຳຣິວ່າ ກໍເຮົາໄດ້ສະດັບມາດັ່ງນີ້ວ່າ ພຣະຣາຊາພຣະອົງຄ໌ໃດ ຜູ້ຊົງໄດ້ມູຣະທາພິເສກແລ້ວ ຊົງສົງສະໜານພຣະສຽນ ຊົງຮັກສາອຸໂປສົຖໃນດິຖີທີ ໑໕ ເຊິ່ງວັນນັ້ນເປັນວັນອຸໂປສົຖ ເມື່ອປະທັບຢູ່ໃນມະຫາປາສາທຊັ້ນເທິງ ຍ່ອມປາກົຕຈັກແກ້ວທິພມີກຳພັນໜຶ່ງ ພ້ອມດ້ວຍກົງແລະດຸມ ບໍຣິບູນດ້ວຍອາການທຸກຢ່າງ ພຣະຣາຊາພຣະອົງຄ໌ນັ້ນຍ່ອມເປັນພຣະເຈົ້າຈັກກະພັຕ ເຮົາເປັນພຣະເຈົ້າຈັກກະພັຕຫລືໜໍ?

ພິກຂຸທັງຫລາຍ! ຈາກນັ້ນ ພຣະອົງຄ໌ສະເດັຈລຸກຈາກຣາຊະອາສນະຊົງຈັບພຣະເຕົ້ານໍ້າດ້ວຍພຣະຫັຕຖ໌ຊ້າຍ ຊົງຫລັ່ງຣົດຈັກແກ້ວດ້ວຍພຣະຫັຕຖ໌ຂວາ ຕຣັສສັ່ງວ່າ ຈົ່ງພັດຜັນໄປເຖີດຈັກແກ້ວຜູ້ຈະເຣີນ ຈັກແກ້ວຜູ້ຈະເຣີນຈົ່ງພິຊິຕໃຫ້ຍິ່ງເຖີດ. ລໍາດັບນັ້ນ ຈັກແກ້ວນັ້ນກໍພັດຜັນໄປທາງທິສຕາເວັນອອກ ພຣະເຈົ້າຈັກກະພັຕພ້ອມດ້ວຍຈະຕຸຣົງຄິນີເສນາກໍສະເດັຈຕາມໄປ ຈັກແກ້ວປະດິສຖານຢູ່ໃນປະເທສໃດ ພຣະເຈົ້າຈັກກະພັຕກໍສະເດັຈເຂົ້າປະທັບຢູ່ໃນປະເທສນັ້ນ ພ້ອມດ້ວຍຈະຕຸຣົງຄິນີເສນາ ບັນດາພຣະຣາຊາທີ່ເປັນປະຕິປັກໃນທິສຕາເວັນອອກເຂົ້າມາເຝົ້າພຣະເຈົ້າຈັກກະພັຕແລ້ວທູລຢ່າງນີ້ວ່າ ເຊີນສະເດັຈເຖີດ ມະຫາຣາຊ ພຣະອົງຄ໌ສະເດັຈມາດີແລ້ວ ມະຫາຣາຊຂ້າແຕ່ມະຫາຣາຊ ແຜ່ນດິນນີ້ເປັນຂອງພຣະອົງຄ໌ ຂໍພຣະອົງຄ໌ຈົ່ງສັ່ງກາຣເຖີດ. ພຣະເຈົ້າຈັກກະພັຕຕຣັສສັ່ງຢ່າງນີ້ວ່າ:

ພວກທ່ານບໍ່ຄວນຂ້າສັຕ,

ບໍ່ຄວນຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້,

ບໍ່ຄວນປະພຶຕຜິດໃນກາມທັງຫລາຍ,

ບໍ່ຄວນເວົ້າຕົວະ,

ບໍ່ຄວນດື່ມນໍ້າເມົາ

ແລະທ່ານທັງຫລາຍຈົ່ງປົກຄອງບ້ານເມືອງຕາມສະພາບທີ່ເປັນຈິງເຖີດ.

ບັນດາພຣະຣາຊາທີ່ເປັນປະຕິປັກໃນທິສຕາເວັນອອກເຫລົ່ານັ້ນ ແລ ໄດ້ກາຍເປັນຜູ້ສະໜັບສະໜຸນພຣະເຈົ້າຈັກກະພັດ.

ຈາກນັ້ນ ຈັກແກ້ວນັ້ນໄດ້ພັດຜັນໄປຮອດສະມຸທດ້ານທິສຕາເວັນອອກ ແລ້ວກັບຂຶ້ນພັດຜັນໄປທາງທິສໃຕ້ ໆລໆ ພັດຜັນໄປຮອດສະມຸທດ້ານທິສໃຕ້ ແລ້ວກັບຂຶ້ນພັດຜັນໄປທາງທິສຕາເວັນຕົກ ໆລໆ ພັດຜັນໄປຮອດສະມຸທດ້ານທິສຕາເວັນຕົກ ແລ້ວກັບຂຶ້ນພັດຜັນໄປທາງທິສເໜືອ ພຣະເຈົ້າຈັກກະພັດພ້ອມດ້ວຍຈະຕຸຣົງຄິນີເສນາກໍສະເດັຈຕາມໄປ ຈັກແກ້ວປະດິສຖານຢູ່ໃນປະເທສໃດ ພຣະເຈົ້າຈັກກະພັດກໍສະເດັຈເຂົ້າປະທັບຢູ່ໃນປະເທສນັ້ນ ພ້ອມດ້ວຍຈະຕຸຣົງຄິນີເສນາ ບັນດາພຣະຣາຊາທີ່ເປັນປະຕິປັກໃນທິສເໜືອ ເຂົ້າມາເຝົ້າພຣະເຈົ້າຈັກກະພັດແລ້ວທູລຢ່າງນີ້ວ່າ ເຊີນສະເດັຈເຖີດ ມະຫາຣາຊ ພຣະອົງຄ໌ສະເດັຈມາດີແລ້ວ ມະຫາຣາຊ ຂ້າແຕ່ມະຫາຣາຊ ແຜ່ນດິນນີ້ເປັນຂອງພຣະອົງຄ໌ ຂໍພຣະອົງຄ໌ຈົ່ງສັ່ງກາຣເຖີດ. ພຣະເຈົ້າຈັກກະພັດຕຣັສສັ່ງຢ່າງນີ້ວ່າ:
ພວກທ່ານບໍ່ຄວນຂ້າສັຕ,
ບໍ່ຄວນຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້,
ບໍ່ຄວນປະພຶຕຜິດໃນກາມທັງຫລາຍ,
ບໍ່ຄວນເວົ້າຕົວະ,
ບໍ່ຄວນດື່ມນ້ຳເມົາ

ແລະທ່ານທັງຫລາຍຈົ່ງປົກຄອງບ້ານເມືອງຕາມສະພາບທີ່ເປັນຈິງເຖີດ. ບັນດາພຣະຣາຊາທີ່ເປັນປະຕິປັກໃນທິສເໜືອເຫລົ່ານັ້ນແລ ໄດ້ກາຍເປັນຜູ້ສະໜັບສະໜູນພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ຄັ້ງນັ້ນແລ ຈັກແກ້ວນັ້ນພິຊິຕຍິ່ງຕລອດແຜ່ນດິນມີສະມຸທເປັນຂອບເຂຕ ແລ້ວກັບມາສູ່ຣາຊະທານີເດີມປະດິສຖານຢູ່ເປັນເໝືອນລີ່ມສລັກພຣະທະວາຣພາຍໃນພຣະຣາຊະວັງຂອງພຣະເຈົ້າຈັກກະພັຕ ກະທຳໃຫ້ງົດງາມຢ່າງໝັ້ນຄົງຢູ່. ພິກຂຸທັງຫລາຍ ຈັກແກ້ວຍ່ອມປາກົຕເຫັນປານນີ້ແກ່ພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ຊ້າງແກ້ວຍ່ອມປາກົຕແກ່ພຣະເຈົ້າຈັກກະພັຕ ເປັນຊ້າງຫລວງຊື່ອຸໂປສົຖ ເຜືອກທົ່ວສັພພະກາຍ ມີທີ່ຕັ້ງອະວັຍວະທັງເຈັດຖືກຕ້ອງດີ ມີລິທເຫາະໄດ້ ເມື່ອພຣະເຈົ້າຈັກກະພັຕທອດພຣະເນຕເຫັນແລ້ວ ຍ່ອມມີພຣະຣາຊະຫະລະທັຍໂປດປານວ່າ ທ່ານຜູ້ຈະເຣີນ ຖ້າສຳເຣັຈການຝຶກຈະເປັນຍານຊ້າງທີ່ຈະເຣີນໜໍ. ຕໍ່ມາ ຊ້າງແກ້ວນັ້ນ ກໍສຳເຣັຈການຝຶກເໝືອນຊ້າງອາຊາໄນຕົວຈະເຣີນ ທີ່ຝຶກດີເປັນເວລານານ.

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັຕນັ້ນ ເມື່ອຈະຊົງທົດລອງຊ້າງແກ້ວນັ້ນ ຈຶ່ງສະເດັຈຂຶ້ນຊົງໃນເວລາເຊົ້າ ສະເດັຈວຽນຮອບປະຖະພີມີສະມຸທເປັນຂອບເຂຕ ສະເດັຈກັບມາຣາຊະທານີເດີມ ຊົງສເວີຍພຣະກະຍາຫາຣເຊົ້າໄດ້ທັນເວລາ. ພິກຂຸທັງຫລາຍ ຊ້າງແກ້ວຍ່ອມປາກົຕເຫັນປານນີ້ແກ່ພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ມ້າແກ້ວຍ່ອມປາກົຕແກ່ພຣະເຈົ້າຈັກກະພັຕ ເປັນອັສສະວະຣາຊຊື່ວະລາຫົກຂາວປອກ ຫົວດຳເໝືອນກາ ເສັ້ນຜົມງົດງາມເໝືອນຫຍ້າປ້ອງມີລິທເຫາະໄດ້ ເມື່ອພຣະເຈົ້າຈັກກະພັຕທອດພຣະເນຕເຫັນແລ້ວ ຍ່ອມມີພຣະຣາຊະຫະລະທັຍໄປດປານວ່າ ທ່ານຜູ້ຈະເຣີນ ຖ້າສຳເຣັຈການຝຶກຈະເປັນຍານມ້າທີ່ຈະເຣີນໜໍ. ຕໍ່ມາມ້າແກ້ວນັ້ນ ກໍສຳເຣັຈການຝຶກເໝືອນມ້າອາຊາໄນຕົວຈະເຣີນທີ່ຝຶກດີເປັນເວລານານ.

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັຕນັ້ນ ເມື່ອຈະຊົງທົດລອງມ້າແກ້ວນັ້ນ ຈຶ່ງສະເດັຈຂຶ້ນຊົງໃນເວລາເຊົ້າ ສະເດັຈວຽນຮອບປະຖະພີມີສະມຸທເປັນຂອບເຂຕ ສະເດັຈກັບມາຣາຊະທານີເດີມ ຊົງສເວີຍພຣະກະຍາຫາຣເຊົ້າໄດ້

ທັນເວລາ. ພິກຂຸທັງຫລາຍ ມ້າແກ້ວຍ່ອມປາກົຕເຫັນປານນີ້ ແກ່ພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ມະນີແກ້ວຍ່ອມປາກົຕ ແກ່ພຣະເຈົ້າຈັກກະພັຕ ເປັນແກ້ວໄພທູຣຍ໌ ງາມຢ່າງຍິ່ງ ແປດຫລ່ຽມ ອັນເຈຍຣະໄນໄວ້ຢ່າງດີ ມີແສງສະວ່າງແຜ່ໄປ ໂຍຊນ໌ ໑ ໂດຍຮອບ.

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັຕ ເມື່ອຈະຊົງທົດລອງແກ້ວມະນີນັ້ນ ຈຶ່ງສັ່ງໃຫ້ຈະຕຸຣົງຄິນີເສນາ ຍົກມະນີຂຶ້ນເປັນຍອດທຸງ ແລ້ວເຄື່ອນພົລໄປໃນຄວາມມືດທຶບ ຂອງຣາຕຣີ ຊາວບ້ານທີ່ຢູ່ຮອບໆ ພາກັນປະກອບການງານ ດ້ວຍແສງສະວ່າງນັ້ນ ສໍາຄັນວ່າ ເປັນກາງເວັນ. ພິກຂຸ ທັງຫລາຍ ມະນີແກ້ວຍ່ອມປາກົຕເຫັນປານນີ້ແກ່ພຣະເຈົ້າ ຈັກກະພັຕ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ນາງແກ້ວຍ່ອມປາກົຕ ແກ່ພຣະເຈົ້າຈັກກະພັຕ ນາງແກ້ວນັ້ນເປັນຜູ້ມີຮູປງາມ ໜ້າ ເບິ່ງ ໜ້າເຫລື້ອມໃສ ປະກອບດ້ວຍຄວາມງາມແຫ່ງຜິວພັນ ຢ່າງຍິ່ງ ບໍ່ສູງຫລາຍ ບໍ່ຕໍ່າຫລາຍ ບໍ່ຈ່ອຍຫລາຍ ບໍ່ອ້ວນ ຫລາຍ ບໍ່ດໍາຫລາຍ ບໍ່ຂາວຫລາຍ ລ່ວງຜິວພັນຂອງມະນຸສ

ແຕ່ຍັງບໍ່ເຖິງຜິວພັນທິພ ມີສັມຜັສທາງກາຍເໝືອນຢ່າງວ່າ ສັມຜັສປຸຍນຸ່ນຫລືປຸຍຝ້າຍ ນາງແກ້ວນັ້ນມີໂຕອຸ່ນໃນຄາວໜາວ ມີໂຕເຢັນໃນຄາວຮ້ອນ ມີກິ່ນດັ່ງກິ່ນຈັນທ໌ຟຸ້ງໄປແຕ່ກາຍ ມີກິ່ນດັ່ງກິ່ນອຸບົນຟຸ້ງໄປແຕ່ປາກ ນາງແກ້ວນັ້ນມີປົກກະຕິຕື່ນກ່ອນນອນທີຫລັງ ຄອຍຟັງຄຳສັ່ງໃຊ້ ປະພຶຕຖືກພຣະທັຍ ທູລປຣາສັຍເປັນທີ່ໂປດປານຕໍ່ພຣະເຈົ້າຈັກກະພັຕ ແລະບໍ່ປະພຶຕລ່ວງພຣະເຈົ້າຈັກກະພັຕແມ່ນແຕ່ທາງໃຈ ເຫຕໃດຈະປະພຶຕລ່ວງທາງກາຍໄດ້. ພິກຂຸທັງຫລາຍ ນາງແກ້ວຍ່ອມປາກົຕເຫັນປານນີ້ແກ່ພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ຄະຫະບໍດີແກ້ວຍ່ອມປາກົຕແກ່ພຣະເຈົ້າຈັກກະພັຕ ຄະຫະບໍດີແກ້ວນັ້ນເປັນຜູ້ມີຈັກຂຸເໝືອນດັ່ງທິພ ເກີດແຕ່ວິບາກຂອງກັມປາກົຕ ເຊິ່ງເປັນເຫຕໃຫ້ມອງເຫັນຊັພຍ໌ທັງທີ່ມີເຈົ້າຂອງແລະບໍ່ມີເຈົ້າຂອງໄດ້ ເຂົາເຂົ້າເຝົ້າພຣະເຈົ້າຈັກກະພັຕແລ້ວກຣາບທູລຢ່າງນີ້ວ່າ ຂໍເດຊະພຣະອົງຄ໌ຈົ່ງຊົງເປັນຜູ້ຂວນຂວາຍນ້ອຍເຖີດ ຂ້ານ້ອຍຈັກກະທຳໜ້າທີ່ການຄັງໃຫ້ພຣະອົງຄ໌.

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັຕເມື່ອຈະຊົງທົດລອງຄະຫະບໍດີແກ້ວນັ້ນ ຈຶ່ງສະເດັຈລົງ

ເຮືອພຣະທີ່ນັ່ງໃຫ້ລອຍລ່ອງກະແສນໍ້າກາງແມ່ນໍ້າຄົງຄາ ແລ້ວຕຣັສສັ່ງກັບຄະຫະບໍດີດັ່ງນີ້ວ່າ:

ດູກ່ອນຄະຫະບໍດີ! ເຮົາຕ້ອງການເງິນແລະຄໍາ

ຄະຫະບໍດີແກ້ວກຣາບທູລວ່າ:

ຂ້າແຕ່ມະຫາຣາຊ! ຖ້າເຊັ່ນນັ້ນໂປດຫຼບເຮືອເຂົ້າຝັ່ງຂ້າງໜຶ່ງເຖີດ.

ພຣະເຈົ້າຈັກກະພັຕຕຣັສວ່າ:

ເຮົາຕ້ອງການເງິນແລະຄໍາບ່ອນນີ້ແຫລະ!

ທັນໃດນັ້ນ ຄະຫະບໍດີແກ້ວຈຶ່ງເອົາມືທັງສອງຢ່ອນລົງໃນນໍ້າ ຍົກໝໍ້ເຕັມໄປດ້ວຍເງິນແລະຄໍາຂຶ້ນມາ ແລ້ວກຣາບທູລພຣະເຈົ້າຈັກກະພັຕດັ່ງນີ້ວ່າ:

ຂ້າແຕ່ມະຫາຣາຊ! ພໍຫລືຍັງພຽງເທົ່ານີ້ ໃຊ້ໄດ້ຫລືຍັງພຽງເທົ່ານີ້ ບູຊາໄດ້ຫລືຍັງພຽງເທົ່ານີ້?

ພຣະເຈົ້າຈັກກະພັຕຈຶ່ງຕຣັສສັ່ງຢ່າງນີ້ວ່າ:

ດູກ່ອນຄະຫະບໍດີ! ພໍແລ້ວ ໃຊ້ໄດ້ແລ້ວ ບູຊາໄດ້ແລ້ວພຽງເທົ່ານີ້. ພິກຂຸທັງຫລາຍ ຄະຫະບໍດີແກ້ວຍ່ອມປາກົຕເຫັນປານນີ້ແກ່ພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ປະຣິນາຍົກແກ້ວຍ່ອມປາກົຕແກ່ພຣະເຈົ້າຈັກກະພັຕ ປະຣິນາຍົກນັ້ນເປັນບັນດິຕສລາດ ມີປັນຍາ ສາມາດຖວາຍຂໍ້ແນະນຳໃຫ້ພຣະອົງຄ໌ຊົງບຳຣຸງຜູ້ທີ່ຄວນບຳຣຸງ ຊົງຖອດຖອນຜູ້ທີ່ຄວນຖອດຖອນ ຊົງແຕ່ງຕັ້ງຜູ້ທີ່ຄວນແຕ່ງຕັ້ງ ເຂົ້າໄປເຝົ້າພຣະເຈົ້າຈັກກະພັຕແລ້ວກຣາບທູລວ່າ:

ຂໍເດຊະ! ຂໍພຣະອົງຄ໌ຈົ່ງເປັນຜູ້ຂວນຂວາຍນ້ອຍເຖີດ ຂ້ານ້ອຍຈັກສັ່ງການຖວາຍ.

ພິກຂຸທັງຫລາຍ! ປະຣິນາຍົກແກ້ວຍ່ອມປາກົຕເຫັນປານນີ້ແກ່ພຣະເຈົ້າຈັກກະພັຕ.

ພິກຂຸທັງຫລາຍ! ພຣະເຈົ້າຈັກກະພັຕຍ່ອມຊົງປະກອບດ້ວຍແກ້ວ ໗ ປະການນີ້ແລ.

ພິກຂຸທັງຫລາຍ! ພຣະເຈົ້າຈັກກະພັຕຍ່ອມຊົງປະກອບດ້ວຍ ຄວາມສຳເຣັຈຜົລ ໔ ຢ່າງເປັນຢ່າງໃດ?

ພິກຂຸທັງຫລາຍ! ພຣະເຈົ້າຈັກກະພັຕໃນໂລກນີ້ ຍ່ອມຊົງພຣະ ສິຣິໂສມງົດງາມ ໜ້າເບິ່ງ ໜ້າເຫລື້ອມໃສ ປະກອບດ້ວຍ ຄວາມງາມແຫ່ງພຣະສະວີວັນຢ່າງຍິ່ງເກີນມະນຸສອື່ນໆ. ພິກຂຸ ທັງຫລາຍ ພຣະເຈົ້າຈັກກະພັຕຊົງປະກອບດ້ວຍຄວາມສຳ ເຣັຈຜົລຂໍ້ທີ ໑ ດັ່ງນີ້.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພຣະເຈົ້າຈັກກະພັຕຍ່ອມ ຊົງພຣະຊົນມາຍຸຍືນ ຊົງດຳຣົງຢູ່ນານເກີນມະນຸສອື່ນໆ. ພິກຂຸ ທັງຫລາຍ ພຣະເຈົ້າຈັກກະພັຕຊົງປະກອບດ້ວຍຄວາມສຳ ເຣັຈຜົລຂໍ້ທີ ໔ ດັ່ງນີ້.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພຣະເຈົ້າຈັກກະພັຕຍ່ອມ ເປັນຜູ້ມີພຣະໂຣຄາພາທໜ້ອຍ ບໍ່ຊົງລຳບາກ ຊົງປະກອບ ດ້ວຍພຣະເຕໂຊທາຕຍ່ອຍພຣະກະຍາຫາຣສະໝ່ຳສະເໝີ ບໍ່ ເຢັນຫລາຍ ບໍ່ຮ້ອນຫລາຍ ເກີນມະນຸສອື່ນໆ. ພິກຂຸທັງຫລາຍ ພຣະເຈົ້າຈັກກະພັຕຊົງປະກອບດ້ວຍຄວາມສຳເຣັຈຜົລຂໍ້ທີ ๓ ດັ່ງນີ້.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພຣະເຈົ້າຈັກກະພັຕຍ່ອມຊົງເປັນທີ່ຮັກໃຄ່ພໍໃຈຂອງພຣາມແລະຄະຫະບໍດີເໝືອນບິດາເປັນທີ່ຮັກໃຄ່ພໍໃຈຂອງບຸຕ ສັນນັ້ນ, ພຣາມແລະຄະຫະບໍດີກໍຊົງເປັນທີ່ໂປດປານ ພໍພຣະຣາຊະຫະລະທັຍຂອງພຣະເຈົ້າຈັກກະພັຕ ເໝືອນບຸຕເປັນທີ່ຮັກໃຄ່ພໍໃຈຂອງບິດາ ສັນນັ້ນ.

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັຕພ້ອມດ້ວຍຈະຕຸຣົງຄິນີເສນາອອກປະພາສພຣະຣາຊະອຸທະຍານ ທັນໃດນັ້ນ ພຣາມແລະຄະຫະບໍດີເຂົ້າໄປເຝົ້າພຣະອົງຄ໌ ແລ້ວກຣາບທູລຢ່າງນີ້ວ່າ:

ຂໍເດຊະ! ຂໍພຣະອົງຄ໌ຢ່າຮີບດ່ວນ ໂປດສະເດັຈໂດຍອາການທີ່ພວກຂ້ານ້ອຍໄດ້ຊົມພຣະປາຣະມີນານໆເຖີດ.

ພຣະເຈົ້າຈັກກະພັຕກໍຊົງຕຣັສສັ່ງສາຣະຖີວ່າ ດູກ່ອນສາຣະຖີທ່ານຢ່າຮີບດ່ວນ ຈົ່ງຂັບໄປໂດຍອາການທີ່ເຮົາໄດ້ຊົມບັນດາພຣາມແລະຄະຫະບໍດີນານໆເຖີດ. ພິກຂຸທັງຫລາຍພຣະເຈົ້າຈັກກະພັຕຊົງປະກອບດ້ວຍຄວາມສຳເຣັຈຜົລຂໍ້ທີ ໔ດັ່ງນີ້.

ພິກຂຸທັງຫລາຍ! ພຣະເຈົ້າຈັກກະພັດຍ່ອມຊົງປະກອບດ້ວຍຄວາມສຳເຣັຈຜົລ ໔ ຢ່າງນີ້ແລ.

ພິກຂຸທັງຫລາຍ! ພວກເຈົ້າຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ພຣະເຈົ້າຈັກກະພັດຊົງປະກອບດ້ວຍແກ້ວ ໗ ປະການ ແລະຄວາມສຳເຣັຈຜົລ ໔ ຢ່າງດັ່ງນີ້ ຍ່ອມສເວີຍສຸຂໂສມະນັສອັນມີສິ່ງປະກອບນັ້ນເປັນເຫຕຫລືໜໍ?

ພິກຂຸເຫລົ່ານັ້ນກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະເຈົ້າຈັກກະພັດຊົງປະກອບດ້ວຍແກ້ວປະການດຽວ ກໍຊົງສເວີຍສຸຂໂສມະນັສອັນມີສິ່ງປະກອບນັ້ນເປັນເຫຕໄດ້ ຈະກ່າວຫຍັງເຖິງແກ້ວ ໗ ປະການແລະຄວາມສຳເຣັຈຜົລ ໔ ຢ່າງໜໍ.

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄຊົງຢິບແຜ່ນຫີນຍ່ອມໆຂະໜາດເທົ່າຝາມື ແລ້ວຕຣັສຖາມພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ແຜ່ນຫີນຍ່ອມໆ ຂະໜາດເທົ່າຝາມືທີ່ເຮົາຖືນີ້ກັບພູເຂົາຫລວງຫິມະພານ ອັນໃດຈະໃຫຍ່ກວ່າກັນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ແຜ່ນຫີນຍ່ອມໆ ຂະໜາດເທົ່າຝາພຣະຫັຕຖ໌ທີ່ພຣະອົງຄ໌ຊົງຖືນັ້ນມີປະມານນ້ອຍຫລາຍປຽບທຽບກັບພູເຂົາຫລວງຫິມະພານແລ້ວ ຍ່ອມບໍ່ເຖິງເຊິ່ງການນັບ ຍ່ອມບໍ່ເຖິງພຽງສ່ວນແຫ່ງສ້ຽວ ຍ່ອມບໍ່ເຖິງເຊິ່ງການປຽບທຽບໄດ້.

ພິກຂຸທັງຫລາຍ! ສັນນັ້ນເໝືອນກັນ ພຣະເຈົ້າຈັກກະພັຕນັ້ນຊົງປະກອບດ້ວຍແກ້ວ ໗ ປະການ ແລະຄວາມສຳເຣັຈຜົລ ໔ ຢ່າງ ຍ່ອມໄດ້ສເວີຍສຸຂໂສມະນັສອັນມີສິ່ງປະກອບນັ້ນເປັນເຫຕ, ສຸຂໂສມະນັສນັ້ນເມື່ອປຽບທຽບກັບສຸຂອັນເປັນທິພແລ້ວຍ່ອມບໍ່ເຖິງເຊິ່ງການນັບ ຍ່ອມບໍ່ເຖິງພຽງສ່ວນແຫ່ງສ້ຽວ ຍ່ອມບໍ່ເຖິງເຊິ່ງການປຽບທຽບໄດ້.

ພິກຂຸທັງຫລາຍ! ບັນດິຕນັ້ນແລ ຖ້າມາສູ່ຄວາມເປັນມະນຸສໃນບາງຄັ້ງບາງຄາວ ບໍ່ວ່າການໃດໆ ໂດຍລ່ວງໄລຍະການນານຍ່ອມເກີດໃນສະກຸລສູງຄື ສະກຸລກະສັຕມະຫາສາລ ຫລືສະກຸລພຣາມມະຫາສາລ ຫລືສະກຸລຄະຫະບໍດີມະຫາສາລ ເຫັນປານນັ້ນ ອັນເປັນສະກຸລຮັ່ງມີ ມີຊັພຍ໌ຫລາຍ ມີໂພຄະຫລາຍມີຄຳແລະເງິນ ອຸປະກອນເຄື່ອງປື້ມໃຈ ແລະຊັພຍ໌ທັນຍາຫານຢ່າງພຽງພໍ ແລະເຂົາຈະເປັນຜູ້ມີຮູປງາມ ໜ້າເບິ່ງ ໜ້າເຫລື້ອມໃສ ປະກອບດ້ວຍຄວາມງາມແຫ່ງຜິວພັນຢ່າງຍິ່ງ ມີ

ປົກກະຕິໄດ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາສັຍ ແລະປະທີບໂຄມໄຟ ເຂົາຈະປະພຶຕກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ພິກຂຸທັງຫລາຍ! ເໝືອນນັກເລງການພະນັນ ເພາະສວຍເອົາໄຊຊະນະໄດ້ຄັ້ງທຳອິດເທົ່ານັ້ນ ຈຶ່ງບັນລຸໂພຄະສົມບັຕມາກມາຍ ການສວຍເອົາໄຊຊະນະຂອງນັກເລງການພະນັນທີ່ບັນລຸໂພຄະສົມບັຕມາກມາຍໄດ້ນັ້ນແລ ເປັນພຽງເລັກນ້ອຍ ທີ່ແທ້ການສວຍເອົາໄຊຊະນະອັນໃຫຍ່ຫລວງກວ່ານັ້ນຄື ການສວຍເອົາໄຊຊະນະທີ່ບັນດິຕນັ້ນປະພຶຕກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນນັ້ນເອງ.

ພິກຂຸທັງຫລາຍ! ນີ້ຄືພູມຂອງບັນດິຕຄົບຖ້ວນບໍຣິບູນ.

ພຣະຜູ້ມີພຣະພາຄໄດ້ຕຣັສພາສິຕນີ້ແລ້ວ ພິກຂຸເຫລົ່ານັ້ນຕ່າງຊື່ນຊົມຍິນດີພຣະພາສິຕຂອງພຣະຜູ້ມີພຣະພາຄແລ.

---

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໔໔໐-໔໕໔/໔໓໗-໕໐໘*



## ທັມທີ່ເປັນໄປເພື່ອບຽດບຽນຕົນ
## ເປັນໄປເພື່ອບຽດບຽນຜູ້ອື່ນ,
## ທັງເປັນໄປເພື່ອບຽດບຽນຕົນແລະຄົນອື່ນ
## ທັງສອງຝ່າຍ

ພິກຂຸທັງຫລາຍ! ທັມ ໓ ປະການີ້ ເປັນໄປເພື່ອບຽດບຽນຕົນ ເປັນໄປເພື່ອບຽດບຽນຜູ້ອື່ນ, ທັງເປັນໄປເພື່ອບຽດບຽນຕົນແລະຄົນອື່ນທັງສອງຝ່າຍ; ທັມ ໓ ປະການເປັນຢ່າງໃດ? ຄື:

**ກາຍທຸຈະຣິຕ,**
**ວະຈີທຸຈະຣິຕ,**
**ມະໂນທຸຈະຣິຕ,**

ພິກຂຸທັງຫລາຍ! ທັມ ໓ ປະການນີ້ແລ ເປັນໄປເພື່ອບຽດບຽນຕົນ ເປັນໄປເພື່ອບຽດບຽນຜູ້ອື່ນ, ທັງເປັນໄປເພື່ອບຽດບຽນຕົນແລະຄົນອື່ນທັງສອງຝ່າຍ.

ພິກຂຸທັງຫລາຍ! ທັມ ໓ ປະການນີ້ ບໍ່ເປັນໄປເພື່ອບຽດບຽນຕົນ ບໍ່ເປັນໄປເພື່ອບຽດບຽນຜູ້ອື່ນ, ທັງບໍ່ເປັນໄປເພື່ອບຽດບຽນຕົນແລະຄົນອື່ນທັງສອງຝ່າຍ; ທັມ ໓ ປະການເປັນຢ່າງໃດ? ຄື: **ກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ**.

ພິກຂຸທັງຫລາຍ! ທັມ ໓ ປະການນີ້ແລ ບໍ່ເປັນໄປເພື່ອບຽດບຽນຕົນ ບໍ່ເປັນໄປເພື່ອບຽດບຽນຜູ້ອື່ນ, ທັງບໍ່ເປັນໄປເພື່ອບຽດບຽນຕົນແລະຄົນອື່ນທັງສອງຝ່າຍ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໑໐໗/໔໕໖*

ຖ້າພວກເຈົ້າທັງຫລາຍຢ້ານກົວຕໍ່ຄວາມທຸກຂ໌
ຖ້າຄວາມທຸກຂ໌ບໍ່ເປັນທີ່ຮັກຂອງພວກເຈົ້າ
ທັງຫລາຍແລ້ວ ພວກເຈົ້າທັງຫລາຍຢ່າໄດ້
ກະທຳບາບກັມທັງໃນທີ່ແຈ້ງຫລືໃນທີ່ລັບເລີຍ
ຖ້າພວກເຈົ້າທັງຫລາຍຈະກະທຳຫລືກະທຳຢູ່
ເຊິ່ງບາບກັມແລ້ວນັ້ນ ພວກເຈົ້າທັງຫລາຍເຖິງ
ຈະເຫາະໜີໄປກໍຍ່ອມບໍ່ພົ້ນໄປຈາກ
ຄວາມທຸກຂ໌.

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະ
ກະ-ສຸຕຕະນິບາຕ ໒໕/໑໐໗/໑໑໕*



# ອະສັປປຸຣຸສ ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ ສັປປຸຣຸສ ສັປປຸຣຸສຍິ່ງກວ່າສັປປຸຣຸສ

ພິກຂຸທັງຫລາຍ! ເຮົາຈັກສະແດງອະສັປປຸຣຸສ *(ຄົນຊົ່ວ)*,
ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ *(ຄົນຊົ່ວຍິ່ງກວ່າຄົນຊົ່ວ)*,
ສັປປຸຣຸສ *(ຄົນດີ)*,
ແລະສັປປຸຣຸສຍິ່ງກວ່າສັປປຸຣຸສ *(ຄົນດີຍິ່ງກວ່າຄົນດີ)*,
ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສ ຢ່າງນີ້ວ່າ:

ພິກຂຸທັງຫລາຍ! ກໍອະສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ, ລັກຊັພຍ໌, ປະພຶຕຜິດໃນກາມທັງຫລາຍ, ເວົ້າຕົວະ, ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍອະສັປບຸຣຸສຍິ່ງກວ່າອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ຂ້າສັຕ ແລະຊັກຊວນຜູ້ອື່ນໃນການຂ້າສັຕອີກດ້ວຍ, ຕົນເອງເປັນຜູ້ລັກຊັພຍ໌ ແລະຊັກຊວນຜູ້ອື່ນໃນການລັກຊັພຍ໌ອີກດ້ວຍ, ຕົນເອງເປັນຜູ້ປະພຶຕຜິດໃນກາມທັງຫລາຍ ແລະຊັກຊວນຜູ້ອື່ນໃນການປະພຶຕຜິດໃນກາມທັງຫລາຍອີກດ້ວຍ, ຕົນເອງເປັນຜູ້ເວົ້າຕົວະ ແລະຊັກຊວນຜູ້ອື່ນໃນການເວົ້າຕົວະອີກດ້ວຍ, ຕົນເອງເປັນຜູ້ເສພສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ແລະຊັກຊວນຜູ້ອື່ນໃນການເສພສຸຣາເມຣັຍ

ແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ງົດເວັ້ນຈາກການຂ້າສັຕ, ງົດເວັ້ນຈາກການລັກຊັພຍ໌, ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ງົດເວັ້ນຈາກການເວົ້າຕົວະ, ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສຍິ່ງກວ່າສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ງົດເວັ້ນຈາກການຂ້າສັຕ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການຂ້າສັຕອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການລັກຊັພຍ໌ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການລັກຊັພຍ໌ອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າຕົວະ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຕົວະອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ແລະຊັກຊວນຜູ້ອື່ນໃນການງົດເວັ້ນ

ຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສຍິ່ງກວ່າສັປບຸຣຸສ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໔໑/໔໐໓/໔໐໑*

...ບຸຄຄົລບາງຄົນບໍ່ມີສັທທາ ບໍ່ມີຫິຣິ ບໍ່ມີໂອຕຕັປປະ ບໍ່ມີຄວາມພຽນ ບໍ່ມີປັນຍາໃນກຸສົລທັມທັງຫລາຍ ຕລອດຄືນຫລືວັນຂອງເຂົາທີ່ຜ່ານໄປ ຍ່ອມຫວັງໄດ້ແຕ່ຄວາມເສື່ອມໃນກຸສົລທັມທັງຫລາຍເທົ່ານັ້ນ ບໍ່ຫວັງໄດ້ຄວາມຈະເຣີນເລີຍ ປຽບເໝືອນດວງຈັນທ໌ໃນຂ້າງແຮມ ຍ່ອມເສື່ອມຈາກວັນນະ ຈາກມົນທົນ ຈາກຣັສມີ ຈາກຄວາມຍາວແລະຄວາມກວ້າງ ສັນໃດ, ບຸຄຄົລບາງຄົນບໍ່ມີສັທທາ ບໍ່ມີຫິຣິ ບໍ່ມີໂອຕຕັປປະບໍ່ມີຄວາມພຽນບໍ່ມີປັນຍາໃນກຸສົລທັມທັງຫລາຍ ຕລອດຄືນຫລືວັນຂອງເຂົາທີ່ຜ່ານໄປ ຍ່ອມຫວັງໄດ້ແຕ່ຄວາມເສື່ອມໃນກຸສົລທັມທັງຫລາຍເທົ່ານັ້ນ ບໍ່ຫວັງໄດ້ຄວາມຈະເຣີນເລີຍ ສັນນັ້ນເໝືອນກັນ.

ສັງຍຸຕຕະນິກາຍ ນິທານະວັຄ ໑໖/໔໐໕/໕໙໔



# ອະສັປປຸຣຸສ ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ ສັປປຸຣຸສ ສັປປຸຣຸສຍິ່ງກວ່າສັປປຸຣຸສ (2)

ພິກຂຸທັງຫລາຍ! ເຮົາຈັກສະແດງອະສັປປຸຣຸສ *(ຄົນຊົ່ວ)*,
ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ *(ຄົນຊົ່ວຍິ່ງກວ່າຄົນຊົ່ວ)*,
ສັປປຸຣຸສ *(ຄົນດີ)*,
ແລະສັປປຸຣຸສຍິ່ງກວ່າສັປປຸຣຸສ *(ຄົນດີຍິ່ງກວ່າຄົນດີ)*,
ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຢ່າງນີ້ວ່າ:

ພິກຂຸທັງຫລາຍ! ກໍອະສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ບໍ່ມີສັທທາ ບໍ່ມີຫິຣິ ບໍ່ມີໂອຕຕັປປະ ມີສຸຕະໜ້ອຍ ເປັນຄົນກຽດຄ້ານ ມີສະຕິຫລົງລືມ ມີປັນຍາຊາມ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍອະສັປບຸຣຸສຍິ່ງກວ່າອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ບໍ່ມີສັທທາ ແລະຊັກຊວນຜູ້ອື່ນໃນຄວາມບໍ່ມີສັທທາອີກດ້ວຍ, ຕົນເອງເປັນຜູ້ບໍ່ມີຫິຣິ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ບໍ່ມີຫິຣິອີກດ້ວຍ, ຕົນເອງເປັນຜູ້ບໍ່ມີໂອຕຕັປປະ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ບໍ່ມີໂອຕຕັປປະອີກດ້ວຍ, ຕົນເອງເປັນຜູ້ມີສຸຕະໜ້ອຍ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີສຸຕະໜ້ອຍອີກດ້ວຍ, ຕົນເອງເປັນຜູ້ກຽດຄ້ານ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ກຽດຄ້ານອີກດ້ວຍ, ຕົນເອງເປັນຜູ້ມີສະຕິຫລົງລືມ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີສະຕິຫລົງລືມອີກດ້ວຍ, ຕົນເອງເປັນຜູ້ມີປັນຍາຊາມ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີປັນຍາຊາມອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີສັທທາ ມີຫິຣິ ມີໂອຕຕັປປະ ມີສຸຕະຫລາຍ ປຣາຣົພຄວາມພຽນ ມີສະຕິ ມີປັນຍາ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສຍິ່ງກວ່າສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ເຖິງພ້ອມສັທທາ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ເຖິງພ້ອມສັທທາອີກດ້ວຍ, ຕົນເອງເປັນຜູ້ມີຫິຣິ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີຫິຣິອີກດ້ວຍ, ຕົນເອງເປັນຜູ້ມີໂອຕຕັປປະ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີໂອຕຕັປປະອີກດ້ວຍ, ຕົນເອງເປັນຜູ້ມີສຸຕະຫລາຍ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີສຸຕະຫລາຍອີກດ້ວຍ, ຕົນເອງເປັນຜູ້ປຣາຣົພຄວາມພຽນ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ປຣາຣົພຄວາມພຽນອີກດ້ວຍ, ຕົນເອງເປັນຜູ້ມີສະຕິຕັ້ງໝັ້ນ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ມີສະຕິຕັ້ງໝັ້ນອີກດ້ວຍ, ຕົນເອງເປັນຜູ້ເຖິງພ້ອມດ້ວຍປັນຍາ ແລະຊັກຊວນຜູ້ອື່ນໃນຄວາມເປັນຜູ້ເຖິງພ້ອມດ້ວຍປັນຍາອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສຍິ່ງກວ່າສັປບຸຣຸສ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໐໗/໒໐໒*



## ອະສັປປຸຣຸສ ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ ສັປປຸຣຸສ ສັປປຸຣຸສຍິ່ງກວ່າສັປປຸຣຸສ (3)

ພິກຂຸທັງຫລາຍ! ເຮົາຈັກສະແດງອະສັປປຸຣຸສ *(ຄົນຊົ່ວ)*,
ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ *(ຄົນຊົ່ວຍິ່ງກວ່າຄົນຊົ່ວ)*,
ສັປປຸຣຸສ *(ຄົນດີ)*,
ແລະສັປປຸຣຸສຍິ່ງກວ່າສັປປຸຣຸສ *(ຄົນດີຍິ່ງກວ່າຄົນດີ)*,
ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຢ່າງນີ້ວ່າ:

ພິກຂຸທັງຫລາຍ! ກໍອະສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ ເປັນຜູ້ລັກຊັພຍ໌ ເປັນຜູ້ປະພຶຕຜິດໃນກາມທັງຫລາຍ ເປັນຜູ້ເວົ້າຕົວະ ເປັນຜູ້ເວົ້າສຽດສີ ເປັນຜູ້ເວົ້າຄຳຫຍາບ ເປັນຜູ້ເວົ້າຄຳສັມຜັປປະລາປະ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍອະສັປບຸຣຸສຍິ່ງກວ່າອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ຂ້າສັຕ ແລະຊັກຊວນຜູ້ອື່ນໃນການຂ້າສັຕອີກດ້ວຍ, ຕົນເອງເປັນຜູ້ລັກຊັພຍ໌ ແລະຊັກຊວນຜູ້ອື່ນໃນການລັກຊັພຍ໌ອີກດ້ວຍ, ຕົນເອງເປັນຜູ້ປະພຶຕຜິດໃນກາມທັງຫລາຍ ແລະຊັກຊວນຜູ້ອື່ນໃນການປະພຶຕຜິດໃນກາມທັງຫລາຍອີກດ້ວຍ, ຕົນເອງເປັນຜູ້ເວົ້າຕົວະ ແລະຊັກຊວນຜູ້ອື່ນໃນການເວົ້າຕົວະອີກດ້ວຍ, ຕົນເອງເປັນຜູ້ເວົ້າສຽດສີ ແລະຊັກຊວນຜູ້ອື່ນໃນການເວົ້າສຽດສີອີກດ້ວຍ, ຕົນເອງເປັນຜູ້ເວົ້າຄຳຫຍາບ ແລະຊັກຊວນຜູ້ອື່ນໃນການເວົ້າຄຳຫຍາບອີກດ້ວຍ, ຕົນເອງເປັນຜູ້ເວົ້າຄຳສັມຜັປປະລາປະ ແລະຊັກຊວນຜູ້ອື່ນໃນການເວົ້າຄຳສັມຜັປປະລາປະອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ງົດເວັ້ນຈາກການຂ້າສັຕ, ເປັນຜູ້ງົດເວັ້ນຈາກການລັກຊັພຍ໌, ເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ເປັນຜູ້ງົດເວັ້ນຈາກການເວົ້າຕົວະ, ເປັນຜູ້ງົດເວັ້ນຈາກການເວົ້າສຽດສີ ເປັນຜູ້ງົດເວັ້ນຈາກການເວົ້າຄຳຫຍາບ ເປັນຜູ້ງົດເວັ້ນຈາກການເວົ້າຄຳສັມຜັປປະລາປະ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສຍິ່ງກວ່າສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ງົດເວັ້ນຈາກການຂ້າສັຕ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການຂ້າສັຕອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການລັກຊັພຍ໌ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການລັກຊັພຍ໌ອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າຕົວະ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຕົວະອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າສຽດສີ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າສຽດສີອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າຄຳຫຍາບ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຄຳຫຍາບອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນ

ຈາກການເວົ້າຄຳສັມຜັປປະລາປະ ແລະຊັກຊວນຜູ້ອື່ນໃນການ ງົດເວັ້ນຈາກການເວົ້າຄຳສັມຜັປປະລາປະອີກດ້ວຍ.

ພິກຂຸທັງຫລາຍ! ນີ້ຮຽກວ່າ ສັປບຸຣຸສຍິ່ງກວ່າສັປບຸຣຸສ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໐໗/໒໐໓*



# ອະສັປປຸຣຸສ ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ ສັປປຸຣຸສ ສັປປຸຣຸສຍິ່ງກວ່າສັປປຸຣຸສ (4)

ພິກຂຸທັງຫລາຍ! ເຮົາຈັກສະແດງອະສັປປຸຣຸສ *(ຄົນຊົ່ວ)*,
ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ *(ຄົນຊົ່ວຍິ່ງກວ່າຄົນຊົ່ວ)*,
ສັປປຸຣຸສ *(ຄົນດີ)*,
ແລະສັປປຸຣຸສຍິ່ງກວ່າສັປປຸຣຸສ *(ຄົນດີຍິ່ງກວ່າຄົນດີ)*,
ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຢ່າງນີ້ວ່າ:

ພິກຂຸທັງຫລາຍ! ກໍອະສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ ເປັນຜູ້ລັກຊັພຍ໌ ເປັນຜູ້ປະພຶຕຜິດໃນກາມທັງຫລາຍ ເປັນຜູ້ເວົ້າຕົວະ ເປັນຜູ້ເວົ້າສຽດສີ ເປັນຜູ້ເວົ້າຄຳຫຍາບ ເປັນຜູ້ເວົ້າຄຳສັມຜັປປະລາປະ ເປັນຄົນມັກໂລພ, ເປັນຜູ້ມີຈິຕພະຍາບາທ, ເປັນຜູ້ມີຄວາມເຫັນຜິດ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍອະສັປບຸຣຸສຍິ່ງກວ່າອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ຂ້າສັຕ ແລະຊັກຊວນຜູ້ອື່ນໃນການຂ້າສັຕອີກດ້ວຍ, ຕົນເອງເປັນຜູ້ລັກຊັພຍ໌ ແລະຊັກຊວນຜູ້ອື່ນໃນການລັກຊັພຍ໌ອີກດ້ວຍ, ຕົນເອງເປັນຜູ້ປະພຶຕຜິດໃນກາມທັງຫລາຍ ແລະຊັກຊວນຜູ້ອື່ນໃນການປະພຶຕຜິດໃນກາມທັງຫລາຍອີກດ້ວຍ, ຕົນເອງເປັນຜູ້ເວົ້າຕົວະ ແລະຊັກຊວນຜູ້ອື່ນໃນການເວົ້າຕົວະອີກດ້ວຍ, ຕົນເອງເປັນຜູ້ເວົ້າສຽດສີ ແລະຊັກຊວນຜູ້ອື່ນໃນການເວົ້າສຽດສີອີກດ້ວຍ, ຕົນເອງເປັນຜູ້ເວົ້າຄຳຫຍາບ ແລະຊັກຊວນຜູ້ອື່ນໃນການເວົ້າຄຳຫຍາບອີກດ້ວຍ, ຕົນເອງເປັນຜູ້ເວົ້າຄຳສັມຜັປປະລາປະ ແລະຊັກຊວນຜູ້ອື່ນໃນການເວົ້າຄຳສັມຜັປປະລາປະອີກ

ດ້ວຍ, ຕົນເອງເປັນຄົນມັກໂລພ ແລະຊັກຊວນຜູ້ອື່ນໃນຄວາມມັກໂລພອີກດ້ວຍ, ຕົນເອງເປັນຜູ້ມີຈິຕພະຍາບາທ ແລະຊັກຊວນຜູ້ອື່ນໃນຄວາມມີຈິຕພະຍາບາທອີກດ້ວຍ, ຕົນເອງເປັນຜູ້ມີຄວາມເຫັນຜິດ ແລະຊັກຊວນຜູ້ອື່ນໃນຄວາມເຫັນຜິດອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ງົດເວັ້ນຈາກການຂ້າສັຕ, ເປັນຜູ້ງົດເວັ້ນຈາກການລັກຊັພຍ໌, ເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ, ເປັນຜູ້ງົດເວັ້ນຈາກການເວົ້າຕົວະ, ເປັນຜູ້ງົດເວັ້ນຈາກການເວົ້າສຽດສີ, ເປັນຜູ້ງົດເວັ້ນຈາກການເວົ້າຄຳຫຍາບ, ເປັນຜູ້ງົດເວັ້ນຈາກການເວົ້າຄຳສັມຜັປປະລາປະ, ເປັນຜູ້ບໍ່ມັກໂລພ, ບໍ່ມີຈິຕພະຍາບາທ, ມີຄວາມເຫັນຊອບ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສຍິ່ງກວ່າສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ງົດເວັ້ນຈາກການຂ້າສັຕ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການຂ້າສັຕອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການລັກຊັພຍ໌ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການລັກຊັພຍ໌ອີກດ້ວຍ,

ຕົນເອງເປັນຜູ້ງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າຕົວະ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຕົວະອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າສຽດສີ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າສຽດສີອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າຄຳຫຍາບ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຄຳຫຍາບອີກດ້ວຍ, ຕົນເອງເປັນຜູ້ງົດເວັ້ນຈາກການເວົ້າຄຳສັມຜັປປະລາປະ ແລະຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຄຳສັມຜັປປະລາປະອີກດ້ວຍ, ຕົນເອງເປັນຜູ້ບໍ່ມັກໂລພ ແລະຊັກຊວນຜູ້ອື່ນໃນຄວາມບໍ່ມັກໂລພອີກດ້ວຍ, ຕົນເອງເປັນຜູ້ບໍ່ມີຈິຕພະຍາບາທ ແລະຊັກຊວນຜູ້ອື່ນໃນຄວາມບໍ່ມີຈິຕພະຍາບາທອີກດ້ວຍ, ຕົນເອງເປັນຜູ້ມີຄວາມເຫັນຊອບ ແລະຊັກຊວນຜູ້ອື່ນໃນຄວາມເຫັນຊອບອີກດ້ວຍ.

ພິກຊຸທັງຫລາຍ! ນີ້ຮຽກວ່າ ສັປບຸຣຸສຍິ່ງກວ່າສັປບຸຣຸສ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໐໗/໒໐໓*



## ອະສັປປຸຣຸສ ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ ສັປປຸຣຸສ ສັປປຸຣຸສຍິ່ງກວ່າສັປປຸຣຸສ (5)

ພິກຂຸທັງຫລາຍ! ເຮົາຈັກສະແດງອະສັປປຸຣຸສ *(ຄົນຊົ່ວ)*,
ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ *(ຄົນຊົ່ວຍິ່ງກວ່າຄົນຊົ່ວ)*,
ສັປປຸຣຸສ *(ຄົນດີ)*,
ແລະສັປປຸຣຸສຍິ່ງກວ່າສັປປຸຣຸສ *(ຄົນດີຍິ່ງກວ່າຄົນດີ)*,
ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຢ່າງນີ້ວ່າ:

ພິກຂຸທັງຫລາຍ! ກໍອະສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຜິດ ມີຄວາມດຳຣິຜິດ ມີວາຈາຜິດ ມີການກະທຳຜິດ ມີອາຊີພຜິດ ມີຄວາມພຽນຜິດ ມີຄວາມຣະນຶກຜິດ ມີຄວາມຕັ້ງໃຈໝັ້ນຜິດ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍອະສັປບຸຣຸສຍິ່ງກວ່າອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ມີຄວາມເຫັນຜິດ ແລະຊັກຊວນຜູ້ອື່ນໃນຄວາມເຫັນຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມດຳຣິຜິດ ແລະຊັກຊວນຜູ້ອື່ນໃນຄວາມດຳຣິຜິດອີກດ້ວຍ, ຕົນເອງເປັນຜູ້ມີວາຈາຜິດ ແລະຊັກຊວນຜູ້ອື່ນໃນວາຈາຜິດອີກດ້ວຍ, ຕົນເອງເປັນຜູ້ມີການກະທຳຜິດ ແລະຊັກຊວນຜູ້ອື່ນໃນການກະທຳຜິດອີກດ້ວຍ, ຕົນເອງເປັນຜູ້ມີອາຊີພຜິດ ແລະຊັກຊວນຜູ້ອື່ນໃນອາຊີພຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມພຽນຜິດ ແລະຊັກຊວນຜູ້ອື່ນໃນຄວາມພຽນຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມຣະນຶກຜິດ ແລະຊັກຊວນຜູ້ອື່ນໃນຄວາມຣະນຶກຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມຕັ້ງໃຈໝັ້ນຜິດ ແລະຊັກຊວນຜູ້ອື່ນໃນຄວາມຕັ້ງໃຈໝັ້ນຜິດອີກ

ດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຊອບ ມີຄວາມດຳຣິຊອບ ມີວາຈາຊອບ ມີການກະທຳຊອບ ມີອາຊີພຊອບ ມີຄວາມພຽນຊອບ ມີຄວາມຣະນຶກຊອບ ມີຄວາມຕັ້ງໃຈໝັ້ນຊອບ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສຍິ່ງກວ່າສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ມີຄວາມເຫັນຊອບ ແລະຊັກຊວນຜູ້ອື່ນໃນຄວາມເຫັນຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມດຳຣິຊອບ ແລະຊັກຊວນຜູ້ອື່ນໃນຄວາມດຳຣິຊອບອີກດ້ວຍ, ຕົນເອງເປັນຜູ້ມີວາຈາຊອບ ແລະຊັກຊວນຜູ້ອື່ນໃນວາຈາຊອບອີກດ້ວຍ, ຕົນເອງເປັນຜູ້ມີການກະທຳຊອບ ແລະຊັກຊວນຜູ້ອື່ນໃນການກະທຳຊອບອີກດ້ວຍ, ຕົນເອງເປັນຜູ້ມີອາຊີພຊອບ ແລະຊັກຊວນຜູ້ອື່ນໃນອາຊີພຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມພຽນຊອບ ແລະຊັກຊວນຜູ້ອື່ນໃນຄວາມພຽນຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມຣະນຶກຊອບ ແລະຊັກຊວນຜູ້ອື່ນໃນຄວາມຣະນຶກຊອບ

ອີກດ້ວຍ, ຕົນເອງເປັນຜູ້ມີຄວາມຕັ້ງໃຈໝັ້ນຊອບ ແລະຊັກຊວນຜູ້ອື່ນໃນຄວາມຕັ້ງໃຈໝັ້ນຊອບອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສຍິ່ງກວ່າສັປບຸຣຸສ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໐໗/໒໐໕*



# ອະສັປປຸຣຸສ ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ ສັປປຸຣຸສ ສັປປຸຣຸສຍິ່ງກວ່າສັປປຸຣຸສ (6)

ພິກຂຸທັງຫລາຍ! ເຮົາຈັກສະແດງອະສັປປຸຣຸສ *(ຄົນຊົ່ວ)*,
ອະສັປປຸຣຸສຍິ່ງກວ່າອະສັປປຸຣຸສ *(ຄົນຊົ່ວຍິ່ງກວ່າຄົນຊົ່ວ)*,
ສັປປຸຣຸສ *(ຄົນດີ)*,
ແລະສັປປຸຣຸສຍິ່ງກວ່າສັປປຸຣຸສ *(ຄົນດີຍິ່ງກວ່າຄົນດີ)*,
ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສຢ່າງນີ້ວ່າ:

ພິກຂຸທັງຫລາຍ! ກໍອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຜິດ ມີຄວາມດຳຣິຜິດ ມີວາຈາຜິດ ມີການກະທຳຜິດ ມີອາຊີພຜິດ ມີຄວາມພຽນຜິດ ມີຄວາມຣະນຶກຜິດ ມີຄວາມຕັ້ງໃຈໝັ້ນຜິດ ມີຄວາມຮູ້ຜິດ ມີຄວາມຫລຸດພົ້ນຜິດ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍອະສັປບຸຣຸສຍິ່ງກວ່າອະສັປບຸຣຸສເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ມີຄວາມເຫັນຜິດ ແລະຊັກຊວນຜູ້ອື່ນໃນຄວາມເຫັນຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມດຳຣິຜິດ ແລະຊັກຊວນຜູ້ອື່ນໃນຄວາມດຳຣິຜິດອີກດ້ວຍ, ຕົນເອງເປັນຜູ້ມີວາຈາຜິດ ແລະຊັກຊວນຜູ້ອື່ນໃນວາຈາຜິດອີກດ້ວຍ, ຕົນເອງເປັນຜູ້ມີການກະທຳຜິດ ແລະຊັກຊວນຜູ້ອື່ນໃນການກະທຳຜິດອີກດ້ວຍ, ຕົນເອງເປັນຜູ້ມີອາຊີພຜິດ ແລະຊັກຊວນຜູ້ອື່ນໃນອາຊີພຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມພຽນຜິດ ແລະຊັກຊວນຜູ້ອື່ນໃນຄວາມພຽນຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມຣະນຶກຜິດ ແລະຊັກຊວນຜູ້ອື່ນໃນຄວາມຣະນຶກຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມຕັ້ງໃຈໝັ້ນຜິດ ແລະຊັກຊວນຜູ້ອື່ນໃນຄວາມຕັ້ງໃຈໝັ້ນຜິດອີກ

ດ້ວຍ, ຕົນເອງເປັນຜູ້ມີຄວາມຮູ້ຜິດ ແລະຊັກຊວນຜູ້ອື່ນໃນຄວາມຮູ້ຜິດອີກດ້ວຍ, ຕົນເອງເປັນຜູ້ມີຄວາມຫລຸດພົ້ນຜິດ ແລະຊັກຊວນຜູ້ອື່ນໃນຄວາມຫລຸດພົ້ນຜິດອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ອະສັປບຸຣຸສຍິ່ງກວ່າອະສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ມີຄວາມເຫັນຊອບ ມີຄວາມດຳຣິຊອບ ມີວາຈາຊອບ ມີການກະທຳຊອບ ມີອາຊີພຊອບ ມີຄວາມພຽນຊອບ ມີຄວາມຣະນຶກຊອບ ມີຄວາມຕັ້ງໃຈໝັ້ນຊອບ ມີຄວາມຮູ້ຊອບ ມີຄວາມຫລຸດພົ້ນຊອບ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສ.

ພິກຂຸທັງຫລາຍ! ກໍສັປບຸຣຸສຍິ່ງກວ່າສັປບຸຣຸສເປັນຢ່າງໃດ?
ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຕົນເອງເປັນຜູ້ມີຄວາມເຫັນຊອບ ແລະຊັກຊວນຜູ້ອື່ນໃນຄວາມເຫັນຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມດຳຣິຊອບ ແລະຊັກຊວນຜູ້ອື່ນໃນຄວາມດຳຣິຊອບອີກດ້ວຍ, ຕົນເອງເປັນຜູ້ມີວາຈາຊອບ ແລະຊັກຊວນຜູ້ອື່ນໃນວາຈາຊອບອີກດ້ວຍ, ຕົນເອງເປັນຜູ້ມີການກະທຳຊອບ ແລະຊັກຊວນຜູ້ອື່ນໃນການກະທຳຊອບອີກດ້ວຍ, ຕົນເອງເປັນຜູ້ມີອາຊີພຊອບ ແລະຊັກຊວນຜູ້ອື່ນໃນອາຊີພຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມພຽນຊອບ ແລະ

ຊັກຊວນຜູ້ອື່ນໃນຄວາມພຽນຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມຣະນຶກຊອບ ແລະຊັກຊວນຜູ້ອື່ນໃນຄວາມຣະນຶກຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມຕັ້ງໃຈໝັ້ນຊອບ ແລະຊັກຊວນຜູ້ອື່ນໃນຄວາມຕັ້ງໃຈໝັ້ນຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມຮູ້ຊອບ ແລະຊັກຊວນຜູ້ອື່ນໃນຄວາມຮູ້ຊອບອີກດ້ວຍ, ຕົນເອງເປັນຜູ້ມີຄວາມຫລຸດພົ້ນຊອບ ແລະຊັກຊວນຜູ້ອື່ນໃນຄວາມຫລຸດພົ້ນຊອບອີກດ້ວຍ. ພິກຂຸທັງຫລາຍ ນີ້ຮຽກວ່າ ສັປບຸຣຸສຍິ່ງກວ່າສັປບຸຣຸສ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໑໐/໒໐໓*



## ຄວາມປະພຶດທີ່ບໍ່ຊອບທັມ
## ທຳລາຍໂລກແລະສັງຄົມມະນຸສ

ຄັ້ງນັ້ນແລ ພຣາມມະຫາສາລຄົນໜຶ່ງໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໆລໆ ຄັນແລ້ວໄດ້ທູລຖາມວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ຂ້ານ້ອຍໄດ້ສະດັບມາຕໍ່ບຸພພະພຣາມຜູ້ເຖົ້າຜູ້ແກ່ຜູ້ເປັນອາຈາຣຍ໌ແລະປາຈາຣຍ໌*(ອາຈະຣິຍະປາຈະຣິຍານັງ)* ກ່າວໄວ້ວ່າ ແຕ່ກ່ອນໂລກນີ້ຍ່ອມໜາແໜ້ນໄປດ້ວຍໝູ່ມະນຸສເໝືອນອະເວຈີມະຫານະຣົກ ບ້ານ ນິຄົມຊົນບົທ ແລະຣາຊະທານີ ມີທຸກໄລຍະໄກ່ບິນຕົກ ດັ່ງນີ້.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ອັນໃດໜໍເປັນເຫຕ ເປັນປັຈຈັຍທີ່ກະທຳໃຫ້ມະນຸສທຸກວັນນີ້ໝົດໄປ ປາກົຕວ່າມີໜ້ອຍ ບ້ານກໍບໍ່ເປັນບ້ານ ນິຄົມກໍບໍ່ເປັນນິຄົມ ນະຄອຣກໍບໍ່ເປັນນະຄອຣ ຊົນບົທກໍບໍ່ເປັນຊົນບົທ?

ພຣາມ! ທຸກວັນນີ້ມະນຸສກຳນັດແລ້ວດ້ວຍຄວາມກຳນັດທີ່ບໍ່ຊອບທັມ ຖືກຄວາມໂລພຢ່າງແຮງກ້າຄອບງຳ ປະກອບດ້ວຍມິຈສາທັມ ມະນຸສເຫລົ່ານັ້ນກຳນັດແລ້ວດ້ວຍຄວາມກຳນັດທີ່ບໍ່ຊອບທັມ ຖືກຄວາມໂລພຢ່າງແຮງກ້າຄອບງຳ ປະກອບດ້ວຍມິຈສາທັມ **ຕ່າງກໍຈັບສວຍເອົາສັສຕຣາອັນຄົມເຂັ່ນຂ້າກັນແລະກັນ ເພາະເຫຕນັ້ນ ມະນຸສຈຶ່ງລົ້ມຕາຍເປັນຈຳນວນຫລາຍ.**

ພຣາມ! ນີ້ແລ ເປັນເຫຕເປັນປັຈຈັຍທີ່ກະທຳໃຫ້ມະນຸສທຸກວັນນີ້ໝົດໄປ ປາກົຕວ່າມີໜ້ອຍ ບ້ານກໍບໍ່ເປັນບ້ານ ນິຄົມກໍບໍ່ເປັນນິຄົມ ນະຄອຣກໍບໍ່ເປັນນະຄອຣ ຊົນບົທກໍບໍ່ເປັນຊົນບົທ.

ພຣາມ! ອີກປະການໜຶ່ງ ທຸກວັນນີ້ມະນຸສກຳນັດແລ້ວດ້ວຍຄວາມກຳນັດທີ່ບໍ່ຊອບທັມ ຖືກຄວາມໂລພຢ່າງແຮງກ້າຄອບງຳ ປະກອບດ້ວຍມິຈສາທັມ ມະນຸສເຫລົ່ານັ້ນກຳນັດແລ້ວດ້ວຍຄວາມກຳນັດທີ່ບໍ່ຊອບທັມ ຖືກຄວາມໂລພຢ່າງແຮງກ້າຄອບງຳ ປະກອບດ້ວຍມິຈສາທັມ **ຝົນບໍ່ຕົກຕ້ອງຕາມລະດູການ ສະນັ້ນ**

**ຈຶ່ງເກີດທຸພພິກຂະພັຍ ເຂົ້າກ້າເສຍຫາຍ ເປັນເພັຍ ບໍ່ໃຫ້ຜົລ ເພາະເຫຕນັ້ນ ມະນຸສຈຶ່ງລົ້ມຕາຍເປັນຈຳນວນຫລາຍ.**

ພຣາມ! ນີ້ແລ ເປັນເຫຕເປັນປັຈຈັຍທີ່ກະທຳໃຫ້ມະນຸສທຸກວັນນີ້ໝົດໄປ ປາກົຕວ່າມີໜ້ອຍ ບ້ານກໍບໍ່ເປັນບ້ານ ນິຄົມກໍບໍ່ເປັນນິຄົມ ນະຄອຣກໍບໍ່ເປັນນະຄອຣ ຊົນບົທກໍບໍ່ເປັນຊົນບົທ.

ພຣາມ! ອີກປະການໜຶ່ງ ທຸກວັນນີ້ມະນຸສກຳນັດແລ້ວດ້ວຍຄວາມກຳນັດທີ່ບໍ່ຊອບທັມ ຖືກຄວາມໂລພຢ່າງແຮງກ້າຄອບງຳ ປະກອບດ້ວຍມິຈສາທັມ ມະນຸສເຫລົ່ານັ້ນກຳນັດແລ້ວດ້ວຍຄວາມກຳນັດທີ່ບໍ່ຊອບທັມ ຖືກຄວາມໂລພຢ່າງແຮງກ້າຄອບງຳ ປະກອບດ້ວຍມິຈສາທັມ **ພວກຍັກປ່ອຍອະມະນຸສທີ່ຮ້າຍກາດລົງໄວ້ ເພາະເຫຕນັ້ນ ມະນຸສຈຶ່ງລົ້ມຕາຍເປັນຈຳນວນຫລາຍ**.

ພຣາມ! ນີ້ແລ ເປັນເຫຕເປັນປັຈຈັຍທີ່ກະທຳໃຫ້ມະນຸສທຸກວັນນີ້ໝົດໄປ ປາກົຕວ່າມີໜ້ອຍ ບ້ານກໍບໍ່ເປັນບ້ານ ນິຄົມກໍບໍ່ເປັນນິຄົມ ນະຄອຣກໍບໍ່ເປັນນະຄອຣ ຊົນບົທກໍບໍ່ເປັນຊົນບົທ.

*ພຣາມມະຫາສາລນັ້ນກຣາບທູລວ່າ:*

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ; ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ທ່ານພຣະໂຄດົມຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍເຖິງພຣະໂຄດົມ ກັບທັງພຣະທັມແລະພຣະພິກຂຸສົງຄ໌ເປັນສະຣະນະ ຂໍທ່ານພຣະໂຄດົມຈົ່ງຊົງຈຳຂ້ານ້ອຍວ່າ ເປັນອຸປາສິກຜູ້ເຖິງສະຣະນະຕລອດຊີວິຕ ຕັ້ງແຕ່ວັນນີ້ເປັນຕົ້ນໄປ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໑໕໕/໕໓໗*



## ເຫດໃຫ້ໄປສູ່ອະບາຍ ທຸຄະຕິ ວິນິບາດ ນະຣົກ

ຄັ້ງນັ້ນແລ ພຣາມຄົນໜຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໄດ້ປຣາສັຍກັບພຣະຜູ້ມີພຣະພາຄ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ອັນໃດໜໍເປັນເຫດ ເປັນປັຈຈັຍໃຫ້ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາດ ນະຣົກ?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

**ພຣາມ! ເພາະເຫຕແຫ່ງການບໍ່ປະພຶຕສະໝ່ຳສະເໝີ ຄືປະພຶຕອະທັມ ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.**

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ກໍອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ?

**ພຣາມ! ເພາະເຫຕແຫ່ງການປະພຶຕສະໝ່ຳສະເໝີ ຄືປະພຶຕທັມ ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.**

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ; ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ທ່ານພຣະໂຄດົມຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍເຖິງພຣະໂຄດົມ ກັບທັງພຣະທັມແລະພຣະພິກຂຸສົງຄ໌ເປັນ

ສະຣະນະ ຂໍທ່ານພຣະໂຄດົມຈົ່ງຊົງຈຳຂ້ານ້ອຍວ່າ ເປັນອຸປາສົກຜູ້ເຖິງສະຣະນະຕລອດຊີວິຕ ຕັ້ງແຕ່ວັນນີ້ເປັນຕົ້ນໄປ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໕໔/໔໗໔*



# ເຫດໃຫ້ໄປສູ່ອະບາຍ ທຸຄະຕິ ວິນິບາຕ ນະຣົກ (2)

ຄັ້ງນັ້ນແລ ຊານຸສະໂສນີພຣາມເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເຖິງທີ່ປະທັບ ໄດ້ປຣາສັຍກັບພຣະຜູ້ມີພຣະພາຄ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ອັນໃດໜໍເປັນເຫຕ ເປັນປັຈຈັຍໃຫ້ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ?

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

**ພຣາມ! ເພາະກະທຳດ້ວຍ ເພາະບໍ່ກະທຳດ້ວຍ ສັຕບາງພວກ ໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.**

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ກໍອັນໃດໜໍເປັນເຫຕ ເປັນປັຈຈັຍ ໃຫ້ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ?

**ພຣາມ! ເພາະກະທຳດ້ວຍ ເພາະບໍ່ກະທຳດ້ວຍ ສັຕບາງພວກ ໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກ ສວັນ.**

ຂ້ານ້ອຍຍ່ອມບໍ່ຮູ້ທົ່ວເຖິງເນື້ອຄວາມແຫ່ງພາສິຕທີ່ທ່ານພຣະ ໂຄດົມຕຣັສແລ້ວໂດຍຫຍໍ້ໄດ້ໂດຍພິສດາຣ ຂໍປະທານພຣະ ວະໂຣກາສ ຂໍທ່ານພຣະໂຄດົມໂປດຊົງສະແດງທັມໂດຍທີ່ ຂ້ານ້ອຍຈະຮູ້ທົ່ວເຖິງເນື້ອຄວາມແຫ່ງພາສິຕທີ່ທ່ານພຣະ ໂຄດົມຕຣັສແລ້ວໂດຍຫຍໍ້ໄດ້ໂດຍພິສດາຣເຖີດ.

**ພຣາມ! ຖ້າເຊັ່ນນັ້ນ ທ່ານຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈັກກ່າວ.**

ຊານຸສະໂສນີພຣາມໄດ້ທູລສະໜອງພຣະດຳຣັສຂອງພຣະຜູ້ມີພຣະພາຄແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:

**ພຣາມ! ບຸຄຄົລບາງຄົນໃນໂລກນີ້ ຍ່ອມກະທຳແຕ່ກາຍທຸຈະຣິຕ ບໍ່ໄດ້ກະທຳກາຍສຸຈະຣິຕ ຍ່ອມກະທຳແຕ່ວະຈີທຸຈະຣິຕ ບໍ່ໄດ້ກະທຳວະຈີສຸຈະຣິຕ ຍ່ອມກະທຳແຕ່ມະໂນທຸຈະຣິຕ ບໍ່ໄດ້ກະທຳມະໂນສຸຈະຣິຕ. ພຣາມ ເພາະກະທຳດ້ວຍ ເພາະບໍ່ກະທຳດ້ວຍ ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.**

**ພຣາມ! ສ່ວນບຸຄຄົລບາງຄົນໃນໂລກນີ້ ຍ່ອມກະທຳແຕ່ກາຍສຸຈະຣິຕ ບໍ່ໄດ້ກະທຳກາຍທຸຈະຣິຕ ຍ່ອມກະທຳແຕ່ວະຈີສຸຈະຣິຕ ບໍ່ໄດ້ກະທຳວະຈີທຸຈະຣິຕ ຍ່ອມກະທຳແຕ່ມະໂນສຸຈະຣິຕ ບໍ່ໄດ້ກະທຳມະໂນທຸຈະຣິຕ.**

**ພຣາມ! ເພາະກະທຳດ້ວຍ ເພາະບໍ່ກະທຳດ້ວຍ ສັຕບາງພວກໃນໂລກນີ້ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.**

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ; ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌

ແຈ່ມແຈ້ງຫລາຍ ທ່ານພຣະໂຄດົມຊົງປະກາສທັມໂດຍອະເນກ ປະຣິຍາຍ ປຽບເໝືອນຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດ ດ້ວຍ ຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍ ເຖິງພຣະໂຄດົມ ກັບທັງພຣະທັມແລະພຣະພິກຂຸສົງຄ໌ເປັນ ສະຣະນະ ຂໍທ່ານພຣະໂຄດົມຈົ່ງຊົງຈຳຂ້ານ້ອຍວ່າ ເປັນອຸປາ ສິກຜູ້ເຖິງສະຣະນະຕລອດຊີວິຕ ຕັ້ງແຕ່ວັນນີ້ເປັນຕົ້ນໄປ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໕໖/໔໖໖*



## ໂທສຂອງທຸຈະຣິຕ

ຄັ້ງນັ້ນແລ ທ່ານພຣະອານົນທ໌ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວພຣະຜູ້ມີພຣະພາຄໄດ້ຕຣັສກັບທ່ານພຣະອານົນທ໌ວ່າ:

**ອານົນທ໌! ເຮົາກ່າວກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕວ່າ ເປັນກິຈທີ່ບໍ່ຄວນກະທຳໂດຍສ່ວນດຽວ.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ເມື່ອບຸຄຄົລກະທຳກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ທີ່ພຣະຜູ້ມີພຣະພາຄຕຣັສວ່າ

ເປັນກິຈທີ່ບໍ່ຄວນກະທຳໂດຍສ່ວນດຽວ ໂທສອັນໃດໜໍທີ່ຜູ້ນັ້ນຍ່ອມຫວັງໄດ້?

ອານົນທ໌! ເມື່ອບຸຄຄົລກະທຳກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ທີ່ເຮົາກ່າວວ່າ ເປັນກິຈທີ່ບໍ່ຄວນກະທຳໂດຍສ່ວນດຽວ ໂທສຢ່າງນີ້ທີ່ຜູ້ນັ້ນຍ່ອມຫວັງໄດ້ຄື:
**ແມ່ນແຕ່ຕົນເອງກໍຕິຕຽນຕົນເອງໄດ້,**
**ຜູ້ຮູ້ໃຄ່ຄວນແລ້ວຍ່ອມຕິຕຽນ,**
**ກິຕຕິສັພອັນຕ່ຳຊາມຍ່ອມແຜ່ຂະຈອນໄປ,**
**ເປັນຜູ້ຫລົງທຳກາລະ,**
**ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ**
**ທຸຄະຕິ ວິນິບາຕ ນະຣົກ.**

ອານົນທ໌! ເມື່ອບຸຄຄົລກະທຳກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ທີ່ເຮົາກ່າວວ່າ ເປັນກິຈທີ່ບໍ່ຄວນກະທຳໂດຍສ່ວນດຽວ ໂທສຢ່າງນີ້ແລ ທີ່ຜູ້ນັ້ນຍ່ອມຫວັງໄດ້.

**ອານົນທ໌! ເຮົາກ່າວກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕວ່າ ເປັນກິຈທີ່ຄວນກະທຳໂດຍສ່ວນດຽວ.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ເມື່ອບຸຄຄົລກະທຳກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ທີ່ພຣະຜູ້ມີພຣະພາຄຕຣັສວ່າ ເປັນກິຈທີ່ຄວນກະທຳໂດຍສ່ວນດຽວ ອານິສົງສ໌ອັນໃດໜໍທີ່ຜູ້ນັ້ນຍ່ອມຫວັງໄດ້?

ອານົນທ໌! ເມື່ອບຸຄຄົລກະທຳກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ທີ່ເຮົາກ່າວວ່າ ເປັນກິຈທີ່ຄວນກະທຳໂດຍສ່ວນດຽວ ອານິສົງສ໌ຢ່າງນີ້ທີ່ຜູ້ນັ້ນຍ່ອມຫວັງໄດ້ຄື:

**ແມ່ນແຕ່ຕົນເອງກໍຕິຕຽນຕົນເອງບໍ່ໄດ້,**
**ຜູ້ຮູ້ໃຄ່ຄວນແລ້ວຍ່ອມສັນລະເສີນ,**
**ກິຕຕິສັພອັນງາມຍ່ອມແຜ່ຂະຈອນໄປ,**
**ເປັນຜູ້ບໍ່ຫລົງທຳກາລະ,**
**ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນ.**

ອານົນທ໌! ເມື່ອບຸຄຄົລກະທຳກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ທີ່ເຮົາກ່າວວ່າ ເປັນກິຈທີ່ຄວນກະທຳໂດຍສ່ວນດຽວ ອານິສົງສ໌ຢ່າງນີ້ແລ ທີ່ຜູ້ນັ້ນຍ່ອມຫວັງໄດ້.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໕໔/໔໗໔*

ພິກຂຸທັງຫລາຍ ປານາຕິບາຕທີ່ບຸຄຄົລເສພ
ແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ
ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອ
ກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ.
ວິບາກແຫ່ງປານາຕິບາຕຢ່າງເບົາທີ່ສຸດຍ່ອມ
ເປັນໄປເພື່ອອາຍຸສັ້ນແກ່ຜູ້ມາເກີດເປັນມະນຸສ.

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະ*
*ນິບາຕ ໒໓/໑໖໓/໑໓໐*



# ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການ ບໍ່ຄວນເສພ

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການນີ້ ບໍ່ຄວນເສພ; ທັມ ໑໐ ປະການເປັນຢ່າງໃດ? ຄື:

ເປັນຜູ້ຂ້າສັຕ *(ປານາຕິປາຕີ ໂຫຕິ)*,
ເປັນຜູ້ລັກຊັພຍ໌ *(ອະທິນນາທາຍີ ໂຫຕິ)*,
ເປັນຜູ້ປະພຶຕຜິດໃນກາມທັງຫລາຍ *(ກາເມສຸ ມິຈສາຈາຣີ ໂຫຕິ)*,
ເປັນຜູ້ເວົ້າຕົວະ *(ມຸສາວາທີ ໂຫຕິ)*,
ເປັນຜູ້ເວົ້າສຽດສີ *(ປິສຸນະວາໂຈ ໂຫຕິ)*,
ເປັນຜູ້ເວົ້າຄຳຫຍາບ *(ຜະຣຸສະວາໂຈ ໂຫຕິ)*,

ເປັນຜູ້ເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌
*(ສັມຜັປປະລາປີ ໂຫຕິ)*,
ເປັນຜູ້ມີຄວາມໂລພຢາກໄດ້ຂອງຜູ້ອື່ນ *(ອະພິຊຊາລຸ ໂຫຕິ)*,
ເປັນຜູ້ມີຈິຕພະຍາບາທ *(ພຍາປັນນະຈິຕໂຕ ໂຫຕິ)*,
ເປັນຜູ້ມີຄວາມເຫັນຜິດ *(ມິຈສາທິຕຖິໂກ ໂຫຕິ)*.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການນີ້ແລ ບໍ່ຄວນເສພ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການນີ້ຄວນເສພ; ທັມ ໑໐ ປະການເປັນຢ່າງໃດ? ຄື:
ເປັນຜູ້ງົດເວັ້ນຈາກການຂ້າສັຕ,
ເປັນຜູ້ງົດເວັ້ນຈາກການລັກຊັພຍ໌,
ເປັນຜູ້ງົດເວັ້ນຈາກການປະພຶຕຜິດໃນກາມທັງຫລາຍ,
ເປັນຜູ້ງົດເວັ້ນຈາກການເວົ້າຕົວະ,
ເປັນຜູ້ງົດເວັ້ນຈາກການເວົ້າສຽດສີ,
ເປັນຜູ້ງົດເວັ້ນຈາກການເວົ້າຄຳຫຍາບ,
ເປັນຜູ້ງົດເວັ້ນຈາກການເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌,
ເປັນຜູ້ບໍ່ມີຄວາມໂລພຢາກໄດ້ຂອງຜູ້ອື່ນ,
ເປັນຜູ້ບໍ່ມີຈິຕພະຍາບາທ,
ເປັນຜູ້ມີຄວາມເຫັນຊອບ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ແລ ຄວນເສພ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ບໍ່ຄວນຄົບ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ຄວນຄົບ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ບໍ່ຄວນເຂົ້າໄປນັ່ງໃກ້...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ຄວນເຂົ້າໄປນັ່ງໃກ້...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ເປັນຜູ້ບໍ່ຄວນບູຊາ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ເປັນຜູ້ຄວນບູຊາ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ບໍ່ຄວນສັນລະເສີນ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ຄວນສັນລະເສີນ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ບໍ່ຄວນເຄົາຣົພ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ຄວນເຄົາຣົພ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ບໍ່ຄວນຢຳເກງ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ຄວນຢຳເກງ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ບໍ່ຄວນໃຫ້ຄວາມຍິນດີ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ເປັນຜູ້ຄວນໃຫ້ຄວາມຍິນດີ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມບໍ່ບໍຣິສຸທ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມບໍຣິສຸທ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມຄອບງຳມານະບໍ່ໄດ້...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມຄອບງຳມານະໄດ້...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມບໍ່ຈະເຣີນດ້ວຍປັນຍາ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມຈະເຣີນດ້ວຍປັນຍາ...*(ຄືກັນກັບຂ້າງຕົ້ນ)*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ; ທັມ ໑໐ ປະການເປັນຢ່າງໃດ? ຄື:

ເປັນຜູ້ຂ້າສັຕ *(ປານາຕິປາຕີ ໂຫຕິ)*,

ເປັນຜູ້ລັກຊັພຍ໌ *(ອະທິນນາທາຍີ ໂຫຕິ)*,

ເປັນຜູ້ປະພຶຕຜິດໃນການທັງຫລາຍ *(ກາເມສຸ ມິຈສາຈາຣີ ໂຫຕິ)*,

ເປັນຜູ້ເວົ້າຕົວະ *(ມຸສາວາທີ ໂຫຕິ)*,

ເປັນຜູ້ເວົ້າສຽດສີ *(ປິສຸນະວາໂຈ ໂຫຕິ)*,

ເປັນຜູ້ເວົ້າຄຳຫຍາບ *(ຜະຣຸສະວາໂຈ ໂຫຕິ)*,

ເປັນຜູ້ເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌ *(ສັມຜັປປະລາປີ ໂຫຕິ)*,

ເປັນຜູ້ມີຄວາມໂລພຢາກໄດ້ຂອງຜູ້ອື່ນ *(ອະພິຊຊາລຸ ໂຫຕິ)*,

ເປັນຜູ້ມີຈິຕພະຍາບາທ *(ພຍາປັນນະຈິຕໂຕ ໂຫຕິ)*,

ເປັນຜູ້ມີຄວາມເຫັນຜິດ *(ມິຈສາທິຕຖິໂກ ໂຫຕິ)*.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ແລ ຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມປະສົບກັບສິ່ງທີ່ເປັນບຸນຍ໌ເປັນອັນມາກ; ທັມ ໑໐ ປະການເປັນຢ່າງໃດ? ຄື:

ເປັນຜູ້ງົດເວັ້ນຈາກການຂ້າສັດ,
ເປັນຜູ້ງົດເວັ້ນຈາກການລັກຊັພຍ໌,
ເປັນຜູ້ງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍ,
ເປັນຜູ້ງົດເວັ້ນຈາກການເວົ້າຕົວະ,
ເປັນຜູ້ງົດເວັ້ນຈາກການເວົ້າສໍ່ສຽດສີ,
ເປັນຜູ້ງົດເວັ້ນຈາກການເວົ້າຄຳຫຍາບ,
ເປັນຜູ້ງົດເວັ້ນຈາກການເວົ້າຄຳທີ່ບໍ່ປະກອບດ້ວຍປະໂຍຊນ໌,
ເປັນຜູ້ບໍ່ມີຄວາມໂລພຢາກໄດ້ຂອງຜູ້ອື່ນ,
ເປັນຜູ້ບໍ່ມີຈິຕພະຍາບາທ,
ເປັນຜູ້ມີຄວາມເຫັນຊອບ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການນີ້ແລ ຍ່ອມປະສົບກັບສິ່ງທີ່ເປັນບຸນຍ໌ເປັນອັນມາກ.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໒໕໓/໑໙໘*

ເປັນຜູ້ປະພຶຕຜິດໃນກາມທັງຫລາຍຄື ເຖິງຄວາມສົມສູ່ໃນຍິງທີ່ມີມາຣດາຮັກສາ, ທີ່ມີບິດາຮັກສາ, ທີ່ມີທັງມາຣດາແລະບິດາຮັກສາ, ທີ່ມີອ້າຍນ້ອງຊາຍຮັກສາ, ທີ່ມີເອື້ອຍນ້ອງສາວຮັກສາ, ທີ່ມີຍາຕຮັກສາ, ທີ່ມີທັມຮັກສາ, ທີ່ມີສາມີ, ທີ່ມີອາຊຍາໂດຍຮອບ, ໂດຍທີ່ສຸດແມ່ນແຕ່ຍິງທີ່ເຂົາຄ້ອງແລ້ວດ້ວຍພວງມາລັຍ (*ຍິງທີ່ເຂົາໝັ້ນໄວ້*)

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ*
*໒໔/໒໕໙/໑໗໙*



# ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການ ຍ່ອມເປັນຜູ້ຖືກປະຖິ້ມໄວ້ໃນນະຣົກ

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການຍ່ອມເປັນຜູ້ຖືກປະຖິ້ມໄວ້ໃນນະຣົກ ເໝືອນສິ່ງຂອງທີ່ເຂົານຳມາປະຖິ້ມໄວ້; ທັມ ໑໐ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕຫຍາບຊ້າ ມີຝາມືຊຸ່ມດ້ວຍເລືອດ ຕັ້ງຢູ່ໃນການຂ້າແລະການທຸບຕີ ບໍ່ມີຄວາມເອັນດູໃນສັຕທັງປວງ.

ເປັນຜູ້ລັກຊັພຍ໌ ຖືເອົາວັຕຖຸອຸປະກອນເຄື່ອງປື້ມໃຈຂອງບຸຄຄົລອື່ນ ເຊິ່ງຢູ່ໃນບ້ານຫລືໃນປ່າ ທີ່ເຈົ້າຂອງບໍ່ໄດ້ໃຫ້ ດ້ວຍຈິຕຄິດຂະໂມຍ.

ເປັນຜູ້ປະພຶຕຜິດໃນກາມທັງຫລາຍ ຄືເຖິງຄວາມສົມສູ່ໃນຍິງທີ່ມີມາຣດາຮັກສາ, ທີ່ມີບິດາຮັກສາ, ທີ່ມີທັງມາຣດາແລະບິດາຮັກສາ, ທີ່ມີອ້າຍນ້ອງຊາຍຮັກສາ, ທີ່ມີເອື້ອຍນ້ອງສາວຮັກສາ, ທີ່ມີຍາຕຮັກສາ, ທີ່ມີທັມຮັກສາ, ທີ່ມີສາມີ, ທີ່ມີອາຊຍາໂດຍຮອບ, ໂດຍທີ່ສຸດແມ່ນແຕ່ຍິງທີ່ເຂົາຄ້ອງແລ້ວດ້ວຍພວງມາລັຍ (*ຍິງທີ່ເຂົາໝັ້ນໄວ້*)

ເປັນຜູ້ເວົ້າຕົວະ ຄືເຂົາຢູ່ໃນສະພາ ຢູ່ໃນບໍຣິສັທ ຢູ່ໃນທ່າມກາງຍາຕ ຢູ່ໃນທ່າມກາງເສນາ ຫລືຢູ່ໃນທ່າມກາງຣາຊະສະກຸລ ຖືກຜູ້ອື່ນນຳໄປເປັນພະຍານຊັກຖາມວ່າ ທ່ານຜູ້ຈະເຣີນ ທ່ານຮູ້ສິ່ງໃດຈົ່ງກ່າວສິ່ງນັ້ນ ດັ່ງນີ້, ບຸຄຄົລນັ້ນເມື່ອບໍ່ຮູ້ກໍກ່າວວ່າຮູ້ ຫລືເມື່ອຮູ້ກໍກ່າວວ່າບໍ່ຮູ້, ເມື່ອບໍ່ເຫັນກໍກ່າວວ່າເຫັນ ຫລືເມື່ອເຫັນກໍກ່າວວ່າບໍ່ເຫັນ ເປັນຜູ້ກ່າວຕົວະທັງໆທີ່ຮູ້ຢູ່ ເພາະເຫຕແຫ່ງຕົນແດ່ ເພາະເຫຕແຫ່ງຜູ້ອື່ນແດ່ ເພາະເຫຕເຫັນແກ່ອາມິສເລັກນ້ອຍແດ່ ດ້ວຍປະການດັ່ງນີ້.

ເປັນຜູ້ເວົ້າສຽດສີ ຄືຟັງຈາກຂ້າງນີ້ແລ້ວໄປບອກຂ້າງນັ້ນ ເພື່ອທຳລາຍຄົນຝ່າຍນີ້ ຫລືຟັງຈາກຂ້າງນັ້ນແລ້ວມາບອກຂ້າງນີ້ ເພື່ອທຳລາຍຄົນຝ່າຍນັ້ນ ຍຸຍົງຄົນທັງຫລາຍຜູ້ສາມັຄຄີກັນໃຫ້ແຕກກັນ ຫລືສົ່ງເສີມຄົນຜູ້ແຕກກັນແລ້ວ ຊອບຄວາມແຕກກັນ ຍິນດີໃນຄວາມແຕກກັນ ເພີດເພີນໃນຄວາມແຕກກັນ ກ່າວແຕ່ຄຳທີ່ເຮັດໃຫ້ແຕກກັນ.

ເປັນຜູ້ເວົ້າຄຳຫຍາບ ຄືກ່າວວາຈາຫຍາບຊ້າ ກ້າແຂງ ເດືອດຮ້ອນຜູ້ອື່ນ ສຽບແທງຜູ້ອື່ນ ໃກ້ຕໍ່ຄວາມໂກທ ບໍ່ເປັນໄປເພື່ອສະມາທິ.

ເປັນຜູ້ເວົ້າຄຳສັມຜັປປະລາປະ ຄືກ່າວບໍ່ຖືກກາລ ກ່າວບໍ່ຈິງ ກ່າວບໍ່ອີງອັຕຖະ ກ່າວບໍ່ອີງທັມ ກ່າວບໍ່ອີງວິນັຍ ກ່າວວາຈາທີ່ບໍ່ມີຫລັກຖານ ບໍ່ມີທີ່ອ້າງ ບໍ່ມີທີ່ສຸດ ບໍ່ຖືກກາລະເທສະ ຫາປະໂຍຊນ໌ບໍ່ໄດ້.

ເປັນຜູ້ໂລພຢາກໄດ້ຂອງຜູ້ອື່ນ ຄືຢາກໄດ້ວັຕຖຸອຸປະກອນແຫ່ງຊັພຍ໌ເຄື່ອງປື້ມໃຈຂອງຜູ້ອື່ນ ຂອງບຸຄຄົລອື່ນວ່າ ເຮັດແນວໃດໜໍ ວັຕຖຸອຸປະກອນແຫ່ງຊັພຍ໌ເຄື່ອງປື້ມໃຈຂອງຜູ້ອື່ນຂອງບຸຄຄົລອື່ນຈຶ່ງຈະມາເປັນຂອງເຮົາ ດັ່ງນີ້.

ເປັນຜູ້ມີຈິຕພະຍາບາທ ຄືມີຄວາມດຳຣິໃນໃຈອັນຊົ່ວຮ້າຍວ່າ ຂໍສັຕເຫລົ່ານີ້ຈົ່ງຖືກຂ້າ ຈົ່ງຖືກທຳລາຍ ຈົ່ງຂາດສູນ ຈົ່ງພິນາສ ຫລືຢ່າໄດ້ເປັນແລ້ວ ດັ່ງນີ້.

ເປັນຜູ້ມີຄວາມເຫັນຜິດ ຄືມີຄວາມເຫັນວິປະຣິຕວ່າ: ທານທີ່ໃຫ້ແລ້ວບໍ່ມີ*(ນັຕຖິ ທິນນັງ)*, ການບູຊາແລ້ວບໍ່ມີ*(ນັຕຖິ ຍິຕຖັງ)*, ການບວງສວງແລ້ວບໍ່ມີ*(ນັຕຖິ ຫຸຕັງ)*, ຜົລວິບາກຂອງກັມທີ່ກະທຳດີກະທຳຊົ່ວແລ້ວບໍ່ມີ*(ນັຕຖິ ສຸກະຕະທຸກກະຕານັງ ກັມມານັງ ຜະລັງ ວິປາໂກ)*, ໂລກນີ້ບໍ່ມີ*(ນັຕຖິ ອະຍັງ ໂລໂກ)*, ໂລກໜ້າບໍ່ມີ*(ນັຕຖິ ປະຣະ ໂລໂກ)*, ມາຣດາບໍ່ມີ*(ນັຕຖິ ມາຕາ)*, ບິດາບໍ່ມີ*(ນັຕຖິ ປິຕາ)*, ໂອປປາຕິກະສັຕບໍ່ມີ*(ນັຕຖິ ສັຕຕາ ໂອປປາຕິກາ)*, ສະມະນະພຣາມທັງຫລາຍຜູ້ດຳເນີນຊອບ ປະຕິບັຕຊອບ ກະທຳໃຫ້ແຈ້ງເຊິ່ງໂລກນີ້ແລະໂລກໜ້າດ້ວຍປັນຍາອັນຍິ່ງເອງແລ້ວ ສອນຜູ້ອື່ນໃຫ້ຮູ້ແຈ້ງຕາມ ຍ່ອມບໍ່ມີໃນໂລກ ດັ່ງນີ້, *(ນັຕຖິ ໂລໂກ ສະມະນະພຣາມມະນາ ສັມມັຄຄະຕາ ສັມມາປະຕິປັນນາ ເຍ ອິມັນຈະ ໂລກັງ ປະຣັນຈະ ໂລກັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທນະຕີຕິ)*.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການນີ້ແລ ຍ່ອມເປັນຜູ້ຖືກປະຖິ້ມໄວ້ໃນນະຣົກ ເໝືອນສິ່ງຂອງທີ່ເຂົານຳມາປະຖິ້ມໄວ້.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ ຍ່ອມເປັນຜູ້ຖືກເຊີນມາປະດິສຖານໄວ້ໃນສວັນ ເໝືອນສິ່ງຂອງທີ່ນຳມາປະດິສຖານໄວ້; ທັມ ໑໐ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ລະການຂ້າສັຕ ເວັ້ນຂາດຈາກການຂ້າສັຕ ວາງທ່ອນໄມ້ ວາງສັສຕຣາ ມີຄວາມລະອາຍ ມີຄວາມເອັນດູ ມີຄວາມກະຣຸນາ ຫວັງປະໂຍຊນ໌ເກື້ອກູນແກ່ສັຕທັງປວງຢູ່.

ເປັນຜູ້ລະການລັກຊັພຍ໌ ເວັ້ນຂາດຈາກການລັກຊັພຍ໌ ບໍ່ຖືເອົາວັຕຖຸອຸປະກອນແຫ່ງຊັພຍ໌ເຄື່ອງປີ້ມໃຈຂອງຜູ້ອື່ນ ຂອງບຸຄຄົລອື່ນເຊິ່ງຢູ່ໃນບ້ານຫລືໃນປ່າ ທີ່ເຈົ້າຂອງບໍ່ໄດ້ໃຫ້ດ້ວຍຈິຕຄິດຂະໂມຍ.

ເປັນຜູ້ລະການປະພຶຕຜິດໃນກາມທັງຫລາຍ ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ ຄືບໍ່ເຖິງຄວາມສົມສູ່ໃນຍິງທີ່ມີມາຣດາຮັກສາ, ທີ່ມີບິດາຮັກສາ, ທີ່ມີທັງມາຣດາແລະບິດາຮັກສາ, ທີ່ມີອ້າຍນ້ອງຊາຍຮັກສາ, ທີ່ມີເອື້ອຍນ້ອງສາວຮັກສາ, ທີ່ມີຍາຕຮັກສາ, ທີ່ມີທັມຮັກສາ, ທີ່ມີສາມີ, ທີ່ມີອາຊຍາໂດຍຮອບ, ໂດຍທີ່ສຸດແມ່ນແຕ່ຍິງທີ່ເຂົາຄ້ອງແລ້ວດ້ວຍພວງມາລັຍ (*ຍິງທີ່ເຂົາໝັ້ນໄວ້*)

ເປັນຜູ້ລະການເວົ້າຕົວະ ເວັ້ນຂາດຈາກການເວົ້າຕົວະ ຄືຢູ່ໃນສະພາ ຢູ່ໃນບໍຣິສັທ ຢູ່ໃນທ່າມກາງຍາຕ ຢູ່ໃນທ່າມກາງເສນາ ຫລືຢູ່ໃນທ່າມກາງຣາຊະສະກຸລ ຖືກຜູ້ອື່ນນໍາໄປເປັນພະຍານ ຊັກຖາມວ່າ ທ່ານຜູ້ຈະເຣີນ ທ່ານຮູ້ສິ່ງໃດຈົ່ງກ່າວສິ່ງນັ້ນ ດັ່ງນີ້ ບຸຄຄົລນັ້ນເມື່ອບໍ່ຮູ້ກໍກ່າວວ່າບໍ່ຮູ້ ຫລືເມື່ອຮູ້ກໍກ່າວວ່າຮູ້, ເມື່ອບໍ່ເຫັນກໍກ່າວວ່າບໍ່ເຫັນ ຫລືເມື່ອເຫັນກໍກ່າວວ່າເຫັນ ບໍ່ເປັນຜູ້ກ່າວຕົວະທັງໆທີ່ຮູ້ຢູ່ ເພາະເຫຕແຫ່ງຕົນແດ່ ເພາະເຫຕແຫ່ງຜູ້ອື່ນແດ່ ເພາະເຫຕເຫັນແກ່ອາມິສເລັກນ້ອຍແດ່ ດ້ວຍປະການດັ່ງນີ້.

ເປັນຜູ້ລະການເວົ້າສຽດສີ ເວັ້ນຂາດຈາກການເວົ້າສຽດສີ ຄືຟັງຈາກຂ້າງນີ້ແລ້ວບໍ່ໄປບອກຂ້າງນັ້ນ ເພື່ອທໍາລາຍຄົນຝ່າຍນີ້ ຫລືຟັງຈາກຂ້າງນັ້ນແລ້ວບໍ່ມາບອກຂ້າງນີ້ ເພື່ອທໍາລາຍຄົນຝ່າຍນັ້ນ ສະໝານຄົນທີ່ແຕກກັນແດ່ ຫລືສົ່ງເສີມຄົນທີ່ພ້ອມພຽງກັນແດ່ ຊອບຄົນຜູ້ພ້ອມພຽງກັນ ຍິນດີໃນຄວາມພ້ອມພຽງກັນ ເພີດເພີນໃນຄວາມພ້ອມພຽງກັນ ກ່າວແຕ່ຄໍາທີ່ເຮັດໃຫ້ຄົນພ້ອມພຽງກັນ.

ເປັນຜູ້ລະການເວົ້າຄໍາຫຍາບ ເວັ້ນຂາດຈາກການເວົ້າຄໍາຫຍາບ ກ່າວວາຈາທີ່ບໍ່ມີໂທສ ມ່ວນຫູ ຊວນໃຫ້ຮັກ ຈັບໃຈ ເປັນວາຈາຂອງຊາວເມືອງ ທີ່ຄົນສ່ວນໃຫຍ່ຮັກໃຄ່ພໍໃຈ.

ເປັນຜູ້ລະຄຳສັມຜັປປະລາປະ ເວັ້ນຂາດຈາກຄຳສັມຜັປປະລາປະ ຄືເວົ້າຖືກກາລ ເວົ້າແຕ່ຄຳຈິງ ເວົ້າອີງອັຕຖະ ເວົ້າອີງທັມ ເວົ້າອີງວິນັຍ ເວົ້າຖ້ອຍຄຳທີ່ມີຫລັກຖານ ມີທີ່ອ້າງ ມີທີ່ສຸດ ຖືກກາລະເທສະ ປະກອບດ້ວຍປະໂຍຊນ໌.

ເປັນຜູ້ບໍ່ມີຄວາມຄິດໂລພຢາກໄດ້ຂອງຜູ້ອື່ນ ຄືບໍ່ຢາກໄດ້ວັຕຖຸອຸປະກອນແຫ່ງຊັພຍ໌ເຄື່ອງປື້ມໃຈຂອງຜູ້ອື່ນ ຂອງບຸຄຄົລອື່ນວ່າ ເຮັດແນວໃດໜໍ ວັຕຖຸອຸປະກອນແຫ່ງຊັພຍ໌ເຄື່ອງປື້ມໃຈຂອງຜູ້ອື່ນ ຂອງບຸຄຄົລອື່ນຈຶ່ງຈະມາເປັນຂອງເຮົາ ດັ່ງນີ້.

ເປັນຜູ້ບໍ່ມີຈິຕພະຍາບາທ ຄືບໍ່ມີຄວາມດຳຣິໃນໃຈອັນຊົ່ວຮ້າຍວ່າ ຂໍສັຕເຫລົ່ານີ້ຈົ່ງເປັນຜູ້ບໍ່ມີເວຣ ບໍ່ມີພະຍາບາທ ບໍ່ມີທຸກຂ໌ມີແຕ່ຄວາມສຸຂ ຮັກສາຕົນເຖີດ ດັ່ງນີ້.

ເປັນຜູ້ມີຄວາມເຫັນຊອບ ມີຄວາມເຫັນບໍ່ວິປະຣິຕວ່າ: ທານທີ່ໃຫ້ແລ້ວມີ*(ອັຕຖິ ທິນນັງ)*, ການບູຊາແລ້ວມີ*(ອັຕຖິ ຍິຕຖັງ)*, ການບວງສວງແລ້ວມີ*(ອັຕຖິ ຫຸຕັງ)*, ຜົລວິບາກຂອງກັມທີ່ກະທຳດີກະທຳຊົ່ວແລ້ວມີ*(ອັຕຖິ ສຸກະຕະທຸກກະຕານັງ ກັມມານັງ ຜະລັງ ວິປາໂກ)*, ໂລກນີ້ມີ*(ອັຕຖິ ອະຍັງ ໂລໂກ)*, ໂລກໜ້າມີ*(ອັຕຖິ ປະຣະ ໂລໂກ)*, ມາຣດາມີ*(ອັຕຖິ ມາຕາ)*, ບິດາມີ*(ອັຕຖິ ປິຕາ)*, ໂອປປາຕິກະສັຕມີ*(ອັຕຖິ ສັຕຕາ ໂອປປາຕິກາ)*, ສະມະນະພຣາມທັງຫລາຍຜູ້

ດຳເນີນຊອບ ປະຕິບັຕຊອບ ກະທຳໃຫ້ແຈ້ງເຊິ່ງໂລກນີ້ແລະໂລກໜ້າດ້ວຍປັນຍາອັນຍິ່ງເອງແລ້ວ ສອນຜູ້ອື່ນໃຫ້ຮູ້ແຈ້ງຕາມມີຢູ່ ດັ່ງນີ້, *(ອັຕຖິ ໂລໂກ ສະມະນະພຣາມມະນາ ສັມມັຄຄະຕາ ສັມມາປະຕິປັນນາ ເຍ ອິມັນຈະ ໂລກັງ ປະຣັນຈະ ໂລກັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທນະຕີຕິ).*

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໑໐ ປະການີ້ແລ ຍ່ອມເປັນຜູ້ຖືກເຊີນມາປະດິສຖານໄວ້ໃນສວັນ ເໝືອນສິ່ງຂອງທີ່ນຳມາປະດິສຖານໄວ້.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໒໕໙/໑໗໙*



ພິກຂຸທັງຫລາຍ ການເມສຸມິຈສາຈາຣທີ່ບຸຄຄົລເສພ
ແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນ
ໄປເພື່ອນະຣົກ ເປັນໄປເພື່ອກຳເນີດດິຣັຈສານ ເປັນ
ໄປເພື່ອເປຕວິສັຍ ວິບາກແຫ່ງການເມສຸມິຈສາຈາຣ
ຢ່າງເບົາທີ່ສຸດ ຍ່ອມຍັງສັດຕູແລະເວຣໃຫ້ເປັນໄປແກ່
ຜູ້ມາເກີດເປັນມະນຸສ.

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*
*໒໓/໑໙໓/໑໓໐*



# ທັມສະມາທານ ໔ ຢ່າງ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍວ່າ:

ພິກຂຸທັງຫລາຍ!

ພິກຂຸເຫລົ່ານັ້ນທູລຮັບພຣະດໍາຣັສຂອງພຣະຜູ້ມີພຣະພາຄແລ້ວ ພຣະຜູ້ມີພຣະພາຄຕຣັສວ່າ:

ພິກຂຸທັງຫລາຍ! ໂດຍສ່ວນຫລາຍສັຕທັງຫລາຍມີຄວາມປາຖນາ ມີຄວາມພໍໃຈ ມີຄວາມປະສົງຢ່າງນີ້ວ່າ ໂອໜໍ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຈົ່ງເສື່ອມໄປ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຈົ່ງຈະເຣີນຂຶ້ນ ດັ່ງນີ້.

ພິກຂຸທັງຫລາຍ! ເມື່ອສັຕເຫລົ່ານັ້ນມີຄວາມປາຖນາ ມີຄວາມພໍໃຈ ມີຄວາມປະສົງຢ່າງນີ້ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມເສື່ອມໄປ, ພິກຂຸທັງຫລາຍ ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຍ່ອມເຂົ້າໃຈເຫຕນັ້ນຢ່າງໃດ?

ພິກຂຸເຫລົ່ານັ້ນກຣາບທູລວ່າ:
ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ທັມທັງຫລາຍຂອງພວກຂ້ານ້ອຍມີພຣະຜູ້ມີພຣະພາຄເປັນມູລ ມີພຣະຜູ້ມີພຣະພາຄເປັນຜູ້ນຳ ມີພຣະຜູ້ມີພຣະພາຄເປັນທີ່ເພິ່ງອາສັຍ. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍປະທານພຣະວະໂຣກາສ ຂໍເນື້ອຄວາມແຫ່ງພາສິຕນັ້ນຈົ່ງແຈ່ມແຈ້ງກັບພຣະຜູ້ມີພຣະພາຄເຖີດ ພິກຂຸທັງຫລາຍໄດ້ຟັງຕໍ່ພຣະຜູ້ມີພຣະພາຄແລ້ວ ຈັກຊົງຈຳໄວ້.

ພິກຂຸທັງຫລາຍ! ຖ້າຢ່າງນັ້ນ ພວກເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈັກກ່າວ.

ພິກຂຸເຫລົ່ານັ້ນທູລຮັບພຣະດຳຣັສຂອງພຣະຜູ້ມີພຣະພາຄແລ້ວ ພຣະຜູ້ມີພຣະພາຄຕຣັສວ່າ:

ພິກຂຸທັງຫລາຍ! ປຸຖຸຊົນຜູ້ບໍ່ໄດ້ສະດັບໃນໂລກນີ້ ບໍ່ໄດ້ເຫັນພຣະອະຣິຍະ ບໍ່ສລາດໃນທັມຂອງພຣະອະຣິຍະ ບໍ່ໄດ້ຝຶກໃນທັມຂອງພຣະອະຣິຍະ ບໍ່ໄດ້ເຫັນສັປບຸຣຸສ ບໍ່ສລາດໃນທັມຂອງສັປບຸຣຸສ ບໍ່ໄດ້ຝຶກໃນທັມຂອງສັປບຸຣຸສ ຍ່ອມບໍ່ຮູ້ຈັກທັມທີ່ຄວນເສພ ຍ່ອມບໍ່ຮູ້ຈັກທັມທີ່ບໍ່ຄວນເສພ ຍ່ອມບໍ່ຮູ້ຈັກທັມທີ່ຄວນຄົບ ຍ່ອມບໍ່ຮູ້ຈັກທັມທີ່ບໍ່ຄວນຄົບ ເມື່ອບໍ່ຮູ້ຈັກທັມທີ່ຄວນເສພ ບໍ່ຮູ້ຈັກທັມທີ່ບໍ່ຄວນເສພ ບໍ່ຮູ້ຈັກທັມທີ່ຄວນຄົບ ບໍ່ຮູ້ຈັກທັມທີ່ບໍ່ຄວນຄົບ ກໍເສພທັມທີ່ບໍ່ຄວນເສພ ບໍ່ເສພທັມທີ່ຄວນເສພ ຄົບທັມທີ່ບໍ່ຄວນຄົບ ບໍ່ຄົບທັມທີ່ຄວນຄົບ ເມື່ອເສພທັມທີ່ບໍ່ຄວນເສພ ບໍ່ເສພທັມທີ່ຄວນເສພ ຄົບທັມທີ່ບໍ່ຄວນຄົບ ບໍ່ຄົບທັມທີ່ຄວນຄົບ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈຍ່ອມຈະເຣີນຍິ່ງ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈຍ່ອມເສື່ອມໄປ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະປຸຖຸຊົນບໍ່ຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ສ່ວນອະຣິຍະສາວົກຜູ້ໄດ້ສະດັບແລ້ວ ໄດ້ເຫັນພຣະອະຣິຍະ ສລາດໃນທັມຂອງພຣະອະຣິຍະ ໄດ້ຝຶກດີແລ້ວໃນທັມຂອງພຣະອະຣິຍະ ໄດ້ເຫັນສັປບຸຣຸສ ສລາດໃນ

ທັມຂອງສັປບຸຣຸສ ໄດ້ຝຶກດີແລ້ວໃນທັມຂອງສັປບຸຣຸສ ຍ່ອມຮູ້ຈັກທັມທີ່ຄວນເສພ ຍ່ອມຮູ້ຈັກທັມທີ່ບໍ່ຄວນເສພ ຍ່ອມຮູ້ຈັກທັມທີ່ຄວນຄົບ ຍ່ອມຮູ້ຈັກທັມທີ່ບໍ່ຄວນຄົບ ເມື່ອຮູ້ຈັກທັມທີ່ຄວນເສພ ຮູ້ຈັກທັມທີ່ບໍ່ຄວນເສພ ຮູ້ຈັກທັມທີ່ຄວນຄົບ ຮູ້ຈັກທັມທີ່ບໍ່ຄວນຄົບ ກໍບໍ່ເສພທັມທີ່ບໍ່ຄວນເສພ ຍ່ອມເສພທັມທີ່ຄວນເສພ ບໍ່ຄົບທັມທີ່ບໍ່ຄວນຄົບ ຍ່ອມຄົບທັມທີ່ຄວນຄົບ ເມື່ອບໍ່ເສພທັມທີ່ບໍ່ຄວນເສພ ເສພທັມທີ່ຄວນເສພ ບໍ່ຄົບທັມທີ່ບໍ່ຄວນຄົບ ຄົບທັມທີ່ຄວນຄົບ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມເສື່ອມໄປ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະອະຣິຍະສາວົກຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ທັມສະມາທານ ៤ ຢ່າງນີ້, ៤ ຢ່າງເປັນຢ່າງໃດ?

**ທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປກໍມີ.**

**ທັມສະມາທານທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປກໍມີ.**

**ທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປກໍມີ.**

**ທັມສະມາທານທີ່ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປກໍມີ.**

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລບໍ່ຮູ້ຈັກທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປ ໄປແລ້ວໃນອະວິຊຊາ ຍ່ອມບໍ່ຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປ ເມື່ອບໍ່ຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນອະວິຊຊາ ບໍ່ຮູ້ຊັດຕາມຄວາມເປັນຈິງ ຈຶ່ງເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ເມື່ອເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມເສື່ອມໄປ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນບໍ່ຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລບໍ່ຮູ້ຈັກທັມສະມາທານທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປ ໄປແລ້ວໃນອະວິຊຊາ ຍ່ອມບໍ່ຮູ້ຊັດຕາມຄວາມເປັນຈິງ

ວ່າ ທັມສະມາທານນີ້ແລ ທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປ ເມື່ອບໍ່ຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນອະວິຊຊາ ບໍ່ຮູ້ຊັດຕາມຄວາມເປັນຈິງ ຈຶ່ງເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ເມື່ອເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມເສື່ອມໄປ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນບໍ່ຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລບໍ່ຮູ້ຈັກທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປ ໄປແລ້ວໃນອະວິຊຊາ ຍ່ອມບໍ່ຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປ ເມື່ອບໍ່ຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນອະວິຊຊາ ບໍ່ຮູ້ຊັດຕາມຄວາມເປັນຈິງ ຈຶ່ງບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ເມື່ອບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມເສື່ອມໄປ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນບໍ່ຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລບໍ່ຮູ້ຈັກທັມສະມາທານທີ່ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປ ໄປແລ້ວໃນອະວິຊຊາ ຍ່ອມບໍ່ຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປ ເມື່ອບໍ່ຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນອະວິຊຊາ ບໍ່ຮູ້ຊັດຕາມຄວາມເປັນຈິງ ຈຶ່ງບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ເມື່ອບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມເສື່ອມໄປ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນບໍ່ຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລຮູ້ຈັກທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປ ເມື່ອຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງ ຈຶ່ງບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ເມື່ອບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມເສື່ອມໄປ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າ

ພໍໃຈ ຍ່ອມຈະເຣີນຍິ່ງ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລຮູ້ຈັກທັມສະມາທານທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປ ເມື່ອຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງ ຈຶ່ງບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ເມື່ອບໍ່ເສພທັມສະມາທານນັ້ນ ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມເສື່ອມໄປ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລຮູ້ຈັກທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປ ເມື່ອຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງ ຈຶ່ງເສພທັມສະມາທານນັ້ນ ບໍ່ລະເວັ້ນ

ທັມສະມາທານນັ້ນ ເມື່ອເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມເສື່ອມໄປ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນຮູ້ຖືກຕ້ອງ.

ພິກຂຸທັງຫລາຍ! ບັນດາທັມສະມາທານເຫລົ່ານັ້ນ ບຸຄຄົລຮູ້ຈັກທັມສະມາທານທີ່ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງວ່າ ທັມສະມາທານນີ້ແລ ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປ ເມື່ອຮູ້ຈັກທັມສະມາທານນັ້ນ ໄປແລ້ວໃນວິຊຊາ ຍ່ອມຮູ້ຊັດຕາມຄວາມເປັນຈິງ ຈຶ່ງເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ເມື່ອເສພທັມສະມາທານນັ້ນ ບໍ່ລະເວັ້ນທັມສະມາທານນັ້ນ ທັມທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈ ຍ່ອມເສື່ອມໄປ ທັມທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ຍ່ອມຈະເຣີນຍິ່ງ ຂໍ້ນັ້ນເປັນເພາະເຫຕໃດ? ເປັນເພາະບຸຄຄົລນັ້ນຮູ້ຖືກຕ້ອງ.

**ພິກຂຸທັງຫລາຍ! ກໍທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປເປັນຢ່າງໃດ?**

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມ ສເວີຍທຸກຂ໌ໂທມະນັສ ເພາະປານາຕິບາຕເປັນປັຈຈັຍ.

ເປັນຜູ້ຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະອະທິນນາທານເປັນປັຈຈັຍ.

ເປັນຜູ້ປະພຶຕຜິດໃນກາມທັງຫລາຍ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະກາເມສຸມິຈສາຈາຣເປັນປັຈຈັຍ.

ເປັນຜູ້ເວົ້າຕົວະ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະ ນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະມຸສາວາທ ເປັນປັຈຈັຍ.

ເປັນຜູ້ເວົ້າສຽດສີ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະ ນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະປິສຸນາວາຈາ ເປັນປັຈຈັຍ.

ເປັນຜູ້ເວົ້າຄຳຫຍາບ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະຜະຣຸສະວາຈາເປັນປັຈຈັຍ.

ເປັນຜູ້ເວົ້າຄຳສັມຜັປປະລາປະ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະສັມຜັປປະລາປະເປັນປັຈຈັຍ.

ເປັນຜູ້ມີອະພິຊຊາຫລາຍ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະອະພິຊຊາເປັນປັຈຈັຍ.

ເປັນຜູ້ມີຈິຕພະຍາບາທ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະພະຍາບາທເປັນປັຈຈັຍ.

ເປັນຜູ້ມີຄວາມເຫັນຜິດ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະມິຈສາທິຕຖິເປັນປັຈຈັຍ.

**ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.**

**ພິກຂຸທັງຫລາຍ! ທັມສະມາທານນີ້ແລ ທີ່ມີທຸກຂ໌ໃນປັຈຈຸບັນ ແລະມີທຸກຂ໌ເປັນວິບາກຕໍ່ໄປ.**

ພິກຂຸທັງຫລາຍ! ກໍທັມສະມາທານທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ຂ້າສັຕ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະປານາຕິບາຕເປັນປັຈຈັຍ.

ເປັນຜູ້ຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະອະທິນນາທານເປັນປັຈຈັຍ.

ເປັນຜູ້ປະພຶຕຜິດໃນກາມທັງຫລາຍ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະກາເມສຸມິຈສາຈາຣເປັນປັຈຈັຍ.

ເປັນຜູ້ເວົ້າຕົວະ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະມຸສາວາທເປັນປັຈຈັຍ.

ເປັນຜູ້ເວົ້າສຽດສີ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະປິສຸນາວາຈາເປັນປັຈຈັຍ.

ເປັນຜູ້ເວົ້າຄຳຫຍາບ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະຜະຣຸສະວາຈາເປັນປັຈຈັຍ.

ເປັນຜູ້ເວົ້າຄຳສັມຜັປປະລາປະ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະສັມຜັປປະລາປະເປັນປັຈຈັຍ.

ເປັນຜູ້ມີອະພິຊຊາຫລາຍ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະອະພິຊຊາເປັນປັຈຈັຍ.

ເປັນຜູ້ມີຈິດພະຍາບາທ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະພະຍາບາທເປັນປັຈຈັຍ.

ເປັນຜູ້ມີຄວາມເຫັນຜິດ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະມິຈສາທິຕຖິເປັນປັຈຈັຍ.

ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

ພິກຂຸທັງຫລາຍ! ທັມສະມາທານນີ້ແລ ທີ່ມີສຸຂໃນປັຈຈຸບັນ ແຕ່ມີຂ໌ທຸກຂ໌ເປັນວິບາກຕໍ່ໄປ.

**ພິກຂຸທັງຫລາຍ! ກໍທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປເປັນຢ່າງໃດ?**

**ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ເວັ້ນຂາດຈາກການຂ້າສັຕ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກປານາຕິບາຕເປັນປັຈຈັຍ.**

ເປັນຜູ້ເວັ້ນຂາດຈາກການຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກອະທິນນາທານເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກກາເມສຸມິຈສາຈາຣເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າຕົວະ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກມຸສາວາທເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າສຽດສີ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກປິສຸນາວາຈາເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າຄຳຫຍາບ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກຜະຣຸສະວາຈາເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າຄຳສັມຜັປປະລາປະ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການເວັ້ນຈາກສັມຜັປປະລາປະເປັນປັຈຈັຍ.

ເປັນຜູ້ບໍ່ມີອະພິຊຊາຫລາຍ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະອະນະພິຊຊາເປັນປັຈຈັຍ.

ເປັນຜູ້ບໍ່ມີຈິຕພະຍາບາທ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະການບໍ່ພະຍາບາທເປັນປັຈຈັຍ.

ເປັນຜູ້ມີຄວາມເຫັນຊອບ ປະກອບດ້ວຍທຸກຂ໌ແດ່ ປະກອບດ້ວຍໂທມະນັສແດ່ ຍ່ອມສເວີຍທຸກຂ໌ໂທມະນັສ ເພາະສັມມາທິຕຖິເປັນປັຈຈັຍ.

ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ພິກຂຸທັງຫລາຍ! ທັມສະມາທານນີ້ແລ ທີ່ມີທຸກຂ໌ໃນປັຈຈຸບັນແຕ່ມີສຸຂເປັນວິບາກຕໍ່ໄປ.

ພິກຂຸທັງຫລາຍ! ກໍທັມສະມາທານທີ່ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ເປັນຜູ້ເວັ້ນຂາດຈາກການຂ້າສັຕ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກປານາຕິບາຕເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກອະທິນນາທານເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກກາເມສຸມິຈສາຈາຣເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າຕົວະ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກມຸສາວາທເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າສຽດສີ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກປິສຸນາວາຈາເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າຄຳຫຍາບ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກຜະຣຸສະວາຈາເປັນປັຈຈັຍ.

ເປັນຜູ້ເວັ້ນຂາດຈາກການເວົ້າຄຳສັມຜັປປະລາປະ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການເວັ້ນຈາກສັມຜັປປະລາປະເປັນປັຈຈັຍ.

ເປັນຜູ້ບໍ່ມີອະພິຊຊາຫລາຍ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະອະນະພິຊຊາເປັນປັຈຈັຍ.

ເປັນຜູ້ບໍ່ມີຈິຕພະຍາບາທ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະການບໍ່ພະຍາບາທເປັນປັຈຈັຍ.

ເປັນຜູ້ມີຄວາມເຫັນຊອບ ປະກອບດ້ວຍສຸຂແດ່ ປະກອບດ້ວຍໂສມະນັສແດ່ ຍ່ອມສເວີຍສຸຂໂສມະນັສ ເພາະສັມມາສາທິຕຖິເປັນປັຈຈັຍ.

ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ.

ພິກຂຸທັງຫລາຍ! ທັມສະມາທານນີ້ແລ ທີ່ມີສຸຂໃນປັຈຈຸບັນແລະມີສຸຂເປັນວິບາກຕໍ່ໄປ.

ພິກຂຸທັງຫລາຍ! ທັມສະມາທານ ໔ ປະການນີ້ແລ.

ພິກຂຸທັງຫລາຍ! ປຽບເໝືອນນ້ຳເຕົ້າຂົມປົນດ້ວຍຢາພິດ ບຸຣຸສທີ່ຮັກຊີວິຕ ບໍ່ຢາກຕາຍ ຮັກສຸຂ ລັງກຽດທຸກຂ໌ ມາເຖິງແລ້ວຊົນທັງຫລາຍບອກເຂົາວ່າ ທ່ານຜູ້ຈະເຣີນ ນ້ຳເຕົ້າຂົມນີ້ປົນດ້ວຍຢາພິດ ຖ້າທ່ານປາຖນາຈະດື່ມກໍຈົ່ງດື່ມເຖີດ ນ້ຳເຕົ້າຂົມນັ້ນຈັກບໍ່ແຊບແກ່ທ່ານຜູ້ດື່ມ ທັງສີ ທັງກິ່ນ ທັງຣົສ ຄັນທ່ານດື່ມເຂົ້າແລ້ວ ຈັກເຖິງຄວາມຕາຍ ຫລືຈັກເຖິງຄວາມທຸກຂ໌ປາງຕາຍ. ບຸຣຸສນັ້ນບໍ່ພິຈາຣະນານ້ຳເຕົ້າຂົມນັ້ນແລ້ວ ດື່ມບໍ່ວາງຍ່ອມບໍ່ແຊບ ເພາະສີແດ່ ກິ່ນແດ່ ຣົສແດ່ ຄັນດື່ມແລ້ວ ຍ່ອມເຖິງຄວາມຕາຍ ຫລືເຖິງຄວາມທຸກຂ໌ປາງຕາຍ ສັນໃດ; ພິກຂຸ

ທັງຫລາຍ ເຮົາກ່າວທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແລະ ມີທຸກຂ໌ເປັນວິບາກຕໍ່ໄປວ່າ ມີອຸປະມາ ສັນນັ້ນ.

ພິກຂຸທັງຫລາຍ! ປຽບເໝືອນພາຊະນະນ້ຳຫວານອັນໜ້າດື່ມ ເຖິງພ້ອມດ້ວຍສີ ກິ່ນ ແລະຣົສ ແຕ່ປົນດ້ວຍຢາພິດ ບຸຣຸສທີ່ ຮັກຊີວິຕ ບໍ່ຢາກຕາຍ ຮັກສຸຂ ລັງກຽດທຸກຂ໌ ມາເຖິງແລ້ວ ຊົນ ທັງຫລາຍບອກເຂົາວ່າ ທ່ານຜູ້ຈະເຣີນ ພາຊະນະນ້ຳຫວານ ອັນໜ້າດື່ມນີ້ ເຖິງພ້ອມດ້ວຍສີ ກິ່ນ ແລະຣົສ ແຕ່ປົນດ້ວຍຢາ ພິດ ຖ້າທ່ານປາຖນາຈະດື່ມກໍຈົ່ງດື່ມເຖີດ ພາຊະນະນ້ຳຫວານ ນັ້ນຈັກຊອບໃຈແກ່ທ່ານຜູ້ດື່ມ ທັງສີ ທັງກິ່ນ ທັງຣົສ ຄັນທ່ານ ດື່ມເຂົ້າແລ້ວ ຈັກເຖິງຄວາມຕາຍ ຫລືຈັກເຖິງຄວາມທຸກຂ໌ປາງ ຕາຍ. ບຸຣຸສນັ້ນບໍ່ພິຈາຣະນາພາຊະນະນ້ຳຫວານນັ້ນແລ້ວ ດື່ມ ບໍ່ວາງ ກໍຊອບໃຈທັງສີແດ່ ທັງກິ່ນແດ່ ທັງຣົສແດ່ ຄັນດື່ມແລ້ວ ຍ່ອມເຖິງຄວາມຕາຍ ຫລືເຖິງຄວາມທຸກຂ໌ປາງຕາຍ ສັນໃດ; ພິກຂຸທັງຫລາຍ ເຮົາກ່າວທັມສະມາທານທີ່ມີສຸຂໃນປັຈຈຸບັນ ແຕ່ມີທຸກຂ໌ເປັນວິບາກຕໍ່ໄປວ່າ ມີອຸປະມາ ສັນນັ້ນ.

ພິກຂຸທັງຫລາຍ! ປຽບເໝືອນມູຕເນົ່າປົນດ້ວຍຢາຕ່າງໆ ບຸຣຸສ ທີ່ເປັນໂຣຄຜອມເຫລືອງມາເຖິງແລ້ວ ຊົນທັງຫລາຍບອກເຂົາ ວ່າ ທ່ານຜູ້ຈະເຣີນ ມູຕເນົ່າປົນດ້ວຍຢາຕ່າງໆ ຖ້າທ່ານປາຖ ນາຈະດື່ມກໍຈົ່ງດື່ມເຖີດ ມູຕເນົ່ານັ້ນຈັກບໍ່ຊອບໃຈແກ່ທ່ານຜູ້ດື່ມ

ທັງສີ ທັງກິ່ນ ທັງຣົສ ແຕ່ເມື່ອທ່ານດື່ມເຂົ້າແລ້ວ ຈັກມີຄວາມສຸຂ. ບຸຣຸສນັ້ນພິຈາຣະນາແລ້ວ ດື່ມບໍ່ວາງ ກໍບໍ່ຊອບໃຈ ທັງສີ ທັງກິ່ນ ທັງຣົສ ຄັນດື່ມແລ້ວ ກໍມີຄວາມສຸຂ ສັນໃດ; ພິກຂຸທັງຫລາຍ ເຮົາກ່າວທັມສະມາທານທີ່ມີທຸກຂ໌ໃນປັຈຈຸບັນ ແຕ່ມີສຸຂເປັນວິບາກຕໍ່ໄປວ່າ ມີອຸປະມາ ສັນນັ້ນ.

ພິກຂຸທັງຫລາຍ! ປຽບເໝືອນນົມສົ້ມ ນ້ຳເຜີ້ງ ເນີຍໃສ ແລະນ້ຳອ້ອຍ ເຂົາປົນເຂົ້າດ້ວຍກັນ ບຸຣຸສທີ່ເປັນໂຣຄລົງໂລຫິຕມາເຖິງແລ້ວ ຊົນທັງຫລາຍບອກເຂົາວ່າ ທ່ານຜູ້ຈະເຣີນ ນົມສົ້ມນ້ຳເຜີ້ງ ເນີຍໃສ ແລະນ້ຳອ້ອຍນີ້ ເຂົາປົນເຂົ້າດ້ວຍກັນ ຖ້າທ່ານປາຖນາຈະດື່ມກໍຈົ່ງດື່ມເຖີດ ຢານັ້ນຈັກຊອບໃຈແກ່ທ່ານຜູ້ດື່ມ ທັງສີ ທັງກິ່ນ ທັງຣົສ ເມື່ອທ່ານດື່ມເຂົ້າແລ້ວ ຈັກມີຄວາມສຸຂ. ບຸຣຸສນັ້ນພິຈາຣະນາແລ້ວ ດື່ມບໍ່ວາງ ກໍຊອບໃຈ ທັງສີ ທັງກິ່ນ ທັງຣົສ ຄັນດື່ມແລ້ວ ກໍມີຄວາມສຸຂ ສັນໃດ; ພິກຂຸທັງຫລາຍ ເຮົາກ່າວທັມສະມາທານທີ່ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປວ່າ ມີອຸປະມາ ສັນນັ້ນ.

ພິກຂຸທັງຫລາຍ! ໃນສາຣະທະສມັຍເດືອນທ້າຍແຫ່ງລະດູຝົນ ໃນອາກາສອັນປອດໂປ່ງ ປາສະຈາກເມກ ດວງອາທິຕລອຍຢູ່ທ້ອງຟ້າ ຍ່ອມກຳຈັດຄວາມມືດອັນມີໃນອາກາສທັງສິ້ນ ຍ່ອມສ່ອງແສງ ແຜດແສງ ຮຸ່ງສະວ່າງ ສັນໃດ; ພິກຂຸທັງຫລາຍ

ທັມສະມາທານທີ່ມີສຸຂໃນປັຈຈຸບັນ ແລະມີສຸຂເປັນວິບາກຕໍ່ໄປ ກຳຈັດແລ້ວເຊິ່ງວາທະຂອງສະມະນະແລະພຣາມທັງຫລາຍເຫລົ່າອື່ນ ຍ່ອມສະວ່າງ ຮຸ່ງເຮືອງ ໄພໂຣຈນ໌ ສັນັ້ນເໝືອນກັນ.

ພຣະຜູ້ມີພຣະພາຄໄດ້ຕຣັສພາສິຕນີ້ແລ້ວ ພິກຂຸເຫລົ່ານັ້ນມີໃຈຊື່ນຊົມຍິນດີພຣະພາສິຕຂອງພຣະຜູ້ມີພຣະພາຄແລ.

---

*ມັຊຊິມະນິກາຍ ມູລະປັນນາສກ໌ ໑໘/໓໙໙/໕໔໐*



# ວິບາກກັມ
# ຂອງບຸຄຄົລຜູ້ກະທຳອະກຸສົລ

ພິກຂຸທັງຫລາຍ! ປານາຕິບາຕທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດີຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງປານາຕິບາຕຢ່າງເບົາທີ່ສຸດ ຍ່ອມເປັນໄປເພື່ອອາຍຸສັ້ນແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ອະທິນນາທານທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງອະທິນນາທານຢ່າງເບົາທີ່ສຸດ ຍ່ອມເປັນໄປເພື່ອຄວາມພິນາສແຫ່ງໂພຄະຊັພຍ໌ແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ກາເມສຸມິຈສາຈາຣທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງກາເມສຸມິຈສາຈາຣຢ່າງເບົາທີ່ສຸດ ຍ່ອມຍັງສັດຕູແລະເວຣໃຫ້ເປັນໄປແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ມຸສາວາທທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງມຸສາວາທຢ່າງເບົາທີ່ສຸດ ຍ່ອມຖືກກ່າວຕູ່ດ້ວຍຄຳທີ່ບໍ່ເປັນຈິງແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ປິສຸນາວາຈາທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດີຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງປິສຸນາວາຈາຢ່າງເບົາທີ່ສຸດ ຍ່ອມເປັນໄປເພື່ອການແຕກຈາກມິຕແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ຜະຣຸສະວາຈາທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດີຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງຜະຣຸສະວາຈາຢ່າງເບົາທີ່ສຸດ ຍ່ອມເປັນໄປເພື່ອໄດ້ຍິນສຽງທີ່ບໍ່ໜ້າພໍໃຈແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ສັມຜັປປະລາປະທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດີຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງສັມຜັປປະລາປະຢ່າງເບົາທີ່ສຸດ ຍ່ອມຍັງຄຳທີ່ບໍ່ຄວນເຊື່ອຖືໃຫ້ເປັນໄປແກ່ຜູ້ມາເກີດເປັນມະນຸສ.

ພິກຂຸທັງຫລາຍ! ການດື່ມສຸຣາເມຣັຍ*(ສຸຣາເມຣະຍະປານັງ)* ທີ່ບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງການດື່ມສຸຣາເມຣັຍຢ່າງເບົາທີ່ສຸດ ຍ່ອມເປັນໄປເພື່ອຄວາມເປັນບ້າແກ່ຜູ້ມາເກີດເປັນມະນຸສ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*
*໔໓/໑໙໓/໑໓໐*



# ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍ...ແລ້ວໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມ ກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ, ສັຕທີ່ມີອັທທະ ຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທ ທະຍາສັຍດີ;

ແມ່ນແຕ່ໃນອະດີດກາລ ສັດທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາດ ຄືສັດທີ່ມີອັທທະຍາສັຍຊົ່ວ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີອັທທະຍາສັຍຊົ່ວ, ສັດທີ່ມີອັທທະຍາສັຍດີ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນອະນາຄົດກາລ ສັດທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາດ ຄືສັດທີ່ມີອັທທະຍາສັຍຊົ່ວ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັດທີ່ມີອັທທະຍາສັຍຊົ່ວ, ສັດທີ່ມີອັທທະຍາສັຍດີ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັດທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນປັຈຈຸບັນ ສັດທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ ຄືສັດທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີອັທທະຍາສັຍຊົ່ວ, ສັດທີ່ມີອັທທະຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີອັທທະຍາສັຍດີ.

---

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໕໑/໓໖໔*

ພິກຂຸທັງຫລາຍ ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ ຄືສັດທີ່ມີອັທທະຍາ ສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນ ກັບສັດທີ່ມີອັທທະຍາສັຍຊົ່ວ, ສັດທີ່ມີອັທທະຍາ ສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດ ທີ່ມີອັທທະຍາສັຍດີ.

ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໕໘/໓໖໕-໓໖໗



# ສັດທັງຫລາຍຍ່ອມຄົບຄ້າກັບ ຍ່ອມສະມາຄົມກັບໂດຍທາຕ (2)

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພູເຂົາຄິຊຊະກູຕ ເຂຕພຣະນະຄອຣຣາຊະຄື ກໍໂດຍສມັຍນັ້ນແລ ທ່ານພຣະສາຣີບຸຕຈິ່ງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ທ່ານພຣະມະຫາໂມຄຄັລລານະ ກໍຈົ່ງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ທ່ານພຣະມະຫາກັສສະປະ ກໍຈົງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ທ່ານພຣະອະນຸຣຸທທະ ກໍຈົງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ທ່ານພຣະປຸນນະມັນຕານີບຸຕ ກໍຈົງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ທ່ານພຣະອຸບາລີ ກໍຈົງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ທ່ານພຣະອານົນທ໌ ກໍຈົງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ແມ່ນແຕ່ພຣະເທວະທັຕ ກໍຈົງກົມຢູ່ກັບພິກຂຸຫລາຍອົງຄ໌ໃນທີ່ບໍ່ໄກຈາກພຣະຜູ້ມີພຣະພາຄ.

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄໄດ້ຕຣັສກັບພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ພວກເຈົ້າເຫັນສາຣີບຸຕກຳລັງຈົງກົມຢູ່ກັບພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນມີປັນຍາຫລາຍ.

ພິກຂຸທັງຫລາຍ! ພວກເຈົ້າເຫັນມະຫາໂມຄຄັລລານະກຳລັງຈົງກົມຢູ່ກັບພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນມີລິທຫລາຍ.

ພິກຂຸທັງຫລາຍ! ພວກເຈົ້າເຫັນມະຫາກັສສະປະກຳລັງຈົງກົມຢູ່ກັບພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນເປັນທຸຕະອາທ.

ພິກຂຸທັງຫລາຍ! ພວກເຈົ້າເຫັນອະນຸຣຸທທະກຳລັງຈົງກົມຢູ່ກັບພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນມີທິພພະຈັກຂຸ.

ພິກຂຸທັງຫລາຍ! ພວກເຈົ້າເຫັນປຸນນະມັນຕານີບຸຕກຳລັງຈົງກົມຢູ່ກັບພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນເປັນທັມມະກະຖຶກ.

ພິກຂຸທັງຫລາຍ! ພວກເຈົ້າເຫັນອຸບາລີກຳລັງຈົງກົມຢູ່ກັບພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນເປັນຜູ້ຊົງວິນັຍ.

ພິກຂຸທັງຫລາຍ! ພວກເຈົ້າເຫັນອານົນທ໌ກຳລັງຈົງກົມຢູ່ກັບ ພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນເປັນພະຫູສູຕ.

ພິກຂຸທັງຫລາຍ! ພວກເຈົ້າເຫັນເທວະທັຕກຳລັງຈົງກົມຢູ່ກັບ ພິກຂຸຫລາຍອົງຄ໌ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ເຫັນ ພຣະອົງຄ໌ຜູ້ຈະເຣີນ

ພິກຂຸທັງຫລາຍ! ພິກຂຸທັງໝົດນັ້ນ ລ້ວນມີຄວາມປາຖນາຊົ່ວ.

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມ ກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ, ສັຕທີ່ມີອັທທະ ຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທ ທະຍາສັຍດີ.

ແມ່ນແຕ່ໃນອະດີຕກາລ ສັຕທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ, ສັຕທີ່ມີອັທທະຍາສັຍດີ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນອະນາຄົຕກາລ ສັຕທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ, ສັຕທີ່ມີອັທທະຍາສັຍດີ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນປັຈຈຸບັນ ສັຕທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ, ສັຕທີ່ມີອັທທະຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

---

*ສັງຍຸຕຕະນິກາຍ ນິທານະວັគ ໑໖/໑໕໘/໓໖໕-໓໖໗*


CRAFT

# ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ (3)

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍ...ແລ້ວໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມ ກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ.

ແມ່ນແຕ່ໃນອະດີຕກາລ ສັຕທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ.

ແມ່ນແຕ່ໃນອະນາຄົຕກາລ ສັຕທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ.

ແມ່ນແຕ່ໃນປັຈຈຸບັນ ສັຕທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ

ພິກຂຸທັງຫລາຍ! ຄູຖກັບຄູຖຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ມູຕກັບມູຕຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ເຂລະກັບເຂລະຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ປຸພໂພກັບປຸພໂພຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ໂລຫິຕກັບໂລຫິຕຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້ ສັນໃດ;

ພິກຂຸທັງຫລາຍ! ສັຕທັງຫລາຍ ກໍສັນນັ້ນແລ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍຊົ່ວ.

ແມ່ນແຕ່ໃນອະດີດກາລ ສັດທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັດທີ່ມີອັທທະຍາສັຍຊົ່ວ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີອັທທະຍາສັຍຊົ່ວ.

ແມ່ນແຕ່ໃນອະນາຄົຕກາລ ສັດທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັດທີ່ມີອັທທະຍາສັຍຊົ່ວ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັດທີ່ມີອັທທະຍາສັຍຊົ່ວ.

ແມ່ນແຕ່ໃນປັຈຈຸບັນ ສັດທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັດທີ່ມີອັທທະຍາສັຍຊົ່ວ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີອັທທະຍາສັຍຊົ່ວ.

ພິກຂຸທັງຫລາຍ! ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັດທີ່ມີອັທທະຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນອະດີດກາລ ສັດທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັດທີ່ມີອັທທະຍາສັຍດີ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນອະນາຄົຕກາລ ສັຕທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍດີ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນປັຈຈຸບັນ ສັຕທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ພິກຂຸທັງຫລາຍ! ນ້ຳນົມສົດກັບນ້ຳນົມສົດຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ນ້ຳມັນກັບນ້ຳມັນຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ເນີຍໃສກັບເນີຍໃສຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ນ້ຳເຜີ້ງກັບນ້ຳເຜີ້ງຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້, ນ້ຳອ້ອຍກັບນ້ຳອ້ອຍຍ່ອມເຂົ້າກັນໄດ້ ຮ່ວມກັນໄດ້ ສັນໃດ;

ພິກຂຸທັງຫລາຍ! ສັຕທັງຫລາຍກໍສັນນັ້ນແລ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນອະດີຕກາລ ສັຕທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍດີ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນອະນາຄົຕກາລ ສັຕທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍດີ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

ແມ່ນແຕ່ໃນປັຈຈຸບັນ ສັຕທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີອັທທະຍາສັຍດີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີອັທທະຍາສັຍດີ.

*ພຣະຜູ້ມີພຣະພາຄຜູ້ສຸຄົຕສາສດາຄັນໄດ້ຕຣັສໄວຍາກອຣພາສິຕນີ້ແລ້ວ ຈຶ່ງຕຣັສຄາຖາປະພັນຕໍ່ໄປອີກວ່າ:*

ກິເລສພຽງດັ່ງໝູ່ໄມ້ໃນປ່າ ເກີດຂຶ້ນເພາະການຄົບຄ້າສະມາຄົມ ຍ່ອມຂາດໄປ ເພາະບໍ່ຄົບຄ້າສະມາຄົມ. ຄົນເກາະທ່ອນໄມ້ນ້ອຍໆ ຍ່ອມຈົມລົງໃນຫ້ວງມະຫັນນົພ ສັນໃດ, ສາທຸຊົນກໍຍ່ອມຈົມລົງເພາະອາສັຍຄົນກຽດຄ້ານ ສັນນັ້ນ. ເພາະສະນັ້ນຄວນເວັ້ນຄົນກຽດຄ້ານ ມີຄວາມພຽນອັນຕ່ຳຊາມນັ້ນເສຍ ຄວນຢູ່ຮ່ວມກັບບັນດິຕຜູ້ສງົບ ຜູ້ເປັນອະຣິຍະ ຜູ້ມີໃຈສູງ ຜູ້ເພັ່ງພິນິຈ ຜູ້ປຣາຣົພຄວາມພຽນເປັນນິຕ.

---

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໕໓/໓໒໗-໓໒໔*



# ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ (4)

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍ...ແລ້ວໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ບໍ່ມີສັທທາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ບໍ່ມີສັທທາ, ສັຕທີ່ບໍ່ມີຫິຣິ ຍ່ອມຄົບຄ້າ

ກັນ ຍ່ອມສະມາຄົມກັນກັບສັດທີ່ບໍ່ມີຫິຣິ, ສັດທີ່ບໍ່ມີໂອຕັປປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ບໍ່ມີໂອຕັປປະ, ສັດທີ່ມີສຸຕະໜ້ອຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສຸຕະໜ້ອຍ, ສັດທີ່ກຽດຄ້ານ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ກຽດຄ້ານ, ສັດທີ່ມີສະຕິຫລົງລືມ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສະຕິຫລົງລືມ, ສັດທີ່ມີປັນຍາຊາມ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີປັນຍາຊາມ.

ແມ່ນແຕ່ໃນອະດີຕກາລ ສັດທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັດທີ່ບໍ່ມີສັທທາ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ບໍ່ມີສັທທາ, ສັດທີ່ບໍ່ມີຫິຣິ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ບໍ່ມີຫິຣິ, ສັດທີ່ບໍ່ມີໂອຕັປປະ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ບໍ່ມີໂອຕັປປະ, ສັດທີ່ມີສຸຕະໜ້ອຍ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີສຸຕະໜ້ອຍ, ສັດທີ່ກຽດຄ້ານ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ກຽດຄ້ານ, ສັດທີ່ມີສະຕິຫລົງລືມ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີສະຕິຫລົງລືມ, ສັດທີ່ມີປັນຍາຊາມ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີປັນຍາຊາມ.

ແມ່ນແຕ່ໃນອະນາຄົຕກາລ ສັຕທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັຕທີ່ບໍ່ມີສັທທາ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ບໍ່ມີສັທທາ, ສັຕທີ່ບໍ່ມີຫິຣິ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ບໍ່ມີຫິຣິ, ສັຕທີ່ບໍ່ມີໂອຕັປປະ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ບໍ່ມີໂອຕັປປະ, ສັຕທີ່ມີສຸຕະໜ້ອຍ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີສຸຕະໜ້ອຍ, ສັຕທີ່ກຽດຄ້ານ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ກຽດຄ້ານ, ສັຕທີ່ມີສະຕິຫລົງລືມ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີສະຕິຫລົງລືມ, ສັຕທີ່ມີປັນຍາຊາມ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີປັນຍາຊາມ.

ແມ່ນແຕ່ໃນປັຈຈຸບັນ ສັຕທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ບໍ່ມີສັທທາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ບໍ່ມີສັທທາ, ສັຕທີ່ບໍ່ມີຫິຣິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ບໍ່ມີຫິຣິ, ສັຕທີ່ບໍ່ມີໂອຕັປປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ບໍ່ມີໂອຕັປປະ, ສັຕທີ່ມີສຸຕະໜ້ອຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີສຸຕະໜ້ອຍ, ສັຕທີ່ກຽດຄ້ານ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ກຽດຄ້ານ, ສັຕທີ່ມີສະຕິຫລົງລືມ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີສະຕິຫລົງລືມ, ສັຕທີ່

ມີປັນຍາຊາມ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີປັນຍາຊາມ.

ພິກຂຸທັງຫລາຍ! ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ ຄືສັດທີ່ມີສັທທາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສັທທາ, ສັດທີ່ມີຫິຣິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີຫິຣິ, ສັດທີ່ມີໂອຕຕັປປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີໂອຕຕັປປະ, ສັດທີ່ມີສຸຕະຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສຸຕະຫລາຍ, ສັດທີ່ປຣາຣົພຄວາມພຽນ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ປຣາຣົພຄວາມພຽນ, ສັດທີ່ມີສະຕິຕັ້ງໝັ້ນ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສະຕິຕັ້ງໝັ້ນ, ສັດທີ່ມີປັນຍາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີປັນຍາ.

ແມ່ນແຕ່ໃນອະດີຕກາລ ສັດທັງຫລາຍກໍໄດ້ຄົບຄ້າກັນ ໄດ້ສະມາຄົມກັນໂດຍທາຕ ຄືສັດທີ່ມີສັທທາ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີສັທທາ, ສັດທີ່ມີຫິຣິ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີຫິຣິ, ສັດທີ່ມີໂອຕຕັປປະ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີໂອຕຕັປປະ, ສັດທີ່ມີສຸຕະຫລາຍ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັດທີ່ມີສຸຕະຫລາຍ,

ສັຕທີ່ປຣາຣົພຄວາມພຽນ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ປຣາຣົພຄວາມພຽນ, ສັຕທີ່ມີສະຕິຕັ້ງໝັ້ນ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ມີສະຕິຕັ້ງໝັ້ນ, ສັຕທີ່ມີປັນຍາ ໄດ້ຄົບຄ້າກັນ ໄດ້ສະມາຄົມກັນກັບສັຕທີ່ມີປັນຍາ.

ແມ່ນແຕ່ໃນອະນາຄົຕກາລ ສັຕທັງຫລາຍກໍຈັກຄົບຄ້າກັນ ຈັກສະມາຄົມກັນໂດຍທາຕ ຄືສັຕທີ່ມີສັທທາ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີສັທທາ, ສັຕທີ່ມີຫິຣິ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີຫິຣິ, ສັຕທີ່ມີໂອຕັປປະ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີໂອຕັປປະ, ສັຕທີ່ມີສຸຕະຫລາຍ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີສຸຕະຫລາຍ ສັຕທີ່ປຣາຣົພຄວາມພຽນ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ປຣາຣົພຄວາມພຽນ, ສັຕທີ່ມີສະຕິຕັ້ງໝັ້ນ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີສະຕິຕັ້ງໝັ້ນ, ສັຕທີ່ມີປັນຍາ ຈັກຄົບຄ້າກັນ ຈັກສະມາຄົມກັນກັບສັຕທີ່ມີປັນຍາ.

ແມ່ນແຕ່ໃນປັຈຈຸບັນ ສັຕທັງຫລາຍກໍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕທີ່ມີສັທທາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີສັທທາ, ສັຕທີ່ມີຫິຣິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີຫິຣິ, ສັຕທີ່ມີໂອຕັປປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕທີ່ມີໂອຕັປປະ,

ສັດທີ່ມີສຸຕະຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສຸຕະຫລາຍ, ສັດທີ່ປຣາຣົພຄວາມພຽນ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ປຣາຣົພຄວາມພຽນ, ສັດທີ່ມີສະຕິຕັ້ງໝັ້ນ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີສະຕິຕັ້ງໝັ້ນ, ສັດທີ່ມີປັນຍາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດທີ່ມີປັນຍາ.

---

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໕໔/໓໗໓-໓໗໔*


ພິກຂຸທັງຫລາຍ ການດື່ມສຸຣາເມຣັຍທີ່ບຸຄຄົລ
ເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ
ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອ
ກຳເນີດດິຣັຈສານ ເປັນໄປເພື່ອເປຕວິສັຍ.
ວິບາກແຫ່ງການດື່ມສຸຣາເມຣັຍຢ່າງເບົາທີ່ສຸດ
ຍ່ອມເປັນໄປເພື່ອຄວາມເປັນບ້າແກ່ຜູ້ມາເກີດ
ເປັນມະນຸສ.
ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະ
ນິບາຕ ໒໓/໑໙໓/໑໓໐

# ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ (5)

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍວ່າ: **ພິກຂຸທັງຫລາຍ!**

*ພິກຂຸເຫລົ່ານັ້ນທູລຮັບພຣະຜູ້ມີພຣະພາຄວ່າ ໂດຍ ພຣະອົງຄ໌ ຜູ້ຈະເຣີນ*

*ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:*

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕພວກທີ່ຂ້າສັຕ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ຂ້າສັຕ, ສັຕພວກທີ່ລັກຊັພຍ໌ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ລັກຊັພຍ໌, ສັຕພວກທີ່ປະພຶຕຜິດໃນກາມທັງຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ປະພຶຕຜິດໃນກາມທັງຫລາຍ, ສັຕພວກທີ່ເວົ້າຕົວະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວົ້າຕົວະ, ສັຕພວກທີ່ເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເສພສຸຣາເມຣັຍແລະສິ່ງມຶນເມົາອັນເປັນທີ່ຕັ້ງແຫ່ງຄວາມປະມາທ.

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕພວກທີ່ເວັ້ນຂາດຈາກການຂ້າສັຕ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວັ້ນຂາດຈາກການຂ້າສັຕ, ສັຕພວກທີ່ເວັ້ນຂາດຈາກການລັກຊັພຍ໌ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວັ້ນຂາດຈາກການລັກຊັພຍ໌, ສັຕພວກທີ່ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວັ້ນຂາດຈາກການປະພຶຕຜິດໃນກາມທັງຫລາຍ, ສັຕພວກທີ່ເວັ້ນຂາດຈາກການເວົ້າຕົວະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມ

ກັນກັບສັດພວກທີ່ເວັ້ນຂາດຈາກການເວົ້າຕົວະ, ສັດພວກທີ່ເວັ້ນຂາດຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ເວັ້ນຂາດຈາກສຸຣາເມຣັຍແລະສິ່ງມຶນເມົາ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ.

---

*ສັງຍຸຕຕະນິກາຍ ນິທານະວັດ ໑໖/໑໖໘/໓໗໔-໓໗໘*



# ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ (6)

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍ...ແລ້ວໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕພວກທີ່ຂ້າສັຕ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ຂ້າສັຕ, ສັຕພວກທີ່ລັກຊັພຍ໌ ຍ່ອມ

ຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ລັກຊັພຍ໌, ສັຕພວກທີ່ປະພຶຕຜິດໃນກາມທັງຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ປະພຶຕຜິດໃນກາມທັງຫລາຍ, ສັຕພວກທີ່ເວົ້າຕົວະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວົ້າຕົວະ, ສັຕພວກທີ່ເວົ້າສຽດສີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວົ້າສຽດສີ, ສັຕພວກທີ່ເວົ້າຄຳຫຍາບ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວົ້າຄຳຫຍາບ, ສັຕພວກທີ່ເວົ້າຄຳສັມຜັປປະລາປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວົ້າຄຳສັມຜັປປະລາປະ, ສັຕພວກທີ່ມີອະພິຊຊາຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີອະພິຊຊາຫລາຍ, ສັຕພວກທີ່ມີຈິຕພະຍາບາທ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີຈິຕພະຍາບາທ, ສັຕພວກທີ່ມີມິຈສາທິຕຖິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີມິຈສາທິຕຖິ.

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕພວກທີ່ເວັ້ນຂາດຈາກການຂ້າສັຕ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວັ້ນຂາດຈາກການຂ້າສັຕ, ສັຕພວກທີ່ເວັ້ນຂາດຈາກການລັກຊັພຍ໌ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ເວັ້ນຂາດຈາກການລັກຊັພຍ໌, ສັຕພວກທີ່ເວັ້ນຂາດຈາກການປະພຶຕຜິດໃນກາມ

ທັງຫລາຍ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ເວັ້ນຂາດຈາກການປະພຶດຜິດໃນກາມທັງຫລາຍ, ສັດພວກທີ່ເວັ້ນຂາດຈາກການເວົ້າຕົວະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ເວັ້ນຂາດຈາກການເວົ້າຕົວະ, ສັດພວກທີ່ເວັ້ນຂາດຈາກການເວົ້າສຽດສີ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ເວັ້ນຂາດຈາກການເວົ້າສຽດສີ, ສັດພວກທີ່ເວັ້ນຂາດຈາກການເວົ້າຄຳຫຍາບ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ເວັ້ນຂາດຈາກການເວົ້າຄຳຫຍາບ, ສັດພວກທີ່ເວັ້ນຂາດຈາກການເວົ້າຄຳສັມຜັປປະລາປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ເວັ້ນຂາດຈາກການເວົ້າຄຳສັມຜັປປະລາປະ, ສັດພວກທີ່ບໍ່ມີອະພິຊຊາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ບໍ່ມີອະພິຊຊາ, ສັດພວກທີ່ບໍ່ມີຈິຕພະຍາບາທ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ບໍ່ມີຈິຕພະຍາບາທ, ສັດພວກທີ່ມີສັມມາທິຕຖິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີສັມມາທິຕຖິ.

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໖໖/໓໕໗-໓໕໘*



# ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາດ (7)

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍ...ແລ້ວໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ສັຕທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັຕພວກທີ່ມີມິຈສາທິຕຖິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີມິຈສາທິຕຖິ, ສັຕພວກທີ່ມີ

ມິຈສາສັງກັປປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາສັງກັປປະ, ສັດພວກທີ່ມີມິຈສາວາຈາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາວາຈາ, ສັດພວກທີ່ມີມິຈສາກັມມັນຕະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາກັມມັນຕະ, ສັດພວກທີ່ມີມິຈສາອາຊີວະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາອາຊີວະ, ສັດພວກທີ່ມີມິຈສາວາຍາມະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາວາຍາມະ, ສັດພວກທີ່ມີມິຈສາສະຕິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາສະຕິ, ສັດພວກທີ່ມີມິຈສາສະມາທິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີມິຈສາສະມາທິ.

ພິກຂຸທັງຫລາຍ! ສັດທັງຫລາຍຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນໂດຍທາຕ ຄືສັດພວກທີ່ມີສັມມາທິຕຖິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີສັມມາທິຕຖິ, ສັດພວກທີ່ມີສັມມາສັງກັປປະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີສັມມາສັງກັປປະ, ສັດພວກທີ່ມີສັມມາວາຈາ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີສັມມາວາຈາ, ສັດພວກທີ່ມີສັມມາກັມມັນຕະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີສັມມາກັມມັນຕະ, ສັດພວກທີ່ມີສັມມາອາຊີວະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັດພວກທີ່ມີສັມມາ

ອາຊີວະ, ສັຕພວກທີ່ມີສັມມາວາຍາມະ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີສັມມາວາຍາມະ, ສັຕພວກທີ່ມີສັມມາສະຕິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີສັມມາສະຕິ, ສັຕພວກທີ່ມີສັມມາສະມາທິ ຍ່ອມຄົບຄ້າກັນ ຍ່ອມສະມາຄົມກັນກັບສັຕພວກທີ່ມີສັມມາສະມາທິ.

---

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໖໖/໓໙໙-໔໐໐*



## ອັນຕຣາຍຂອງຝົນທີ່ພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ

ພິກຂຸທັງຫລາຍ! ອັນຕຣາຍຂອງຝົນ ໕ ປະການນີ້ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ *(ປັນຈິເມ ພິກຂະເວ ວັສສັສສະ ອັນຕຣາຍາ ຍັງ ເນມິຕຕາ ນະ ຊານັນຕິ ຍັຕຖະ ເນມິຕຕານັງ ຈັກຂຸງ ນັກກະມະຕິ)*; ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ເຕໂຊທາຕເບື້ອງເທິງອາກາສກຳເຣິບ ເມກທີ່ເກີດຂຶ້ນຍ່ອມກະຈາຍໄປເພາະເຕໂຊທາຕກຳເຣິບນັ້ນ. ພິກຂຸທັງຫລາຍ ນີ້ເປັນອັນຕຣາຍຂອງຝົນປະການທີ ໑ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ວາໂຍທາຕເບື້ອງເທິງອາກາສກຳເຣີບ ເມກທີ່ເກີດຂຶ້ນຍ່ອມກະຈາຍໄປເພາະວາໂຍທາຕກຳເຣີບນັ້ນ. ພິກຂຸທັງຫລາຍ ນີ້ເປັນອັນຕຣາຍຂອງຝົນປະການທີ ໔ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ອະສຸຣິນທະຣາຫູເອົາຝາມືຮັບນ້ຳໄວ້ ແລ້ວຖິ້ມລົງໃນມະຫາສະມຸທ *(ຣາຫູ ອະສຸຣິນໂທ ປານີນາ ອຸທະກັງ ປະຕິຈສິຕະວາ ມະຫາສະມຸທເທ ສັທເທຕິ)*. ພິກຂຸທັງຫລາຍ ນີ້ເປັນອັນຕຣາຍຂອງຝົນປະການທີ ໕ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ວັສສະວະລາຫົກເທວະບຸຕເປັນຜູ້ປະມາທເສຍ *(ວັສສະວະລາຫະກາ ເທວະປຸຕຕາ ປະມັຕຕາໂຫນຕິ)*. ພິກຂຸທັງຫລາຍ ນີ້ເປັນອັນຕຣາຍຂອງຝົນປະການທີ ໖ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ **ມະນຸສທັງຫລາຍຕັ້ງຢູ່ໃນອະທັມ** *(ມະນຸສສາ ອະທັມມິກາ ໂຫນຕິ)*. ພິກຂຸ

ທັງຫລາຍ ນີ້ເປັນອັນຕຣາຍຂອງຝົນປະການທີ ໕ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ.

ພິກຂຸທັງຫລາຍ! ອັນຕຣາຍຂອງຝົນ ໕ ປະການນີ້ແລ ເຊິ່ງພວກໝໍດູຮູ້ບໍ່ໄດ້ ສາຍຕາຂອງພວກໝໍດູຢັ່ງບໍ່ເຖິງ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໒໑໕/໑໙໗*


mindfulness

## ອະກຸສົລເປັນສິ່ງທີ່ສາມາດລະໄດ້

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງລະອະກຸສົລ ອະກຸສົລອັນບຸຄຄົລສາມາດລະໄດ້ ຖ້າບຸຄຄົລບໍ່ສາມາດລະອະກຸສົລໄດ້ ເຮົາຍ່ອມບໍ່ກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງລະອະກຸສົລ ດັ່ງນີ້.

ພິກຂຸທັງຫລາຍ! ກໍເພາະອະກຸສົລອັນບຸຄຄົລສາມາດລະໄດ້ ສະນັ້ນ ເຮົາຈຶ່ງກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງລະອະກຸສົລ.

ພິກຂຸທັງຫລາຍ! ຖ້າອະກຸສົລອັນບຸຄຄົລລະໄດ້ແລ້ວ ຈະເປັນໄປເພື່ອສິ່ງບໍ່ເປັນປະໂຍຊນ໌ ເພື່ອຄວາມທຸກຂ໌ແລ້ວນັ້ນ ເຮົາຍ່ອມບໍ່ກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງລະອະກຸສົລ.

ພິກຂຸທັງຫລາຍ! ກໍເພາະອະກຸສົລອັນບຸຄຄົລລະໄດ້ແລ້ວ ຍ່ອມເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂ ສະນັ້ນ ເຮົາຈຶ່ງກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງລະອະກຸສົລ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງກະທຳກຸສົລໃຫ້ເກີດຂຶ້ນ.

ພິກຂຸທັງຫລາຍ! ກຸສົລອັນບຸຄຄົລສາມາດກະທຳໃຫ້ເກີດໄດ້ ຖ້າບຸຄຄົລບໍ່ສາມາດກະທຳໃຫ້ເກີດໄດ້ ເຮົາຍ່ອມບໍ່ກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງກະທຳກຸສົລໃຫ້ເກີດຂຶ້ນ.

ພິກຂຸທັງຫລາຍ! ກໍເພາະກຸສົລອັນບຸຄຄົລສາມາດກະທຳໃຫ້ເກີດໄດ້ ສະນັ້ນ ເຮົາຈຶ່ງກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງກະທຳກຸສົລໃຫ້ເກີດຂຶ້ນ.

ພິກຂຸທັງຫລາຍ! ຖ້າກຸສົລນີ້ອັນບຸຄຄົລກະທຳໃຫ້ເກີດແລ້ວ ຈະເປັນໄປເພື່ອສິ່ງບໍ່ເປັນປະໂຍຊນ໌ ເພື່ອຄວາມທຸກຂ໌ແລ້ວນັ້ນ ເຮົາຍ່ອມບໍ່ກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງກະທຳກຸສົລໃຫ້ເກີດຂຶ້ນ.

ພິກຂຸທັງຫລາຍ! ກໍເພາະກຸສົລອັນບຸຄຄົລກະທຳໃຫ້ເກີດແລ້ວຍ່ອມເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂ ສະນັ້ນ ເຮົາຈຶ່ງກ່າວຢ່າງນີ້ວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງກະທຳກຸສົລໃຫ້ເກີດຂຶ້ນ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໕໕/໒໖໕*



# ພັຍຄືທຸຄະຕິ

**ພິກຂຸທັງຫລາຍ! ກໍພັຍຄືທຸຄະຕິເປັນຢ່າງໃດ?**

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ຍ່ອມພິຈາຣະນາເຫັນຢ່າງນີ້ວ່າ ວິບາກຂອງກາຍທຸຈະຣິຕໃນພາຍໜ້າຊົ່ວຮ້າຍ ວິບາກຂອງວະຈີທຸຈະຣິຕໃນພາຍໜ້າຊົ່ວຮ້າຍ ວິບາກຂອງມະໂນທຸຈະຣິຕໃນພາຍໜ້າຊົ່ວຮ້າຍ ກໍຖ້າເຮົາປະພຶຕກາຍທຸຈະຣິຕ ປະພຶຕວະຈີທຸຈະຣິຕ ປະພຶຕມະໂນທຸຈະຣິຕ ເມື່ອແຕກກາຍຕາຍໄປ ເຮົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕນະຣົກ.

ເຂົາກົວຕໍ່ທຸຄະຕິພັຍ ຍ່ອມລະກາຍທຸຈະຣິຕ ປະພຶຕກາຍສຸຈະຣິຕ ຍ່ອມລະວະຈີທຸຈະຣິຕ ປະພຶຕວະຈີສຸຈະຣິຕ ຍ່ອມລະມະໂນທຸຈະຣິຕ ປະພຶຕມະໂນສຸຈະຣິຕ ຍ່ອມບໍຣິຫາຣຕົນໃຫ້ບໍຣິສຸທໄດ້.

ພິກຂຸທັງຫລາຍ! ນີ້ຮຽກວ່າ ທຸຄະຕິພັຍ

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໑໒໔/໑໒໑*



**“If you have fear of suffering, if suffering is unpleasant to you, don’t do any bad deeds, whether in the open or in secret. “But if you will do, or now you do bad deeds, for you there is no freedom from suffering, even after going, while running away.”**

https://suttacentral.net/ud5.4 Kumāraka Sutta Ud 5.4 Ud 51



ພິກຂຸທັງຫລາຍ ບຸຄຄົລຜູ້ທວນກະແສເປັນຢ່າງໃດ?

ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ຍ່ອມບໍ່ເສພກາມທັງຫລາຍ*(ກາເມ ຈະ ນະ ປະຕິເສວະຕິ)* ແລະຍ່ອມບໍ່ກະທຳກັມອັນເປັນບາບ ເຖິງມີໜ້ານອງດ້ວຍນ້ຳຕາຮ້ອງໄຫ້ຢູ່ ເພາະປະກອບດ້ວຍທຸກຂ໌ແດ່ ເພາະປະກອບດ້ວຍໂທມະນັສແດ່ ກໍຍັງປະພຶຕພຣົມມະຈັນຍ໌ໃຫ້ບໍຣິສຸທ ບໍຣິບູນໄດ້. ພິກຂຸທັງຫລາຍ ນີ້ຮຽກວ່າ ບຸຄຄົລຜູ້ທວນກະແສ.

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໔໑/໕/໕*

**“ອະບາຍມຸຂ”**

ໄດ້ແປແລະຮຽບຮຽງຈາກພຣະໄຕຣປິດົກ
ສະບັບຫລວງ ພາສາໄທ ແລະໄດ້ຜ່ານ
ການທຽບຖຽງກັບພຣະໄຕຣປິດົກຫລາຍ
ສຳນັກເຊັ່ນ:
ພຣະໄຕຣປິດົກສະບັບມະຫາຈຸລາ,
ສະບັບພາສາບາລີ-ໄທ ແລະພຣະໄຕຣປິດົກ
ພາສາອັງກິດຈາກ **Suttacentral.net**
ພຣະສູຕທີ່ເປັນພາສາອັງກິດຮຽບຮຽງຈາກ
**Suttacentral.net**

**Compiled by V. Vongsengsy**



“ພິກຂຸທັງຫລາຍ ສັດທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາດ ນະຣົກ ເພາະເຫດແຫ່ງຄວາມເສື່ອມຍາດ ເພາະເຫດແຫ່ງຄວາມເສື່ອມໂພຄະຊັພຍ໌ ຫລືເພາະເຫດແຫ່ງຄວາມເສື່ອມເພາະໂຣຄ, ແຕ່ສັດທັງຫລາຍເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາດ ນະຣົກ ເພາະເຫດແຫ່ງຄວາມເສື່ອມສິລ ຫລືເພາະເຫດແຫ່ງຄວາມເສື່ອມທິດຖິ.”

ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາດ
໒໒/໑໓໓/໑໓໐



**For Free Distribution**

For more information: Please contact us:
buddhavacana.word@gmail.com